


# ບົດລາຍງານຂອງຂະແໜງການແກ້ໄຂບັນຫາ ລບຕ ປີ 2013

ຄະນະກຳມະການຄຸ້ມຄອງແຫ່ງຊາດ (ຄຊລ)

UXO - NRA

ບົດລາຍງານຂອງຂະແໜງການແກ້ໄຂບັນຫາ ລບຕ ປະຈຳປີ 2013

ບົດລາຍງານປະຈຳປີສະບັບນີ້ ສ້າງຂຶ້ນໂດຍຄະນະກຳມະການຄຸ້ມຄອງແຫ່ງຊາດ ເພື່ອແກ້ໄຂບັນຫາລະເບີດບໍ່ທັນແຕກທີ່ຕົກຄ້າງຢູ່ ສປປ ລາວ (ຄຊກລ)

ຖ້າທ່ານຕ້ອງການຂໍ້ມູນເພີ່ມເຕີມ ກະລຸນາພົວພັນ: ຫ້ອງການ ຄຊກລ

ບ້ານ ສີສັງວອນ, ຕູ້ ປ.ນ 7621, ເມືອງໄຊເສດຖາ, ນະຄອນຫຼວງວຽງຈັນ
ເວັບໄຊ: www.nra.gov.la

ໂທ: (856-21 262386)

ລວບລວມ ແລະ ອອກແບບໂດຍ: ວິລະວົງ ສີສະຫວັດ ແລະ ໂອລີເວີ ບູເດີນ
ຮູບພາບ: ຮູບພາບທີ່ປະກົດຢູ່ໃນບົດລາຍງານຂອງອົງການປະຕິບັດງານແມ່ນຖືເປັນລິຂະສິດຂອງອົງການ, ສ່ວນຮູບພາບອື່ນໆທີ່ຖ່າຍໂດຍ: ວິລະວົງ ສີສະຫວັດ ແລະໂອລີເວີ ບູເດີນ ແມ່ນຂໍສະຫງວນລິຂະສິດເປັນຂອງ ຄຊກລ.

ຂໍສະແດງຄວາມຮູ້ບຸນຄຸນ:

ຫ້ອງການ ຄຊກລ ຂໍສະແດງຄວາມຂອບໃຈມາຍັງອົງການປະຕິບັດງານແກ້ໄຂບັນຫາ ລບຕ ທີ່ໄດ້ສະໜອງຮູບພາບ, ຂໍ້ມູນໂຄງການຂອງທ່ານ ແລະ ກິດຈະກຳຕ່າງໆເຂົ້າໃສ່ໃນປຶ້ມບົດລາຍງານສະບັບນີ້.

ໜ່ວຍງານແຜນການ/ປະຊາສຳພັນຂອງຫ້ອງການ ຄຊກລ ຂໍສະແດງຄວາມຮູ້ບຸນຄຸນ ມາຍັງບັນດາເພື່ອຮ່ວມງານພາຍໃນຫ້ອງການ ຄຊກລ ໝົດທຸກຄົນ ທີ່ໄດ້ໃຫ້ການສະໜັບສະໜູນ ແລະ ໃຫ້ຄວາມພະຍາຍາມດ້ານຕ່າງໆ ເຂົ້າໃສ່ໃນການສັງລວມປຶ້ມບົດລາຍງານປະຈຳປີສະບັບນີ້.

ບົດລາຍງານສະບັບນີ້ ອາດມີບາງເນື້ອໃນມີການປ່ຽນແປງ, ຫຼົງລືມ ຫຼື ຜິດພາດ ພາຍຫຼັງທີ່ມີການພິມອອກແຈກຢາຍ. ກະລຸນາເຂົ້າມາທີ່ເວັບໃຊ້: www.nra.gov.la

ສະຫງວນລິຂະສິດ: ຫ້ອງການ ຄຊກລ, 2014.

# ບົດລາຍງານຂອງຂະແໜງການແກ້ໄຂບັນຫາ ລບຕ ປະຈຳປີ 2013

## ສາລະບານ


ບົດນຳ: ຂອງປະທານ ຄຊກລ ii
ບົດນຳ: ຂອງຫົວໜ້າຫ້ອງການ ຄຊກລ iii
ບົດນຳ: ຂອງເອກອັກຄະລັດຖະທູດ ສະຫະລັດອາເມລິກາ ປະຈຳ ສປປ ລາວ ແລະ ຜູ້ຕາງໜ້າອົງການ ສປຊ ເພື່ອການພັດທະນາປະຈຳ ສປປ ລາວ v

ຜົນສຳເລັດຕ່າງໆຂອງຂະແໜງການ: ລາຍງານຕົວເລກ 2
ລາຍງານສະພາບການເງິນໃນຂະແໜງການ ລບຕ 6

ສະພາບຕົວຈິງ ລບຕ ຕົກຄ້າງ ແລະ ຕົວເລກ 8
ລະເບີດບໍ່ທັນແຕກ (ລບຕ) ແມ່ນຫຍັງ? 8

**ພາບລວມກິດຈະກຳຂອງຄະນະກຳມະການຄຸ້ມຄອງແຫ່ງຊາດ ເພື່ອແກ້ໄຂບັນຫາລະເບີດບໍ່ທັນແຕກ ທີ່ຕົກຄ້າງ ຢູ່ ສປປ ລາວ 9**
- ກິດຈະກຳຕ່າງໆຂອງ ຄຊກລ 9
- ການສ້າງຄວາມເຂັ້ມແຂງໃຫ້ແກ່ແມ່ຍິງ 13
- ຄູ່ຮ່ວມງານຕ່າງໆ 13
- ລາຍງານສະພາບການເງິນຂອງ ຄຊກລ 15

**ບົດລາຍງານຂອງອົງການປະຕິບັດງານ 21**

**ອົງການປະຕິບັດງານເກັບກູ້ ລບຕ ເພື່ອມະນຸດສະທຳ 22**
- ອົງການສາກົນເພື່ອຄົນພິການ (ເຫັດໄອ) 22
- ອົງການເກັບກູ້ລະເບີດເຈມັດ (ເຈມັດ) 28
- ໂຄງການເກັບກູ້ລະເບີດແຫ່ງຊາດລາວ (ຄກລ) 30
- ອົງການເກັບກູ້ລະເບີດແມັກ (ແມັກ) 37
- ອົງການຊ່ວຍເຫຼືອລ້າຂອງປະຊາຊົນນໍອກແວ (ເອັນພີເອ) 42
- ອົງການຮ່ວມໃຈບໍລິການສາກົນ (ໄຊດີ) 45
- ອົງການເຮໂລຫຼາດ (ເຮໂລ) 49

**ບໍລິສັດເກັບກູ້ ລບຕ ພາຍໃນ ແລະ ຕ່າງປະເທດ 54**
- ບໍລິສັດອາສາ (ອາສາ) 54
- ບໍລິສັດພົນສັກດາ (ພີເອັດສ໌ດີ) 56
- ບໍລິສັດສີບຸນເຮືອງ (ເອັດບີເຫັດ) 58
- ບໍລິສັດແສງເພັດ (ເອັດພີ) 60
- ບໍລິສັດເອັກທີດີ (ເອັກທີດີ) 62
- ບໍລິສັດແບັກເທັກ (ແບັກເທັກ) 64
- ບໍລິສັດມິວເຊີດສ໌ (ມິວເຊີດສ໌) 67
- ກົມຊ່າງແສງ, ກະຊວງປ້ອງກັນຊາດ ຮ່ວມກັບ ບໍລິສັດເອັມເອັມຈີ ລ້ານຊ້າງມິນເນີໂຣນ 71

**ອົງການປະຕິບັດງານຊ່ວຍເຫຼືອຜູ້ຖືກເຄາະຮ້າຍ ແລະ ໂຄສະນາສຶກສາຄວາມສ່ຽງຈາກ ລບຕ 74**
- ສະມາຄົມຊ່ວຍເຫຼືອ ແລະ ບັນເທົາທຸກຂອງຍີ່ປຸ່ນ (ເອເອອາຣ) 74
- ອົງການຊ່ວຍເຫຼືອບັນເທົາທຸກຂອງກາໂຕລິກ (ຊີອາເອັດສ໌) 78
- ອົງການຊ່ວຍເຫຼືອດ້ານອົງຄະທຽມ ແລະ ເຄື່ອງຄ້ຳຊູ (ໂຄບ) 82
- ສູນການແພດ ແລະ ຟື້ນຟູໜ້າທີ່ການ (ຊີເອັມອາ) 87
- ສະມາຄົມຊ່ວຍເຫຼືອເພື່ອປັບປຸງຄຸນນະພາບຊີວິດໃຫ້ແກ່ ຜູ້ເສຍອົງຄະ ແລະ ຜູ້ຖືກເຄາະຮ້າຍຈາກ ລບຕ (ຄິວແອວເອ) 89
- ອົງການສຶກສາໂລກ (ເວີອິດູເຄເຊີ້ນ) 92
- ອົງການນ້ຳໃຈນັກລີກາ (ເອັດໄອເອັດ) 97

**ເອກະສານຊ້ອນທ້າຍ**
- ດຳລັດຂອງທ່ານນາຍົກລັດຖະມົນຕີ ສະບັບເລກທີ 406/ນຍ, ລົງວັນທີ 8 ພະຈິກ 2011 ວ່າດ້ວຍການແຕ່ງຕັ້ງຄະນະກຳມະການຄຸ້ມຄອງແຫ່ງຊາດ ເພື່ອແກ້ໄຂບັນຫາລະເບີດບໍ່ທັນແຕກ ທີ່ຕົກຄ້າງຢູ່ ສປປ ລາວ 100
- ແຈ້ງການ ສະບັບເລກທີ 093/ຄຊກລ, ລົງວັນທີ 19 ພະຈິກ 2012 ວ່າດ້ວຍການກວດກູ້ລະເບີດບໍ່ທັນແຕກ ຮັບໃຊ້ໂຄງການພັດທະນາເສດຖະກິດ-ສັງຄົມຕ່າງໆຢູ່ ສປປ ລາວ 102



# ບົດນຳ:

## ຂອງປະທານຄະນະກຳມະການຄຸ້ມຄອງແຫ່ງຊາດ ເພື່ອແກ້ໄຂບັນຫາລະເບີດບໍ່ທັນແຕກ ທີ່ຕົກຄ້າງຢູ່ ສປປ ລາວ

ຂ້າພະເຈົ້າ ຮູ້ສຶກເປັນກຽດທີ່ໄດ້ນຳສະເໜີບົດລາຍງານຂອງຂະແໜງການແກ້ໄຂບັນຫາລະເບີດບໍ່ທັນແຕກ ທີ່ຕົກຄ້າງຢູ່ ສປປ ລາວ ສຳລັບປີ 2013.

ຂ້າພະເຈົ້າ ມີຄວາມປິຕິຍິນດີເປັນຢ່າງຍິ່ງ ທີ່ໄດ້ເປັນກຽດລາຍງານກ່ຽວກັບການເຄື່ອນໄຫວວຽກງານຂອງຂະແໜງການແກ້ໄຂບັນຫາ ລບຕ ທີ່ຕົກຄ້າງຢູ່ ສປປ ລາວ ສຳລັບປີ 2013, ຊຶ່ງເປັນປີທີ່ມີຜົນຄວາມຄືບໜ້າພົ້ນເດັ່ນຫຼາຍຢ່າງຢູ່ໃນຂະແໜງການ ແລະ ຂໍຖືໂອກາດນີ້ລາຍງານບາງຜົນສຳເລັດຕະຫຼອດປີລຸ່ມນີ້.

ຜົນສຳເລັດອັນສຳຄັນຕົ້ນຕໍ ແມ່ນການປະຕິບັດຄາດໝາຍຫຼຸດຜ່ອນຈຳນວນຜູ້ຖືກເຄາະຮ້າຍຈາກ ລບຕ ຈາກ 300 ຄົນ ສະເລ່ຍໃນປີ 2008 ລົງເຫຼືອ 56 ຄົນໃນປີ 2012 ແລະ ປີ 2013 ຫຼຸດລົງເຫຼືອ 41 ຄົນ, ຊຶ່ງໄດ້ມາຍ້ອນມີການສືບຕໍ່ວຽກງານໂຄສະນາສຶກສາຄວາມສ່ຽງຈາກ ລບຕ ໃນບັນດາແຂວງທີ່ມີ ລບຕ ຕົກຄ້າງ ແລະ ການເພີ່ມຂຶ້ນຂອງຈຳນວນອົງການປະຕິບັດງານແກ້ໄຂບັນຫາ ລບຕ.

ນອກຈາກນັ້ນ, ຍັງມີໂຄງການເກັບກູ້ລະເບີດແຫ່ງຊາດ (ຄກລ) ທີ່ມີພະນັກງານກຳມະການຫຼາຍກວ່າ 1,100 ຄົນ ທີ່ປະຕິບັດວຽກງານ ຢູ່ສະໜາມ, ຊຶ່ງລວມທັງໝົດໃນປະຈຸບັນ ມີອົງການປະຕິບັດງານແກ້ໄຂບັນຫາລະເບີດບໍ່ແຕກ ເພື່ອມະນຸດທະທຳ 7 ອົງການ ແລະ ບໍລິສັດກວດກູ້ລະເບີດຂອງລາວ ແລະ ຕ່າງປະເທດ 13 ບໍລິສັດ ດຳເນີນການສຳຫຼວດ ແລະ ກວດກູ້ລະເບີດບໍ່ທັນແຕກໃນ ສປປ ລາວ, ຊຶ່ງມີພະນັກງານກຳມະກອນທັງໝົດຫຼາຍກວ່າ 3,500 ຄົນ.

ໃນປີ 2013, ທົ່ວຂະແໜງການແກ້ໄຂບັນຫາລະເບີດບໍ່ທັນແຕກ (ລບຕ) ສາມາດກວດກູ້ເນື້ອທີ່ໄດ້ຈຳນວນ 6,927 ເຮັກຕາ ທຽບໃສ່ປີ 2012 ແມ່ນສາມາດກວດກູ້ໄດ້ 6,040 ເຮັກຕາ, ຊຶ່ງໄປຕາມຕາມທິດທາງແຜນຍຸດທະສາດແກ້ໄຂບັນຫາລະເບີດບໍ່ທັນແຕກ "ເສັ້ນທາງກ້າວສູ່ຄວາມປອດໄພ 2". ພ້ອມນັ້ນ, ການກວດກູ້ ລບຕ ເພື່ອຮັບໃຊ້ບູລິມະສິດຈຸດສຸມພັດທະນາ ກໍ່ເພີ່ມຂຶ້ນເທື່ອລະກ້າວ ແນໃສ່ຮັບປະກັນໃຫ້ການກວດກູ້ ລບຕ ສົ່ງຜົນກະທົບທາງບວກຫຼາຍທີ່ສຸດຕໍ່ມະນຸດສະທຳ ແລະ ການພັດທະນາ.

ຄຊກລ ໂດຍການປະສານສົມທົບກັບບັນດາອົງການປະຕິບັດງານ ໄດ້ປັບປຸງມາດຕະຖານແຫ່ງຊາດສະບັບໃໝ່ກ່ຽວກັບການສຳຫຼວດ ເພື່ອໃຫ້ສາມາດສະໜອງຄວາມໝັ້ນໃຈໃນລະດັບທີ່ແນ່ນອນວ່າ ເນື້ອທີ່ຕົກຄ້າງບ່ອນໃດທີ່ຕ້ອງໄດ້ດຳເນີນການກວດກູ້ ແລະ ບ່ອນໃດທີ່ບໍ່ຈຳເປັນ. ສິ່ງດັ່ງກ່າວ ຈະເຮັດໃຫ້ເຮົາສາມາດເພີ່ມເນື້ອທີ່ດິນກວດກູ້ໄດ້ຫຼາຍຂຶ້ນກວ່າເກົ່າໃນແຕ່ລະປີ, ແນ່ໃສ່ປະກອບສ່ວນເຂົ້າໃນການພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ແລະ ຮັບປະກັນຄວາມປອດໄພໃຫ້ແກ່ປະຊາຊົນທີ່ດຳລົງຊີວິດ ໃນເຂດພື້ນທີ່ ລບຕ ຕົກຄ້າງ ຫຼື ຍ້າຍຖິ່ນຖານມາຢູ່ໃໝ່ ໃນແຂວງທີ່ມີ ລບຕ ຕົກຄ້າງ.

ນອກຈາກນັ້ນ, ຄວາມຄືບໜ້າອີກຢ່າງໜຶ່ງ ແມ່ນການປັບປຸງແຜນຍຸດທະສາດແຫ່ງຊາດ ຊ່ວຍເຫຼືອຜູ້ຖືກເຄາະຮ້າຍຈາກ ລບຕ, ຊຶ່ງແຜນຍຸດທະສາດດັ່ງກ່າວ ໄດ້ນຳສະເໜີຮ່າງສຸດທ້າຍຕໍ່ຄະນະກຳມະການ ຄຊກລ ອະນຸມັດຮັບຮອງຢ່າງເປັນທາງການໃນເດືອນກຸມພາ 2014 ຜ່ານມານີ້.

ໃນປີຕໍ່ໜ້າ, ຂະແໜງການແກ້ໄຂບັນຫາ ລບຕ ຈະປັບປຸງຮ່າງລະບຽບການພາຍໃນ ເພື່ອໃຫ້ສົນທິສັນຍາຕ້ານລະເບີດລູກຫວ່ານສາມາດຈັດຕັ້ງປະຕິບັດຢ່າງເຕັມສ່ວນ ຕາມພັນທະຂອງສົນທິສັນຍາ ແລະ ສືບຕໍ່ພະຍາຍາມເພື່ອຍົກລະດັບ ແລະ ປັບປຸງຄຸນນະພາບວຽກງານຂອງຂະແໜງການແກ້ໄຂບັນຫາ ລບຕ ໃຫ້ດີຂຶ້ນ.

ພວກເຮົາບໍ່ຕ້ອງການເຫັນມີຜູ້ເສຍຊີວິດ ແລະ ບາດເຈັບຈາກ ລບຕ ອີກຕໍ່ໄປ ແລະ ບໍ່ຕ້ອງການເຫັນ ລບຕ ສືບຕໍ່ເປັນສິ່ງກີດຂວາງການພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ອີກຕໍ່ໄປ.

ອີກເທື່ອໜຶ່ງ, ຂ້າພະເຈົ້າ ຂໍຖືໂອກາດນີ້ ສະແດງຄວາມຂອບໃຈເປັນຢ່າງສູງຕໍ່ທຸກໆທ່ານ ທີ່ໄດ້ປະກອບສ່ວນຢ່າງຫ້າວຫັນເຂົ້າໃນວຽກງານແກ້ໄຂບັນຫາ ລບຕ ແລະ ຂໍຂອບໃຈຕໍ່ບັນດາຜູ້ສະໜັບສະໜູນຕ່າງໆ ທັງໃນ ສປປ ລາວ ແລະ ຕ່າງປະເທດ ທີ່ໃຫ້ການຊ່ວຍເຫຼືອ, ຊຶ່ງຖ້າປັດສະຈາກການສະໜັບສະໜູນຂອງບັນດາທ່ານແລ້ວ, ວຽກທີ່ສຳຄັນດັ່ງກ່າວ ກໍ່ຄົງບໍ່ສາມາດດຳເນີນໄປໄດ້.



ພະນະທ່ານ ບຸນເຮືອງ ດວງພະຈັນ
ລັດຖະມົນຕີປະຈຳຫ້ອງວ່າການລັດຖະບານ,
ຫົວໜ້າຄະນະພັດທະນາຊົນນະບົດ ແລະ ລຶບລ້າງຄວາມທຸກຍາກ ຂັ້ນສູນກາງ,
ປະທານຄະນະກຳມະການຄຸ້ມຄອງແຫ່ງຊາດ ເພື່ອແກ້ໄຂບັນຫາລະເບີດບໍ່ທັນແຕກ ທີ່ຕົກຄ້າງຢູ່ ສປປ ລາວ (ຄຊກລ).



# ບົດນຳ:

## ຂອງຫົວໜ້າຫ້ອງການຄະນະກຳມະການຄຸ້ມຄອງແຫ່ງຊາດ ເພື່ອແກ້ໄຂບັນຫາລະເບີດບໍ່ທັນແຕກ ທີ່ຕົກຄ້າງຢູ່ ສປປ ລາວ

ດັ່ງທີ່ພະນະທ່ານ ບຸນເຮືອງ ດວງພະຈັນ ປະທານ ຄຊກລ ໄດ້ມີຄຳເຫັນຂ້າງເທິງ, ປີ 2013 ຖືໄດ້ວ່າ ເປັນປີທີ່ມີຜົນສຳເລັດທີ່ສຳຄັນຫຼາຍຢ່າງໃນຂະແໜງການແກ້ໄຂບັນຫາ ລບຕ ເປັນຕົ້ນແມ່ນ ຈຳນວນຜູ້ເສຍຊີວິດ ແລະ ໄດ້ຮັບບາດເຈັບຈາກ ລບຕ ໄດ້ຫຼຸດລົງ ແລະ ຈຳນວນພື້ນທີ່ກວດກູ້ ລບຕ ກໍ່ເພີ່ມຂຶ້ນ.

ຄຊກລ ໂດຍການປະສານສົມທົບກັບບັນດາອົງການປະຕິບັດແກ້ໄຂບັນຫາ ລບຕ ແລະ ຄູ່ຮ່ວມພັດທະນາຕ່າງໆ ໄດ້ມີການເຮັດວຽກຮ່ວມກັນຢ່າງຫ້າວຫັນ. ພາຍຫຼັງທີ່ໄດ້ມີການປຶກສາຫາລືກັນກັບບັນດາອົງການປະຕິບັດແກ້ໄຂບັນຫາ ລບຕ ແລະ ຄູ່ຮ່ວມງານຕ່າງໆ ຫຼາຍຫຼັບຫຼາຍຕ່າວຕະຫຼອດປີ, ຂະແໜງການແກ້ໄຂບັນຫາ ລບຕ ໄດ້ເຫັນດີຮ່ວມກັນສະຫຼຸບວິທີການສຳຫຼວດເພື່ອກຳນົດພື້ນທີ່ ລບຕ ຕົກຄ້າງ. ເມື່ອໃດທີ່ການທົດລອງນຳໃຊ້ວິທີການສຳຫຼວດ ຖືກຈັດຕັ້ງປະຕິບັດ ແລະ ຄະນະກຳມະການ ຄຊກລ ຮັບຮອງສຸດທ້າຍແລ້ວ, ອົງການປະຕິບັດງານ ຈະນຳເອົາວິທີການສຳຫຼວດແບບໃໝ່ນີ້ ປັບເຂົ້າໃນການດຳເນີນງານຂອງຕົນ ເພື່ອຮັບປະກັນໃຫ້ມີວິທີການແກ້ໄຂບັນຫາ ລບຕ ທີ່ເປັນຮູບແບບ ແລະ ເປັນມາດຕະຖານທີ່ແນ່ນອນໃນການສຳຫຼວດເພື່ອກຳນົດພື້ນທີ່ ລບຕ ຕົກຄ້າງຢູ່ ສປປ ລາວ. ພ້ອມນັ້ນ, ການສຳຫຼວດ ແລະ ກວດກູ້ ລບຕ ສົມທົບກັບການເຮັດທົດລອງນຳໃຊ້ເຕັກໂນໂລຊີໃໝ່ເຂົ້າໃນການສຳຫຼວດ ແລະ ກວດກູ້ ລບຕ ແມ່ນຈະສາມາດເຮັດໃຫ້ການສຳຫຼວດ ແລະ ກວດກູ້ ລບຕ ເພີ່ມຂຶ້ນໃນແຕ່ລະປີ ດັ່ງທີ່ປະທານ ຄຊກລ ກ່າວຂ້າງເທິງນັ້ນ, ຕະຫຼອດປີ 2013 ພວກເຮົາ ແມ່ນສຸມໃສ່ຄົ້ນຄວ້າວິທີການສຳຫຼວດເພື່ອກຳນົດພື້ນທີ່ ລບຕ ຕົກຄ້າງ ເປັນບູລິມະສິດສຳຄັນ ໂດຍສະເພາະແມ່ນ ພື້ນທີ່ໆຕ້ອງການກວດກູ້ເພື່ອຮັບໃຊ້ແກ່ການພັດທະນາ.

ຕະຫຼອດປີ 2013, ທົ່ວຂະແໜງການແກ້ໄຂບັນຫາ ລບຕ ສາມາດກວດກູ້ພື້ນທີ່ໄດ້ຈຳນວນ 6,927 ເຮັກຕາ ໃນນັ້ນ 3,903 ເຮັກຕາ ແມ່ນເນື້ອທີ່ດິນກະສິກຳ ແລະ 3,024 ແມ່ນເນື້ອທີ່ດິນພັດທະນາອື່ນໆ. ນອກຈາກນັ້ນ, ກໍ່ສາມາດທຳລາຍ ລບຕ ໄດ້ຈຳນວນ 82,238 ໜ່ວຍ ໂດຍຜ່ານການທຳລາຍເທິງໜ້າດິນ ແລະ ການທຳລາຍ ລບຕ ແບບເຄື່ອນທີ່ ຈາກການລາຍງານຂອງປະຊາຊົນພົບເຫັນ, ໃນນັ້ນ ມີລະເບີດບົມໃຫຍ່ 291 ໜ່ວຍ, ລະເບີດລູກຫວ່ານ 40,300 ໜ່ວຍ, ລະເບີດຝັງດິນ 278 ໜ່ວຍ ແລະ ລບຕ ຊະນິດອື່ນໆ 41,369 ໜ່ວຍ.

ໃນເດືອນພະຈິກ 2013, ຄະນະກຳມະການຄຸ້ມຄອງແຫ່ງຊາດ ເພື່ອແກ້ໄຂບັນຫາລະເບີດບໍ່ທັນແຕກ ທີ່ຕົກຄ້າງຢູ່ ສປປ ລາວ (ຄຊກລ) ໃນນາມຕາງໜ້າຂະແໜງການແກ້ໄຂບັນຫາລະເບີດບໍ່ທັນແຕກ (ລບຕ) ໄດ້ນຳສົ່ງແຜນປະຕິບັດງານຂອງຂະແໜງການແກ້ໄຂບັນຫາລະເບີດບໍ່ທັນແຕກ ໃຫ້ແກ່ກອງເລຂາຮັບຜິດຊອບກອງປະຊຸມໂຕະມົນແຫ່ງຊາດ, ຊຶ່ງໄດ້ມີການນຳສະເໜີໂດຍລັດຖະບານແຫ່ງ ສປປ ລາວ ແລະ ບັນດາປະຊາຄົມໂລກ ກໍ່ໄດ້ຮັບຊາບກ່ຽວກັບແຜນປະຕິບັດງານຂອງຂະແໜງການແກ້ໄຂບັນຫາ ລບຕ ເປັນຢ່າງດີ, ຊຶ່ງໃນກອງປະຊຸມໂຕະມົນ ບັນດາປະເທດຜູ້ໃຫ້ທຶນ ກໍ່ໄດ້ມີຂໍ້ສະເໜີແນະຕ່າງໆ ປະກອບໃສ່ແຜນການດັ່ງກ່າວ ເພື່ອໃຫ້ປັບປຸງດັ່ງລຸ່ມນີ້:

- ໃຫ້ຂະຫຍາຍວຽກງານໂຄສະນາສຶກສາຄວາມອັນຕະລາຍຈາກ ລບຕ ຕື່ມອີກໃຫ້ຫຼາຍກວ່າເກົ່າອອກໄປໃນທົ່ວ 17 ແຂວງ ແຂວງຈາກທີ່ມີຢູ່ປະຈຸບັນ 9 ແຂວງ ໂດຍສະເພາະແມ່ນ ໃຫ້ຂະຫຍາຍກິດຈະກຳໂຄສະນາສຶກສາຄວາມສ່ຽງຈາກ ລບຕ ຢູ່ໃນໂຮງຮຽນລະດັບຊັ້ນມັດທະຍົມ ພ້ອມທັງ ລະດັບຊັ້ນປະຖົມນຳ ທີ່ນອນຢູ່ໃນເຂດທີ່ມີຄວາມສ່ຽງສູງຈາກ ລບຕ.
- ໃຫ້ ຄຊກລ ໃນນາມເປັນເຈົ້າໜ້າທີ່ໃນການຄຸ້ມຄອງວຽກງານແກ້ໄຂບັນຫາລະເບີດບໍ່ທັນແຕກ ທີ່ຕົກຄ້າງຢູ່ ສປປ ລາວ ສະໜັບສະໜູນຄະນະກຳມະການແຫ່ງຊາດ ກ່ຽວກັບຄົນພິການ ແລະ ຄົນສູງອາຍຸ ເພື່ອປັບປຸງຍຸດທະສາດ ໃນການຊ່ວຍເຫຼືອຄົນພິການໃຫ້ທົ່ວເຖິງຂະແໜງການ ລວມທັງຊ່ວຍເຫຼືອຜູ້ລອດຊີວິດຈາກ ລບຕ.
- ໃຫ້ ຄຊກລ ເພີ່ມທະວີສຸມໃສ່ການສຳຫຼວດເພື່ອກຳນົດພື້ນທີ່ ລບຕ ຕົກຄ້າງ ແລະ ປົດປ່ອຍເນື້ອທີ່ດິນໃຫ້ນຳໃຊ້ ສຳລັບບ່ອນທີ່ບໍ່ປະກົດເຫັນຫຼັກຖານ ລບຕ ຕົກຄ້າງ ແມ່ນໃຫ້ນຳໃຊ້ຂະບວນການສຳຫຼວດແບບພື້ນຖານ ເພື່ອປົດປ່ອຍພື້ນທີ່ດິນ.
- ໃຫ້ ຄຊກລ ສືບຕໍ່ປຶກສາຫາລືກັບບັນດາກະຊວງກ່ຽວຂ້ອງ ແລະ ອຳນາດການປົກຄອງທ້ອງຖິ່ນ ແລະ ຂະແໜງການອື່ນໆ ປັບປຸງແຜນການປະຈຳປີແລະແຜນການຫຼາຍປີຂອງຂະແໜງການເພື່ອລວມເຂົ້າໃນແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ຄັ້ງທີ 8.
- ໃຫ້ລັດຖະບານລາວ ແລະ ບັນດາປະເທດຜູ້ໃຫ້ທຶນ ປະກອບສ່ວນທຶນເຂົ້າໃນວຽກງານແກ້ໄຂບັນຫາ ລບຕ ໃຫ້ຫຼາຍຂຶ້ນກວ່າເກົ່າ ໂດຍສະເພາະແມ່ນ ສຸມໃສ່ສະໜັບສະໜູນສ້າງຄວາມເຂັ້ມແຂງສະຖາບັນການຈັດຕັ້ງຂອງລັດຖະບານຄື ຄຊກລ ແລະ ຄກລ ໃນການຄຸ້ມຄອງວຽກງານແກ້ໄຂບັນຫາ ລບຕ.

ວຽກງານແກ້ໄຂບັນຫາ ລບຕ ແມ່ນຍັງຕ້ອງໄດ້ສຸມຄວາມພະຍາຍາມໃສ່ຢ່າງໜັກ, ຂ້າພະເຈົ້າ ແລະ ພະນັກງານທັງໝົດຂອງຫ້ອງການ ຄຊກລ ຈະສືບຕໍ່ເຮັດວຽກຮ່ວມກັບບັນດາຄູ່ຮ່ວມງານຕ່າງໆ ຢູ່ໃນຂະແໜງການແກ້ໄຂບັນຫາ ລບຕ ໃຫ້ດີທີ່ສຸດ.

ໜ້າທີ່ຕົ້ນຕໍຂອງພວກເຮົາ ແມ່ນເຮັດໃຫ້ຊີວິດຂອງປະຊາຊົນລາວບັນດາເຜົ່າ ມີຄວາມປອດໄພ ແລະ ຮັບໃຊ້ເປົ້າໝາຍສະຫັດວັດສະວັດຕ່າງໆຂອງປະເທດເຮົາ.

ຂໍສະແດງຄວາມຂອບໃຈສໍາລັບການສືບຕໍ່ໃຫ້ການຮ່ວມມື ແລະ ມີການປະສານສົມທົບຮ່ວມກັນຢ່າງດີຕະຫຼອດມາ ໃນການປະຕິບັດວຽກງານແກ້ໄຂບັນຫາ ລບຕ ໃນນາມຕາງໜ້າໃຫ້ລັດຖະບານລາວ ແລະ ປະຊາຊົນລາວບັນດາເຜົ່າໃນທົ່ວປະເທດ.

ພູຊຽວ ຈັນທະສົມບູນ
ຫົວໜ້າຫ້ອງການຄະນະກໍາມະການຄຸ້ມຄອງແຫ່ງຊາດ
ເພື່ອແກ້ໄຂບັນຫາລະເບີດບໍ່ທັນແຕກ ທີ່ຕົກຄ້າງຢູ່ ສປປ ລາວ.

 

# ບົດນຳ:

## ຂອງ ເອກອັກຄະລັດຖະທູດ ສະຫະລັດອາເມລິກາ ປະຈຳ ສປປ ລາວ ແລະ ຜູ້ຕາງໜ້າອົງການ ສປຊ ເພື່ອການພັດທະນາປະຈຳ ສປປ ລາວ, ປະທານຮ່ວມກອງປະຊຸມຂະແໜງການແກ້ໄຂບັນຫາ ລບຕ

ພວກເຮົາ ຮູ້ສຶກດີໃຈຫຼາຍ ທີ່ໄດ້ມີໂອກາດນຳສະເໜີບາງຜົນສຳເລັດທີ່ສຳຄັນ ຢູ່ໃນປຶ້ມບົດລາຍງານຂອງຂະແໜງການແກ້ໄຂບັນຫາ ລບຕ ສຳລັບປີ 2013.

ການຂະຫຍາຍຕົວສຳຄັນແມ່ນຈຳນວນຜູ້ເສຍຊີວິດ ແລະ ບາດເຈັບຈາກ ລບຕ ໄດ້ຫຼຸດລົງ ຄືກັບພະນະທ່ານ ບຸນເຮືອງ ດວງພະຈັນ ປະທານ ຄຊກລ ແລະ ທ່ານ ພູຊຽງ ຈັນທະສີມບູນ ຫົວໜ້າຫ້ອງການ ຄຊກລ ໄດ້ກ່າວກ່ອນໜ້ານີ້, ຊຶ່ງວຽກງານດັ່ງກ່າວ ປະສົບຜົນສຳເລັດໄດ້ ກໍ່ຍ້ອນການປະຕິບັດໜ້າທີ່ຢ່າງຫ້າວຫັນຂອງການໂຄສະນາສຶກສາຄວາມສ່ຽງຈາກ ລບຕ ຢູ່ບັນດາແຂວງຕ່າງໆທີ່ມີ ລບຕ ຕົກຄ້າງ ແລະ ການເພີ່ມຂຶ້ນຂອງວຽກງານການກວດກູ້ ລບຕ. ເຖິງແມ່ນວ່າ ພວກເຮົາຈະມີຜົນສຳເລັດຂ້າງເທິງນັ້ນກໍ່ຕາມ ພວກເຮົາ ກໍ່ບໍ່ຄວນລືມຜູ້ລອດຊີວິດເກົ່າຈາກ ລບຕ ຈຳນວນ 20,000 ຄົນ ທີ່ໄດ້ຮັບເຄາະຮ້າຍຈາກສົງຄາມແຕ່ປີ 1964 ເຊັ່ນດຽວກັນ ເນື່ອງຈາກວ່າ ບັນດາຜູ້ຖືກເຄາະຮ້າຍ ຫຼາຍພັນຄົນ ແລະ ຄອບຄົວຂອງເຂົາເຈົ້າ ຍັງລໍຖ້າການຊ່ວຍເຫຼືອຢູ່, ຊຶ່ງວຽກນີ້ແມ່ນຍັງຕ້ອງໄດ້ສືບຕໍ່ສູ້ຊົນປະຕິບັດໃຫ້ໄດ້ຢ່າງທົ່ວເຖິງ. ສຳລັບແຜນຍຸດທະສາດຊ່ວຍເຫຼືອຜູ້ຖືກເຄາະຮ້າຍຈາກ ລບຕ ສຳລັບປີ 2014-2020 ສະບັບໃໝ່ ທີ່ຖືກຮັບຮອງແລ້ວນັ້ນ ບວກກັບການເພີ່ມຂຶ້ນການຮ່ວມມືປະສານສົມທົບກັນລະຫວ່າງ ຄຊກລ ແລະ ຄະນະກຳມະການແຫ່ງຊາດເພື່ອຄົນພິການ ແລະ ຜູ້ສູງອາຍຸ ໃນການປັບປຸງແຜນຍຸດທະສາດຂອງຂະແໜງການກຽວກັບຄົນເສຍອົງຄະ ແມ່ນຈະຊ່ວຍໃຫ້ສຸມໃສ່ການຊ່ວຍເຫຼືອຜູ້ລອດຊີວິດຈາກ ລບຕ ຫຼາຍຂຶ້ນກວ່າເກົ່າ. ຄວາມພະຍາຍາມຢ່າງກວ້າງຂວາງເພື່ອປັບປຸງລະບົບສຸກສາລາປິ່ນປົວ ຢູ່ໃນ ສປປ ລາວ ໃຫ້ມີຄວາມເຂັ້ມແຂງ ແລະ ປັບປຸງລະບົບການບໍລິການ ໃຫ້ແກ່ຜູ້ຖືກເຄາະຮ້າຍຈາກ ລບຕ, ຜູ້ທີ່ລອດຊີວິດຈາກ ລບຕ ແລະ ຍາດຕິພີ່ນ້ອງຂອງເຂົາເຈົ້າ ແມ່ນຈະເປັນວຽກງານສຳຄັນສຳລັບປີຕໍ່ໄປທີ່ຈະສຸມໃສ. ສຳລັບເຂດພື້ນທີ່ໆມີ ລບຕ ຕົກຄ້າງສູງ ການເຂົ້າເຖິງການປິ່ນປົວສຸຂະພາບທີ່ໄດ້ຄຸນນະພາບສຳລັບຜູ້ຖືກເຄາະຮ້າຍຈາກ ລບຕ ແລະ ຜູ້ທີ່ລອດຊີວິດຈາກ ລບຕ ລວມທັງຄອບຄົວຂອງເຂົາເຈົ້າ ແມ່ນຍັງຈຳກັດ. ວິທີການແກ້ໄຂທີ່ເປັນລະບົບເພື່ອສະໜອງການບໍລິການຟື້ນຟູທາງດ້ານຮ່າງກາຍ, ຈິດຕະສັງຄົມ (ຈິດໃຈ) ແລະ ການເຊື່ອມສານເສດຖະກິດສຳລັບຜູ້ລອດຊີວິດຈາກ ລບຕ ແມ່ນຍັງມີຄວາມຕ້ອງການຫຼາຍ.

ບັນຫາ ລບຕ ຢູ່ ສປປ ລາວ ບໍ່ສະເພາະສົ່ງກະທົບໃສ່ທາງດ້ານມະນຸດສະທຳເທົ່ານັ້ນ ແຕ່ມັນຍັງສົ່ງຜົນກະທົບໃສ່ການພັດທະນາຕ່າງໆໃນໄລຍະຍາວອີກດ້ວຍ. ພວກເຮົາ ບໍ່ສະເພາະເຊື່ອມສານທິດທາງນະໂຍບາຍຂອງ ຄຊກລ ແລະ ຄກລ ເຂົ້າໃນນະໂຍບາຍການພັດທະນາຊົນນະບົດ ແລະ ລຶບລ້າງຄວາມທຸກຍາກ ແຕ່ຍັງໄດ້ສຸມໃສ່ປັບປຸງການວັດແທກຜົນກະທົບ ເພື່ອເຮັດໃຫ້ການກວດກູ້ ລບຕ ສົ່ງຜົນກະທົບດ້ານບວກໃສ່ການພັດທະນາອີກດ້ວຍ. ວຽກງານດັ່ງກ່າວນີ້ແມ່ນເປັນວຽກທີ່ບໍ່ງ່າຍ ແຕ່ເມື່ອວິເຄາະແລ້ວ ຖ້າເຮັດໄດ້ຄືແນວນັ້ນ ແມ່ນຈະມີຄວາມຄຸ້ມຄ່າທີ່ສຸດສຳລັບຂະແໜງການ. ວິທີການສຳຫຼວດທີ່ດີ, ໜ້າເຊື່ອຖື ແລະ ມີປະສິດທິຜົນ ແມ່ນເປັນປັດໃຈສຳຄັນທີ່ສຸດທີ່ຂາດບໍ່ໄດ້ ເພື່ອນຳໄປສູ່ການວາງແຜນຈັດລຽງບູລິມະສິດການກວດກູ້ ລບຕ ໄດ້ງ່າຍຂຶ້ນ. ດັ່ງທີ່ປະທານ ຄຊກລ ໄດ້ກ່າວວ່າ ການປະສານສົມທົບກັນລະຫວ່າງ ຄຊກລ ແລະ ບັນດາອົງການປະຕິບັດງານ ໃນການກຳນົດຊອກຫາວິທີການແກ້ໄຂບັນຫາ ລບຕ ຕົກຄ້າງໃຫ້ແທດເໝາະກັບສະພາບຂອງ ສປປ ລາວ ເຫັນວ່າ ແມ່ນເປັນສິ່ງທີ່ສຳຄັນທີ່ສຸດອັນດັບໜຶ່ງທີ່ຕ້ອງໄດ້ຮ່ວມກັນປຶກສາຫາລືຢ່າງເປັນລະບົບ. ພວກເຮົາ ເຊື່ອວ່າ ຖ້າເຮັດໄດ້ຄືແນວນັ້ນ ແມ່ນຈະສົ່ງຜົນກະທົບໃສ່ທາງດ້ານມະນຸດສະທຳ ແລະ ການພັດທະນາ ແລະ ເປັນການຊ່ວຍສະໜັບສະໜູນຂະແໜງການແກ້ໄຂບັນຫາ ລບຕ ໃຫ້ໄດ້ຮັບປະສິດທິຜົນຫຼາຍທີ່ສຸດ ໃນການຈັດສັນປັນສ່ວນແຫຼ່ງທຶນໃຫ້ມີຢູ່ ເພື່ອຈັດຕັ້ງປະຕິບັດກິດຈະກຳ. ຍ້ອນຜົນກະທົບຈາກ ລບຕ ກວ້າງຂວາງໃນທົ່ວປະເທດ ວຽກງານແກ້ໄຂບັນ ຫາ ລບຕ ຈຶ່ງຖືໄດ້ວ່າ ເປັນວຽກງານທີ່ຍັງໜັກໜ່ວງທີ່ສຸດ ແລະ ຮຽກຮ້ອງຕ້ອງການໃຫ້ມີການຄົ້ນຄິດຊອກຫາວິທີທາງແກ້ໄຂຢ່າງມີຈຸດສຸມ. ພ້ອມນັ້ນ, ເຕັກໂນໂລຊີໃໝ່ ກໍ່ເປັນສິ່ງສຳຄັນເຊັ່ນດຽວກັນ ໃນການແກ້ໄຂບັນຫາ ລບຕ. ການສືບຕໍ່ປະສານສົມທົບກັນລະຫວ່າງ ຄຊກລ, ບໍລິສັດກວດກູ້ລະເບີດ ແລະ ອົງການປະຕິບັດງານເພື່ອມະນຸດສະທຳ ລວມທັງ ຄກລ ເພື່ອນຳສະເໜີຊອກຫາວິທີການສຳຫຼວດທີ່ດີອອກມານັ້ນ ແມ່ນເປັນສິ່ງທີ່ອົງການ ສປຊ ແລະ ສະຫະລັດອາເມລິກາ ໃຫ້ການສະໜັບສະໜູນ.

ບັນດາຜົນສຳເລັດຕ່າງໆທີ່ຍາດມາໄດ້ນັ້ນ ຈະບໍ່ສາມາດເກີດຂຶ້ນໄດ້ ຖ້າປັດສະຈາກການສະໜັບສະໜູນຂອງບັນດາຄູ່ຮ່ວມພັດທະນາຕ່າງໆໃນທົ່ວຂະແໜງການ ບໍ່ວ່າຈະເປັນການສະໜັບສະໜູນຜ່ານກອງທຶນຊ່ວຍເຫຼືອລ້າຂອງ ສປຊ ຫຼື ຜ່ານການຮ່ວມມືແບບສອງຝ່າຍກໍ່ຕາມ ກໍ່ລ້ວນແລ້ວແຕ່ມີເປົ້າໝາຍອັນດຽວກັນ ຄືເຮັດໃຫ້ຜົນກະທົບຈາກ ລບຕ ຫຼຸດລົງ ແລະ ບັນລຸເປົ້າໝາຍສະຫັດສະວັດດ້ານການພັດທະນາ ທີ 9 ແລະ ເປົ້າໝາຍສະຫັດສະວັດດ້ານການພັດທະນາອື່ນໆ ນຳອີກ. ສາມາດເວົ້າໄດ້ວ່າ ການສືບຕໍ່ສະໜັບສະໜູນຂອງບັນດາທ່ານເຂົ້າໃນວຽກງານແກ້ໄຂບັນຫາ ລບຕ ຕະຫຼອດປີ 2013 ແມ່ນເຮັດໃຫ້ໝາກຜົນທາງດ້ານຂົງເຂດວຽກງານແກ້ໄຂບັນຫາ ລບຕ ເພີ່ມຂຶ້ນ.

ທ່ານ ເດເນວ ຄູນ

ເອກອັກຄະລັດຖະທູດ ສະຫະລັດອາເມລິກາ ປະຈຳ ສປປ ລາວ,
ປະທານຮ່ວມກອງປະຊຸມຂະແໜງການແກ້ໄຂບັນຫາ ລບຕ

ທ່ານ ມິນ ຟາມ

ຜູ້ຕາງໜ້າອົງການ ສປຊ ເພື່ອການພັດທະນາປະຈຳ
ສປປ ລາວ, ປະທານຮ່ວມກອງປະຊຸມຂະແໜງການ
ແກ້ໄຂບັນຫາ ລບຕ


US airforce bombing data, Xiengkhuang province
Kham
Phoukout
Pek
Nonghed
Phaxai
Khoun
Mockmai
Thathom
bombing areas
14-11-2008
SPIRIT of SOCCER

# ຜົນສຳເລັດຕ່າງໆຂອງຂະແໜງການ: ລາຍງານຕົວເລກ

## ອົງການປະຕິບັດງານເກັບກູ້ ລບຕ ເພື່ອມະນຸດສະທຳ

### ການສຳຫຼວດທົ່ວໄປ

| ຊື່ອົງການ | ຈ/ນ ບ້ານ | ຈ/ນ ຄັ້ງຢ້ຽມຢາມ |
|---|---|---|
| ຄກລ | 1,406 | 2,179 |
| ເຫັດໄອ | 82 | 82 |
| ແມັກ | 59 | 240 |
| ເອັນພີເອ | 234 | 234 |
| ເຣໂລຫຼາດ | 11 | 18 |
| *ລວມ:* | *1,792* | *2,753* |

### ວຽກງານສຳຫຼວດທາງດ້ານວິຊາການ ເພື່ອກຳນົດພື້ນທີ່ອັນຕະລາຍ

| ອົງການ | ດິນກະສິກຳ (ຮຕ) | ດິນພັດທະນາ (ຮຕ) | ລວມທັງໝົດ (ຮຕ) | ບົມໃຫຍ່ | ລະເບີດລູກຫວ່ານ | ລະເບີດຝັງດິນ | ລບຕ ຊະນິດອື່ນໆ | *ລວມ* |
|---|---|---|---|---|---|---|---|---|
| ເອັນພີເອ | 9,169 | - | 9,169 | 0 | 9,729 | 0 | 0 | ***9,729*** |
| ເຣໂລຫຼາດ | 378 | | 378 | | | | | |
| *ລວມ:* | ***9,547*** | ***0*** | ***9,547*** | ***0*** | ***9,729*** | ***0*** | ***0*** | ***9,729*** |

### ວຽກງານສຳຫຼວດທາງດ້ານວິຊາການ ເພື່ອປົດປ່ອຍເນື້ອທີ່

| ອົງການ | ດິນກະສິກຳ (ຮຕ) | ດິນພັດທະນາ (ຮຕ) | ລວມທັງໝົດ (ຮຕ) | ບົມໃຫຍ່ | ລະເບີດລູກຫວ່ານ | ລະເບີດຝັງດິນ | ລບຕ ຊະນິດອື່ນໆ | *ລວມ* |
|---|---|---|---|---|---|---|---|---|
| ຄກລ | 371 | 68 | 439 | 0 | 13 | 0 | 169 | ***182*** |
| ໂຊດີ | 2 | 0 | 2 | 0 | 0 | 0 | 0 | ***0*** |
| *ລວມ:* | ***373*** | ***68*** | ***441*** | ***0*** | ***13*** | ***0*** | ***169*** | ***182*** |

### ການທຳລາຍເຄື່ອນທີ່

| ອົງການ | ຈ/ນ ບ້ານ | ຈ/ນ ຄັ້ງຢ້ຽມຢາມ | ບົມໃຫຍ່ | ລະເບີດລູກຫວ່ານ | ລະເບີດຝັງດິນ | ລບຕ ຊະນິດອື່ນໆ | *ລວມ* |
|---|---|---|---|---|---|---|---|
| ຄກລ | 1,176 | 1,754 | 216 | 11,026 | 202 | 13,863 | ***25,307*** |
| ເຫັດໄອ | 93 | 93 | 6 | 1,116 | 8 | 1,102 | ***2,232*** |
| ແມັກ | 86 | 1,374 | 5 | 2,019 | 0 | 554 | ***2,578*** |
| ເອັນພີເອ | 44 | 44 | 0 | 0 | 0 | 2177 | ***2,177*** |
| ໂຊດີ | 117 | 216 | 6 | 637 | 0 | 94 | ***737*** |
| ເຣໂລຫຼາດ | 11 | 325 | 13 | 1,169 | 0 | 1,283 | ***2,465*** |
| *ລວມ:* | ***1,527*** | ***3,806*** | ***246*** | ***15,967*** | ***210*** | ***19,073*** | ***35,496*** |

### ການກວດກູ້ເນື້ອທີ່

| ອົງການ | ດິນກະສິກຳ (ຮຕ) | ດິນພັດທະນາ (ຮຕ) | ລວມທັງໝົດ (ຮຕ) | ບົມໃຫ່ຍ | ລະເບີດ ລູກຫວ່ານ | ລະເບີດ ຝັງດິນ | ລບຕ ຊະນິດອື່ນໆ | *ລວມ* |
|---|---|---|---|---|---|---|---|---|
| ຄກລ | 2,435 | 421 | 2,856 | 24 | 17,551 | 48 | 17,522 | ***35,145*** |
| ເຫັດໄອ | 13 | 15 | 28 | 1 | 83 | 0 | 847 | ***931*** |
| ແມັກ | 218 | 9 | 227 | 3 | 3,407 | 0 | 1,022 | ***4,432*** |
| ເອັນພີເອ | 0 | 35 | 35 | 0 | 770 | 0 | 52 | ***822*** |
| ໂຊດີ | 109 | 0 | 109 | 0 | 273 | 0 | 190 | ***463*** |
| ເຮໂລຫຼາດ | 28 | 6 | 33 | 0 | 763 | 0 | 993 | ***1,756*** |
| *ລວມ:* | ***2,803*** | ***485*** | ***3,288*** | ***28*** | ***22,847*** | ***48*** | ***20,626*** | ***43,549*** |

| ອົງການ | ດິນກະສິກຳ (ຮຕ) | ດິນພັດທະນາ (ຮຕ) | ລວມທັງໝົດ (ຮຕ) | ບົມໃຫ່ຍ | ລະເບີດ ລູກຫວ່ານ | ລະເບີດ ຝັງດິນ | ລບຕ ຊະນິດອື່ນໆ | *ລວມ* |
|---|---|---|---|---|---|---|---|---|
| ລວມອົງການ ມະນຸດສະທຳ | 3,176 | 553 | 3,729 | 274 | 38,827 | 258 | 39,868 | ***79,227*** |
| *ລວມ:* | ***3,176*** | ***553*** | ***3,729*** | ***274*** | ***38,827*** | ***258*** | ***39,868*** | ***79,227*** |

## ບໍລິສັດເກັບກູ້ ລບຕ ຂອງພາຍໃນ ແລະ ຕ່າງປະເທດ:

### ການກວດກູ້ເນື້ອທີ່

| ບໍລິສັດ | ດິນກະສິກຳ (ຮຕ) | ດິນພັດທະນາ (ຮຕ) | ລວມທັງໝົດ (ຮຕ) | ບົມໃຫ່ຍ | ລະເບີດ ລູກຫວ່ານ | ລະເບີດ ຝັງດິນ | ລບຕ ຊະນິດອື່ນໆ | *ລວມ* |
|---|---|---|---|---|---|---|---|---|
| ອາສາ | 0 | 4 | 4 | 0 | 0 | 0 | 0 | ***0*** |
| ພີເອັດດີ | 207 | 0 | 207 | 0 | 0 | 0 | 0 | ***0*** |
| ເອັດບີເຫັດ | 520 | 0 | 520 | 0 | 360 | 18 | 0 | ***378*** |
| ທີເຫັດບີ | 0 | 150 | 150 | 0 | 0 | 0 | 0 | ***0*** |
| ລາວບີເອັດແອວ | 0 | 408 | 408 | 0 | 203 | 0 | 42 | ***245*** |
| ເອັກທີດີ | 0 | 93 | 93 | 0 | 0 | 0 | 0 | ***0*** |
| ແອວເອຢູເອັນຊີ | - | - | 0 | - | - | - | - | ***0*** |
| ເອັດພີ | 0 | 1,458 | 1,458 | 2 | 320 | 0 | 501 | ***823*** |
| ເອັມເອັມຈີ | 0 | 186 | 186 | 7 | 317 | 0 | 588 | ***912*** |
| ມິວເຊີດສ໌ | 0 | 132 | 132 | 8 | 186 | 0 | 199 | ***393*** |
| ແບັກເທັກ | 0 | 40 | 40 | 0 | 87 | 2 | 171 | ***260*** |
| *ລວມ:* | ***727*** | ***2,471*** | ***3,198*** | ***17*** | ***1,473*** | ***20*** | ***1,501*** | ***3,011*** |

| ບໍລິສັດ | ດິນກະສິກຳ (ຮຕ) | ດິນພັດທະນາ (ຮຕ) | ລວມທັງໝົດ (ຮຕ) | ບົມໃຫ່ຍ | ລະເບີດ ລູກຫວ່ານ | ລະເບີດ ຝັງດິນ | ລບຕ ຊະນິດອື່ນໆ | *ລວມ* |
|---|---|---|---|---|---|---|---|---|
| ລວມບໍລິສັດ | 727 | 2,471 | 3,198 | 17 | 1,473 | 20 | 1,501 | ***3,011*** |
| *ລວມ:* | ***727*** | ***2,471*** | ***3,198*** | ***17*** | ***1,473*** | ***20*** | ***1,501*** | ***3,011*** |

| | ດິນກະສິກຳ (ຮຕ) | ດິນພັດທະນາ (ຮຕ) | ລວມທັງໝົດ (ຮຕ) | ບົມໃຫ່ຍ | ລະເບີດລູກຫວ່ານ | ລະເບີດຝັງດິນ | ລບຕ ຊະນິດອື່ນໆ | *ລວມ* |
|---|---|---|---|---|---|---|---|---|
| ລວມທັງໝົດທົ່ວຂະແໜງການ: | 3,903 | 3,024 | 6,927 | 291 | 40,300 | 278 | 41,369 | ***82,238*** |
| *ລວມ:* | ***3,903*** | ***3,024*** | ***6,927*** | ***291*** | ***40,300*** | ***278*** | ***41,369*** | ***82,238*** |

## ອົງການປະຕິບັດງານທາງດ້ານການສຶກສາຄວາມສ່ຽງຈາກ ລບຕ

| ອົງການ | ຈຳນວນບ້ານ ແລະ ໂຮງຮຽນ | ເດັກນ້ອຍ | ຜູ້ໃຫ່ຍ | *ລວມ* |
|---|---|---|---|---|
| ຄກລ | 650 | 80,443 | 93,022 | ***173,465*** |
| ເພັດໄອ | 90 | 8,412 | 6,021 | ***14,433*** |
| ແມັກ | 23 | 802 | 119 | ***921*** |
| ໂຊດີ | 44 | 4,732 | 2,159 | ***6,891*** |
| ເຮໂລຫຼາດ | 18 | 614 | 650 | ***1,264*** |
| ເວີອິດູເຄຊັ້ນ | 2,366 | 228,182 | 9,030 | ***237,212*** |
| ເອັດໂອເອັດ | 12 | 7,734 | 0 | ***7,734*** |
| ຊີອາເອັດ | 77 | 259 | 1,122 | ***1,381*** |
| *ລວມ:* | ***3,280*** | ***331,178*** | ***112,123*** | ***443,301*** |

## ການຊ່ວຍເຫຼືອຜູ້ຖືກເຄາະຮ້າຍຈາກ ລບຕ



## ຈຳນວນບຸກຄະລາກອນທັງໝົດໃນຂະແໜງການແກ້ໄຂບັນຫາ ລບຕ ໃນປີ 2013

| ອົງການ | ພະນັກງານຢູ່ຫ້ອງການ | | | | ພະນັກງານປະຕິບັດງານ | | | | *ລວມ:* |
|---|---|---|---|---|---|---|---|---|---|
| | *ລາວ* | | *ຕ່າງປະເທດ* | | *ລາວ* | | *ຕ່າງປະເທດ* | | |
| | *ຊາຍ* | *ຍິງ* | *ຊາຍ* | *ຍິງ* | *ຊາຍ* | *ຍິງ* | *ຊາຍ* | *ຍິງ* | |
| ຄຊກລ | 20 | 14 | 2 | 0 | 7 | 2 | 2 | 0 | ***47*** |
| ຄກລ | 136 | 53 | 3 | 1 | 814 | 193 | 0 | 0 | ***1,200*** |
| ເອັນພີເອ | 40 | 16 | 4 | 0 | 243 | 77 | 3 | 0 | ***383*** |
| ແມັກ | 38 | 14 | 2 | 1 | 180 | 70 | 3 | 0 | ***308*** |
| ເຫັດໄອ | 12 | 6 | 1 | 1 | 71 | 26 | 2 | 1 | ***120*** |
| ໂຊດີ | 7 | 7 | 2 | 1 | 42 | 13 | 1 | 0 | ***73*** |
| ເຮໂລຫຼາດ | 17 | 6 | 0 | 0 | 73 | 22 | 2 | 0 | ***120*** |
| ເຈມັດ | 5 | 2 | 3 | 3 | 4 | 0 | 2 | 0 | ***19*** |
| ອາສາ | 2 | 1 | 0 | 0 | 10 | 1 | 0 | 0 | ***14*** |
| ພີເອັດດີ | 4 | 3 | 0 | 0 | 47 | 13 | 0 | 0 | ***67*** |
| ເອັດບີເທັດ | 1 | 2 | 0 | 0 | 40 | 5 | 0 | 0 | ***48*** |
| ເອັກທີດີ | 3 | 1 | 0 | 0 | 36 | 0 | 0 | 0 | ***40*** |
| ເອັດພີ | 15 | 11 | 0 | 0 | 86 | 6 | 0 | 0 | ***118*** |
| ແບັກເທັກ | 1 | 2 | 1 | 1 | 109 | 0 | 1 | 0 | ***115*** |
| ມິວເຊີດສ໌ | 3 | 6 | 4 | 2 | 278 | 201 | 13 | 0 | ***507*** |
| ເອັມເອັມຈີ | 5 | 6 | 0 | 0 | 238 | 118 | 7 | 0 | ***374*** |
| ເວີອິດູເຄເຊີ້ນ | 3 | 5 | 0 | 1 | 3 | 3 | 0 | 1 | ***16*** |
| ເອເອອາຣ໌ | 1 | 1 | 0 | 0 | 7 | 0 | 0 | 2 | ***11*** |
| ຊີອາເອັດສ໌ | 4 | 3 | 1 | 1 | 2 | 0 | 1 | 0 | ***12*** |
| ຊີເອັມອາ | 9 | 15 | 0 | 3 | 77 | 90 | 1 | 0 | ***195*** |
| ຄິວແອວເອ | 8 | 2 | 0 | 0 | 0 | 0 | 0 | 1 | ***11*** |
| ໂຄບ | 7 | 3 | 1 | 2 | 0 | 0 | 0 | 0 | ***13*** |
| ເອັດໂອເອັດ | 1 | 0 | 0 | 0 | 3 | 0 | 0 | 0 | ***4*** |
| *ລວມ:* | ***342*** | ***179*** | ***24*** | ***17*** | ***2,370*** | ***840*** | ***38*** | ***5*** | ***3,815*** |

## ລາຍງານສະພາບການເງິນໃນຂະແໜງການ ລບຕ:

### ອົງການປະຕິບັດງານເກັບກູ້ ລບຕ ເພື່ອມະນຸດສະທຳ - ປະຈຳປີ 2013 (ໂດລາສະຫະລັດ)

| ຊື່ອົງການ | ເງິນຊ່ວຍເຫຼືອທີ່ໄດ້ຮັບໃນປີ 2013 | ຄ່າໃຊ້ຈ່າຍໃນປີ 2013 |
|---|---|---|
| ຄກລ | 6,204,648 | 8,819,955 |
| ເອັນພີເອ | 4,150,000 | 4,150,000 |
| ແມັກ | 5,189,000 | 5,189,000 |
| ເຫັດໄອ | 1,664,637 | 1,664,637 |
| ໂຊດີ | 1,142,067 | 1,142,067 |
| ເຣໂລຫຼາດ | 1,429,408 | 1,429,408 |
| ເຈມັດ | ບໍ່ມີການສະໜອງຂໍ້ມູນໃຫ້ | ບໍ່ມີການສະໜອງຂໍ້ມູນໃຫ້ |
| *ລວມ* | ***19,779,759*** | ***22,395,066*** |

### ບໍລິສັດເກັບກູ້ ລບຕ ຂອງພາຍໃນ ແລະ ຕ່າງປະເທດ - ປະຈຳປີ 2013 (ໂດລາສະຫະລັດ)

| ຊື່ອົງການ | ເງິນຊ່ວຍເຫຼືອທີ່ໄດ້ຮັບໃນປີ 2013 | ຄ່າໃຊ້ຈ່າຍໃນປີ 2013 |
|---|---|---|
| ອາສາ | 108,950 | 108,950 |
| ພີເອັດດີ | 800,000 | 800,000 |
| ເອັດບີເທັດ | 250,000 | 227,300 |
| ລາວບີເອັດແອວ* | ບໍ່ມີການສະໜອງຂໍ້ມູນໃຫ້ | ບໍ່ມີການສະໜອງຂໍ້ມູນໃຫ້ |
| ເອັກທີດີ | 250,000 | 315,500 |
| ແອວເອຢູເອັນຊີ | 299,000 | 299,000 |
| ແບັກເທັກ | 901,000 | 901,000 |
| ມິວເຊີດສ໌ | 2,005,428 | 2,005,428 |
| ເອັມເອັມຈີ | 5,782,638 | 5,782,638 |
| ທີເທັດບີ | ບໍ່ມີການສະໜອງຂໍ້ມູນໃຫ້ | ບໍ່ມີການສະໜອງຂໍ້ມູນໃຫ້ |
| ເອັດພີ | 3,661,128 | 3,183,128 |
| *ລວມ* | ***14,058,144*** | ***13,622,944*** |

### ອົງການປະຕິບັດງານຊ່ວຍເຫຼືອຜູ້ຖືກເຄາະຮ້າຍ ແລະ ໂຄສະນາສຶກສາຄວາມສ່ຽງຈາກ ລບຕ - ປະຈຳປີ 2013 (ໂດລາສະຫະລັດ)

| ຊື່ອົງການ | ເງິນຊ່ວຍເຫຼືອທີ່ໄດ້ຮັບໃນປີ 2013 | ຄ່າໃຊ້ຈ່າຍໃນປີ 2013 |
|---|---|---|
| ໂຄບ | 1,081,866 | 814,157 |
| ເວີອີດູເຄເຊີ້ນ | 157,915 | 157,915 |
| ຊີອາເອັດສ໌ | 87,654 | 87,654 |
| ເອເອອາຣ໌ | 187,800 | 142,000 |
| ຊີເອັມອາ | 456,000 | 456,000 |
| ເອັດໂອເອັດ | 79,951 | 79,951 |
| ຄິວແອວເອ | 88,362 | 71,205 |
| *ລວມ* | ***2,139,548*** | ***1,808,882*** |

| | | |
|---|---|---|
| **ຄຊກລ (ຜ່ານ ສປຊ)** | 1,592,320 | 1,393,980 |
| **ຄຊກລ (ຜ່ານບໍລິສັດສະເຕີລິ້ງ)** | 90,747 | 110,217 |
| **ຄຊກລ (ຜ່ານອົງການແມັກ)** | 0 | 18,375 |
| **ຄຊກລ (ຜ່ານລັດຖະບານໄທ)** | 15,000 | 15,000 |

## ການປະກອບສ່ວນແບບເປັນວັດຖຸອຸປະກອນ

| | | |
|---|---|---|
| **ລັດຖະບານລາວ (ແບບເປັນວັດຖຸອຸປະກອນ)** | 4,911,120 | 4,911,120 |

| | | |
|---|---|---|
| *ລວມທັງໝົດທີ່ວຂະແໜງການ* | ***42,586,639*** | ***44,275,583*** |

## ສະພາບຕົວຈິງ ລບຕ ຕົກຄ້າງ ແລະ ຕົວເລກສະຖິຕິ

- ສປປ ລາວ ເປັນປະເທດທີ່ຖືກຜົນກະທົບຢ່າງໜັກໜ່ວງທີ່ສຸດຈາກລະເບີດ, ທຽບໃສ່ຫົວຄົນໃນປະຫວັດສາດ
- 25% ຂອງຈຳນວນບ້ານ ຢູ່ໃນ ສປປ ລາວ ໄດ້ຮັບຜົນກະທົບຈາກ ລບຕ
- 14 ແຂວງ ໄດ້ຮັບຜົນກະທົບຈາກ ລບຕ ທີ່ຍັງຕົກຄ້າງ
- ລະເບີດຈຳນວນຫຼາຍກວ່າ 2 ລ້ານໂຕນ ໄດ້ຖິ້ມລົງໃສ່ຜືນແຜ່ນດິນຂອງ ສປປ ລາວ ໃນລະຫວ່າງປີ 1964 ຫາ 1973
- ມີຖ້ຽວບິນຖິ້ມລະເບີດໃສ່ ສປປ ລາວ ຈຳນວນ 580,000 ຖ້ຽວ
- ລະເບີດລູກຫວ່ານແມ່ນມີຫຼາຍທີ່ສຸດຂອງຈຳນວນ ລບຕ ທີ່ຕົກຄ້າງ
- ລະເບີດລູກຫວ່ານຫຼາຍກວ່າ 270 ລ້ານໜ່ວຍ ໄດ້ຖອກເທລົງໃສ່ຜືນແຜ່ນດິນຂອງ ສປປ ລາວ
- ຄາດຄະເນ 30% ແມ່ນຍັງບໍ່ທັນແຕກ
- ພາຍຫຼັງສົງຄາມສິ້ນສຸດລົງ ລະເບີດລູກຫວ່ານ ປະມານ 80 ລ້ານໜ່ວຍແມ່ນຍັງບໍ່ທັນແຕກ ຕົກຄ້າງຢູ່ ສປປ ລາວ
- ນັບແຕ່ປີ 1964 ມີປະຊາຊົນລາວບັນດາເຜົ່າຫຼາຍກວ່າ 50,000 ຄົນ ໄດ້ເສຍຊີວິດ ແລະ ຮັບບາດເຈັບ
- ມີຈຳນວນຜູ້ຖືກເຄາະຮ້າຍຈາກ ລບຕ 41 ຄົນ ໃນປີ 2013
- ໃນທົດສະຫວັດຫຼ້າສຸດຜ່ານມານີ້ ຫຼາຍກວ່າ 40% ຂອງຈຳນວນຜູ້ຖືກເຄາະຮ້າຍທັງໝົດແມ່ນເປັນເດັກນ້ອຍ
- ໃນທົດສະຫວັດຫຼ້າສຸດຜ່ານມານີ້ ຫຼາຍກວ່າ 30% ຂອງຈຳນວນຜູ້ຖືກເຄາະຮ້າຍຈາກ ລບຕ ແມ່ນເກີດມາຈາກລະເບີດລູກຫວ່ານ

## ລະເບີດບໍ່ທັນແຕກ (ລບຕ) ແມ່ນຫຍັງ?

ລະເບີດບໍ່ທັນແຕກ ຫຼື ລບຕ ແມ່ນອາວຸດທີ່ບໍ່ທັນແຕກ ໃນເວລາຖືກຍິງອອກ, ຕົກລົງ ຫຼື ຝັງອອກ ແມ່ນຍັງມີສ່ຽງທີ່ຈະລະເບີດຂຶ້ນໄດ້ທຸກເວລາ. ການຕົກຄ້າງຂອງ ລບຕ ໃນ ສປປ ລາວ ປະກອບມີ ບົມໃຫຍ່, ຈະຫຼວດ, ໝາກແຕກ, ລູກປືນໃຫຍ່, ລູກປືນຄົກ, ລະເບີດຝັງດິນ ແລະ ລະເບີດລູກຫວ່ານ.

ລະເບີດລູກຫວ່ານ ແມ່ນອາວຸດທີ່ປະກອບດ້ວຍຮາງກະປາງ ແລະ ອອກແບບເພື່ອແຈກ ຫຼື ປົດປ່ອຍບົມບີອອກ. ແຕ່ລະໜ່ວຍໜັກບໍ່ເກີນ 20 ກິໂລກຣາມ. ບັນດາລະເບີດລູກນ້ອຍໆເຫຼົ່ານີ້ ແມ່ນເປັນທີ່ຮູ້ຈັກກັນດີໃນທົ່ວ ສປປ ລາວ ທີ່ເອີ້ນກັນວ່າ "ລະເບີດລູກຫວ່ານ" ຖືກຖິ້ມລົງຈາກຍົນ ຫຼື ຍິງສົ່ງຈາກໜ້າດິນເຖິງອາກາດ, ໃນລະດັບທີ່ມັນຍູ້ສະເດັນລະເບີດລູກຫວ່ານອອກຢູ່ເທິງພື້ນທີ່ກວ້າງ. ບັນດາລະເບີດລູກຫວ່ານທີ່ຖິ້ມລົງໃສ່ ສປປ ລາວ ມີອັດຕາພາດທ່າແຕກສູງໂດຍໄດ້ຖືກປະປ່ອຍ ໃຫ້ຕົກຄ້າງ (ລບຕ) ໄວ້ 30% ໂດຍປະມານ, ຊຶ່ງຖືກຫວ່ານຍາຍທົ່ວພື້ນທີ່ກວ້າງຂວາງ. ເມື່ອໃດພວກມັນຖືກແຕະຕ້ອງ, ລົບກວນ, ເຖິງແມ່ນວ່າ ຈະຜ່ານມາແລ້ວຫຼາຍທົດສະວັດແລ້ວກໍ່ຕາມ, ບັນດາລະເບີດລູກຫວ່ານ ແລະ ລບຕ ຊະນິດອື່ນເຫຼົ່ານັ້ນກໍ່ສາມາດລະເບີດຂຶ້ນໄດ້, ໂດຍເຮັດໃຫ້ປະຊາຊົນບາດເຈັບ ແລະ ເສຍຊີວິດໃນເວລາທີ່ພວກເຂົາດຳເນີນກິດຈະກຳປະຈຳວັນໃນແຕ່ລະມື້.

ປະຈຸບັນນີ້, ສປປ ລາວ ເປັນໜຶ່ງໃນບັນດາປະເທດທີ່ຖືກກະທົບຈາກລະເບີດລູກຫວ່ານຮ້າຍແຮງກວ່າໝູ່ໃນໂລກ, ໂດຍ 25% ຂອງ 10,000 ບ້ານໃນທົ່ວປະເທດມີການຕົກຄ້າງຂອງບັນດາອາວຸດເສດເຫຼືອປາງສົງຄາມເຫຼົ່ານີ້. ຕະຫຼອດໄລຍະເວລາ 9 ປີ, ມີລະເບີດລູກຫວ່ານກວ່າ 270 ລ້ານໜ່ວຍ ໄດ້ຖືກຖິ້ມລົງໃສ່ຜືນແຜ່ນດິນຂອງ ສປປ ລາວ, ສາມາດຄາດກະໄດ້ວ່າປະມານ 80 ລ້ານໜ່ວຍຍັງບໍ່ທັນແຕກ ແລະ ຕົກຄ້າງຢູ່ໃນສະພາບທີ່ສາມາດລະເບີດຂຶ້ນໄດ້ ແລະ ຢັ່ງຢາຍໃນທົ່ວປະເທດ. ນອກນັ້ນ, ຍັງມີບົມໃຫຍ່ຫຼາຍກວ່າ ສີ່ ລ້ານໜ່ວຍ ທີ່ຖືກຖິ້ມລົງໃນສະໜາມຮົບອັນກວ້າງໃຫຍ່ ແລະ ຍັງເຊື່ອງຊ້ອນຢູ່ຕາມພູມລຳເນົາຕ່າງໆຂອງປະເທດ.



# ພາບລວມກິດຈະກຳຂອງ ຄຊກລ ໃນ 2013:

- ຄຊກລ ໄດ້ສະເໜີລັດຖະບານ ສປປ ລາວ ປະກອບງົບປະມານແຫ່ງລັດ ເພື່ອເປັນທຶນສົມທົບເຂົ້າໃນວຽກງານແກ້ໄຂບັນຫາ ລບຕ. ໃນປີ 2013 ລັດຖະບານ ໄດ້ປະກອບສ່ວນທຶນຈຳນວນ 4,9 ລ້ານໂດລາສະຫະລັດ (ສະໜັບສະໜູນແບບວັດຖຸອຸປະກອນ) ໃນຈຳນວນທຶນທັງໝົດຂອງຂະແໜງການແກ້ໄຂບັນຫາ ລບຕ 42,5 ລ້ານໂດລາສະຫະລັດ. ເຖິງຢ່າງໃດກໍ່ຕາມ, ທຶນສົມທົບດັ່ງກ່າວ ກໍ່ແມ່ນອີງຕາມງົບປະມານຕົວຈິງທີ່ມີຂອງລັດຖະບານ ວ່າຈະສະໜອງໃຫ້ໄດ້ເທົ່າໃດໃນແຕ່ລະປີ.

- ຄຊກລ ໄດ້ຈັດກອງປະຊຸມປຶກສາຫາລື ກ່ຽວກັບການວາງແຜນການເກັບກູ້ ລບຕ ຮັບໃຊ້ໂຄງການພັດທະນາເສດຖະກິດ-ສັງຄົມຕ່າງໆຂອງລັດຖະບານ ຂຶ້ນຢູ່ 3 ພາກ ເພື່ອສະໜັບສະໜູນໃຫ້ແກ່ການວາງແຜນການສຳຫຼວດ ແລະ ກວດກູ້ ລບຕ.

- ຄຊກລ ໄດ້ຈັດກອງປະຊຸມປຶກສາຫາ ກ່ຽວກັບວິທີການສຳຫຼວດເພື່ອກຳນົດພື້ນທີ່ ລບຕ ຕົກຄ້າງ ຂຶ້ນຢູ່ປາກເຊ, ແຂວງຈຳປາສັກ, ຊຶ່ງເປົ້າໝາຍຂອງກອງປະຊຸມແມ່ນແນໃສ່ເຮັດໃຫ້ມີວິທີການສຳຫຼວດເພື່ອກຳນົດພື້ນທີ່ ລບຕ ຕົກຄ້າງໃນທົ່ວປະເທດໃຫ້ມີປະສິດທິຜົນ. ກອງປະຊຸມໄດ້ມີການປຶກສາຫາລືກັນທັງໃນລະດັບນະໂຍບາຍ ແລະ ລະດັບປະຕິບັດງານ.

- ຄຊກລ ໄດ້ຈັດກອງປະຊຸມເຜີຍແຜ່ກ່ຽວກັບແຜນຍຸດທະສາດແຫ່ງຊາດ ເພື່ອແກ້ໄຂບັນຫາ ລບຕ. ພ້ອມນັ້ນ, ກໍ່ໄດ້ເຜີຍແຜ່ແຈ້ງການ ສະບັບເລກທີ 093/ຄຊກລ ກ່ຽວກັບການກວດກູ້ ລບຕ ຮັບໃຊ້ໂຄງການພັດທະນາເສດຖະກິດ-ສັງຄົມຕ່າງໆຢູ່ ສປປ ລາວ ໃຫ້ບັນດາຄູ່ຮ່ວມພັດທະນາຕ່າງ ແລະ ບັນດາກະຊວງກ່ຽວຂ້ອງຕ່າງໆຮັບຊາບ. ຈຸດປະສົງຂອງແຈ້ງການສະບັບດັ່ງກ່າວນີ້ ແມ່ນແນໃສ່ໃຫ້ບັນດາໂຄງການພັດທະນາຕ່າງໆຢູ່ໃນເຂດທີ່ມີ ລບຕ ຕົກຄ້າງ ຕ້ອງດຳເນີນການສຳຫຼວດ ແລະ ກວດກູ້ ລບຕ ອອກກ່ອນ ແລ້ວຈຶ່ງປະຕິບັດໂຄງການໄດ້ ແລະ ໃຫ້ມີງົບປະມານສຳລັບການສຳຫຼວດ ແລະ ກວດກູ້ ລບຕ ພ້ອມ ສຳລັບໂຄງການຂອງຕົນເອງ.

- ຄຊກລ ແລະ ອົງການ ສປຊ ໄດ້ເຊັນເອກະສານໂຄງການຮ່ວມມືສະບັບໃໝ່ ສຳລັບປີ 2013-2015. ເນື້ອໃນຂອງເອກະສານສະບັບນີ້ ແມ່ນກວມລວມທັງວຽກງານຍຸດທະສາດ ແລະ ແຜນປະຕິບັດງານສຳລັບ 3 ປີ, ຊຶ່ງການປັບປຸງເນື້ອໃນຂອງເອກະສານໂດຍພື້ນຖານແມ່ນອີງໃສ່ຜົນການປະເມີນຂອງ ສປຊ ໃນປີ 2012 ສຳລັບໂຄງການທີ່ໄດ້ຮັບການສະໜັບສະໜູນຈາກ ສປຊ ເປັນຕົ້ນແມ່ນ ຄຊກລ ແລະ ຄກລ. ພ້ອມນັ້ນ, ກໍ່ອີງໃສ່ການປຶກສາຫາລືກັບບັນດາປະເທດຜູ້ໃຫ້ທຶນ ແລະ ຄູ່ຮ່ວມພັດທະນາຕ່າງໆອີກນຳ.

- ສຳລັບວຽກງານຊ່ວຍເຫຼືອຜູ້ຖືກເຄາະຮ້າຍຈາກ ລບຕ ກໍ່ມີຄວາມຄືບໜ້າເຊັ່ນດຽວກັນ. ໃນປີ 2012 ລະບົບການຕິດຕາມເຝົ້າລະວັງຜູ້ລອດຊີວິດຈາກ ລບຕ ໄດ້ຖືກສ້າງຕັ້ງຂຶ້ນເພື່ອອຳນວຍຄວາມສະດວກໃຫ້ແກ່ການເກັບກຳຂໍ້ມູນລະອຽດຄວາມຕ້ອງການຂອງຜູ້ລອດຊີວິດຈາກ ລບຕ, ຊຶ່ງຂໍ້ມູນທີ່ເກັບກຳໄດ້ໃນປີ 2012 ແມ່ນໄດ້ປ້ອນເຂົ້າໄວ້ໃນລະບົບຖານຂໍ້ມູນກ່ຽວກັບຜູ້ຖືກເຄາະຮ້າຍຈາກ ລບຕ ຂອງລາວ. ລະບົບດັ່ງກ່າວນີ້ ແມ່ນຈະສາມາດບອກເຮົາໄດ້ກ່ຽວກັບຂໍ້ມູນຄວາມຕ້ອງການຂອງຜູ້ລອດຊີວິດຈາກ ລບຕ ວ່າຍັງຕ້ອງການການຊ່ວຍເຫຼືອໃນດ້ານໃດຕື່ມອີກແດ່. ການວິເຄາະຂໍ້ມູນ ແລະ ເຜີຍແຜ່ຂໍ້ມູນອອກໃຫ້ບັນດາກະຊວງກ່ຽວຂ້ອງຕ່າງໆ ແລະ ອົງການປະຕິບັດງານໃຫ້ຮັບຊາບ ແມ່ນຈະດຳເນີນໃນປີ 2014. ພ້ອມກັນນັ້ນ, ເພື່ອຊ່ວຍເຫຼືອຜູ້ຖືກເຄາະຮ້າຍຈາກ ລບຕ ໃຫ້ໄດ້ດີ ຍັງໄດ້ມີການປັບປຸງແຜນຍຸດທະສາດກ່ຽວກັບການຊ່ວຍເຫຼືອຜູ້ຖືກເຄາະຮ້າຍຈາກ ລບຕ ຂຶ້ນມາອີກດ້ວຍ. ແຜນຍຸດທະສາດສະບັບດັ່ງກ່າວນີ້ ໄດ້ມີການນຳສະເໜີໃນກອງປະຊຸມຄະນະກຳມະການ ຄຊກລ (ເດືອນພຶດສະພາ 2013), ຊຶ່ງໂດຍພື້ນຖານແລ້ວ ກອງປະຊຸມແມ່ນເຫັນດີຮັບຮອງເອົາ ແຕ່ວ່າໃຫ້ ຄຊກລ ປັບປຸງຕື່ມບາງເນື້ອໃນ ກ່ອນຈະນຳສະເໜີເຊັນຮັບຮອງຢ່າງເປັນທາງການ, ຊຶ່ງ ຄຊກລ ຄາດວ່າຈະໃຫ້ຖືກຮັບຮອງໂດຍໄວ ໃນຕົ້ນປີ 2014.

- ຄຊກລ ໄດ້ສືບຕໍ່ເຮັດໜ້າທີ່ບົດບາດສຳຄັນໃນຂະແໜງການແກ້ໄຂບັນຫາ ລບຕ ເພື່ອປັບປຸງນະໂຍບາຍໃນການແກ້ໄຂບັນຫາ ລບຕ ຢູ່ໃນຂະແໜງການ, ສືບຕໍ່ຄຸ້ມຄອງ ແລະ ປະສານງານ ກິດຈະກຳຕ່າງໆຂອງບັນດາອົງການປະຕິບັດງານແກ້ໄຂບັນຫາ ລບຕ. ໃນທົ່ວຂະແໜງການແກ້ໄຂບັນຫາ ລບຕ ສາມາດເກັບກູ້ ແລະ ທຳລາຍ ລບຕ ທີ່ຕົກຄ້າງ ໄດ້ທັງໝົດຈຳນວນ 82,238 ໜ່ວຍ (ໃນນັ້ນ ມີລະເບີດລູກຫວ່ານຈຳນວນ 40,300 ໜ່ວຍ) ແລະ ສາມາດກວດກູ້ເນື້ອທີ່ທັງໝົດ 6,927 ເຮັກຕາ (ໃນນັ້ນ ເນື້ອທີ່ຈຳນວນ 6,486 ເຮັກຕາ ແມ່ນຜ່ານການກວດກູ້ຢ່າງເຕັມສ່ວນ ແລະ ອີກ 441 ເຮັກຕາ ແມ່ນຜ່ານການປົດປ່ອຍ ໂດຍການສຳຫຼວດທາງດ້ານວິຊາການ).

- ເວົ້າລວມແລ້ວ ຜົນສຳເລັດອັນພົ້ນເດັ່ນ ກໍ່ແມ່ນການຫຼຸດລົງຂອງຈຳນວນຜູ້ຖືກເຄາະຮ້າຍຈາກ ລບຕ ສະເລ່ຍ 300 ຄົນ ໃນປີ 2008 ລົງເປັນ 41 ຄົນ ໃນປີ 2013. ສາເຫດກໍ່ຍ້ອນ ຄຊກລ ໄດ້ເຮັດວຽກຢ່າງໃກ້ຊິດຕິດແທດກັບບັນດາອົງການປະຕິບັດ ປັບປຸງວິທີການໂຄສະນາສຶກສາຄວາມສ່ຽງຈາກ ລບຕ ແລະ ຂໍ້ຄວາມໂຄສະນາ ແລະ ມີການເຜີຍແຜ່ຂໍ້ຄວາມໂຄສະນາດີຂຶ້ນກວ່າເກົ່າໃນທົ່ວເຂດພື້ນທີ່ທີ່ມີ ລບຕ ຕົກຄ້າງ. ໃນປີ 2013, ຄຊກລ ໄດ້ດຳເນີນການຈັດລາຍການວິທະຍຸໂຄສະນາຜົນຮ້າຍຂອງ ລບຕ ຢູ່ 2 ແຂວງ ເພື່ອໂຄສະນາໃຫ້ປະຊາຊົນລາວບັນດາເຜົ່າຮັບຊາບກ່ຽວກັບສາເຫດຕົ້ນຕໍຂອງການເກີດອຸປະຕິເຫດ ແລະ ວິທີການຫຼີກລ່ຽງ ເພື່ອໃຫ້ມີຄວາມປອດໄພ. ນອກຈາກນັ້ນ, ຄຊກລ ຍັງໄດ້ສົມທົບກັບກະຊວງສຶກສາທິການ ແລະ ກິລາ ປັບປຸງຄືນຫຼັກສູດການຮຽນການສອນກ່ຽວກັບ ລບຕ ຢູ່ໃນໂຮງຮຽນຊັ້ນປະຖົມສຶກສາ ອີກດ້ວຍ.

# ກິດຈະກຳຂອງຫ້ອງການ ຄຊກລ ໃນປີ 2013:

## ໜ່ວຍງານຊ່ວຍເຫຼືອຜູ້ຖືກເຄາະຮ້າຍຈາກ ລບຕ:

ໃນປີ 2013, ໜ່ວຍງານຊ່ວຍເຫຼືອຜູ້ຖືກເຄາະຮ້າຍຈາກ ລບຕ ໄດ້ຈັດກອງປະຊຸມວິຊາການຮ່ວມກັບບັນດາອົງການປະຕິບັດງານແກ້ໄຂບັນຫາ ລບຕ ເພື່ອແລກປ່ຽນຂໍ້ມູນຂ່າວສານ ແລະ ປຶກສາຫາລືກ່ຽວກັບວຽກງານຊ່ວຍເຫຼືອຜູ້ຖືກເຄາະຮ້າຍຈາກ ລບຕ. ເປົ້າໝາຍກອງປະຊຸມວິຊາການກ່ຽວກັບການຊ່ວຍເຫຼືອຜູ້ຖືກເຄາະຮ້າຍຈາກ ລບຕ ແມ່ນແນໃສ່ສະໜັບສະໜູນບັນດາເຄືອຂ່າຍອົງການທີ່ເຮັດວຽກຊ່ວຍເຫຼືອຜູ້ຖືກເຄາະຮ້າຍຈາກ ລບຕ ໃນການສະໜອງການບໍລິການໃຫ້ແກ່ຜູ້ລອດຊີວິດຈາກ ລບຕ. ໃນປີ 2013 ບັນຫາສ່ວນໃຫຍ່ທີ່ກອງປະຊຸມວິຊາການຊ່ວຍເຫຼືອຜູ້ຖືກເຄາະຮ້າຍຈາກ ລບຕ ໄດ້ສົນທະນາປຶກສາຫາລືກັນແມ່ນເນັ້ນໜັກໃສ່ຜົນຄວາມຄືບໜ້າໃນການເກັບກຳຂໍ້ມູນລະບົບຕິດຕາມເຝົ້າລະວັງຜູ້ຖືກເຄາະຮ້າຍຈາກ ລບຕ, ຮ່າງເກັບກຳຂໍ້ມູນລາຍງານຈາກບັນດາອົງການປະຕິບັດ ແລະ ລວບລວມບັນດາກິດຈະກຳຕ່າງໆຂອງບັນດາອົງການປະຕິບັດງານໃຫ້ເຂົ້າມາລວມສູນຢູ່ໃນ ຄຊກລ ເພື່ອໃຫ້ສາມາດກຳໄດ້ສະພາບຂອງການຊ່ວຍເຫຼືອຕ່າງໆໃຫ້ແກ່ຜູ້ລອດຊີວິດຈາກ ລບຕ.

ໃນປີ 2013, ເປົ້າໝາຍທີ່ຕັ້ງໄວ້ຂອງໜ່ວຍງານຊ່ວຍເຫຼືອຜູ້ຖືກເຄາະຮ້າຍຈາກ ລບຕ ແມ່ນບັນລຸໄດ້ບາງສ່ວນ, ເນື່ອງຈາກຄວາມລ່າຊ້າໃນການປ້ອນຂໍ້ມູນຈາກແບບຟອມທີ່ເກັບກຳໄດ້ປ້ອນເຂົ້າໄວ້ໃນລະບົບເຝົ້າລະວັງຕິດຕາມຜູ້ລອດຊີວິດຈາກ ລບຕ. ເຖິງຢ່າງໃດກໍ່ຕາມ, ຢ່າງໜ້ອຍກໍ່ເຮັດສຳເລັດການເກັບກຳຂໍ້ມູນລະອຽດຄວາມຕ້ອງການຂອງຜູ້ລອດຊີວິດຈາກ ລບຕ ແລະ ຮ່າງແຜນຍຸດທະສາດຊ່ວຍເຫຼືອຜູ້ລອດຊີວິດຈາກ ລບຕ ກໍ່ໄດ້ຖືກຮ່າງຂຶ້ນ, ຊຶ່ງຜົນຄວາມຄືບໜ້າ 2 ຢ່າງທີ່ກ່າວມາຂ້າງເທິງນັ້ນ ກໍ່ຖືໄດ້ວ່າເປັນການຂະຫຍາຍຕົວທີ່ດີສຳລັບໜ່ວຍງານຊ່ວຍເຫຼືອຜູ້ຖືກເຄາະຮ້າຍຈາກ ລບຕ ໃນປີ 2014. ຖ້າເມື່ອໃດທີ່ເຮົາຫາກສຳເລັດການວິເຄາະຂໍ້ມູນ ແລະ ສາມາດເຜີຍແຜ່ຂໍ້ມູນກ່ຽວກັບຄວາມຕ້ອງການຂອງຜູ້ລອດຊີວິດໄດ້ແລ້ວ ແນ່ນອນວ່າ ຈະເຮັດໃຫ້ບັນດາຄູ່ຮ່ວມງານສາມາດສະໜອງການບໍລິການໃຫ້ແກ່ຜູ້ລອດຊີວິດໄດ້ເປັນຢ່າງດີ. ສຳລັບຮ່າງແຜນຍຸດທະສາດຊ່ວຍເຫຼືອຜູ້ລອດຊີວິດຈາກ ລບຕ ຖືກຮ່າງຂຶ້ນມາ ເພື່ອເປັນເຄື່ອງມືໃນການແນະນຳແນວທາງໃຫ້ແກ່ໜ່ວຍງານຊ່ວຍເຫຼືອຜູ້ຖືກເຄາະຮ້າຍຈາກ ລບຕ ເພື່ອໃຫ້ສາມາດຊ່ວຍເຫຼືອຜູ້ລອດຊີວິດຈາກ ລບຕ ໃຫ້ເຊື່ອມສານເຂົ້າໃນລະບົບແຜນງານໃຫຍ່ວຽກງານການພັດທະນາຄົນ ແລະ ປັບປຸງຄືນພິການຢູ່ໃນ ສປປ ລາວ.

ພາຍຫຼັງທີ່ໄດ້ນຳເອົາຮ່າງແຜນຍຸດທະສາດຊ່ວຍເຫຼືອຜູ້ລອດຊີວິດຈາກ ລບຕ ຕໍ່ບັນດາອົງການປະຕິບັດງານແລ້ວ ໜ່ວຍງານຊ່ວຍເຫຼືອຜູ້ຖືກເຄາະຮ້າຍຈາກ ລບຕ ກໍ່ໄດ້ນຳເອົາຄຳເຫັນຕ່າງໆທີ່ໄດ້ຈາກບັນດາອົງການປະຕິບັດງານ ມາປັບປຸງຄືນໃໝ່ ໃຫ້ສົມບູນຂຶ້ນກວ່າເກົ່າ, ຊຶ່ງໜຶ່ງໃນຄຳເຫັນຕົ້ນຕໍແມ່ນ ເນັ້ນໜັກໃສ່ການເຂົ້າມາມີສ່ວນຮ່ວມຂອງບັນດາກະຊວງກ່ຽວຂ້ອງຕ່າງໆໃຫ້ຫຼາຍຂຶ້ນ, ຊຶ່ງພາກສ່ວນດັ່ງກ່າວນີ້ ຖືໄດ້ວ່າ ເປັນກຸນແຈທີ່ສຳຄັນຫຼາຍເພື່ອຈັດຕັ້ງປະຕິບັດເປົ້າໝາຍຕ່າງໆຂອງແຜນຍຸດທະສາດໃຫ້ບັນລຸຜົນ. ພ້ອມນັ້ນ, ຢູ່ໃນກອງປະຊຸມຄະນະກຳມະການ ຄຊກລ ທີ່ຈັດຂຶ້ນໃນເດືອນພຶດສະພາ 2013 ຜ່ານມານັ້ນ ກໍ່ຍັງໄດ້ຮັບຄຳຄິດຄຳເຫັນຫຼາຍຢ່າງເຊັ່ນດຽວກັນ ຕໍ່ກັບຮ່າງແຜນຍຸດທະສາດດັ່ງກ່າວ ເປັນຕົ້ນແມ່ນ ຂໍ້ສະເໜີໃຫ້ເພີ່ມອີກໜຶ່ງພາກກ່ຽວກັບຄວາມຮຽກຮ້ອງຕ້ອງການແຫຼ່ງທຶນ ເພື່ອຊ່ວຍເຫຼືອຜູ້ຖືກເຄາະຮ້າຍຈາກ ລບຕ ເຂົ້າໃສ່ນຳ. ສ່ວນການເກັບກຳຂໍ້ມູນຕ່າງໆ ແລະ ການປະສານງານ ແມ່ນ ຄຊກລ ຈະເປັນໃຈກາງ, ຊຶ່ງວຽກອັນນີ້ໜ່ວຍງານຊ່ວຍເຫຼືອຜູ້ຖືກເຄາະຮ້າຍ ຈະຂຶ້ນເປັນແຜນວຽກຕົ້ນຕໍສຳລັບປີ 2014. ເມື່ອໃດທີ່ຮ່າງແຜນຍຸດທະສາດຊ່ວຍເຫຼືອຜູ້ລອດຊີວິດຈາກ ລບຕ ສະບັບພາສາລາວ ສຳເລັດແລ້ວ, ຄຊກລ ຈະນຳສະເໜີຕໍ່ປະທານ ຄຊກລ ເພື່ອອະນຸມັດຮັບຮອງຢ່າງເປັນທາງການ, ຊຶ່ງຄາດວ່າຈະໃຫ້ສາມາດຮັບຮອງໂດຍໄວໃນຕົ້ນປີ 2014.

## ໜ່ວຍງານກວດກູ້ ລບຕ:

ຄຊກລ ໄດ້ຈັດກອງປະຊຸມສຳມະນາ 3 ພາກຂຶ້ນ ເພື່ອເກັບກຳຂໍ້ມູນກ່ຽວກັບພື້ນທີ່ໂຄງການຈຸດສຸມພັດທະນາຕ່າງໆຂອງລັດຖະບານທີ່ມີ ລບຕ ຕົກຄ້າງ ເພື່ອນຳມາກຳນົດບູລິມະສິດສຳລັບການສຳຫຼວດ ແລະ ກວດກູ້ ລບຕ.

ພາຍຫຼັງສຳເລັດກອງປະຊຸມດັ່ງກ່າວ ໜ່ວຍງານກວດກູ້ ລບຕ ກໍ່ໄດ້ສືບຕໍ່ສົມທົບກັບຄະນະພັດທະນາຊົນນະບົດ ແລະ ລຶບລ້າງຄວາມທຸກຍາກ ຂັ້ນສູນກາງ ລົງເຮັດວຽກກັບຄະນະພັດທະນາຊົນນະບົດ ແລະ ລຶບລ້າງຄວາມທຸກຍາກຂັ້ນແຂວງ ແລະ ຂັ້ນເມືອງ ຢູ່ໃນແຕ່ລະພາກ ລວມທັງບັນດາອົງການປະຕິບັດງານຕ່າງໆ ທີ່ປະຕິບັດໜ້າທີ່ຢູ່ບັນດາແຂວງດັ່ງກ່າວ ເພື່ອປຶກສາຫາລືກ່ຽວກັບລາຍລະອຽດແຜນການກວດກູ້ ລບຕ.

ນອກຈາກນັ້ນ, ໜ່ວຍງານກວດກູ້ ລບຕ ຍັງເຮັດໜ້າທີ່ເປັນຈຸດໃນການຫຼັກຂອງຂະແໜງການແກ້ໄຂບັນຫາ ລບຕ ໃນການສືບຕໍ່ຄົ້ນຄວ້າເຕັກນິກເຕັກໂນໂລຊີ ແລະ ວິທີການໃໝ່ ເພື່ອປັບປຸງການປົດປ່ອຍເນື້ອທີ່ດິນໃຫ້ມີປະສິດທິຜົນ ແລະ ເພີ່ມເນື້ອທີ່ໃຫ້ຫຼາຍຂຶ້ນກວ່າເກົ່າ. ໃນເດືອນພະຈິກ 2013, ຄຊກລ ໄດ້ຈັດກອງປະຊຸມສຳມະນາກ່ຽວກັບການສຳຫຼວດຂຶ້ນທີ່ເມືອງປາກເຊ ເພື່ອສົນທະນາປຶກສາຫາລືປັບປຸງວິທີການສຳຫຼວດເພື່ອກຳນົດພື້ນທີ່ ລບຕ ຕົກຄ້າງ ໃໝ່ຂຶ້ນ.

ສຳລັບກອງປະຊຸມວິຊາການກ່ຽວກັບວຽກງານກວດກູ້ ລບຕ ແມ່ນໄດ້ຈັດຂຶ້ນແຕ່ຢູ່ໃນໄຕມາດ 1 ແລະ ໄຕມາດ 2 ເທົ່ານັ້ນ, ສຳລັບໃນໄຕມາດ 3 ແລະ 4 ແມ່ນຖືວ່າບໍ່ໄດ້ຈັດຂຶ້ນ ເນື່ອງຈາກວ່າ ຄຊກລ ໄດ້ມີການຈັດກອງປະຊຸມປຶກສາຫາລືກ່ຽວກັບວິທີການສຳຫຼວດເພື່ອກຳນົດພື້ນທີ່ ລບຕ ຕົກຄ້າງ ຂຶ້ນແທນ ແລະ ບັນດາຜູ້ທີ່ເຂົ້າຮ່ວມກອງປະຊຸມດັ່ງກ່າວນີ້ ກໍ່ແມ່ນຜູ້ເຂົ້າຮ່ວມກຸ່ມດຽວກັບກອງປະຊຸມວິຊາການ. ພ້ອມນັ້ນ, ບັນດາຫົວຂໍ້ສົນທະນາສຳຄັນຕ່າງໆທີ່ວາງແຜນໄວ້ວ່າຈະນຳມາປຶກສາຫາລືກັນຢູ່ໃນກອງປະຊຸມວິຊາການນັ້ນ ກໍ່ແມ່ນໄດ້ເອົາມາລວມເຂົ້າເປັນວາລະດຽວກັນເລີຍຢູ່ກອງປະຊຸມກ່ຽວກັບການສຳຫຼວດ.

ບັນຫາສຳຄັນຕ່າງໆ ທີ່ນຳມາສົນທະນາປຶກສາຫາລືກັນຢູ່ໃນກອງປະຊຸມວິຊາການໃນປີນີ້ ແມ່ນປະກອບມີ ແຜນການຝຶກອົບຮົມໃຫ້ນັກທຳລາຍລະເບີດຂັ້ນສູງ, ມາດຕະຖານການຝຶກອົບຮົມ, ທິດທາງນະໂຍບາຍໃໝ່ຂອງລັດຖະບານ ກ່ຽວກັບຂະແໜງການແກ້ໄຂບັນຫາ ລບຕ ຢູ່ລະດັບສູນກາງ ແລະ ທ້ອງຖິ່ນ, ຄຳເຫັນຕ່າງໆຂອງຜູ້ທີ່ເຂົ້າຮ່ວມກອງປະຊຸມ ກ່ຽວກັບການກວດກາຄຸນນະພາບວຽກງານກວດກູ້ ລບຕ (ໂດຍປະກອບມີ ຂໍ້ສະເໜີແນະຕ່າງໆ), ວຽກງານ ກ່ຽວກັບການສຳຫຼວດ/ການປົດປ່ອຍເນື້ອທີ່ດິນ ແລະ ການປະສານງານພາຍໃນຂະແໜງງານ.

ສຳລັບປີ 2014 ຄຊກລ ຈະຈັດກອງປະຊຸມສຳມະນາກັບບັນດາແຂວງ ກ່ຽວກັບປະສານງານວຽກງານແກ້ໄຂບັນຫາ ລບຕ ໃນຕົ້ນປີ 2014 ເພື່ອປັບປຸງການຈັດຕັ້ງ ແລະ ພາລະບົດບາດຂອງ ຄຊກລ ຢູ່ຂັ້ນແຂວງ ເພື່ອເຮັດໜ້າທີ່ໃນການປະສານງານ, ຄຸ້ມຄອງຂະແໜງການແກ້ໄຂບັນຫາ ລບຕ ແນໃສ່ໃຫ້ເຂົ້າໃຈແຈ້ງພາລະບົດບາດ ແລະ ໜ້າທີ່ຜິດຊອບຂອງ ຄຊກລ ເປັນຕົ້ນຕໍ.

## ໜ່ວຍງານຄົ້ນຄ້ວາ:

ພາຍຫຼັງທີ່ໄດ້ໂອນມອບໂຄງການສຳຫຼວດພື້ນທີ່ບູລິມະສິດທີ່ມີ ລູບຕ ຕົກຄ້າງຢູ່ຂັ້ນເມືອງໃຫ້ແກ່ໜ່ວຍງານກວດກູ້ ລບຕ ຂອງຫ້ອງການ ຄຊກລ ເປັນຜູ້ສືບຕໍ່ຄົ້ນຄ້ວາໃນເດືອນພະຈິກ 2012, ໜ່ວຍງານຄົ້ນຄ້ວາ ກໍ່ໄດ້ຫັນມາສຸມໃສ່ວຽກງານດ້ານການຮ່ວມມືກັບສາກົນ ເປັນຕົ້ນແມ່ນ ການຄົ້ນຄ້ວາພິຈາລະນາບົດບັນທຶກຄວາມເຂົ້າໃຈຂອງບັນດາອົງການປະຕິບັດງານທີ່ສະເໜີປະຕິບັດໂຄງການແກ້ໄຂບັນຫາ ລບຕ ຢູ່ ສປປ ລາວ. ນອກຈາກນັ້ນ, ໜ່ວຍງານຍັງມີໜ້າທີ່ຮັບຜິດຊອບໃນການສັງລວມຂໍ້ມູນກ່ຽວກັບສະພາບການຈັດຕັ້ງປະຕິບັດວຽກງານແກ້ໄຂບັນຫາ ລບຕ ຕາມມາດຕາ 7 ຂອງສົນທິສັນຍາ ວ່າດ້ວຍການເກືອດຫ້າມລະເບີດລູກຫວ່ານຂອງ ສປປ ລາວ ສົ່ງໃຫ້ກະຊວງການຕ່າງປະເທດ.

## ໜ່ວຍງານຄຸ້ມຄອງຂໍ້ມູນຂ່າວສານ:

ໃນປີ 2013 ໜ່ວຍງານຄຸ້ມຄອງຂໍ້ມູນຂ່າວສານ ໄດ້ສືບຕໍ່ປ້ອນຂໍ້ມູນລະເບີດບໍ່ທັນແຕກທີ່ໄດ້ຈາກການລາຍງານຂອງບັນດາອົງການປະຕິບັດງານແກ້ໄຂບັນຫາ ລບຕ ເຂົ້າໃນຖານຂໍ້ມູນລະເບີດບໍ່ທັນແຕກ (ອິມສະມາ) ແລະ ຕິດຕາມການນຳໃຊ້ລະບົບອິມສະມາຂອງບັນດາອົງການປະຕິບັດງານ ເພື່ອຊຸກຍູ້ເທື່ອລະກ້າວ ແນໃສ່ໃຫ້ເຂົາເຈົ້າສາມາດສົ່ງຂໍ້ມູບົດລາຍງານໃຫ້ຜ່ານທາງເອເລັກໂຕຼນິກໃນອະນາຄົດ. ໃນເດືອນມີນາ 2013 ໜ່ວຍງານຄຸ້ມຄອງຂໍ້ມູນຂ່າວສານ ໄດ້ເປີດກອງປະຊຸມສຳມະນາກ່ຽວກັບການນຳໃຊ້ລະບົບອິມສະມາ ໃຫ້ແກ່ອົງການປະຕິບັດງານແກ້ໄຂບັນຫາ ລບຕ ຂອງຕ່າງປະເທດ ແລະ ບັນດາບໍລິສັດກວດກູ້ ລບຕ ຂອງລາວ ແລະ ຕ່າງປະເທດທີ່ຈັດຂຶ້ນໃນນະຄອນຫຼວງວຽງຈັນ, ສປປ ລາວ.

ນອກຈາກນັ້ນ, ໃນເດືອນທັນວາ 2013, ໜ່ວຍງານຄຸ້ມຄອງຂໍ້ມູນຂ່າວສານ ຍັງໄດ້ສົມທົບກັບສູນເກັບກູ້ລະເບີດຝັງດິນສາກົນຂອງເຈນນີວາ-ປະເທດສະວິດເຊີແລນ ເປີດກອງປະຊຸມພາກພື້ນກ່ຽວກັບການນຳສະເໜີລະບົບອິມສະມາໃໝ່ ເວີເຊີ້ນ 6, ຊຶ່ງລະບົບດັ່ງກ່າວນີ້ ແມ່ນຈະນຳມາປ່ຽນແທນລະບົບອິມສະມາ ສະບັບກ່ອນ (ເວີເຊີ້ນ 5) ທີ່ ຄຊກລ ແລະ ບັນດາອົງການປະຕິບັດງານ ແລະ ບໍລິສັດເກັບກູ້ ລບຕ ຢູ່ໃນ ສປປ ລາວ ນຳໃຊ້ຢູ່ປະຈຸບັນ. ລະບົບດັ່ງກ່າວ ແມ່ນນຳໃຊ້ງ່າຍຂຶ້ນກວ່າເກົ່າ ແລະ ລະບົບປະຕິບັດການ ກໍ່ມີຄວາມຫຼາກຫຼາຍຂຶ້ນຕື່ມ.

## ໜ່ວຍງານໂຄສະນາສຶກສາຄວາມສ່ຽງຈາກ ລບຕ:

ໃນປີ 2013, ຜົນສຳເລັດຂອງໜ່ວຍງານໂຄສະນາສຶກສາຄວາມສ່ຽງຈາກ ລບຕ ແມ່ນການເຮັດໃຫ້ຈຳນວນຜູ້ເສຍຊີວິດ ແລະ ໄດ້ຮັບບາດເຈັບຈາກ ລບຕ ຫຼຸດລົງ (41 ຄົນ ໃນປີ 2013). ຜົນສຳເລັດດັ່ງກ່າວ ຍາດມາໄດ້ກໍ່ຍ້ອນຄວາມເອົາໃຈໃສ່ຂອງໝົດທຸກພາກສ່ວນໃນຂະແໜງການແກ້ໄຂບັນຫາ ລບຕ. ພ້ອມນັ້ນ, ໜ່ວຍງານໂຄສະນາສຶກສາຄວາມສ່ຽງຈາກ ລບຕ ຍັງໄດ້ລົງຕິດຕາມການປະຕິບັດວຽກໂຄສະນາສຶກສາຄວາມສ່ຽງຈາກ ລບຕ ທີ່ປະຕິບັດໜ້າທີ່ໃນທົ່ວປະເທດ, ຊຶ່ງການລົງຢ້ຽມຢາມແຕ່ລະຄັ້ງ ກໍ່ໄດ້ມີການໃຫ້ຂໍ້ສະເໜີແນະ, ມີການແລກປ່ຽນບົດຮຽນທີ່ດີຮ່ວມກັນສຳລັບວຽກງານໂຄສະນາ ເພື່ອປັບປຸງໃຫ້ດີຂຶ້ນກວ່າເກົ່າ. ນອກຈາກນັ້ນ, ກໍ່ຍັງໄດ້ມີການປຶກສາຫາລືກັນກ່ຽວກັບວຽກງານໂຄສະນາ ແລະ ບັນຫາພົ້ນເດັ່ນຕ່າງໆທີ່ເກີດຂຶ້ນຢູ່ໃນກອງປະຊຸມວິຊາການວຽກງານໂຄສະນາສຶກສາຄວາມສ່ຽງຈາກ ລບຕ ໃນແຕ່ລະໄຕມາດ ໂດຍສະເພາະແມ່ນມາດຕະການເພື່ອຮັກສາລະດັບຂອງຈຳນວນຜູ້ເສຍຊີວິດ ແລະ ໄດ້ຮັບບາດເຈັບ ໃຫ້ຫຼຸດຕ່ຳກວ່າ 75 ຄົນ ຕໍ່ປີ ແລະ ວິທີແກ້ໄຂສາເຫດຕົ້ນຕໍຂອງການເກີດອຸປະຕິເຫດຈາກ ລບຕ ໃນປີ 2013 ວ່າຈະມີການປ້ອງກັນໄດ້ຄືແນວ ເນື່ອງຈາກວ່າ ສາເຫດຕົ້ນຕໍຂອງການເກີດອຸປະຕິເຫດໃນປີ 2013 ແມ່ນເກີດມາຈາກ “ການດັ່ງໄຟ” ເປັນສ່ວນໃຫຍ່. ຍ້ອນເຫັນບັນຫາຄືແນວນັ້ນ, ໜ່ວຍງານໂຄສະນາສຶກສາຄວາມສ່ຽງຈາກ ລບຕ ຈຶ່ງໄດ້ມີການປັບປຸງຂໍ້ຄວາມສະເພາະໂຄສະນາອອກມາ ແລ້ວນຳເອົາໄປອອກອາກາດໂຄສະນາຜ່ານທາງວິທະຍຸຢູ່ຕາມຊຸມຊົນຕ່າງໆທີ່ມີ ລບຕ ຕົກຄ້າງ, ຊຶ່ງໃນປີນີ້ ແມ່ນໄດ້ດຳເນີນຢູ່ໃນ 2 ແຂວງ ກ່ອນ.

ໃນປີ 2013, ກອງປະຊຸມວິຊາການວຽກງານໂຄສະນາສຶກສາຄວາມສ່ຽງຈາກ ລບຕ ຍັງໄດ້ເນັ້ນໜັກໃສ່ການສ້າງກົນໄກການລາຍງານໃຫ້ມີຄວາມກະຈ່າງແຈ້ງຂຶ້ນກວ່າເກົ່າ ແລະ ຄູ່ມືແນະນຳໃນການນຳໃຊ້ອຸປະກອນໂຄສະນາໃຫ້ແກ່ນັກໂຄສະນາ. ສາມາດເວົ້າໄດ້ວ່າ ກອງປະຊຸມວິຊາການວຽກງານໂຄສະນາສຶກສາຄວາມສ່ຽງຈາກ ລບຕ ແມ່ນເວທີສົນທະນາທີ່ສຳຄັນຂອງບັນດາອົງການປະຕິບັດງານ ເພື່ອປຶກສາຫາລືແລກປ່ຽນບົດຮຽນຮ່ວມກັນກ່ຽວກັບວຽກງານໂຄສະນາສຶກສາຄວາມສ່ຽງຈາກ ລບຕ ເປັນຕົ້ນແມ່ນ ບັນຫາພົ້ນເດັ່ນທີ່ຖືກຍົກຂຶ້ນມາສົນທະນາກັນໃນປີ 2013 ແມ່ນການປັບປຸງວຽກໂຄສະນາສຶກສາຄວາມສ່ຽງຈາກ ລບຕ ໃຫ້ມີຄວາມທົ່ວເຖິງ ແລະ ການຈັດງານໂຄສະນາລະດົມຂົນຂວາຍອື່ນໆ ຄືກັບ ອົງການນ້ຳໃຈນັກກິລາເພື່ອຕ້ານ ລບຕ (ເອັດໂອເອັດ) ເຮັດການແຂ່ງຂັນກິລາບານເຕະເພື່ອໂຄສະນາກ່ຽວກັບການຫັນມາຫຼິ້ນເຕະບານ, ແຕ່ບໍ່ໃຫ້ຫຼິ້ນ ລບຕ ທີ່ຈັດຂຶ້ນຢູ່ແຂວງຊຽງຂວາງ ແລະ ການຈັດລາຍການວິທະຍຸໂຄສະນາຜົນຮ້າຍຂອງ ລບຕ ຢູ່ແຂວງຊຽງຂວາງ ແລະ ສາລະວັນ ເປັນຕົ້ນ. ນອກຈາກນັ້ນ ໜ່ວຍງານໂຄສະນາສຶກສາຄວາມສ່ຽງຈາກ ລບຕ ຍັງໄດ້ຮັບການສະໜັບສະໜູນຈາກອົງການຢູນິເຊບ ໃນການປັບປຸງຄືນຫຼັກສູດການສິດສອນວິຊາ ລບຕ ແລະ ຈັດພິມ ເພື່ອນຳໄປແຈກຢາຍໃນໂຮງຮຽນຊັ້ນປະຖົມ ຢູ່ໃນ 42 ເມືອງ ໃນ 9 ແຂວງທີ່ມີ ລບຕ ຕົກຄ້າງ.

ນອກຈາກນັ້ນ, ໜ່ວຍງານໂຄສະນາສຶກສາຄວາມສ່ຽງຈາກ ລບຕ ຍັງໄດ້ສົມທົບກັບກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ປັບປຸງຂໍ້ຄວາມລາຍການວິທະຍຸໂຄສະນາຜົນຮ້າຍຂອງ ລບຕ ໃຫ້ມີປະສິດທິຜົນດີຂຶ້ນກວ່າເກົ່າ. ປະຈຸບັນນີ້, ແມ່ນໄດ້ສຳເລັດແລ້ວ 6 ເລື່ອງໂຄສະນາ ທີ່ມີເນື້ອໃນບອກເລົ່າກ່ຽວກັບວິທີການຫຼີກລ້ຽງພຶດຕິກຳສ່ຽງຕ່າງໆ ທີ່ຈະພາໃຫ້ເກີດລະເບີດແຕກຂຶ້ນໃສ່ ເປັນຕົ້ນແມ່ນ ຫົວຂໍ້ເລື່ອງກ່ຽວກັບວິທີການດັ່ງໄຟ ແມ່ນເຮົາຈະມີວິທີການດັ່ງໄຟໃຫ້ຖືກຕ້ອງແນວໃດແດ່ ໃນເຂດທີ່ມີ ລບຕ ຕົກຄ້າງ, ຊຶ່ງຫົວຂໍ້ເລື່ອງດັ່ງກ່າວນີ້ ແມ່ນເປັນໜຶ່ງໃນ 6 ຫົວຂໍ້ເລື່ອງໂຄສະນາທີ່ມີການໂຄສະນາຫຼາຍ ເນື່ອງຈາກວ່າການດັ່ງໄຟ ແມ່ນສາເຫດທີ່ພາໃຫ້ເກີດອຸປະຕິເຫດຈາກ ລບຕ ຫຼາຍທີ່ສຸດໃນປີ 2012 ແລະ 2013.

ກ່ຽວກັບສະພາບການຄ້າຂາຍເສດເຫຼັກຈາກ ລບຕ ຢູ່ໃນ ສປປ ລາວ, ໜ່ວຍງານໂຄສະນາສຶກສາຄວາມສ່ຽງຈາກ ລບຕ ໄດ້ສົ່ງແຈ້ງການໄປເຖິງກະຊວງກ່ຽວຂ້ອງຕ່າງໆ ແລະ ບັນດາອົງການປະຕິບັດງານຕ່າງໆໃນທົ່ວປະເທດ ໃຫ້ຮັບຊາບກ່ຽວກັບສະພາບການຄ້າຂາຍເສດເຫຼັກຈາກ ລບຕ ໃນປະຈຸບັນຢູ່ ສປປ ລາວ, ຊຶ່ງຜ່ານການເກັບກຳຂໍ້ມູນ ແລະ ຕິດຕາມເບິ່ງໃນໄລຍະໜຶ່ງແມ່ນເຫັນວ່າ ການຄ້າຂາຍເສດເຫຼັກຈາກ ລບຕ ແມ່ນຫຼຸດລົງຫຼາຍ ແລະ ບໍ່ແມ່ນສາເຫດຕົ້ນຕໍອີກແລ້ວ ທີ່ພາໃຫ້ເກີດອຸປະຕິເຫດຫຼາຍໃສ່ອາດີດຜ່ານມາ. ດັ່ງນັ້ນ, ຈຶ່ງເຫັນວ່າໃນໄລຍະນີ້ຍັງບໍ່ທັນມີຄວາມຈຳເປັນເທື່ອ ທີ່ຈະອອກເປັນດຳລັດເພື່ອຫ້າມການຄ້າຂາຍເສດເຫຼັກຈາກ ລບຕ.

## ໜ່ວຍງານປະຊາສຳພັນ:

ໃນປີ 2013, ໜ່ວຍງານປະຊາສຳພັນ ໄດ້ອຳນວຍຄວາມສະດວກໃນການຈັດກອງປະຊຸມ ແລະ ງານຕ່າງໆຫຼາຍຄັ້ງ ເປັນຕົ້ນແມ່ນ ພິທີລະນຶກເຖິງວັນທີ 4 ເມສາ ວັນສາກົນໂຄສະນາຕ້ານລະເບີດບໍ່ທັນແຕກ ແລະ ພິທີສະເຫຼີມສະຫຼອງວັນທີ 1 ສິງຫາ ວັນມີຜົນບັງຄັບໃຊ້ສົນທິສັນຍາສາກົນ ວ່າດ້ວຍການເກືອດຫ້າມລະເບີດລູກຫວ່ານ. ພິທີລະນຶກເຖິງວັນທີ 4 ເມສາ ວັນສາກົນໂຄສະນາ ເພື່ອຕ້ານລະເບີດບໍ່ທັນແຕກ, ຊຶ່ງຈຸດປະສົງແມ່ນໂຄສະນາລະດົມຂົນຂວາຍກ່ຽວກັບຜົນຮ້າຍຂອງ ລບຕ ຕໍ່ມະນຸດສະທຳ ແລະ ເປັນສິ່ງກີດຂວາງການພັດທະນາ. ພ້ອມດຽວນັ້ນ. ກໍ່ແມ່ນການໂຄສະນາ ເພື່ອສະແດງພະລັງຕໍ່ຕ້ານບໍ່ໃຫ້ມີ ລບຕ ຢູ່ໃນໂລກນີ້ອີກຕໍ່ໄປ. ໃນພິທີດັ່ງກ່າວ ໄດ້ມີການຈັດການ ຍ່າງໃນຕອນເຊົ້າ ໂດຍເລີ່ມຖະໜົນລ້ານຊ້າງ ຈາກ ປະຕູໄຊ ລົງໄປຮອດ ທາດຝຸ່ນ ທໍ່ຄຳ, ຊຶ່ງລວມມີຜູ້ເຂົ້າຮ່ວມຫຼາຍກວ່າ 1,000 ຄົນ. ໃນຂະນະຍ່າງນັ້ນ, ບັນດາພາກສ່ວນຕ່າງໆໃນຂະແໜງການແກ້ໄຂບັນຫາ ລບຕ ກໍ່ໄດ້ພາກັນຊົມເຊີຍ ພ້ອມກັບມີການຕີກອງສະເຫຼີມສະຫຼອງໄປນຳ.

ສຳລັບພິທີສະເຫຼີມສະຫຼອງວັນທີ 1 ສິງຫາ ວັນມີຜົນບັງຄັບໃຊ້ສົນທິສັນຍາສາກົນວ່າດ້ວຍການເກືອດຫ້າມລະເບີດລູກຫວ່ານ, ໜ່ວຍງານໂຄສະນາປະຊາສຳພັນ ໄດ້ສົມທົບກັບອົງການສາກົນຊ່ວຍເຫຼືອຄົນພິການ (ເຫັດໄອ) ຈັດພິທີສະເຫຼີມສະຫຼອງງານດັ່ງກ່າວຢ່າງເປັນທາງການ ເປັນຕົ້ນແມ່ນ ໃນຕອນເຊົ້າ ແມ່ນການເປີດພິທີທາງການ ພ້ອມກັບ ມີການວາງສະແດງກ່ຽວກັບບັນຫາ ລບຕ ຂອງບັນດາອົງການປະຕິບັດງານແກ້ໄຂບັນຫາ ລບຕ ຢູ່ໃນ ສປປ ລາວ. ນອກຈາກນັ້ນ, ກໍ່ຍັງມີການແຂ່ງຂັນກິລາບານເຕະ ແລະ ເປຕອງ ອີກດ້ວຍ. ໃນພາກຄ່ຳ ຄຊກລ, ອົງການ ສປຊ, ອົງການເຫັດໄອ, ກຸ່ມຕ້ານລະເບີດລູກຫວ່ານ, ອົງການເວີອີດູເຄເຊິນ, ສະມາຄົມຄົນພິການລາວ, ສະມາຄົມປັບປຸງຄຸນນະພາບຊີວິດຂອງຜູ້ລອດຊີວິດຈາກ ລບຕ ແລະ ທີມເຕັ້ນລາວບັ້ງໄຟຂອງໄວໜຸ່ມລາວ ໄດ້ຈັດງານຄອນເສີດຂຶ້ນເພື່ອລະດົມທຶນຮອນ ຊ່ວຍເຫຼືອຜູ້ຖືກເຄາະຮ້າຍຈາກ ລບຕ.

ໂດຍການສະໜັບສະໜູນຈາກອາສາສະໝັກອິດສະຕາລີໃນປີ 2013, ໜ່ວຍງານປະຊາສຳພັນ ໄດ້ປັບປຸງຍຸດທະສາດການພົວພັນປະສານງານກັບບັນດາພາກສ່ວນຕ່າງໆໃນຂະແໜງ ການ ແລະ ວິທີການນຳໃຊ້ອຸປະກອນໂຄສະນາປະຊາສຳພັນໃຫ້ໄດ້ດີຂຶ້ນກວ່າເກົ່າ.

ນອກຈາກນັ້ນ, ໜ່ວຍງານປະຊາສຳພັນ ຍັງໄດ້ສົມທົບກັບບັນດາສື່ຕ່າງໆພາຍໃນປະເທດ (ໜັງສືພິມວຽງຈັນທາມ, ວຽງຈັນໃໝ່, ກອງທັບ, ໂທລະພາບລາວສະຕາ, ໂທລະພາບແຫ່ງຊາດ ແລະ ວິທະຍຸແຫ່ງຊາດ ລົງຢ້ຽມຢາມສະໜາມ ເພື່ອເກັບກຳຂ່າວກ່ຽວກັບຜົນກະທົບ ແລະ ບັນຫາ ລບຕ ຢູ່ແຂວງສາລະວັນ ແລະ ອັດຕະປື ເພື່ອນຳມາອອກຂ່າວໂຄສະນາໃຫ້ປະຊາຊົນລາວບັນດາເຜົ່າຮັບຮູ້ກ່ຽວກັບຜົນຮ້າຍຂອງ ລບຕ ໃນທົ່ວປະເທດ. ໃນປີ 2013, ຫຼາຍກວ່າ 50 ຫົວຂໍ້ຂ່າວກ່ຽວກັບບັນຫາ ລບຕ ແລະ ຜົນສຳເລັດຕ່າງໆຂອງການປະຕິບັດວຽກງານແກ້ໄຂບັນຫາ ລບຕ ໃນທົ່ວຂະແໜງການ ລບຕ ໄດ້ຖືກເຜີຍແຜ່ໂຄສະນາທາງໜັງສືພິມທ້ອງຖິ່ນ (ວຽງຈັນທາມສ໌ ແລະ ໜັງສືພິມຕ່າງໆຂອງລາວ). ນອກຈາກນັ້ນ, ໜ່ວຍງານໂຄສະນາປະຊາສຳພັນ ຍັງມີພື້ນທີ່ໂຄສະນາຜົນຮ້າຍຂອງ ລບຕ ອີກດ້ວຍ ຢູ່ທີ່ພິພິດທະພັນແຫ່ງຊາດ ເພື່ອນຳໃຊ້ເປັນອີກຊ່ອງທາງໜຶ່ງໂຄສະນາໃຫ້ນັກທ່ອງທ່ຽວທີ່ເຂົ້າມາຢ້ຽມຊົມ ໄດ້ຮັບຮູ້ວ່າ ສປປ ລາວ ຍັງມີ ລບຕ ຕົກຄ້າງເປັນຈຳນວນຫຼວງຫຼາຍ ແລະ ປະຊາຊົນລາວບັນດາເຜົ່າ ກໍ່ຍັງສືບຕໍ່ໄດ້ຮັບຜົນກະທົບຈາກ ລບຕ ຢູ່ໃນປະຈຸບັນ.

## ໜ່ວຍງານແຜນການ:

ໜ້າທີ່ຮັບຜິດຊອບຕົ້ນຕໍຂອງໜ່ວຍງານແຜນການ ແມ່ນຮັບຜິດຊອບໃນການຈັດກອງປະຊຸມຕ່າງໆ, ຕິດຕາມການຈັດຕັ້ງປະຕິບັດແຜນການປະຈຳປີຂອງ ຄຊກລ. ນອກຈາກນັ້ນ, ຍັງເຮັດໜ້າທີ່ໃນການສັງລວມບົດລາຍງານປະຈຳເດືອນ ແລະ ປະຈຳໄຕມາດ ເພື່ອລາຍງານໃຫ້ແກ່ລັດຖະບານ ສປປ ລາວ ແລະ ສປຊ ອີກດ້ວຍ. ໂດຍການສະໜັບສະໜູນຈາກອົງການ ສປຊ, ໜ່ວຍງານແຜນການ ສາມາດຈັດກອງປະຊຸມສຳຄັນຂຶ້ນຫຼາຍຄັ້ງຄື: ກອງປະຊຸມຄະນະຊີ້ນຳວຽກງານແກ້ໄຂບັນຫາ ລບຕ ຈັດຂຶ້ນໃນວັນທີ 29 ພຶດສະພາ 2013, ຊຶ່ງຈຸດປະສົງຂອງກອງປະຊຸມ ແມ່ນເພື່ອນຳສະເໜີຜົນການຈັດຕັ້ງປະຕິບັດວຽກງານແກ້ໄຂບັນຫາ ລບຕ ໃນປີ 2012 ແລະ ຮັບຮອງແຜນການເຄື່ອນໄຫວວຽກງານແກ້ໄຂບັນຫາ ລບຕ ຂອງ ຄຊກລ ສຳລັບປີ 2013, ນຳສະເໜີກ່ຽວກັບແຜນຍຸດທະສາດຊ່ວຍເຫຼືອຜູ້ຖືກເຄາະຮ້າຍຈາກ ລບຕ ແລະ ຜ່ານຮ່າງເອກະສານໂຄງການຮ່ວມມືຂອງ ສປຊ ສະໜັບສະໜູນຫ້ອງການ ຄຊກລ ແລະ ຄກລ ສຳລັບປີ 2013-2015.

ນອກຈາກນັ້ນ, ໃນລະຫວ່າງເດືອນມິຖຸນາ 2013, ໜ່ວຍງານແຜນການ ຍັງໄດ້ຈັດກອງປະຊຸມຄັ້ງທຳອິດ ກ່ຽວກັບທິດທາງນະໂຍບາຍ ສຳລັບວຽກງານແກ້ໄຂບັນຫາ ລບຕ ທີ່ຕົກຄ້າງຢູ່ ສປປ ລາວ ຫົວຂໍ້ "ການວາງແຜນ ແລະ ການຈັດລຽງບູລິມະສິດການກວດກູ້ ລບຕ ໃນຂະແໜງການແກ້ໄຂບັນຫາ ລບຕ". ມີບັນດາທ່ານຜູ້ຕາງໜ້າຈາກບັນດາກະຊວງອອ້ມຂ້າງທີ່ກ່ຽວຂ້ອງ, ອົງການ ສປຊ, ຕາງໜ້າປະເທດຜູ້ໃຫ້ທຶນ, ອົງການປະຕິບັດງານແກ້ໄຂບັນຫາ ລບຕ ເຂົ້າຮ່ວມຫຼາຍກວ່າ 65 ທ່ານ, ຊຶ່ງຈຸດປະສົງຂອງກອງປະຊຸມແມ່ນ ເພື່ອຄົ້ນຄວ້າປຶກສາຫາລືກ່ຽວກັບນະໂຍບາຍໃນການແກ້ໄຂບັນຫາ ລບຕ ທີ່ຕົກຄ້າງຢູ່ ສປປ ລາວ ແນໃສ່ເຮັດໃຫ້ວຽກງານດັ່ງກ່າວ ສາມາດເຊື່ອມສານເຂົ້າໃນແຜນພັດທະນາຊົນນະບົດ ແລະ ລຶບລ້າງຄວາມທຸກຍາກຂອງລັດຖະບານ.

ພ້ອມນັ້ນ, ໜ່ວຍງານແຜນການ ຍັງໄດ້ຈັດກອງປະຊຸມທົບທວນຄືນການປະຕິບັດວຽກງານແກ້ໄຂບັນຫາ ລບຕ ປະຈຳປີ 2012 ຂອງ ຄຊກລ ແລະ ຄກລ ຂຶ້ນໃນວັນທີ 12 ກຸມພາ 2013, ຊຶ່ງຈຸດປະສົງຂອງກອງປະຊຸມແມ່ນທົບທວນຄືນການປະຕິບັດວຽກງານແກ້ໄຂບັນຫາ ລບຕ ຂອງ ຄຊກລ ແລະ ຄກລ ໂດຍການສະໜັບສະໜູນຂອງ ສປຊ. ພາຍຫຼັງສຳເລັດກອງປະຊຸມທົບທວນແລ້ວ, ກໍ່ໄດ້ມີການສືບຕໍ່ກອງປະຊຸມຄະນະກຳມະການຄົ້ນຄວ້າເອກະສານໂຄງການຮ່ວມມືຂອງ ສປຊ ສະໜັບສະ

ໜູນຫ້ອງການ ຄຊກລ ແລະ ຄກລ ສໍາລັບປີ 2013-2015 ອີກດ້ວຍ.

ໃນເດືອນມິຖຸນາ 2013, ຄຊກລ ໄດ້ສົມທົບກັບອົງການ ສປຊ ຈັດກອງປະຊຸມຄະນະກໍາມະການຄຸ້ມຄອງກອງທຶນຊ່ວຍເຫຼືອລ້າສໍາລັບການແກ້ໄຂບັນຫາ ລບຕ ຂຶ້ນ ໂດຍມີຄະນະກໍາມະການກອງທຶນຈາກຝ່າຍລັດຖະບານລາວ, ຝ່າຍຕ່າງປະເທດມີປະເທດອົດສະຕຣາລີ, ຝຣັ່ງ, ໄອແລນ, ສະວິດເຊີແລນ ແລະ ອົງການ ສປຊ ເຂົ້າຮ່ວມ. ກອງປະຊຸມດັ່ງກ່າວ ດໍາເນີນພາຍໃຕ້ການເປັນປະທານ ຂອງທ່ານ ອາລຸນແກ້ວ ກິດຕິຄຸນ ລັດຖະມົນຕີຊ່ວຍວ່າການກະຊວງການຕ່າງປະເທດ ແລະ ທ່ານ ມິນ ຟາມ ຜູ້ຕາງໜ້າອົງການ ສປຊ ເພື່ອການພັດທະນາປະຈໍາ ສປປ ລາວ.

## ໜ່ວຍງານກວດກາຄຸ້ມຄອງຄຸນນະພາບ:

ໃນປີ 2013, ໜ່ວຍງານກວດກາຄຸ້ມຄອງຄຸນນະພາບຂອງຫ້ອງການ ຄຊກລ ໄດ້ລົງຕິດຕາມການຈັດຕັ້ງປະຕິບັດມາດຕະຖານແຫ່ງຊາດ ແລະ ກວດກາເຕັກນິກຂອງບັນດາອົງການປະຕິບັດງານແກ້ໄຂບັນຫາລະເບີດບໍ່ທັນແຕກ ທີ່ເຄື່ອນໄຫວວຽກງານແກ້ໄຂບັນຫາ ລບຕ ໃນ 10 ແຂວງທີ່ມີ ລບຕ ຕົກຄ້າງ. ຜົນຈາກການລົງກວດກາເຫັນວ່າ ມີບາງອົງການປະຕິບັດງານ ຍັງບໍ່ທັນປະຕິບັດຕາມມາດຕະຖານແຫ່ງຊາດຢ່າງເຄັ່ງຄັດ. ນອກຈາກນັ້ນ, ໜ່ວຍງານກວດກາຄຸ້ມຄອງຄຸນນະພາບ ຍັງໄດ້ລົງໄປກວດສອບສາເຫດຂອງການເກີດອຸປະຕິເຫດທີ່ເກີດຂຶ້ນໃນວັນທີ 7 ເມສາ 2013 ຢູ່ເມືອງຄໍາ, ແຂວງຊຽງຂວາງ, ຊຶ່ງເຮັດໃຫ້ມີຄົນເສຍຊີວິດ 1 ຄົນ ເປັນເດັກນ້ອຍ ແລະ ໄດ້ຮັບບາດເຈັບ 2 ຄົນ ເປັນເດັກນ້ອຍຄືກັນ. ອຸປະຕິເຫດໃນຄັ້ງນີ້ ເກີດຂຶ້ນຢູ່ໃນສະໜາມກວດກູ້ຂອງອົງການປະຕິບັດງານ. ດັ່ງນັ້ນ, ຄຊກລ ຈຶ່ງໄດ້ເອົາໃຈໃສ່ຊຸກຍູ້ໃຫ້ບັນດາອົງການປະຕິບັດງານ ປະຕິບັດຢ່າງເຄັ່ງຄັດຕາມມາດຕະຖານແຫ່ງຊາດ ແລະ ເອົາໃຈໃສ່ກວດກາຄຸນນະພາບໃນການກວດກູ້ ເພື່ອຫຼີກລ່ຽງການເກີດອຸປະຕິເຫດ. ໃນປີ 2014 ຖ້າມີງົບປະມານສະໜັບສະໜູນພຽງພໍ ຄຊກລ ຈະຂະຫຍາຍທີມງານກວດກາຄຸ້ມຄອງຄຸນນະພາບຕື່ມອີກ 1 ທີມ ເພື່ອຊ່ວຍໃນການລົງຕິດຕາມການກວດກາການປະຕິບັດໜ້າທີ່ຂອງບັນດາອົງການະຕິບັດງານໃຫ້ທົ່ວເຖິງ, ຊຶ່ງປະຈຸບັນນີ້ລວມທັງໝົດ ແມ່ນມີ 19 ອົງການ.

# ການສ້າງຄວາມເຂັ້ມແຂງໃຫ້ແກ່ແມ່ຍິງ:

ໃນເດືອນກຸມພາ 2013, ຄຊກລ ໄດ້ແຕ່ງຕັ້ງພະນັກງານວິຊາການປະຈໍາຢູ່ໜ່ວຍງານແຜນການ ເພື່ອເຮັດໜ້າທີ່ເປັນໃນກາງໃນການປະສານກ່ຽວກັບບົດບາດຂອງແມ່ຍິງປະຈໍາຢູ່ຫ້ອງການ ຄຊກລ ເພື່ອຮັບປະກັນໃຫ້ແມ່ຍິງ ໄດ້ເຂົ້າໄປມີສ່ວນຮ່ວມໃນການແກ້ໄຂບັນຫາ ລບຕ ຂອງ ຄຊກລ. ນອກຈາກນັ້ນ, ຜູ້ກ່ຽວຍັງໄດ້ເຮັດໜ້າທີ່ໃນການປະສານງານ ກ່ຽວກັບການຈັດກອງປະຊຸມສໍາມະນາກ່ຽວກັບການເຊື່ອມສານບົດບາດຂອງແມ່ຍິງ ເຂົ້າໃນການແກ້ໄຂບັນຫາ ລບຕ ອີກດ້ວຍ.

ໃນວັນທີ 9 ພຶດສະພາ 2013, ຄຊກລ ໄດ້ສົມທົບກັບສູນເກັບກູ້ລະເບີດຝັງດິນສາກົນຂອງເຈນນີວາ-ປະເທດສະວິດເຊີແລນ ຈັດກອງປະຊຸມສໍາມະນາຂຶ້ນກ່ຽວກັບການເຊື່ອມສານບົດບາດຂອງແມ່ຍິງເຂົ້າໃນການແກ້ໄຂບັນຫາລບຕ, ຊຶ່ງໄດ້ຖືໄດ້ວ່າເປັນກອງປະຊຸມຄັ້ງທໍາອິດທີ່ມີຜູ້ເຂົ້າຮ່ວມໃນທົ່ວຂະແໜງການແກ້ໄຂບັນຫາ ລບຕ, ຊຶ່ງລວມທັງໝົດ 35 ທ່ານ ລວມມີ ຄຊກລ, ຄກລ, ບັນດາອົງການປະຕິບັດງານແກ້ໄຂບັນຫາ ລບຕ ເພື່ອມະນຸດສະທໍາ ແລະ ອົງການ ສປຊ. ກອງປະຊຸມໃນຄັ້ງນີ ຜູ້ເຂົ້າຮ່ວມໄດ້ຮຽນຮູ້ຫຼາຍຢ່າງກ່ຽວກັບວຽກງານແກ້ໄຂບັນຫາ ລບຕ ເປັນຕົ້ນແມ່ນ ວິທີການສະໝັກເຂົ້າມາເປັນພະນັກງານ ເພື່ອເຮັດວຽກກ່ຽວກັບການແກ້ໄຂບັນຫາ ລບຕ, ການຝຶກອົບຮົມຕ່າງໆ, ຄວາມຮູ້ກ່ຽວກັບການບໍລິການວົງຈອນໂຄງການ, ຄວາມຮູ້ກ່ຽວກັບວິທີການປົດປ່ອຍເນື້ອທີ່ດິນ, ວຽກງານໂຄສະນາສຶກສາຄວາມສ່ຽງຈາກ ລບຕ, ການປະສານງານຊຸມຊົນ ແລະ ການຊ່ວຍເຫຼືອຜູ້ຖືກເຄາະຮ້າຍຈາກ ລບຕ. ບັນດາຜູ້ເຂົ້າຮ່ວມກອງປະຊຸມມີຄໍາເຫັນວ່າ ເປັນກອງປະຊຸມທີ່ດີຫຼາຍ ແລະ ຖ້າເປັນໄປໄດ້ ແມ່ນສະເໜີໃຫ້ຈັດປະຊຸມລັກສະນະແບບນີ້ຕື່ມ ໃຫ້ແກ່ແມ່ຍິງ ທີ່ຢູ່ບັນດາແຂວງຕ່າງໆ ທີ່ມີ ລບຕ ຕົກຄ້າງ.

# ຄູ່ຮ່ວມງານຕ່າງໆ:

ໃນປີ 2013, ຄຊກລ ໄດ້ສືບຕໍ່ເຮັດໜ້າທີ່ໃນການຈັດຕັ້ງປະຕິບັດສົນທິສັນຍາວ່າດ້ວຍການຕ້ານລະເບີດລູກຫວ່ານຢ່າງເອົາໃຈໃສ່. ພ້ອມນັ້ນ, ກໍ່ໄດ້ເຂົ້າຮ່ວມກອງປະຊຸມສາກົນຕ່າງໆ ເປັນຕົ້ນແມ່ນກອງປະຊຸມກາງສະໄໝຂອງສົນທິສັນຍາສາກົນວ່າດ້ວຍການຕ້ານລະເບີດລູກຫວ່ານ ຢູ່ເຈນນີວາ, ປະເທດສະວິດເຊີແລນ ແລະ ກອງປະຊຸມລັດພາຄີຄັ້ງທີ 4 ຂອງສົນທິສັນຍາສາກົນວ່າດ້ວຍການຕ້ານລະເບີດລູກຫວ່ານ ຢູ່ປະເທດຊໍາເບຍ, ຊຶ່ງລັດຖະບານລາວ ແມ່ນໄດ້ເອົາໃຈໃສ່ເຂົ້າໄປມີສ່ວນຮ່ວມໃນທຸກເວທີປຶກສາຫາລື. ນອກຈາກນັ້ນ, ຄຊກລ ຍັງໄດ້ສັງລວມຂໍ້ມູນກ່ຽວກັບສະພາບການຈັດຕັ້ງປະຕິບັດສົນທິສັນຍາວ່າດ້ວຍການຕ້ານລະເບີດລູກຫວ່ານ ຕາມມາດຕາ 7 ຂອງສົນທິສັນຍາສົ່ງໃຫ້ແກ່ເລຂາທິການໃຫຍ່ອົງການ ສປຊ ໃນຕົ້ນເດືອນມີນາ 2013.

ສປປ ລາວ ຕ້ອງໄດ້ປັບປຸງລະບຽບ (ກົດໝາຍ) ໃນການຈັດຕັ້ງປະຕິບັດສົນທິສັນຍາວ່າດ້ວຍການເກືອດຫ້າມລະເບີດລູກຫວ່ານຂອງຕົນ. ໃນປີ 2013, ອົງການກາແດງສາກົນ ໄດ້ປັບປຸງຮ່າງຕົວແບບ ກ່ຽວກັບລະບຽບໃນການຈັດຕັ້ງປະຕິບັດສົນທິສັນຍາວ່າດ້ວຍການເກືອດຫ້າມລະເບີດລູກຫວ່ານຂຶ້ນມາ ແລ້ວໄດ້ນໍາໄປສະເໜີຕໍ່ບັນດາລັດພາຄີ ພິຈາລະນາ ເພື່ອຊ່ວຍເປັນອີກແຮງໜຶ່ງສະໜັບສະໜູນ ແລະ ໃຫ້ຄໍາປຶກສາແກ່ ສປປ ລາວ ນໍາໄປປັບປຸງເປັນລະບຽບຂອງຕົນເອງ. ໃນປີ 2014, ຄຊກລ ຈະໄດ້ຮັບເອົາຊ່ຽວຊານອາວຸໂສຄົນລາວທີ່ມີປະສົບການທາງດ້ານການຮ່າງກົດໝາຍ ມາຊ່ວຍວຽກ ກະຊວງຍຸຕິທໍາ ແລະ ຄຊກລ ໃນການຮ່າງລະບຽບການດັ່ງກ່າວ.

ໃນປີ 2013, ລັດຖະບານອົດສະຕາລີ ໄດ້ປະກາດເພີ່ມທຶນການຊ່ວຍເຫຼືອເຂົ້າໃນວຽກງານແກ້ໄຂບັນຫາ ລບຕ ຢູ່ໃນ ສປປ ລາວ ຈໍານວນ 5,4 ລ້ານໂດລາອົດສະຕຣາລີ. ໃນເງິນຈໍານວນດັ່ງກ່າວ 2,6 ລ້ານໂດລາອົດສະຕາລີ ແມ່ນນໍາໃຊ້ເພື່ອສະໜັບສະໜູນ ຄຊກລ ແລະ ຄກລ.

ໃນປີ 2012, ສະຫະພາບເອີລົບ (ອີຢູ) ໄດ້ໃຫ້ຄໍາໝັ້ນສັນຍາໃໝ່ ເພື່ອປະກອບທຶນຊ່ວຍເຫຼືອເຂົ້າໃນຂະແໜງການແກ້ໄຂບັນຫາ ລບຕ ຜ່ານກອງທຶນຊ່ວຍເຫຼືອລ້າຂອງ ສປຊ ເພື່ອນໍາໃຊ້ເຂົ້າໃນການກວດກູ້ ລບຕ ແລະ ການໂຄສະນາສຶກສາຄວາມສ່ຽງຈາກ ລບຕ ຢູ່ແຂວງອັດຕະປື. ນອກຈາກນັ້ນ, ກໍ່ໄດ້ນໍາໃຊ້ເຂົ້າເພື່ອສະໜັບສະໜູນການສ້າງຄວາມເຂັ້ມແຂງໃຫ້ແກ່ ຄຊກລ.

ທຶນສະໜັບສະໜູນດັ່ງກ່າວແມ່ນແບບຫຼາຍປີ ລວມມູນຄ່າ 1,3 ລ້ານຢູໂລ ກວມເອົາໄລຍະເວລາແຕ່ ເດືອນຕຸລາ 2012 ຫາ ສິງຫາ 2015.

ໃນປີ 2013, ລັດຖະບານອັງກິດ ໄດ້ສະໜັບສະໜູນທຶນຊ່ວຍເຫຼືອໃຫ້ແກ່ ຄຊກລ ແລະ ຄກລ ຈຳນວນ 126,052 ໂດລາສະຫະລັດ. ໃນເງິນຈຳນວນດັ່ງກ່າວ 39,447 ໂດລາສະຫະລັດ ໄດ້ຖືກນຳໃຊ້ສະໜັບສະໜູນເຂົ້າໃນການຝຶກອົບຮົມຢູ່ທີ່ສູນຝຶກແຫ່ງຊາດຂອງ ຄກລ. ນອກຈາກນັ້ນ, ຄຊກລ ຍັງໄດ້ນຳໃຊ້ເງິນຈຳນວນ 86,605 ໂດລາສະຫະລັດ ເພື່ອສະໜັບສະໜູນໃຫ້ແກ່ການປະຕິບັດງານຂອງ ຄຊກລ ໂດຍເນັ້ນໜັກໃສ່ປັບປຸງຄວາມອາດສາມາດຂອງສະຖາບັນການຈັດຕັ້ງໃນການແກ້ໄຂບັນຫາ ລບຕ.

ລັດຖະບານໄອແລນ ໄດ້ຢືນຢັນຄຳໝັ້ນສັນຍາເພື່ອສະໜັບສະໜູນຂະແໜງການແກ້ໄຂບັນຫາ ລບຕ ຢູ່ໃນ ສປປ ລາວ ແບບຫຼາຍປີລວມມູນຄ່າ 2 ລ້ານເອີໂລ (ປະມານ 2,7 ລ້ານໂດລາສະຫະລັດ) ຮອດປີ 2015. ທຶນສະໜັບສະໜູນດັ່ງກ່າວຈະນຳໃຊ້ເຂົ້າໃນການສ້າງຄວາມເຂັ້ມແຂງໃຫ້ແກ່ ຄຊກລ ແລະ ຄກລ ເພື່ອແກ້ໄຂບັນຫາ ລບຕ ທີ່ຕົກຄ້າງຢູ່ໃນ ສປປ ລາວ, ຊຶ່ງທຶນຈຳນວນດັ່ງກ່າວນີ້ແມ່ນຈະເອົາມາຜ່ານກອງທຶນຊ່ວຍເຫຼືອລາຂອງ ສປຊ.

ລັດຖະບານສະວິດເຊີແລນ ໄດ້ຂະຫຍາຍທຶນການຊ່ວຍເຫຼືອເຂົ້າໃນຂະແໜງການແກ້ໄຂບັນຫາ ລບຕ ຈຳນວນ 3,79 ລ້ານໂດລາສະຫະລັດ ສຳລັບປີ 2013-2015. ທຶນຈຳນວນດັ່ງກ່າວ ຈະນຳໃຊ້ເຂົ້າໃນການສ້າງຄວາມເຂັ້ມແຂງໃຫ້ແກ່ ຄຊກລ ໃນການແກ້ໄຂບັນຫາ ລບຕ ແລະ ການສືບຕໍ່ດຳເນີນງານຂອງ ຄກລ ໃນການກວດກູ້ ລບຕ, ຊຶ່ງທຶນຈຳນວນດັ່ງກ່າວນີ້ ແມ່ນຈະເອົາມາຜ່ານກອງທຶນຊ່ວຍເຫຼືອລາຂອງ ສປຊ. ໃນຈຳນວນເງິນ 3,79 ລ້ານໂດລາສະຫະລັດ ມີ 3,16 ລ້ານໂດລາສະຫະລັດ ແມ່ນຈະນຳໃຊ້ແບບບໍ່ສະເພາະເຈາະຈົງ ເພື່ອປະຕິບັດກິດຈະກຳຕາມແຜນການປະຈຳປີ ຂອງ ຄຊກລ ແລະ ຄກລ ເປັນຕົ້ນແມ່ນ ການປະສານງານພາຍໃນຂະແໜງການ, ການຄຸ້ມຄອງວຽກກວດກູ້ ແລະ ສຳຫຼວດ ລບຕ, ການໂຄສະນາສຶກສາຄວາມສ່ຽງຈາກ ລບຕ ແລະ ການຝຶກອົບຮົມຕ່າງໆ.

ໃນປີ 2013 ລັດຖະບານສະຫະລັດອາເມລິກາ ໄດ້ສະໜັບສະໜູນທຶນຊ່ວຍເຫຼືອຈຳນວນ 175,996 ໂດລາສະຫະລັດສະໜັບສະໜູນ ຄຊກລ ເພື່ອສ້າງຄວາມເຂັ້ມແຂງໃນການປະສານງານວຽກງານແກ້ໄຂບັນຫາ ລບຕ ໃນຂະແໜງການແກ້ໄຂບັນຫາ ລບຕ. ນອກຈາກນັ້ນ, ລັດຖະບານສະຫະລັດອາເມລິກາ ຍັງໄດ້ສະໜອງຊ່ຽວຊານຕ່າງປະເທດ 2 ທ່ານ ເຂົ້າມາຊ່ວຍວຽກໃນຂະແໜງການ, ຊຶ່ງໜຶ່ງທ່ານ ແມ່ນປະຈຳຢູ່ ຄຊກລ ເພື່ອຊ່ວຍວຽກທາງດ້ານການປະຕິບັດງານ ແລະ ອີກໜຶ່ງທ່ານ ແມ່ນປະຈຳຢູ່ ຄກລ ເພື່ອຊ່ວຍວຽກໜ່ວຍງານກວດກາຄຸນນະພາບ. ພ້ອມນັ້ນ, ລັດຖະບານສະຫະລັດອາເມລິກາ ຍັງໄດ້ສະໜັບສະໜູນການຝຶກອົບຮົມເພື່ອຍົກລະດັບວິຊາສະເພາະໃຫ້ແກ່ຊ່ຽວຊານທຳລາຍ ລບຕ ຂັ້ນສູງຄົນລາວອີກດ້ວຍ, ຊຶ່ງຄັ້ງນີ້ ກໍ່ແມ່ນຄັ້ງທີ 4 ແລ້ວທີ່ຈັດຂຶ້ນຢູ່ໃນ ສປປ ລາວ. ປະຈຸບັນນີ້ ທົ່ວຂະແໜງການແກ້ໄຂບັນຫາ ລບຕ ມີຊ່ຽວຊານທຳລາຍ ລບຕ ຂັ້ນສູງທັງໝົດ 66 ຄົນ, ໃນນັ້ນ ມີແມ່ຍິງ 6 ຄົນ ແລະ ເຂົາເຈົ້າເຫຼົ່ານັ້ນກໍ່ແມ່ນເຮັດວຽກຢູ່ກັບບັນດາອົງການປະຕິບັດຕ່າງໆທີ່ເຄື່ອນໄຫວວຽກຢູ່ໃນ ສປປ ລາວ.

ເປັນຄັ້ງທຳອິດ ທີ່ລັດຖະບານລາວ ໄດ້ຮັບທຶນຊ່ວຍເຫຼືອຈາກລັດຖະບານແຫ່ງລາດຊະອານາຈັກໄທ ເຂົ້າໃນການແກ້ໄຂບັນຫາ ລບຕ ຢູ່ໃນ ສປປ ລາວ ລວມມູນຄ່າ 5 ແສນບາດ.

ລັດຖະບານ ສປ ຈີນ ໄດ້ສະໜັບສະໜູນເຄື່ອງອຸປະກອນຊ່ວຍເຫຼືອຜູ້ຖືກເຄາະຮ້າຍຈາກ ລບຕ ໃຫ້ແກ່ ຄຊກລ ລວມມູນຄ່າ 1,1 ລ້ານຢວນ ຫຼື ປະມານ 1,4 ຕື້ກີບ. ເຄື່ອງອຸປະກອນດັ່ງກ່າວ ຄຊກລ ໄດ້ນຳໄປມອບໃຫ້ໂຮງໝໍເມືອງຕ່າງໆຂອງແຂວງຫົວພັນ ແລະ ຄຳມ່ວນ. ນອກຈາກນັ້ນ, ຄຊກລ ໂດຍການປະສານສົມທົບກັບສະຖານທູດ ສປ ຈີນ ປະຈຳ ສປປ ລາວ ໄດ້ສົ່ງພະນັກງານ ຄຊກລ, ຄກລ ແລະ ກອງທັບ ໄປຝຶກອົບຮົບຫຼັກສູດການກວດກູ້ ລບຕ ແລະ ແພດ ຢູ່ທີ່ ສປ ຈີນ ໄລຍະເວລາ 3 ເດືອນ ລວມມີຜູ້ເຂົ້າຮ່ວມທັງໝົດ 30 ຄົນ.

ໃນປີ 2013 ຄຊກລ ໄດ້ຮ່ວມມືກັບສູນເກັບກູ້ລະເບີດຝັງດິນສາກົນຂອງເຈນີວາ ຈັດການຝຶກອົບຮົມສຳມະນາຂຶ້ນ ກ່ຽວກັບ:

- ປະສິດທິຜົນຂອງວຽກງານແກ້ໄຂບັນຫາ ລບຕ ຢູ່ ສປປ ລາວ ເພື່ອນຳສະເໜີໃຫ້ບັນດາຄູ່ຮ່ວມງານຕ່າງໆ ໃຫ້ຮັບຮູ້ກ່ຽວກັບວິທີການປະເມີນຄວາມຄຸ້ມຄ່າໃນການນຳໃຊ້ທຶນ ແລະ ວິທີການວັດແທກຜົນກະທົບທາງດ້ານການພັດທະນາທີ່ສົ່ງຜົນຕໍ່ຂະແໜງການແກ້ໄຂບັນຫາ ລບຕ.

- ການເຮັດສັນຍາກ່ຽວກັບການກວດກູ້ ລບຕ, ຄວາມຮັບຜິດຊອບຮ່ວມກັນທາງກົດໝາຍໃນການກວດກູ້ ລບຕ 3 ຄັ້ງ ທີ່ຈັດຂຶ້ນໃນລະຫວ່າງເດືອນທັນວາ 2013, ຊຶ່ງໃນແຕ່ລະຄັ້ງ ຈະມີຜູ້ເຂົ້າຮ່ວມທີ່ແຕກຕ່າງກັນຄື: ກະຊວງກ່ຽວຂ້ອງ, ຄຊກລ, ຄກລ, ອົງການປະຕິບັດງານແກ້ໄຂບັນຫາ ລບຕ ເພື່ອມະນຸດສະທຳຂອງຕ່າງປະເທດ, ບໍລິສັດເກັບກູ້ ລບຕ ຂອງລາວ ແລະ ຕ່າງປະເທດ.

- ການນຳສະເໜີລະບົບອິມສະມາໃໝ່ ເວີເຊັ້ນ 6, ຊຶ່ງລະບົບດັ່ງກ່າວນີ້ ແມ່ນຈະນຳມາປ່ຽນແທນລະບົບອິມສະມາສະບັບກ່ອນ (ເວີເຊັ້ 5) ທີ່ ຄຊກລ ແລະ ບັນດາອົງການປະຕິບັດ ແລະ ບໍລິສັດເກັບກູ້ ລບຕ ຢູ່ໃນ ສປປ ລາວ ນຳໃຊ້ຢູ່ປະຈຸບັນ, ຊຶ່ງລະບົບດັ່ງກ່າວນີ້ ແມ່ນນຳໃຊ້ງ່າຍຂຶ້ນກວ່າເກົ່າ ແລະ ລະບົບປະຕິບັດການກໍ່ມີຄວາມຫຼາກຫຼາຍ.

# ລາຍງານສະພາບການເງິນຂອງ ຄຊກລ

ທຶນສະໜັບສະໜູນ ໃຫ້ແກ່ ຄຊກລ ແລະ ລາຍຈ່າຍ ໃນປີ 2013

| ຜູ້ໃຫ້ທຶນ | ເງິນທີ່ໄດ້ຮັບໃນປີ 2013 | ລາຍຈ່າຍໃນປີ 2013 |
|---|---:|---:|
| ອົງການ ສປຊ | 1,592,320 | 1,393,980 |
| ອົງການສະເຕີລິ້ງ | 90,747 | 110,217 |
| ອົງການກວດກູ້ລະເບີດແມັກ | 0 | 18,375 |
| *ລວມທັງໝົດໃນປີ 2013* | ***1,683,067*** | ***1,522,571*** |

ເງິນສະໜັບສະໜູນ ຄຊກລ ຜ່ານອົງການ ສປຊ-ແບ່ງເປັນແຕ່ລະປະເທດ ສໍາລັບປີ 2013 (ໂດລາສະຫະລັດ)

| ຜູ້ໃຫ້ທຶນ | ເງິນທີ່ໄດ້ຮັບໃນປີ 2013 | ລາຍຈ່າຍໃນປີ 2013 |
|---|---:|---:|
| ອົດສະຕຼາລີ | 801,541 | 404,578 |
| ສະຫະພາບເອີລົບ | 0 | 143,987 |
| ຝຼັ່ງ | 0 | 1,151 |
| ໄອແລນ | 362,500 | 297,426 |
| ສະວິດເຊີແລນ | 300,000 | 348,734 |
| ອັງກິດ (ດີຟິດ) | 16,779 | 86,605 |
| ທຶນປົກກະຕິຂອງ ສປຊ | 111,500 | 111,500 |
| *ລວມທັງໝົດໃນປີ 2013* | ***1,592,320*** | ***1,393,980*** |

ເງິນສະໜັບສະໜູນ ຄຊກລ ຜ່ານອົງການ ສປຊ-ແຕ່ປີ 2003-2013 (ໂດລາສະຫະລັດ)

| ຜູ້ໃຫ້ທຶນ | ເງິນທີ່ໄດ້ຮັບໃນປີ 2013 | ລາຍຈ່າຍໃນປີ 2013 |
|---|---:|---:|
| ອົດສະຕຼາລີ | 801,541 | 2,624,844 |
| ການາດາ | 0 | 81,161 |
| ອີຢູ | 0 | 217,160 |
| ຝຼັ່ງ | 0 | 54,867 |
| ໄອແລນ | 362,500 | 1,264,919 |
| ນິວຊີແລນ | 0 | 450,907 |
| ສະວິດເຊີແລນ | 300,000 | 2,260,000 |
| ອັງກິດ (ດີຟິດ) | 16,779 | 652,478 |
| ສະຫະລັດອາເມລິກາ | 0 | 95,238 |
| ທຶນປົກກະຕິຂອງ ສປຊ | 111,500 | 2,006,129 |
| *ລວມທັງໝົດໃນປີ 2013* | ***1,592,320*** | ***9,707,703*** |

## ລາຍຈ່າຍຂອງ ຄຊກລ ສໍາລັບປີ 2013

| ລາຍການ | ລວມ |
|---|---|
| ລາຍຈ່າຍສໍາລັບບຸກຄະລາກອນ | 914,398 |
| ລາຍຈ່າຍສໍາລັບການຈັດກອງປະຊຸມ, ສໍາມະນາ ແລະ ງານຕ່າງໆ | 102,495 |
| ລາຍຈ່າຍສໍາລັບການເດີນທາງຕ່າງໆ | 115,210 |
| ລາຍຈ່າຍສໍາລັບບໍລິຫານຫ້ອງການ ແລະ ຄ່າຕິດຕັ້ງຕ່າງໆ | 138,864 |
| ລາຍຈ່າຍສໍາລັບການປະຕິບັດງານຕ່າງໆ | 0 |
| ລາຍຈ່າຍສໍາລັບຊື້ວັດຖຸອຸປະກອນ | 74,626 |
| ຄ່າບໍລິຫານຂອງ ສປຊ | 45,873 |
| ອື່ນໆ | 2,515 |
| *ລວມທັງໝົດໃນປີ 2013* | ***1,393,980*** |




ການຍ່າງ ເພື່ອລະນຶກເຖິງວັນທີ 4 ເມສາ ວັນສາກົນໂຄສະນາ ເພື່ອຕ້ານລະເບີດບໍ່ທັນແຕກ.



ພິທີຕັດແຖບຜ້າ ເພື່ອເປີດພິທີສະເຫຼີມສະຫຼອງວັນທີ 1 ສິງຫາ ວັນມີຜົນບັງຄັບໃຊ້ສົນທິສັນຍາຕ້ານລະເບີດລູກຫວ່ານ.




ພິທີເຊັນສັນຍາເອກະສານໂຄງການຮ່ວມມືຂອງ ສປຊ ເພື່ອສະໜັບສະໜູນ ຫ້ອງການ ຄຊກລ ແລະ ຄກລ ສຳລັບປີ 2013-2015.




ກອງປະຊຸມສຳມະນາ ກ່ຽວກັບປະສິດທິຜົນຂອງວຽກງານແກ້ໄຂບັນຫາ ລບຕ ຢູ່ ສປປ ລາວ



# ບົດລາຍງານຂອງອົງການປະຕິບັດງານ

## ອົງການປະຕິບັດງານ ກວດກູ້ ລບຕ ເພື່ອມະນຸດສະທໍາ ແລະ ບໍລິສັດກວດກູ້ ລບຕ

### ອົງການປະຕິບັດງານກວດກູ້ ລບຕ ເພື່ອມະນຸດສະທໍາ

1. ອົງການສາກົນເພື່ອຄົນພິການ (ເຫັດໄອ)
2. ອົງການເກັບກູ້ລະເບີດເຈມັດ (ເຈມັດ)
3. ໂຄງການເກັບກູ້ລະເບີດແຫ່ງຊາດລາວ (ຄກລ)
4. ອົງການເກັບກູ້ລະເບີດແມັກ (ແມັກ)
5. ອົງການຊ່ວຍເຫຼືອລ້າຂອງປະຊາຊົນນໍອກແວ (ເອັນພີເອ)
6. ອົງການສາກົນຮ່ວມໃຈບໍລິການ (ໂຊດີ)
7. ອົງການເຮໂລຫຼາດ (ເຮໂລຫຼາດ)

### ບໍລິສັດເກັບກູ້ ລບຕ ຂອງລາວ ແລະ ຕ່າງປະເທດ

1. ບໍລິສັດ ອາສາ ເກັບກູ້ລະເບີດ ຈໍາກັດ (ອາສາ)
2. ບໍລິສັດ ພົນສັກດາ ເກັບກູ້ລະເບີດ ຈໍາກັດ (ພີເອັດສ໌ດີ)
3. ບໍລິສັດ ສີບຸນເຮືອງ ເກັບກູ້ລະເບີດ ຈໍາກັດ (ເອັດສ໌ບີເຫັດ)
4. ບໍລິສັດ ແສງເພັດ ເກັບກູ້ລະເບີດ ຈໍາກັດ (ເອັດສ໌ພີ)
5. ບໍລິສັດ ເອັກທີດີ ເກັບກູ້ລະເບີດ ຈໍາກັດ (ເອັກທີດີ)
6. ບໍລິສັດ ແບັກເທັກ ເກັບກູ້ລະເບີດ ຈໍາກັດ (ແບັກເທັກ)
7. ບໍລິສັດ ມິວເຊີດສ໌ ເກັບກູ້ລະເບີດ ຈໍາກັດພຽງຜູ້ດຽວ (ມິວເຊີດສ໌)
8. ກົມຊ່າງແສງ, ກະຊວງປ້ອງກັນປະເທດ ຮ່ວມກັບ ບໍລິສັດ ເອັນເອັນຈີ ລ້ານຊ້າງມິນເນີໂຣນ (ເອັນເອັນຈີ)

## ອົງການປະຕິບັດງານຊ່ວຍເຫຼືອຜູ້ຖືກເຄາະຮ້າຍຈາກ ລບຕ ແລະ ໂຄສະນາສຶກສາຄວາມສ່ຽງຈາກ ລບຕ

1. ສະມາຄົມຊ່ວຍເຫຼືອລ້າ ແລະ ບັນເທົາທຸກຂອງຍີ່ປຸ່ນ (ເອເອອາຣ໌)
2. ອົງການຊ່ວຍເຫຼືອບັນເທົາທຸກຂອງກາໂຕລິກ (ຊີອາເອັດສ໌)
3. ອົງການບໍລິການອົງຄະທຽມ ແລະ ເຄື່ອງຄໍ້າຊູ (ໂຄບ)
4. ສູນການແພດ ແລະ ຟື້ນຟູໜ້າທີ່ການ (ຊີເອັມອາ)
5. ສະມາຄົມຊ່ວຍເຫຼືອ ເພື່ອປັບປຸງຄຸນນະພາບຊີວິດ ໃຫ້ແກ່ຜູ້ເສຍອົງຄະ ແລະ ຜູ້ລອດຊີວິດຈາກ ລບຕ (ຄິວແອວເອ)
6. ອົງການສຶກສາໂລກ (ເວີອິດູເຄເຊັ້ນ)
7. ອົງການນໍ້າໃຈນັກກິລາ (ເອັດສ໌ໂອເອັດ)

# ອົງການປະຕິບັດງານແກ້ໄຂບັນຫາ ລບຕ ເພື່ອມະນຸດສະທຳ

## ອົງການສາກົນເພື່ອຄົນພິການ (ເຫັດໄອ)

### ອົງການສາກົນເພື່ອຄົນພິການ:

ອົງການສາກົນເພື່ອຄົນພິການ ໄດ້ເຄື່ອນໄຫວວຽກງານເກັບກູ້ລະເບີດ ຢູ່ ສປປ ລາວ ເລີ່ມແຕ່ ປີ 1996. ວຽກງານສຳຄັນທີ່ສຸດຂອງອົງການ ແມ່ນການປະຕິບັດງານແບບປະສົມປະສານກັບວຽກໂຄສະນາສຶກສາຄວາມສ່ຽງຈາກ ລບຕ, ວຽກເກັບກູ້, ວຽກຊ່ວຍເຫຼືອຜູ້ໄດ້ຮັບເຄາະຮ້າຍ ແລະ ວຽກໂຄສະນາລະດົມຂົນຂວາຍ ຢູ່ໃນລະດັບບ້ານ, ລະດັບຊາດ ແລະ ລະດັບສາກົນ. ວິທີການແບບນີ້ ແມ່ນຈະຊ່ວຍໃຫ້ຄວາມສ່ຽງຈາກການເກີດອຸອຸປະຕິເຫດຈາກ ລບຕ ຫຼຸດລົງ ເນື່ອງຈາກວ່າ ພວກເຮົາໄດ້ມີການປັບປຸງການກຳນົດເປົ້າໝາຍພື້ນທີ່ໆມີຄວາມສ່ຽງນັ້ນໄປນຳ, ຊຶ່ງໃນຄະນະດຽວກັນນັ້ນ, ການສ້າງຈິດສຳນຶກໃຫ້ຊຸມຊົນທີ່ມີ ລບຕ ຕົກຄ້າງ ກໍ່ໄດ້ດຳເນີນໄປພ້ອມໆກັນ.

### ກິດຈະກຳທີ່ປະຕິບັດໃນປີ 2013:

ໃນປີ 2013 ອົງການເຫັດໄອ ໄດ້ປະຕິບັດງານຢູ່ພາຍໃນເມືອງຕ່າງໆເຊັ່ນ: ເມືອງນອງ, ເມືອງເຊໂປນ ແລະ ເມືອງວິລະບູລີ ຂອງແຂວງສະຫວັນນະເຂດ, ຊຶ່ງມີລາຍລະອຽດລຸ່ມນີ້:

1) ການພົວພັນຊຸມຊົນມິຕິ: ໄດ້ສະໜັບສະໜູນອາສາສະໝັກຊຸມຊົນ, ຊຶ່ງວຽກນີ້ ແມ່ນຈະຕ້ອງປະຕິບັດກ່ອນການເກັບກູ້ ແລະ ກ່ອນການທຳລາຍ. ສຳລັບຜົນປະໂຫຍດທີ່ໄດ້ຮັບມີຄື (ການ (ຖາງປ່າ ແລະ ຄວາມປອດໄພໃຫ້ແກ່ພົນລະເມືອງ).

2) ການສຳຫຼວດທົ່ວໄປຂັ້ນເມືອງ: ແມ່ນການລວມເອົາແຫຼ່ງຂໍ້ມູນຕ່າງໆຄື (ປະຫວັດຄວາມເປັນມາຂອງບ້ານ, ພື້ນທີ່ຕົກຄ້າງຂອງ ລບຕ ໃນອາດີດ ແລະ ປະຈຸບັນ) ເພື່ອປັບປຸງຂໍ້ມູນຈັດບູລິມະສິດໃນການເຂົ້າໄປປະຕິບັດການເກັບກູ້.

3) ໜ້າວຽກທຳລາຍເຄື່ອນທີ່: ບ່ອນໃດທີ່ມີການລາຍງານວ່າພົບ ລບຕ ຕົກຄ້າງ (ໜ່ວຍງານພາກສະໜາມຂອງອົງການ ຫຼື ໜ່ວຍງານອື່ນໆ) ໂດຍສະເພາະແມ່ນ ໜ່ວຍງານທຳລາຍເຄື່ອນທີ່ ຈະຖືກສົ່ງໄປ ພາຍໃນໜຶ່ງເດືອນ ເພື່ອເຮັດການທຳລາຍ.

4) ໜ້າວຽກເກັບກູ້ພື້ນທີ່: ແມ່ນສະໜັບສະໜູນໃຫ້ໂຄງການພັດທະນາຕ່າງໆຂອງຄູ່ຮ່ວມງານ ເຊັ່ນວ່າ ເກັບກູ້ພື້ນທີ່ກໍ່ສ້າງໂຮງຮຽນ, ພື້ນທີ່ ກໍ່ສ້າງສຸກສາລາ, ພື້ນທີ່ກໍ່ສ້າງອາຄານຂອງຊຸມຊົນ, ພື້ນທີ່ຂະຫຍາຍເນື້ອທີ່ນາໃໝ່ ແລະ ພື້ນທີ່ນາເກົ່າເປັນຕົ້ນ.

5) ໜ້າວຽກໂຄສະນາສຶກສາຄວາມສ່ຽງຈາກ ລບຕ: ປະກອບມີ (1) ດຳເນີນການໂຄສະນາ ເລື່ອງຄວາມປອດໄພໃຫ້ແກ່ກຸ່ມຜູ້ໃຫຍ່ຊາຍ, ກຸ່ມຜູ້ຍິງ ແລະ ເດັກນ້ອຍ (2) ຢ້ຽມຢາມແຕ່ລະຄອບຄົວ ເພື່ອສອນຄວາມປອດໄພໃຫ້ແກ່ພໍ່ແມ່ເດັກ (3) ໂຄສະນາຢູ່ສະໂມສອນຂອງໂຮງຮຽນຮ່ວມກັບນາຍຄູ (4) ສາຍຮູບເງົາຢູ່ພາຍໃນບ້ານຕອນກາງຄືນ. ການປະເມີນຜົນກະທົບກ່ອນ ແລະ ຫຼັງ ຖືກຈັດຕັ້ງປະຕິບັດຢູ່ໃນບ້ານເປົ້າໝາຍ ເພື່ອປະເມີນຜົນຄວາມຮັບຮູ້ ແລະ ພຶດຕິກຳຂອງຊາວບ້ານ ກ່ຽວກັບ ລບຕ ກ່ອນ ແລະ ຫຼັງ ການເກັບກູ້.

6) ການຊ່ວຍເຫຼືອຜູ້ຖືກເຄາະຮ້າຍຈາກ ລບຕ: ໂຄງການຊ່ວຍເຫຼືອຜູ້ໄດ້ຮັບເຄາະຮ້າຍ ໄດ້ເລີ່ມປະຕິບັດຢ່າງມີປະສິດທິພາບໃນເດືອນມິຖຸນາ 2013 ພາຍຫຼັງທີ່ອົງການໄດ້ເຊັນບົດບັນທຶກຄວາມເຂົ້າໃຈກັບ ຄຊກລ. ການສຳຫຼວດເກັບກຳຂໍ້ມູນພື້ນຖານກ່ຽວກັບຄວາມຮູ້, ທັດສະນະຄະຕິ ແລະ ການປະພຶດ (ແຄັບ) ໄດ້ຖືກປະຕິບັດຢູ່ພາຍໃນ 40 ໝູ່ບ້ານ ຂອງ 2 ເມືອງ ( ເມືອງນອງ ແລະ ເມືອງເຊໂປນ). ການເກັບກຳຂໍ້ມູນພື້ນຖານ ແມ່ນເພື່ອຢາກຮູ້ແນວທາງໃນການພັດທະນາເສດຖະກິດ-ສັງຄົມຂອງປະຊາຊົນທີ່ອາໄສຢູ່ທ້ອງຖິ່ນວ່າມີຄືແນວໃດແດ່ ແລະ ປະເມີນເບິ່ງສະພາບການ ແລະ ຄວາມຕ້ອງການຂອງຄົນພິການ ລວມທັງຜູ້ໄດ້ຮັບເຄາະຮ້າຍຈາກ ລບຕ ແລະ ຍາດຕິພີ່ນ້ອງຂອງພວກເຂົາຕາມລຳດັບ ເພື່ອສ້າງເງື່ອນໄຂໃຫ້ໂຄງການພັດທະນາເຂົ້າໄປສະໜັບສະໜູນການດຳລົງຊີວິດຮອບດ້ານໃຫ້ແກ່ເຂົາເຈົ້າ.

ອົງການເຫັດໄອ ໄດ້ສືບຕໍ່ສະໜັບສະໜູນກຸ່ມຕ້ານລະເບີດລູກຫວ່ານ. ເລີ່ມແຕ່ປີ 2010 ເປັນຕົ້ນມາ, ກຸ່ມຕ້ານລະເບີດລູກຫວ່ານ ລວມມີສະມາຊິກທີ່ເປັນຜູ້ທີ່ລອດຊີວິດຈາກ ລບຕ ທັງໝົດ 8 ຄົນ ໄດ້ເຄື່ອນໄຫວຢ່າງຫ້າວຫັນໃນການໂຄສະນາຕໍ່ຕ້ານຜົນຮ້າຍຂອງ ລບຕ ຢູ່ໃນສົນທິສັນຍາວ່າດ້ວຍການຕ້ານລະເບີດລູກຫວ່ານ ແລະ ສົນທິສັນຍາວ່າດ້ວຍການຕ້ານລະເບີດຝັງດິນ ລວມທັງ ສົນທິສັນຍາວ່າດ້ວຍສິດທິຂອງຄົນພິການອີກດ້ວຍ.

ນອກຈາກນັ້ນ, ອົງການເຫັດໄອ ຍັງໄດ້ໃຫ້ການສະໜັບສະໜູນຫ້ອງການປະສານງານ ຄຊກລ ປະຈຳແຂວງສະຫວັນນະເຂດ,




ພິທີເຊັນບົດບັນທຶກຄວາມເຂົ້າໃຈ ລະຫວ່າງ ຫ້ອງການ ຄຊກລ ແລະ ອົງການເຫັດໄອ ໃນເດືອນກໍລະກົດ 2013, ທີ່ໂຮງແຮມໂນໂວເທວ.



ຊຶ່ງປະກອບມີ ທຶນຈຳນວນໜຶ່ງ ເພື່ອໃຊ້ຈ່າຍເຂົ້າໃນວຽກບໍລິຫານ ແລະ ການສ້າງຄວາມອາດສາມາດໃຫ້ແກ່ພະນັກງານ.

ໃນເດືອນ ມິຖຸນາ 2013 ບົດບັນທຶກຄວາມເຂົ້າໃຈໄດ້ຖືກເຊັນຮັບຮອງຢ່າງເປັນທາງການ ລະຫວ່າງ ອົງການເຫັດໄອ ແລະ ຫ້ອງການ ຄຊກລ. ພອມນັ້ນ, ໃບຢັ້ງຢືນຮັບຮອງການປະຕິບັດງານຂອງອົງການເຫັດໄອ ກໍ່ອອກໃນມື້ນັ້ນເຊັ່ນດຽວກັນ. ເອກະສານທັງສອງສະບັບ ໄດ້ກວມເອົາໄລຍະການປະຕິບັດງານນັບແຕ່ປີ 2013 ເຖິງ 2017. ພິທີເຊັນສັນຍາ ໄດ້ຈັດຂຶ້ນ ໃນວັນທີ 15 ມິຖຸນາ ໂດຍມີຜູ້ແທນເຂົ້າຮ່ວມເປັນສັກຂີພິຍານຈຳນວນ 30 ທ່ານ ທີ່ມາຈາກກະຊວງກຽວຂ້ອງຕ່າງໆ ແລະ ບັນດາອົງການ ເອັນຈີໂອ ອື່ນໆ.

ສິ່ງສຳຄັນອີກອັນໜຶ່ງ ແມ່ນອົງການໄດ້ຮັບການຢືນຢັນກ່ຽວກັບການສະໜອງທຶນງວດໃໝ່ຈາກສະຫະພາບເອີລົບ, ຊຶ່ງເງິນຈຳນວນນີ້ ຈະປະກອບສ່ວນເຂົ້າໃນການຈັດຕັ້ງປະຕິບັດໂຄງການຕາມທີ່ໄດ້ກຳນົດໄວ້ໃນບົດບັນທຶກຄວາມເຂົ້າໃຈ ບວກໃສ່ກັບທຶນຊ່ວຍເຫຼືອລ້າທີ່ໄດ້ຮັບຈາກລັດຖະບານຮອນລັງ. ຍ້ອນມີທຶນດັ່ງກ່າວ ອົງການເຫັດໄອ ຈຶ່ງໄດ້ຮັບສະໝັກເອົາພະນັກງານວິຊາການເກັບກູ້ລະເບີດເຂົ້າໃໝ່ຈຳນວນໜຶ່ງຕື່ມ ເພື່ອເພີ່ມໃຫ້ຈຳນວນທີມງານເກັບກູ້ຈຳນວນທີ່ມີແລ້ວ 4 ໜ່ວຍງານ ມາເປັນຕື່ມອີກ 1 ໜ່ວຍງານທຳລາຍເຄື່ອນທີ່.

## ຜົນສຳເລັດຕົ້ນຕໍໃນປີ 2013:

- ການສຳຫຼວດທົ່ວໄປຂັ້ນເມືອງ: ສຳເລັດການສຳຫຼວດທົ່ວໄປຢູ່ເມືອງເຊໂປນ ແລະ ປະຈຸບັນນີ້ ກຳລັງເລີ່ມຕົ້ນເຮັດການສຳຫຼວດທົ່ວໄປ ຢູ່ເມືອງວິລະບູລີ.
- ການທຳລາຍເຄື່ອນທີ່: ໄດ້ດຳເນີນການສຳຫຼວດເອົາຈຸດຕົກຄ້າງຂອງ ລບຕ ໄດ້ 557 ຈຸດ ພາຍໃນ 93 ໝູ່ບ້ານ ແລະ ທຳລາຍ ລບຕ ໄດ້ທັງໝົດຈຳນວນ 2,232 ໜ່ວຍ.
- ການເກັບກູ້ພື້ນທີ່: ເກັບກູ້ພື້ນທີ່ດິນໄດ້ທັງໝົດ 27.8 ຮຕ ພາຍໃນ 28 ໝູ່ບ້ານ; ໄດ້ດຳເນີນການປະເມີນຜົນພື້ນທີ່ໆເກັບກູ້ແລ້ວຈຳນວນ 74 ສະໜາມ ຜ່ານການປະເມີນຜົນສາມາດຕີລາຄາໄດ້ວ່າ 100% ຂອງພື້ນທີ່ດິນທີ່ເກັບກູ້ແລ້ວ ແມ່ນຖືກນຳໃຊ້ຕາມແຜນ.
- ໂຄສະນາສຶກສາຄວາມສ່ຽງຈາກ ລບຕ: ໄດ້ດຳເນີນປະຕິບັດ 90 ກິດຈະກຳໂຄສະນາ ພາຍໃນ 28 ໝູ່ບ້ານ ມີຜູ້ໄດ້ຮັບຜົນປະໂຫຍດເຂົ້າຮັບຟັງທັງໝົດຫຼາຍກວ່າ 14,000 ຄົນ.
- ການຊ່ວຍເຫຼືອຜູ້ຖືກເຄາະຮ້າຍຈາກ ລບຕ: ໃນໄລຍະ 3 ເດືອນ (09-12/2013) ໜ່ວຍງານໄດ້ປະຕິບັດກິດຈະກຳປະເມີນຜົນການເຂົ້າຮ່ວມຂອງຊຸມຊົນໃນແຕ່ລະບ້ານທີ່ຄັດເລືອກໄວ້ແລ້ວຈຳນວນ 40 ບ້ານ. ຄົນພິການຈຳນວນ 162 ຄົນໄດ້ຮັບການສຳພາດຢູ່ໃນເມືອງນອງ (ເພດຍິງ 73 ຄົນ ແລະ ເພດຊາຍ 89 ຄົນ) ແລະ ຄົນພິການ 159 ຄົນ ຢູ່ເມືອງເຊໂປນ (ເພດຍິງ 78 ຄົນ ແລະ ເພດຊາຍ 81 ຄົນ). ຫຼັງຈາກນັ້ນ, ຈຶ່ງສາມາດຮູ້ໄດ້ຄົນພິການຈຳນວນ 626 ຄົນ ໃນ 2 ຕົວເມືອງ (352 ຄົນ ຢູ່ເມືອງເຊໂປນ ແລະ 274 ຄົນ ຢູ່ເມືອງນອງ). ໃນຈຳນວນຄົນພິການເຫຼົ່ານີ້ ມີ 81 ຄົນທີ່ລອດຊີວິດຈາກ ລບຕ (38 ຄົນ ຢູ່ເມືອງນອງ ແລະ 43 ຄົນຢູ່ເມືອງເຊໂປນ).
- ກຸ່ມໂຄສະນາຕ້ານລະເບີດລູກຫວ່ານໄດ້ເຄື່ອນໄຫວກິດຈະກຳໂຄສະນາຕ່າງໆຄື:
  - ໄດ້ຈັດກອງປະຊຸມຂັ້ນບ້ານກ່ຽວກັບວຽກໂຄສະນາສຶກຄວາມສ່ຽງຈາກ ລບຕ ແລະ ປະເມີນສະພາບການຂອງການບໍລິການຊ່ວຍເຫຼືອຄົນພິການ ໄດ້ 10 ຄັ້ງ ຢູ່ແຂວງສະຫວັນນະເຂດ, ຄຳມ່ວນ ແລະ ຊຽງຂວາງ.
  - ໄດ້ຈັດກອງປະຊຸມ ຂັ້ນເມືອງ 4 ຄັ້ງ ຢູ່ ແຂວງສະຫວັນນະເຂດ ແລະ ແຂວງຊຽງຂວາງ ເພື່ອສະໜັບສະໜູນ ແລະ ຕິດຕາມການຈັດຕັ້ງປະຕິບັດພັນທະຂອງກອງປະຊຸມວ່າດ້ວຍການເກືອດຫ້າມລະເບີດລູກຫວ່ານ.
  - ໄດ້ເຂົ້າຮ່ວມກອງປະຊຸມ ຄັ້ງທີ 13 ກ່ຽວກັບສົນທິສັນຍາວ່າດ້ວຍການຕ້ານລະເບີດຝັງດິນ ຢູ່ເຈນີວາ-ປະເທດສະວິດເຊີແລນ; ເຂົ້າຮ່ວມກອງປະຊຸມ ຄັ້ງທີ 4 ຂອງສົນທິສັນຍາວ່າດ້ວຍການຕ້ານລະເບີດລູກຫວ່ານ ຢູ່ລູຊາກາ-ປະເທດຊາເບຍ ແລະ ກອງປະຊຸມກາງສະໄໝຂອງສົນທິສັນຍາວ່າດ້ວຍການຕ້ານລະເບີດລູກຫວ່ານ ຢູ່ເຈນີວາ-ປະເທດສະວິດເຊີແລນ.
- ການປະສານງານມິຕິ: ອົງການເຫັດໄອ ໄດ້ສືບຕໍ່ປະສານງານຢ່າງໃກ້ຊິດກັບຫ້ອງການປະສານງານ ຄຊກລ ແລະ ອົງການປະຕິບັດງານອື່ນໆ ໃນເວລາເຂົ້າຮ່ວມກອງປະຊຸມຂອງຂະແໜງການ ແລະ ກອງປະຊຸມສຳມະນາຕ່າງໆ. ນອກຈາກນັ້ນ, ອົງການຍັງໄດ້ມີການລາຍງານກິດຈະກຳທີ່ປະຕິບັດໄດ້ປະຈຳເດືອນຂອງຕົນໃຫ້ຫ້ອງການ ຄຊກລ ໂດຍການສົ່ງບົດລາຍງານຄວາມຄືບໜ້າປະຈຳເດືອນ ແລະ ຕື່ມແບບຟອມໃສ່ຖານຂໍ້ມູນອິມສະມາ. ຄວາມເອົາໃຈໃສ່ພິເສດຂອງອົງການ ແມ່ນການສ້າງສາຍພົວພັນ ແລະ ການຮ່ວມມືກັບອຳນາດການປົກຄອງແຂວງ, ເມືອງ ແລະ ບ້ານໃຫ້ມີຄວາມເຂັ້ມແຂງ.

ສິ່ງທ້າທາຍອັນໃຫຍ່ຫຼວງ ທີ່ອົງການຍັງມີຢູ່ແມ່ນການເຂົ້າເຖິງບ້ານທາງໄກສອກຫຼີກ ໂດຍສະເພາະ ໃນຍາມລະດູຝົນ ເຮັດໃຫ້ມີຜົນກະທົບຢ່າງໃຫຍ່ຫຼວງຕໍ່ການປະຕິບັດງານຢູ່ສະໜາມ (ບໍ່ສາມາດເຂົ້າເຖິງສະໜາມໄດ້ທັງໝົດ ຫຼື ມີການຢຸດປະຕິບັດກິດຈະກຳຕ່າງໆໄວ້ເປັນເວລາຫຼາຍວັນ).

## ຂ່າວດີ: ປ້ອງກັນເດັກຈາກອຸປະຕິເຫດ.

ໃນປີ 2013, ອົງການເຫັດໄອ ໄດ້ປະຕິບັດການເກັບກູ້ເດີ່ນປຸກສ້າງໂຮງຮຽນ 8 ຫຼັງ ໃນ 3 ຕົວເມືອງ ຄື: ເມືອງນອງ, ເມືອງເຊໂປນ ແລະ ເມືອງວິລະບູລີ-ແຂວງສະຫວັນນະເຂດ ຕາມແຜນພັດທະນາຊົນນະບົດ. ການເກັບກູ້ພື້ນທີ່ ຈຳນວນ 5.6 ເຮັກຕາ ແມ່ນພົບເຫັນ ແລະ ທຳລາຍ ລບຕ ໄດ້ຈຳນວນ 437 ໜ່ວຍ ແລະ ການເກັບກູ້ພື້ນທີ່ ແມ່ນສາມາດປ້ອງກັນຊີວິດຂອງນັກຮຽນທີ່ມາເຂົ້າໂຮງຮຽນ ບໍ່ໃຫ້ເກີດມີຄວາມສ່ຽງຈາກ ລບຕ ໄດ້ຫຼາຍກວ່າ 11,000 ຄົນ.

## ກຸ່ມໂຄສະນາຕ້ານລະເບີດລູກຫວ່ານ ໄດ້ສະເຫຼີມສະຫຼອງວັນຄົບຮອບວັນມີຜົນບັງຄັບໃຊ້ສົນທິສັນຍາວ່າດ້ວຍການຕ້ານລະເບີດລູກຫວ່ານ ຄັ້ງທີ 3.

ໃນປີນີ້, ກຸ່ມໂຄສະນາຕ້ານລະເບີດລູກຫວ່ານ ໄດ້ເຊີນຊວນປະຊາຊົນລາວບັນດາເຜົ່າ ທີ່ອາໄສຢູ່ໃນນະຄອນຫຼວງວຽງຈັນ ເຂົ້າຮ່ວມໃນການສະແດງພະລັງຕໍ່ຕ້ານການນຳໃຊ້ລະເບີດລູກຫວ່ານ ແລະ ຊ່ວຍກັນເພື່ອສະໜັບສະໜູນຜູ້ລອດຊີວິດຈາກ ລບຕ. ເພື່ອຢາກເຮັດໄດ້ແນວນັ້ນ, ກຸ່ມໂຄສະນາຕ້ານລະເບີດລູກຫວ່ານ ໄດ້ສົມທົບກັບ ຄຊກລ, ອົງການ ສປຊ, ສະມາຄົມຄົນພິການແຫ່ງຊາດລາວ ແລະ ສະມາຄົມປັບປຸງຄຸນນະພາບຊີວິດຂອງຜູ້ລອດຊີວິດຈາກ ລບຕ, ອົງການສຶກສາໂລກ ແລະ ທີມເຕັ້ນລາວບັ້ງໄຟ ຈັດງານຂຶ້ນໃນວັນທີ 3 ສິງຫາ ເພື່ອສະເຫຼີມສະຫຼອງວັນມີຜົນບັງຄັບໃຊ້ສົນທິສັນຍາວ່າດ້ວຍການຕ້ານລະເບີດ




ລູກຫວ່ານ ແລະ ມີການຈັດງານວາງສະແດງຮູບພາບ ກ່ຽວກັບບັນຫາ ລບຕ ທີ່ຕົກຄ້າງຢູ່ ສປປ ລາວ ໃນຕອນເຊົ້າ ແລະ ຕອນຄ່ຳ ແມ່ນຕາມດ້ວຍງານຄອນເສີດການກຸສົນ ຮ່ວມໃຈຕ້ານລະເບີດລູກຫວ່ານ, ຊຶ່ງເງິນທີ່ໄດ້ຫຼັງຈາກຫັກຄ່າໃຊ້ຈ່າຍແລ້ວ ແມ່ນໄດ້ນຳໄປຊ່ວຍເຫຼືອຜູ້ລອດຊີວິດຈາກ ລບຕ. ໃນງານຄອນເສີດພວກເຮົາໄດ້ໃຊ້ຄຳຂວັນວ່າ “ພາກັນຕ້ານລະເບີດລູກຫວ່ານ”, ມີການກ່າວຄຳເຫັນ, ສະແດງລະຄອນຕຸກກະຕາ, ເຕັ້ນໂຊຈາກທ້າວ ພົງສະຫວັດ ທີ່ເປັນຜູ້ລອດຊີວິດຈາກ ລບຕ, ໂຊເຕັ້ນຈາກທີມເຕັ້ນລາວບັ້ງໄຟ, ການສະແດງບົດຟ້ອນຈາກສະມາຄົມຄົນພິການແຫ່ງຊາດລາວ ແລະ ບົດຟ້ອນຂອງນັກຮຽນພິການຕ່າງໆຈາກສູນການແພດ ແລະ ຟື້ນຟູໜ້າທີ່ການ ເພື່ອແນໃສ່ເຜີຍແຜ່ໃຫ້ປະຊາຊົນລາວບັນດາເຜົ່າ ແລະ ຕ່າງປະເທດ ທີ່ອາໄສຢູ່ໃນນະຄອນຫຼວງວຽງຈັນ ໄດ້ຮັບຊາບ ກ່ຽວກັບບັນຫາ ລບຕ ທີ່ຕົກຄ້າງຢູ່ ສປປ ລາວ ພ້ອມທັງ ເປັນການສົ່ງເສີມສິດທິຂອງຄົນພິການໄປນຳ, ຊຶ່ງງານນີ້ ລວມມີຜູ້ເຂົ້າຮ່ວມທັງໝົດປະມານ 800 ຄົນ.



## ວຽກຈຸດສຸມໃນປີ 2014:

- ອົງການເຫັດໄອ ວາງແຜນຈະຂະຫຍາຍກິດຈະກຳທີ່ສຳຄັນໄວ້ດັ່ງລຸ່ມນີ້:
  - ພາຍຫຼັງທີ່ຫ້ອງການ ຄຊກລ ຮັບຮອງວິທີການສຳຫຼວດເພື່ອກຳນົດພື້ນທີ່ ລບຕ ຕົກຄ້າງ ແລ້ວ, ອົງການເຫັດ ໄອ ກໍ່ຈະນຳເອົາວິທີການດັ່ງກ່າວ ນຳໃຊ້ເຂົ້າໃນການສຳຫຼວດຂອງຕົນເອງ. ພ້ອມນັ້ນ, ກໍ່ຈະຮັບຮັບສະໝັກເອົາພະນັກໃໝ່ເຂົ້າຕື່ມ (ຄາດຄະເນວ່າ 3 ທີມງານ ລວມມີທັງໝົດພະນັກງານວິຊາການ 18 ຄົນ).
  - ຂະຫຍາຍທີມງານເກັບກູ້ ອອກຕື່ມ ຈາກ 4 ທີມ ໃຫ້ເປັນ 6 ທີມ. ຜົນປະໂຫຍດຈາກການເພີ່ມທີມໃໝ່ນີ້ ແມ່ນຈະຊ່ວຍສ້າງຄວາມອາດສາມາດໃຫ້ອົງການເຫັດໄອ ສາມາດເກັບກູ້ພື້ນທີ່ດິນ 40 ເຮັກຕາ ໃນປີ 2014 ໃຫ້ສຳເລັດໄດ້ຕາມແຜນການ.
  - ປະຕິບັດການຝຶກອົບຮົມກ່ຽວກັບລະບົບລາຍງານ ໂດຍອີງໃສ່ຊຸມຊົນເປັນຫຼັກ ແລະ ປະຕິບັດຄຳສັ່ງຂອງແຂວງວ່າດ້ວຍການຫ້າມນຳໃຊ້ເຄື່ອງກວດໂລຫະຊອກຫາເສດເຫຼັກ.
- ການດຳເນີນງານຂອງໜ່ວຍງານທຳລາຍເຄື່ອນທີ່ ຈະສືບຕໍ່ເຂົ້າໄປບ່ອນທີ່ຍັງມີຄວາມຕ້ອງການ; ກິດຈະກຳໂຄສະນາສຶກສາຄວາມສ່ຽງ ຈະປະຕິບັດຢູ່ພາຍໃນ 21 ໝູ່ບ້ານ (ພາຍໃນ 3 ເມືອງ ເມືອງລະ 7 ບ້ານ). ໜ່ວຍງານສຳຫຼວດທົ່ວໄປຈະໃຫ້ສຳເລັດໜ້າວຽກສຳຫຼວດຢູ່ເມືອງເຊໂປນ ແລະ ເມືອງວິລະບູລີ ເນື່ອງຈາກວ່າ ການສຳຫຼວດ ຢູ່ເມືອງນອງ ແມ່ນໄດ້ສຳເລັດໄປແລ້ວ (ສຳເລັດກ່ຽວກັບການສຳຫຼວດຢູ່ສະໜາມ, ການບັກທຶກຂໍ້ມູນ, ວິເຄາະຂໍ້ມູນ ແລະ ການລາຍງານ).
- ໂຄງການຊ່ວຍເຫຼືອຜູ້ຖືກເຄາະຮ້າຍຈາກ ລບຕ ຈະສຸມໃສ່ (1) ປັບປຸງຄວາມອາດສາມາດລະດັບຊາດ ແລະ ລະດັບທ້ອງຖິ່ນ ເພື່ອປະສານງານຊ່ວຍເຫຼືອຜູ້ໄດ້ຮັບເຄາະຮ້າຍເປັນຕົ້ນແມ່ນ ການສ້າງເສດຖະກິດໃຫ້ແກ່ເຂົາເຈົ້າ (2) ເປີດໂອກາດແກ່ຜູ້ລອດຊີວິດຈາກ ລບຕ, ຄອບຄົວຂອງຜູ້ລອດຊີວິດຈາກ ລບຕ ລວມທັງ ຄອບຄົວຂອງຜູ້ທີ່ເສຍຊີວິດຍ້ອນ ລບຕ ແລະ ຄົນພິການອື່ນໆ ໄດ້ຮັບການຝຶກອົບຮົມວິຊາຊີບ ແລະ ເຮັດທຸລະກິດ ເພື່ອສົ່ງເສີມຄວາມອາດສາມາດໃນການສ້າງລາຍຮັບໃຫ້ແກ່ເຂົາເຈົ້າ (3) ໃຫ້ສິດແກ່ຄົນພິການ ແລະ ໃຫ້ການຝຶກອົບຮົມ ທີ່ສະເໝີພາບແກ່ເຂົາເຈົ້າໃນ 2 ຕົວເມືອງເປົ້າໝາຍຂອງອົງການ ເພື່ອຫຼຸດຜ່ອນຄວາມແຕກໂຕນ ແລະ ພຶດຕິກຳໃນສັງຄົມ ທີ່ເປັນການຈຳກັດການ

ທຳລາຍເສດຖະກິດຂອງຜູ້ລອດຊີວິດຈາກ ລບຕ ແລະ ຄົນພິການ. (4) ສ້າງ ແລະ ເຜີຍແຜ່ນະໂຍບາຍຕໍ່ພາກສ່ວນທີ່ດຳເນີນກິດຈະກຳ ກ່ຽວກັບການການບໍລິການ ແລະ (5) ສະໜັບສະໜູນກິດຈະກຳໂຄສະນາ ກ່ຽວກັບຄົນພິການ.

- ໃນປີ 2014, ຄົນພິການ, ຜູ້ລອດຊີວິດ ແລະ ຄອບຄົວຂອງເຂົາເຈົ້າ ຈຳນວນ 400 ຄົນ ຈະໄດ້ຮັບຜົນປະໂຫຍດຈາກການເຮັດກິດຈະກຳສ້າງລາຍຮັບ.

## ຄູ່ຮ່ວມງານຕ່າງໆ:

ຜູ້ທີ່ໄດ້ຮັບຜົນປະໂຫຍດໂດຍກົງ ແມ່ນພົນລະເມືອງພາຍໃນ 3 ເມືອງຄື: ເມືອງນອງ, ເມືອງເຊໂປນ ແລະ ເມືອງວິລະບູລີ ຂອງແຂວງສະຫັວນນະເຂດ. ໃນປີ 2013, ອົງການເຫັດໄອສາມາດບັນລຸໄດ້ຄື:

- ມີຜູ້ໄດ້ຮັບຜົນປະໂຫຍດຈຳນວນ 13,717 ຄົນ ຈາກການເກັບກູ້ພື້ນທີ່.
- ມີຜູ້ໄດ້ຮັບຜົນປະໂຫຍດຈຳນວນ 14, 433 ຄົນ ຈາກກິດຈະກຳໂຄສະນາສຶກສາຄວາມສ່ຽງຈາກ ລບຕ.
- ພົນລະເມືອງ ພາຍໃນ 93 ໝູ່ບ້ານ ໄດ້ຮັບຜົນປະໂຫຍດໂດຍກົງຈາກການທຳລາຍເຄື່ອນທີ່.
- ໄດ້ສຳພາດຄົນພິການ ຈຳນວນ 321 ຄົນ ຢູ່ເມືອງນອງ ແລະ ເມືອງເຊໂປນ (ຜູ້ຍິງ 47% ແລະ ຜູ້ຊາຍ 53%) ຈາກໂຄງການຊ່ວຍເຫຼືອຜູ້ຖືກເຄາະຮ້າຍ ທີ່ເນັ້ນໃສ່ຄົນພິການ, ຜູ້ລອດຊີວິດຈາກ ລບຕ, ຜູ້ຖືກເຄາະຮ້າຍຈາກ ລບຕ ແລະ ຄອບຄົວຂອງເຂົາເຈົ້າ.
- ກຸ່ມໂຄສະນາຕ້ານລະເບີດລູກຫວ່ານ 8 ຄົນ ໄດ້ຮັບການຝຶກອົບຮົມ ແລະ ໄດ້ຮັບການສະໜັບສະໜູນ ເພື່ອດຳເນີນກິດຈະກຳໂຄສະນາຕ່າງໆ.

## ຄູ່ຮ່ວມງານຕົ້ນຕໍຂອງອົງການມີ:

- ຫ້ອງການຄະນະກຳມະການຄຸ້ມຄອງແຫ່ງຊາດ ເພື່ອແກ້ໄຂບັນຫາລະເບີດບໍ່ທັນແຕກ ທີ່ຕົກຄ້າງ ຢູ່ ສປປ ລາວ (ຄຊກລ)



ການດຳເນີນງານຂອງທີມງານທຳລາຍເຄື່ອນທີ່ ຢູ່ເມືອງນອງ ໃນປີ 2013.

- ຫ້ອງການປະສານງານຄະນະກຳມະການຄຸ້ມຄອງແຫ່ງຊາດ ເພື່ອແກ້ໄຂບັນຫາລະເບີດບໍ່ທັນແຕກ ທີ່ຕົກຄ້າງຢູ່ ສປປ ລາວ ແຂວງສະຫວັນນະເຂດ
- ຄະນະກຳມະການແຫ່ງຊາດ ເພື່ອຄົນພິການ ແລະ ຄົນສູງອາຍຸ
- ສະມາຄົມຄົນພິການແຫ່ງຊາດລາວ
- ກະຊວງແຮງງານ ແລະ ສະຫວັດດີການສັງຄົມ
- ກະຊວງການຕ່າງປະເທດ
- ກະຊວງສຶກສາທິການ ແລະ ກິລາ
- ຄະນະພັດທະນາຊົນນະບົດ ແລະ ລົບລ້າງຄວາມທຸກຍາກຂັ້ນສູນກາງ
- ອຳນາດການປົກຄອງແຂວງ ແລະ ເມືອງ
- ກອງທຶນລົບລ້າງຄວາມທຸກຍາກ

## ບຸກຄະລາກອນໃນປີ 2013:

| ພະນັກງານຫ້ອງການ | | | | ພະນັກງານຝ່າຍປະຕິບັດງານ (ພາກສະໜາມ) | | | |
|---|---|---|---|---|---|---|---|
| ຄົນລາວ | | ຄົນຕ່າງປະເທດ | | ຄົນລາວ | | ຄົນຕ່າງປະເທດ | |
| ຊາຍ | ຍິງ | ຊາຍ | ຍິງ | ຊາຍ | ຍິງ | ຊາຍ | ຍິງ |
| 12 | 6 | 1 | 1 | 71 | 26 | 2 | 1 |

## ຕົວເລກສະຖິຕິໃນປີ 2013:

| ການໂຄສະນາສຶກສາຄວາມສ່ຽງຈາກ ລບຕ ການໂຄສະນາຊຸມຊົນ | | ການຊ່ວຍເຫຼືອຜູ້ຖືກເຄາະຮ້າຍຈາກ ລບຕ ຈຳນວນຜູ້ທີ່ໄດ້ຮັບການຊ່ວຍເຫຼືອ | ໜ້າວຽກສຳຫຼວດ | ໜ້າວຽກທຳລາຍເຄື່ອນທີ່ |
|---|---|---|---|---|
| | ຜູ້ໄດ້ຮັບຜົນປະໂຫຍດ | | | |

| ຈຳນວນຄັ້ງຢ້ຽມຢາມ | ຊາຍ | ຍິງ | | ຈຳນວນຄັ້ງຢ້ຽມຢາມ | ຊາຍ | ຍິງ | | ຈຳນວນຄັ້ງຢ້ຽມຢາມ | ຊາຍ | ຍິງ |
|---|---|---|---|---|---|---|---|---|---|---|
| 90 | 3,426 | 2,595 | 4,338 | 4,074 | 8 | 8 | 82* | 82 | 93* | 93 |

## ເນື້ອທີ່ກວດກູ້:

| ຜ່ານການເກັບກູ້ (ຮຕ) | | | ຜ່ານການສຳຫຼວດດ້ານວິຊາການ (ຮຕ) | | |
|---|---|---|---|---|---|
| ດິນກະສິກຳ | ດິນພັດທະນາ | ລວມ | ດິນພັດທະນາ | ດິນກະສິກຳ | ລວມ |
| 13.2 | 14.6 | 27.8 | 0 | 0 | 0 |

## ລະເບີດທີ່ພົບເຫັນ, ເຄື່ອນຍ້າຍ ແລະ ຖືກທຳລາຍ:

| ລະເບີດທີ່ເຄື່ອນຍ້າຍ/ທຳລາຍ | | | | | |
|---|---|---|---|---|---|
| ໜ້າວຽກ | ບົມໃຫຍ່ | ລູກຫວ່ານ | ລະເບີດຝັງດິນ | ລບຕ ຊະນິດອື່ນໆ | ລວມ |
| ການທຳລາຍເຄື່ອນທີ່ | 6 | 1,116 | 8 | 1,102 | 2,232 |
| ການກວດກູ້ | 1 | 83 | 0 | 847 | 931 |
| ລວມ | 7 | 1,199 | 8 | 1,949 | 3,163 |

## ພື້ນທີ່ປະຕິບັດງານ:

| ໜ້າວຽກ | ແຂວງ ແລະ ເມືອງ ທີ່ປະຕິບັດກິດຈະກຳຢູ່ |
|---|---|
| ການກວດກູ້ | ແຂວງສະຫວັນນະເຂດ: 3 ເມືອງ: ເມືອງນອງ, ເມືອງເຊໂປນ ແລະ ເມືອງວິລະບູລີ |
| ການສຳຫຼວດ ແລະ ການທຳລາຍເຄື່ອນທີ່ | ແຂວງສະຫວັນນະເຂດ: 3 ເມືອງ: ເມືອງນອງ, ເມືອງເຊໂປນ ແລະ ເມືອງວິລະບູລີ |
| ການໂຄສະນາສຶກສາຄວາມສ່ຽງຈາກ ລບຕ | ແຂວງສະຫວັນນະເຂດ: 3 ເມືອງ: ເມືອງນອງ, ເມືອງເຊໂປນ ແລະ ເມືອງວິລະບູລີ |
| ການຊ່ວຍເຫຼືອຜູ້ຖືກເຄາະຮ້າຍຈາກ ລບຕ | ແຂວງສະຫວັນນະເຂດ: 2 ມືອງ: ເມືອງນອງ ແລະ ເມືອງເຊໂປນ |
| ອື່ນໆ: ການໂຄສະນາຕໍ່ຕ້ານລະເບີດ | ນະຄອນຫຼວງວຽງຈັນ, ສະຫວັນນະເຂດ, ຄຳມ່ວນ ແລະ ຊຽງຂວາງ |

## ທາງດ້ານການເງິນ: ຄ່າໃຊ້ຈ່າຍໃນປີ 2013: (ໂດລາສະຫະລັດ)

| ລາຍການ | ຈຳນວນ |
|---|---|
| ຄ່າໃຊ້ຈ່າຍສຳລັບບຸກຄະລາກອນ | 954.971,12 |
| ຄ່າໃຊ້ຈ່າຍສຳລັບການປະຕິບັດງານ | 277.606,11 |
| ຄ່າໃຊ້ຈ່າຍສຳລັບການປະຕິບັດງານພິເສດ | 0 |
| ຄ່າໃຊ້ຈ່າຍສຳລັບຊື້ວັດຖຸ-ຊັບສິນຄົງທີ່ | 383.977,71 |
| ຄ່າໃຊ້ຈ່າຍສຳລັບຊື້ວັດຖຸ-ຊັບສິນບໍ່ຄົງທີ່ | 48.081,65 |
| *ລວມ* | ***1.664.636,59*** |

ການສະໜັບສະໜູນຂອງຜູ້ໃຫ້ທຶນໃນປີ 2013: (ໂດລາສະຫະລັດ)

| ຜູ້ໃຫ້ທຶນ | ເງິນທີ່ໄດ້ຮັບໃນປີ 2013 |
|---|---:|
| ກະຊວງການຕ່າງປະເທດເນເທີແລນ | 1.412.566,94 |
| ສະຫະພາບເອີລົບ | 106.606,69 |
| ເອດີຊີ | 54.844,41 |
| ຈີເອເອ | 14.964,43 |
| ທຶນຂອງອົງການເຫັດໄອ | 75.654,13 |
| *ລວມ* | ***1.664.636,59*** |

# ອົງການເກັບກູ້ລະເບີດເຈມັດ (ເຈມັດ)

## ກິດຈະກຳໃນປີ 2013:

**ການເກັບກູ້ລະເບີດ ຢູ່ແຂວງຈຳປາສັກ ແລະ ແຂວງສາລະວັນ**

ໄດ້ສືບຕໍ່ປະຕິບັດວຽກກວດກູ້ ລບຕ ໃນສອງແຂວງດັ່ງກ່າວ ຕາມແຜນການທີ່ຕັ້ງໄວ້. ນະໂຍບາຍຂອງອົງການເຈມັດ ແມ່ນການໃຫ້ຊາວບ້ານ ເຂົ້າມາເຮັດວຽກຮ່ວມນຳ ໃນການຖາງປ່າອອກກ່ອນທີ່ຈະປະຕິບັດການເກັບກູ້ ແລະ ນະໂຍບາຍດັ່ງກ່າວນີ້ເຫັນວ່າ ເປັນນະໂຍບາຍທີ່ມີຜົນດີ ຕໍ່ການສ້າງຜົນປະໂຫຍດທາງດ້ານເສດຖະກິດ-ສັງຄົມ ໃຫ້ແກ່ບ້ານ.

**ການເກັບກູ້ລະເບີດ ຢູ່ແຂວງອັດຕະປື**

ຈຸດປະສົງລວມຂອງໂຄງການ ແມ່ນເພື່ອປັບປຸງຊີວິດການເປັນຢູ່ຂອງປະຊາຊົນທີ່ອາໄສຢູ່ໃນເຂດທີ່ມີ ລບຕ ຕົກຄ້າງ ແລະ ຫຼຸດຜ່ອນຈຳນວນຜູ້ທີ່ຈະໄດ້ຮັບເຄາະຮ້າຍຈາກ ລບຕ ໂດຍທີ່ໂຄງການຈະເນັ້ນໜັກໃສ່ປັບປຸງວິທີການທຳລາຍ ລບຕ ແລະ ເກັບກູ້ພື້ນທີ່ຕົກຄ້າງ.

## ຜົນສຳເລັດຕົ້ນຕໍໃນປີ 2013:

**ການເກັບກູ້ລະເບີດ ຢູ່ແຂວງຈຳປາສັກ ແລະ ແຂວງສາລະວັນ**

ໂຄງການເກັບກູ້ລະເບີດຂອງອົງການເຈມັດ ແມ່ນປະຕິບັດສັນຍາເປັນ ແຕ່ລະປີ ແຕ່ສາມາດຕໍ່ໄດ້ຕື່ມອີກ 2 ປີກວ່າ. ການປະຕິບັດວຽກແມ່ນສະດວກດີ, ມີຄວາມປອດໄພ ແລະ ມີຜົນສຳເລັດຕາມແຜນການທີ່ວາງໄວ້ຕາມລະບຽບຂອງໂຄງການ, ແຕ່ການປະຕິບັດໂຄງການໃນຊ່ວງ 6 ເດືອນທ້າຍປີ ພັດມີຄວາມຊັກຊ້າ ເນື່ອງຈາກວ່າ ມີບັນຫາເລື່ອງຂອງພື້ນທີ່ດິນມີ ລບຕ ຕົກຄ້າງ.

**ການເກັບກູ້ລະເບີດ ຢູ່ແຂວງອັດຕະປື**

ຊ່ຽວຊານທີ່ປຶກສາຂອງໂຄງການໄດ້ໃຫ້ຄຳແນະນຳ ແລະ ຖ່າຍທອດຄວາມຮູ້ວິທີການຄຸ້ມຄອງໂຄງການ ແລະ ເຕັກນິກໃນການທຳລາຍລະເບີດໃຫ້ແກ່ ຄກລ ແຂວງອັດຕະປື. ການຖ່າຍທອດຄວາມຮູ້ກ່ຽວກັບການຕັດບົ່ມດ້ວຍເລື່ອຍ ແມ່ນຜົນສຳເລັດອັນໜຶ່ງໃນກິດຈະກຳທັງໝົດຂອງອົງການ ແລະ ຜົນສຳເລັດທີ່ເຫັນໄດ້ຢ່າງປະຈັກຕາ ກໍ່ແມ່ນຜົນສຳເລັດທາງດ້ານການທົດລອງຕັດບົ່ມເຊັ່ນດຽວກັນ.

## ຂ່າວດີ:

ການທົດລອງຕັດບົ່ມດ້ວຍເລື່ອຍ 2 ຄັ້ງ ໃນເດືອນມັງກອນ ແລະ ເດືອນພຶດສະພາ ມີຜົນສຳເລັດຫຼາຍ. ການທົດລອງຕັດຟິວຂອງບົ່ມ 500 ປອນ ດຳເນີນໄປຢ່າງມີຄວາມປອດໄພ ໂດຍນັກທຳລາຍລະເບີດຂັ້ນສູງ, ຊຶ່ງໃຊ້ເວລາໃນການຕັດປະມານ 1 ຊົ່ວໂມງ. ການປະເມີນຂອງທີ່ປຶກສາຂອງໂຄງການເຫັນວ່າ ການຕັດບົ່ມຂອງນັກທຳລາຍລະເບີດຂັ້ນສູງຂອງຝ່າຍລາວ ມີຜົນສຳເລັດສູງ. ດັ່ງນັ້ນ, ຈຶ່ງໄດ້ມີການສະເໜີທີ່ປຶກສາຂອງໂຄງການໃຫ້ບັນຈຸຫຼັກສູດນີ້ ເຂົ້າໄປສິດສອນຢູ່ໃນສູນຝຶກຂອງ ຄກລ.

## ວຽກຈຸດສຸມໃນປີ 2014:

- ສືບຕໍ່ເກັບກູ້ພື້ນທີ່ໃຫ້ມີຄວາມປອດໄພຢູ່ແຂວງຈຳປາສັກ ແລະ ແຂວງສາລະວັນ ເພື່ອຂະຫຍາຍເນື້ອທີ່ຕາມແຜນການທີ່ວາງໄວ້.
- ສຳລັບໂຄງການຢູ່ແຂວງອັດຕະປື, ອົງການຈະເນັ້ນໃສ່ການຖ່າຍທອດເຕັກນິກວິຊາການໃຫ້ນັກເກັບກູ້ລະເບີດຝ່າຍລາວໃຫ້ໄດ້ຫຼາຍທີ່ສຸດ ແນໃສ່ເຮັດໃຫ້ເຂົາເຈົ້າໄດ້ຄະແນນດີ ໃນເວລາສອບເສັງຈົບຫຼັກສູດ. ນອກຈາກນັ້ນ, ຈະໃຫ້ການທົດລອງຕັດບົ່ມ ໃຫ້ໄດ້ຮັບຜົນສຳເລັດດີ ແລະ ຈະແນະນຳເອົາການທົດລອງນີ້ຕໍ່ ຄຊກລ ເພື່ອຮັບຮອງເປັນວິທີການຢ່າງເປັນທາງການ.
- ສືບຕໍ່ຊອກຫາໂຄງການຊ່ວຍເຫຼືອລ້າຂອງບັນດາອົງການເອນຈີໂອ ເພື່ອເຂົ້າມາຊ່ວຍສະໜັບສະໜູນປັບປຸງຫຼັກສູດໃນການສິດສອນຢູ່ໃນສູນຝຶກ ແລະ ປັບປຸງອາຄານຮຽນທີ່ມີຄວາມເກົ່າຫຼາຍ.

## ຄູ່ຮ່ວມງານ:

ຄກລ ແຂວງອັດຕະປື ແລະ ບໍລິສັດເກັບກູ້ຂອງເອກະຊົນຕ່າງໆ ທີ່ດຳເນີນກິດຈະກຳສ້າງຄວາມປອດໄພໃຫ້ແກ່ຊາວບ້ານ ແລະ ສ້າງຜົນປະໂຫຍດທາງດ້ານເສດຖະກິດ-ສັງຄົມ ໂດຍຮ່ວມກັບບໍລິສັດຊຸມລະລາວຈຳກັດ ໃຫ້ແກ່ຊາວບ້ານ.

## ບຸກຄະລາກອນໃນປີ 2013:

| ພະນັກງານຫ້ອງການ | | | | ພະນັກງານຝ່າຍປະຕິບັດງານ (ພາກສະໜາມ) | | | |
|---|---|---|---|---|---|---|---|
| ຄົນລາວ | | ຄົນຕ່າງປະເທດ | | ຄົນລາວ | | ຄົນຕ່າງປະເທດ | |
| ຊາຍ | ຍິງ | ຊາຍ | ຍິງ | ຊາຍ | ຍິງ | ຊາຍ | ຍິງ |
| 5 | 2 | 3 | 3 | 4 | 0 | 2 | 0 |



ຊ່ຽວຊານຂອງອົງການເຈມັດ ກໍາລັງຝຶກສອນພະນັກງານຂອງ ຄກລ ກ່ຽວກັບການຖອດຟິວ.

## ພື້ນທີ່ປະຕິບັດງານ:

| ໜ້າວຽກ | ແຂວງ ແລະ ເມືອງ ທີ່ປະຕິບັດກິດຈະກໍາຢູ່ |
|---|---|
| ການກວດກູ້ | ເມືອງປາກຊ່ອງ-ແຂວງຈໍາປາສັກ. ເມືອງສາລະວັນ ແລະ ເມືອງເຫຼົ່າງາມ-ແຂວງສາລະວັນ ແລະ ແຂວງອັດຕະປື. |

## ທາງດ້ານການເງິນ:

**ຄ່າໃຊ້ຈ່າຍໃນປີ 2013: (ໂດລາສະຫະລັດ)**

**ອົງການເຈມັດບໍ່ມີການສະໜອງຂໍ້ມູນໃຫ້.**

| ລາຍການ | ຈໍານວນ (ໂດລາສະຫະລັດ) |
|---|---|
| ຄ່າໃຊ້ຈ່າຍສໍາລັບບຸກຄະລາກອນ | |
| ຄ່າໃຊ້ຈ່າຍສໍາລັບການປະຕິບັດງານ | |
| ຄ່າໃຊ້ຈ່າຍສໍາລັບການປະຕິບັດງານພິເສດ | |
| ຄ່າໃຊ້ຈ່າຍສໍາລັບຊື້ວັດຖຸ-ຊັບສິນຄົງທີ່ | |
| ຄ່າໃຊ້ຈ່າຍສໍາລັບຊື້ວັດຖຸ-ຊັບສິນບໍ່ຄົງທີ່ | |
| *ລວມ* | *ບໍ່ມີຕົວເລກລາຍງານ* |

# ໂຄງການເກັບກູ້ລະເບີດແຫ່ງຊາດລາວ (ຄກລ)

## ກິດຈະກໍາໃນປີ 2013:

ແຕ່ວັນທີ01 ມັງກອນ ຫາ 31 ທັນວາ 2013, ໂຄງການເກັບກູ້ລະເບີດແຫ່ງຊາດ (ຄກລ) ສາມາດປົດປ່ອຍເນື້ອທີ່ດິນໄດ້ທັງໝົດ 3,295 ເຮັກຕາ ໂດຍປະກອບມີກິດຈະກໍາເກັບກູ້ພື້ນທີ່ ແລະ ກິດຈະກໍາສໍາຫຼວດດ້ານວິຊາການ, ຊຶ່ງມີຜູ້ໄດ້ຮັບຜົນປະໂຫຍດທັງໝົດ 255,624 ຄົນ ພາຍໃນ 9 ແຂວງ. ໃນຊ່ວງທີ່ລາຍງານຢູ່ນີ້, ຄກລ ໄດ້ທໍາລາຍ ລບຕ ໄດ້ທັງໝົດ 60,634 ໜ່ວຍ, ໃນນັ້ນມີລະເບີດລູກຫວ່ານ ຈໍານວນ 28,590 ໜ່ວຍ ແມ່ນຜ່ານການເກັບກູ້, ການສໍາຫຼວດດ້ານວິຊາການ ແລະ ການທໍາລາຍເຄື່ອນທີ່. ການຍົກຍ້າຍ ລບຕ ຫຼື ທໍາລາຍ ແມ່ນແນໃສ່ສ້າງຄວາມປອດໄພໃຫ້ປະຊາຊົນທີ່ດໍາລົງຊີວິດໃນເຂດຊຸມຊົນທີ່ມີຜົນກະທົບຈາກ ລບຕ ແລະ ເປັນການເພີ່ມຈໍານວນເນື້ອທີ່ດິນໃຫ້ມີຄວາມປອດໄພໃຫ້ແກ່ການຜະລິດອາຫານ ແລະ ເພີ່ມຄວາມປອດໄພໃຫ້ແກ່ກິດຈະກໍາພັດທະນາເສດຖະກິດ-ສັງຄົມ. ການປະຕິບັດງານຂອງໂຄງການແມ່ນປະຕິບັດຕາມມາດຕະຖານແຫ່ງຊາດ ແລະ ໃຫ້ໄດ້ຕາມພັນທະຂອງສົນທິສັນຍາວ່າດ້ວຍການຕ້ານລະເບີດລູກຫວ່ານ. 85% ຂອງເນື້ອທີ່ດິນທີ່ຖືກເກັບກູ້/ປົດປ່ອຍແມ່ນດິນກະສິກໍາ.

ຄກລ ໄດ້ດໍາເນີນກິດຈະກໍາໂຄສະນາຄວາມສ່ຽງຈາກ ລບຕ ໃນ 9 ແຂວງ ເພື່ອເຕືອນສະຕິໃຫ້ປະຊາຊົນລາວບັນດາເຜົ່າທີ່ດໍາລົງຊີວິດຢູ່ໃນພື້ນທີ່ໆມີ ລບຕ ຄົງຄ້າງ ຮັບຮູ້ຄວາມອັນຕະລາຍ ແລະ ປ່ຽນພຶດຕິກໍາທີ່ມີຄວາມສ່ຽງຂອງກຸ່ມເປົ້າໝາຍ. ໃນຊ່ວງທີ່ມີການລາຍງານຢູ່ນີ້, ກິດຈະກໍາໂຄສະນາສຶກສາຄວາມສ່ຽງຈາກ ລບຕ ຈໍານວນ 650 ກິດຈະກໍາ ແມ່ນປະຕິບັດໂດຍພະນັກງານໂຄສະນາຂອງ ຄກລ ແລະ ອາສາສະໝັກບ້ານ, ຊຶ່ງມີຜູ້ເຂົ້າຮ່ວມຮັບຟັງທັງໝົດ 173,529 ຄົນ (ຜູ້ຍິງ 88,380 ຄົນ, ໃນນັ້ນ ມີເດັກນ້ອຍ ຈໍານວນ 40,316 ຄົນ ແລະ ຜູ້ຊາຍຈໍານວນ 85,149 ຄົນ, ໃນນັ້ນ ມີເດັກນ້ອຍ ຈໍານວນ 40,211 ຄົນ).

ກິດຈະກໍາໂຄສະນາສຶກສາຄວາມສ່ຽງຈາກ ລບຕ ໄດ້ມີການເຊື່ອມໂຍງຢ່າງໃກ້ຊິດກັບການສໍາຫຼວດ ໂດຍອະນຸຍາດໃຫ້ຊາວບ້ານນໍາພາ ໄປບອກຈຸດ ລບຕ ທີ່ພົບເຫັນ ເພື່ອເກັບກໍາຂໍ້ມູນໄດ້ງ່າຍຂຶ້ນ. ນອກຈາກນັ້ນ, ໜ້າວຽກທໍາລາຍເຄື່ອນທີ່ ຈໍານວນ 1,754 ໜ້າວຽກ ໄດ້ປະຕິບັດຢູ່ໃນ 1,176 ບ້ານ, ສາມາດທໍາລາຍ ລບຕ ໄດ້ທັງໝົດ 25,307 ໜ່ວຍ, ໃນນັ້ນ ມີລະເບີດລູກຫວ່ານ ຈໍານວນ 11,025 ໜ່ວຍ, ການແກ້ໄຂຕໍ່ຄໍາສະເໜີຂອງຊາວບ້ານ ເພື່ອໄປທໍາລາຍ ລບຕ ແມ່ນກໍານົດເອົາພາຍໃນ 2 ອາທິດ ນັບຈາກວັນທີ່ໄດ້ຮັບໃບສະເໜີ.

ກິດຈະກໍາເກັບກູ້ລະເບີດຂອງ ຄກລ ບໍ່ພຽງແຕ່ຊ່ວຍກອບກູ້ເອົາຊີວິດຂອງປະຊາຊົນໃນພື້ນທີ່ໆມີ ລບຕ ຕົກຄ້າງເທົ່ານັ້ນ, ແຕ່ການເກັບກູ້ຍັງເປັນການເພີ່ມໂອກາດໃຫ້ໂຄງການພັດທະນາອື່ນໆໄດ້ເຂົ້າໄປພັດທະນາເສດຖະກິດ-ສັງຄົມຢູ່ໃນເມືອງທີ່ທຸກຍາກອີກດ້ວຍ. ນອກຈາກເນື້ອທີ່ດິນກະສິກໍາທີ່ກວດກູ້ແລ້ວນັ້ນ, ຄກລ ຍັງໄດ້ກວດກູ້ ລບຕ ເພື່ອປະກອບສ່ວນໃຫ້ແກ່ບັນດາໂຄງການພັດທະນາຕ່າງໆຂອງລັດຖະບານ, ໂຄງການພັດທະນາຂອງບັນດາອົງການເອັນຈີໂອ ເປັນຕົ້ນແມ່ນ ການສ້າງຊົນລະປະທານ, ໂຮງຮຽນ, ໂຮງໝໍ, ສຸກສາລາ, ໂຄງການນໍ້າສະອາດ, ຖະໜົນຫົນທາງ ແລະ ກິດຈະກໍາພັດທະນາອື່ນໆ. ຄກລ ປະຕິບັດການກວດກູ້ ລບຕ ໄປຕາມທິດທາງນະໂຍບາຍຂອງລັດຖະບານ ກ່ຽວກັບການພັດທະນາຊົນນະບົດ ແລະ ລຶບລ້າງຄວາມທຸກຍາກ ໂດຍສອດຄ່ອງກັບແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ຄັ້ງທີ 7 ຂອງ ສປປ ລາວ.

## ຜົນສໍາເລັດຕົ້ນຕໍໃນປີ 2013:

ຄກລ ບໍ່ສະເພາະສໍາເລັດໜ້າວຽກຕາມແຜນປີເທົ່ານັ້ນ, ແຕ່ຍັງມີຜົນສໍາເລັດດ້ານອື່ນໆອີກດ້ວຍ.

ໃນປີ 2013 ໂດຍການຊ່ວຍເຫຼືອຂອງລັດຖະບານອິດສະຕູາລີ, ຄກລ ໄດ້ຈັດການຝຶກອົບຮົມ ແລະ ປະກອບທີມງານກວດກູ້ໃໝ່ຕື່ມອີກ 5 ທີມ ແລະ ໜ່ວຍງານໂຄສະນາສຶກສາຄວາມສ່ຽງຈາກ ລບຕ ອີກ 3 ທີມ ຢູ່ໃນ 3 ແຂວງ ເພື່ອສະໜັບສະໜູນໃຫ້ແກ່ໂຄງການພັດທະນາຊີວິດການເປັນຢູ່ຂອງຊົນນະບົດລາວ-ອົດສະຕູາລີ ທີ່ຈັດຕັ້ງປະຕິບັດໂຄງການຢູ່ພາຍໃນ 6 ເມືອງຢູ່ ສປປ ລາວ. ການເຂົ້າເຖິງດິນທີ່ປອດໄພຂອງຊຸມຊົນ ແມ່ນປັດໄຈຫຼັກໃນການທໍາມາຫາກິນເພື່ອໃຫ້ກຸ້ມກິນ, ເພື່ອການສ້າງລາຍຮັບ ແລະ ເພື່ອໃຫ້ມີລາຍໄດ້ຫຼາຍຂຶ້ນກວ່າເກົ່າ. ເປັນທີ່ຮູ້ກັນແລ້ວວ່າ ດິນທີ່ຢູ່ໃນເຂດຫ່າງໄກສອກຫຼີກແມ່ນມີ ລບຕ ຕົກຄ້າງ ແລະ ກ່ອນຈະເຮັດກິດຈະກໍາໃດໆກໍ່ຕາມ ແມ່ນຕ້ອງໄດ້ກວດກູ້ ລບຕ ອອກກ່ອນ. ໂຄງການພັດທະນາຊີວິດການເປັນຢູ່ຂອງຊົນນະບົດລາວ-ອົດສະຕູາລີ ມີໄລຍະ 4 ປີ ລວມມູນຄ່າ 41,5 ລ້ານໂດລາອົດສະຕູາລີ ໂດຍເປົ້າໝາຍແມ່ນແນໃສ່ເພີ່ມການຄໍ້າປະກັນທາງດ້ານເສດຖະກິດ ແລະ ຄອບຄົວຂອງແມ່ຍິງ ແລະ ຜູ້ຊາຍ ທີ່ທຸກຍາກໃນເຂດຊົນນະບົດ ໂດຍສະເພາະແມ່ຍິງ ເພື່ອໃຫ້ເຂົາເຈົ້າ ສາມາດເຂົ້າເຖິງການປະກັນສັງຄົມ, ການບໍລິການດ້ານການເງິນ, ການຜະລິດ ແລະ ມີໂອກາດໃນການສ້າງລາຍຮັບ. ເພື່ອປະຕິບັດໂຄງການພັດທະນາຊີວິດການເປັນຢູ່ຂອງຊົນນະບົດ ລາວ-ອົດສະຕູາລີ ໃຫ້ສໍາເລັດໄດ້ແມ່ນຕ້ອງມີການເກັບກູ້ ລບຕ ອອກກ່ອນ ຈຶ່ງສາມາດປະຕິບັດໂຄງການໄດ້.

ໃນລະຫວ່າງເດືອນມັງກອນ ຫາ ເດືອນທັນວາ 2013, ມີນັກຮຽນຈໍານວນ 201 ຄົນ ແມ່ນຮຽນຈົບຫຼັກສູດຕ່າງໆຈາກສູນຝຶກອົບຮົມເກັບກູ້ລະເບີດຂອງ ຄກລ ເປັນຕົ້ນແມ່ນ ມີນັກຮຽນ 5 ຄົນແມ່ນຮຽນຈົບຫຼັກສູດຊ່ຽວຊານທໍາລາຍລະເບີດຂັ້ນ 4, ຊຶ່ງການຝຶກອົບຮົມໃນຄັ້ງນີ້ ແມ່ນສະໜັບສະໜູນໂດຍຫ້ອງການ ຄຊກລ ແລະ ອົງການປະຕິບັດງານເກັບກູ້ລະເບີດອື່ນໆ. ຕາມທໍາມະດາແລ້ວ ຫຼັກສູດນີ້ ແມ່ນເປີດຂຶ້ນໃນທຸກໆ 2 ຫຼື 3 ປີ ແລະ ສອນວິຊາການເກັບກູ້ລະເບີດລະດັບສູງສຸດຢູ່ ສປປ ລາວ.

| ໜ້າວຽກ | ເປົ້າໝາຍໃນປີ 2013 | ຜົນສຳເລັດໃນປີ 2013 |
|---|---|---|
| ການເກັບກູ້/ການສຳຫຼວດທາງດ້ານວິຊາການ | 3,167 ຮຕ | 3,295 ຮຕ |
| ການທຳລາຍເຄື່ອນທີ່ | 1,550 ໜ້າວຽກ | 1,754 ໜ້າວຽກ |
| ການສຳຫຼວດທົ່ວໄປ | 1,817 ໜ້າວຽກ | 2,179 ໜ້າວຽກ |
| ການໂຄສະນາສຶກສາຄວາມສ່ຽງຈາກ ລບຕ | 639 ຄັ້ງ | 650 ຄັ້ງ |

## ຂ່າວດີ:

ນອກຈາກໂຄງການຮ່ວມມືລາວ-ໄຈກາວ່າດ້ວຍ "ການສະໜັບສະໜູນການເກັບກູ້ ລບຕ ຕາມເສັ້ນທາງຖະໜົນໃຫຍ່ຢູ່ໃນ ສປປ ລາວ ທີ່ມີການກໍ່ສ້າງຂຶ້ນໃໝ່. ພ້ອມນັ້ນ, ລັດຖະບານຍີ່ປຸ່ນ ຍັງໄດ້ມອບອຸປະກອນ ແລະ ພາຫະນະໃໝ່ ໃຫ້ ຄກລ ຄິດໄລ່ເປັນເງິນເຢັນຍີ່ປຸ່ນຈຳນວນ 900,000,000 ລ້ານເຢນ ຫຼື ປະມານ 9 ລ້ານໂດລາສະຫະລັດ. ໃນເດືອນທັນວາ 2013, ລັດຖະບານຍີ່ປຸ່ນໄດ້ຕົກລົງໃຫ້ການຊ່ວຍເຫຼືອລ້າ ເປັນເງິນຈຳນວນ 864,000,000 ເຢັນ ເທົ່າກັບ (8.4 ລ້ານໂດລາສະຫະລັດ) ໃຫ້ແກ່ລັດຖະບານ ສປປ ລາວ ສຳລັບກິດຈະກຳຖາງປ່າ. ໂຄງການນີ້ ຈະນຳໃຊ້ກົນຈັກ ເພື່ອເພີ່ມປະສິດທິພາບໃຫ້ແກ່ການເກັບກູ້, ຊຶ່ງວຽກງານຖາງປ່າ ແມ່ນໜ້າວຽກໜຶ່ງຂອງການເກັບກູ້ພື້ນທີ່ ໃນຂະນະດຽວກັນນັ້ນ ການສ້າງຈຸດສຳລັບບ່ອນພັກເຊົາກົນຈັກ ກໍ່ຈະໃຊ້ເປັນບ່ອນພັກເຊົາຂອງພະນັກງານກວດກູ້ຢູ່ສະໜາມນຳ. ການເຮັດແບບນີ້ ແມ່ນຈະອຳນວຍຄວາມສະດວກໃຫ້ແກ່ການປະຕິບັດງານກວດກູ້ ແລະ ທຳລາຍ ລບຕ ໄດ້ໄວຂຶ້ນກວ່າເກົ່າ ໃນເຂດພື້ນທີ່ໂຄງການພັດທະນາຕ່າງໆຢູ່ໃນ ສປປ ລາວ.

ອົງການສະຫະປະຊາຊາດ ສາມາດລະດົມທຶນເພີ່ມອີກຈາກລັດຖະບານອິດສະຕູາລີ ເປັນເງິນຈຳນວນ 1,7 ລ້ານໂດລາອິດສະຕູາລີ ເພື່ອນຳໃຊ້ເປັນກອງທຶນໃຊ້ຈ່າຍທົ່ວໄປ ສຳລັບໜ້າວຽກປະຕິບັດງານ ແລະ 1,8 ລ້ານໂດລາອິດສະຕູາລີ ເພື່ອນຳໃຊ້ເປັນກອງທຶນຂອງໂຄງການລາວອິດສະຕູາລີ ເພື່ອປັບປຸງຊີວິດການເປັນຢູ່ຂອງຊຸມຊົນທ້ອງຖິ່ນພາຍໃຕ້ສັນຍາໂຄງການ 3 ປີ. ນອກຈາກນັ້ນ, ລັດຖະບານນິວຊີແລນ ຍັງໄດ້ເຊັນຂໍ້ຕົກລົງກັບອົງການ ສປຊ ເພື່ອສະໜັບສະໜູນ ຄກລ ແລະ ຫ້ອງການ ຄຊກລ ເປັນເງິນຈຳນວນ 3,79 ລ້ານໂດລາສະຫະລັດ, ໃນເງິນຈຳນວນດັ່ງກາວ ມີ 632,000 ໂດລາສະຫະລັດ ແມ່ນຈະນຳໃຊ້ເຂົ້າສະໜັບສະໜູນໃຫ້ແກ່ບັນດາອົງການຈັດຕັ້ງທາງສັງຄົມ ເພື່ອເຂົ້າມາປະມູນເອົາທຶນ ໄປດຳເນີນກິດຈະກຳກ່ຽວກັບການແກ້ໄຂບັນຫາ ລບຕ ທີ່ຕົກຄ້າງຢູ່ ສປປ ລາວ.

## ວຽກຈຸດສຸມໃນປີ 2014:

ໃນປີ 2014, ຄກລ ວາງແຜນປັບປຸງລະບົບການຄຸ້ມຄອງຂໍ້ມູນພາຍໃນຂອງ ຄກລ ເອງ ໂດຍຈະນຳໃຊ້ລະບົບຖານຂໍ້ມູນກ່ຽວກັບບຸກຄະລາກອນ, ສ້າງຖານຂໍ້ມູນລະບົບການຄຸ້ມຄອງຊັບສິນບັດຄົງທີ່ຂອງ ຄກລ ແລະ ອື່ນໆ.

ປະຈຸບັນນີ້ ຫ້ອງການ ຄຊກລ ແລະ ຄກລ ກຳລັງຢູ່ໃນຂັ້ນຕອນປຶກສາຫາລືກັນ ກ່ຽວກັບການປັບປຸງວິທີການສຳຫຼວດ ເພື່ອກຳນົດພື້ນທີ່ ລບຕ ຕົກຄ້າງ ໃຫ້ສາມາດນຳໃຊ້ໄດ້ແທດເໝາະກັບສະພາບການຕົກຄ້າງ ລບຕ ຢູ່ ສປປ ລາວ.

ສືບຕໍ່ທົບທວນຂະບວນການວາງແຜນວຽກ ໂດຍອີງໃສ່ບົດຮຽນທີ່ຖອດຖອນໄດ້ຈາກການເຮັດວຽກໃນປີ 2013. ໃນປີ 2014 ການວາງແຜນວຽກແມ່ນຈະສຸມໃສ່ກວດກູ້ ລບຕ ຮັບໃຊ້ການພັດທະນາຕາງໆ ໂດຍສອດຄ່ອງກັບແຜນຍຸດທະສາດແຫ່ງຊາດ ເພື່ອແກ້ໄຂບັນຫາ ລບຕ ເພື່ອສະໜັບສະໜູນໃຫ້ແກ່ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ຄັ້ງທີ 7.

ຄກລ ຈະສືບຕໍ່ປະສານສົມທົບກັບໂຄງການປັບປຸງຊີວິດການເປັນຢູ່ຂອງປະຊາຊົນທ້ອງຖິ່ນລາວ-ອິດສະຕູາລີ ເພື່ອຕິດຕາມ ແລະ ປະເມີນຜົນການປະຕິບັດງານຂອງ ຄກລ ແລະ ຊອກຫາວິທີທາງໃຫ້ດີຂຶ້ນກວ່າເກົ່າ ເພື່ອເຮັດແນວໃດ ໃຫ້ການກວດກູ້ ລບຕ ຂອງ ຄກລ ໄດ້ສາມາດເຂົ້າໄປຮັບໃຊ້ໃຫ້ແກ່ການປັບປຸງຊີວິດການເປັນຢູ່ຂອງປະຊາຊົນຢູ່ທ້ອງຖິ່ນ ແລະ ຫຼຸດຜ່ອນຄວາມທຸກຍາກເທື່ອລະກ້າວ.



ໃນປີ 2014, ຄກລ ຈະປະຕິບັດງານໃນ 64 ເມືອງ ຢູ່ໃນ 9 ແຂວງ, ຊຶ່ງປະກອບມີເມືອງທຸກຍາກຢູ່ 37 ເມືອງ; ຈະດຳເນີນການໂຄສະນາສຶກສາຊຸມຊົນ 679 ເທື່ອຄັ້ງ ໂດຍພະນັກງານໂຄສະນາຊຸມຊົນຂອງ ຄກລ ແລະ ອາສາສະໝັກບ້ານ. ນອກຈາກນັ້ນ, ຄກລ ຍັງຈະໄດ້ດຳເນີນການສຳຫຼວດທົ່ວໄປ ຈຳນວນ 1,789 ໜ້າວຽກ ແລະ ຄາດກະວ່າ ຈະໃຫ້ສຳເລັດການທຳລາຍເຄື່ອນທີ່ 1,537 ໜ້າວຽກ. ອີງຕາມການສຳຫຼວດ ແລະ ການວາງແຜນວຽກໃນປີຜ່ານມາ, ຄກລ ຄາດກະວ່າ ຈະສາມາດປົດປ່ອຍເນື້ອທີ່ດິນໃຫ້ໄດ້ 3,490 ເຮັກຕາ ໂດຍຜ່ານການກວດກູ້ ແລະ ສຳຫຼວດດ້ານວິຊາການ ເພື່ອສະໜັບສະໜູນໂຄງການພັດທະນາ ແລະ ລຶບລ້າງຄວາມທຸກຍາກ ຢູ່ ສປປ ລາວ.


ຊາວບ້ານ ກຳລັງຊີ້ບອກພະນັກງານຂອງ ຄກລ ບ່ອນທີ່ລາວເຫັນ ລບຕ ຕົກຄ້າງຢູ່ໃນດິນນາຂອງລາວ.

## ບຸກຄະລາກອນໃນປີ 2013:

| ພະນັກງານຫ້ອງການ | | | | ພະນັກງານຝ່າຍປະຕິບັດງານ (ພາກສະໜາມ) | | | |
|---|---|---|---|---|---|---|---|
| ຄົນລາວ | | ຄົນຕ່າງປະເທດ | | ຄົນລາວ | | ຄົນຕ່າງປະເທດ | |
| ຊາຍ | ຍິງ | ຊາຍ | ຍິງ | ຊາຍ | ຍິງ | ຊາຍ | ຍິງ |
| 136 | 53 | 3 | 1 | 814 | 193 | 0 | 0 |

## ຕົວເລກສະຖິຕິໃນປີ 2013:

| ການໂຄສະນາສຶກສາຄວາມສ່ຽງຈາກ ລບຕ ການໂຄສະນາຊຸມຊົນ | | ການຊ່ວຍເຫຼືອຜູ້ຖືກເຄາະຮ້າຍຈາກ ລບຕ ຈຳນວນຜູ້ທີ່ໄດ້ຮັບການຊ່ວຍເຫຼືອ | | ໜ້າວຽກສຳຫຼວດ | | ໜ້າວຽກທຳລາຍເຄື່ອນທີ່ | |
|---|---|---|---|---|---|---|---|
| ຈ/ນຄັ້ງຢ້ຽມຢາມ | ຜູ້ໄດ້ຮັບຜົນປະໂຫຍດ | ທາງດ້ານດານເງິນ | ທາງດ້ານການແພດ | ຈ/ນບ້ານ | ຈ/ນຄັ້ງຢ້ຽມຢາມ | ຈ/ນບ້ານ | ຈ/ນຄັ້ງຢ້ຽມຢາມ |
| 650 | 173,529 | ບໍ່ມີ | ບໍ່ມີ | 1,406 | 2,179 | 1,176 | 1,754 |

## ເນື້ອທີ່ກວດກູ້:

| ຜ່ານການກວດກູ້ (ຮຕ) | | | ຜ່ານການກວດກູ້ (ຮຕ) | | |
|---|---|---|---|---|---|
| ດິນກະສິກຳ | ດິນພັດທະນາ | ລວມ | ດິນກະສິກຳ | ດິນພັດທະນາ | ລວມ |
| 2,435 | 421 | 2,856 | 371 | 68 | 439 |

## ລະເບີດທີ່ພົບ, ຖືກຍ້າຍ ແລະ ຖືກທຳລາຍ:

| ລະເບີດທີ່ຖືກຍ້າຍ/ຖືກທຳລາຍ | | | | | |
|---|---|---|---|---|---|
| ໜ້າວຽກ | ບົມໃຫຍ່ | ລະເບີດລູກຫວ່ານ | ລະເບີດຝັງດິນ | ລບຕ ຊະນິດອື່ນໆ | ລວມ |
| ທຳລາຍເຄື່ອນທີ່ | 216 | 11,026 | 202 | 13,863 | 25,307 |
| ການກວດກູ້ | 24 | 17,551 | 48 | 17,522 | 35,145 |
| ການສຳຫຼວດດ້ານວິຊາການ | 0 | 13 | 0 | 169 | 182 |
| *ລວມ* | ***240*** | ***28,590*** | ***250*** | ***31,554*** | ***60,634*** |

## ການຝຶກອົບຮົມ:

| ຫຼັດສູດຝຶກອົບຮົມ | ຈຳນວນຫຼັກສູດທີ່ປະຕິບັດ | ຈຳນວນນັກຮຽນ | ຈຳນວນນັກຮຽນເພດຍິງ |
|---|---|---|---|
| ຫຼັກສູດເກັບກູ້ພື້ນຖານ (ຂັ້ນ 1) | 3 | 112 | 37 |
| ຫຼັກສູດຊ່ຽວຊານ (ຂັ້ນ 4) | 1 | 19 | 3 |
| ຫຼັກສູດການແພດ | 2 | 13 | 6 |
| ຫຼັກສູດໂຄສະນາ/ສຳຫຼວດດ້ານວິຊາການ | 1 | 9 | 0 |
| ຫຼັກສູດໂຄສະນາສຶກສາຄວາມສ່ຽງຈາກ ລບຕ | 1 | 11 | 4 |
| ຫຼັກສູດຫົວໜ້າໜ່ວຍງານເກັບກູ້ (ຂັ້ນ 3) | 1 | 30 | 7 |
| ຫຼັກສູດຫົວໜ້າໜ່ວຍງານໂຄສະນາສຶກສາ ຄວາມສ່ຽງຈາກ ລບຕ | ***1*** | ***7*** | ***0*** |
| *ລວມ* | ***10*** | ***201*** | ***57*** |

## ພື້ນທີ່ການປະຕິບັດງານ:

1. ຫຼວງພະບາງ — 12 ເມືອງ — ການໂຄສະນາຊຸມຊົນ, ການສຳຫຼວດທົ່ວໄປ, ການທຳລາຍເຄື່ອນທີ່, ການກວດກູ ແລະ ການສຳຫຼວດດານວິຊາການ
2. ຫົວພັນ — 8 ເມືອງ — ການໂຄສະນາຊຸມຊົນ, ການສຳຫຼວດທົ່ວໄປ, ການທຳລາຍເຄື່ອນທີ່, ການກວດກູ້ ແລະ ການສຳຫຼວດດ້ານວິຊາການ
3. ຊຽງຂວາງ — 5 ເມືອງ — ການໂຄສະນາຊຸມຊົນ, ການສຳຫຼວດທົ່ວໄປ, ການທຳລາຍເຄື່ອນທີ່, ການກວດກູ ແລະ ການສຳຫຼວດດານວິຊາການ
4. ຄຳມ່ວນ — 7 ເມືອງ — ການໂຄສະນາຊຸມຊົນ, ການສຳຫຼວດທົ່ວໄປ, ການທຳລາຍເຄື່ອນທີ່, ການກວດກູ ແລະ ການສຳຫຼວດດານວິຊາການ
5. ສະຫວັນນະເຂດ — 9 ເມືອງ — ການໂຄສະນາຊຸມຊົນ, ການສຳຫຼວດທົ່ວໄປ, ການທຳລາຍເຄື່ອນທີ່, ການກວດກູ ແລະ ການສຳຫຼວດດານວິຊາການ
6. ຈຳປາສັກ — 7 ເມືອງ — ການໂຄສະນາຊຸມຊົນ, ການສຳຫຼວດທົ່ວໄປ, ການທຳລາຍເຄື່ອນທີ່, ການກວດກູ້ ແລະ ການສຳຫຼວດດ້ານວິຊາການ
7. ສາລະວັນ — 7 ເມືອງ — ການໂຄສະນາຊຸມຊົນ, ການສຳຫຼວດທົ່ວໄປ, ການທຳລາຍເຄື່ອນທີ່, ການກວດກູ ແລະ ການສຳຫຼວດດານວິຊາການ
8. ເຊກອງ — 10 ເມືອງ — ການໂຄສະນາຊຸມຊົນ, ການສຳຫຼວດທົ່ວໄປ, ການທຳລາຍເຄື່ອນທີ່, ການກວດກູ ແລະ ການສຳຫຼວດດານວິຊາການ
9. ອັດຕະປື — 5 ເມືອງ — ການໂຄສະນາຊຸມຊົນ, ການສຳຫຼວດທົ່ວໄປ, ການທຳລາຍເຄື່ອນທີ່, ການກວດກູ ແລະ ການສຳຫຼວດດານວິຊາການ

## ທາງດ້ານການເງິນ:

### ການສະໜັບສະໜູນຂອງຜູ້ໃຫ້ທຶນໃນປີ 2013 (ໂດລາສະຫະລັດ)

| ຜູ້ໃຫ້ທຶນ | ເງິນທີ່ໄດ້ຮັບໃນປີ 2013 |
|---|---:|
| ຜ່ານສອງຝ່າຍ (ກ) | |
| ອາເມລິກາ/ບໍລິສັດສະເຕີລິງ | 1,075,595 |
| ອົງການເຈນັດ | 213,782 |
| ອົງການເວີວິດເຕົ້ານາຍ | 149,820 |
| ອົງການແມັກ | 13,730 |
| ໂປແລນ | 15,536 |
| ອິນຕູີພິດ | 7,102 |
| *ລວມ* | ***1,475,563*** |
| ຜ່ານກອງທຶນຊ່ວຍເຫຼືອລ້າຂອງ ສປຊ (ຂ) | |
| ລຸກຊໍາບວກ | 198,006 |
| ສະວິດເຊີແລນ | 753,000 |
| ດີຟີດ | 39,447 |
| ໄອແລນ | 562,857 |
| ອົດສະຕູາລີ | 2,825,775 |
| ເກົາຫຼີໃຕ້ | 350,000 |
| ລວມ | 4,729,085 |
| *ລວມ (ກ+ຂ)* | *6,204,648* |

### ການລະດົມທຶນໃໝ່ໃນປີ 2013:

**ຜ່ານອົງການ ສປຊ:**

- ປະເທດອົດສະຕູາລີ: 1.7 ລ້ານໂດລາອົດສະຕູາລີ (ໃນຈໍານວນເງິນທັງໝົດ ມີ 2.6 ລ້ານໂດລາອົດສະຕູາລີ ແມ່ນສະໜັບສະໜູນຫ້ອງການ ຄຊກລ ແລະ ຄກລ).
- ປະເທດອົດສະຕູາລີ: 1.8 ລ້ານໂດລາອົດສະຕູາລີ ແມ່ນສະໜັບສະໜູນການປະຕິບັດງານຂອງ ຄກລ ເພື່ອກວດກູ້ ລບຕ ຮັບໃຊ້ໂຄງການພັດທະນາປັບປຸງຊີວິດການເປັນຢູ່ຂອງຊຸມຊົນ ລາວ- ອົດສະຕູາລີ.
- ປະເທດສະວິດເຊີແລນ: 3.158 ລ້ານໂດລາສະຫະລັດ (ສະໜັບສະໜູນ ຄກລ ແລະ ຫ້ອງການ ຄຊກລ. ການແບ່ງປັນທຶນວ່າຈະໃຫ້ ຄກລ ແລະ ຫ້ອງການ ຄຊກລ ເທົ່າໃດນັ້ນ ແມ່ນຍັງຢູ່ໃນຂັ້ນຕອນຕົກລົງກັນຂອງຄະນະກໍາມະການໂຄງການ).
- ປະເທດສປ ເກົາຫຼີ: 34,000 ໂດລາສະຫະລັດ.

**ທຶນຜ່ານແບບສອງຝ່າຍ:**

- ປະເທດຍີ່ປຸ່ນ: ປະມານ 570,000 ໂດລາສະຫະລັດ ສະໜັບສະໜູນ ຄກລ ແຂວງເຊກອງ (ຍັງລໍຖ້າການຮັບຮອງ)
- ປະເທດສະຫະລັດອາເມລິກາ: 1.38 ລ້ານໂດລາສະຫະລັດ ສໍາລັບ ຄກລ ແຂວງຈໍາປາສັກ ແລະ ຄກລ ແຂວງ ສະຫວັນນະເຂດ
- ອົງການເວີວິດເຕົ້ານາຍ: 220,000 ໂດລາສະຫະລັດ ສໍາລັບ ຄກລ ແຂວງຄໍາມ່ວນ

ການປະກອບສ່ວນເປັນວັດຖຸໃຫ້ແກ່ ຄກລ ມີ:
ການປະກອບສ່ວນເປັນວັດຖຸ ຄາດວ່າຈະໄດ້ຮັບຈາກລັດຖະບານຍີ່ປຸ່ນ ສໍາລັບໂຄງການກົນຈັກໜັກຖາງປ່າ ລວມທັງການກໍ່ສ້າງສູນຝຶກແຫ່ງຊາດໃໝ່ ແລະ ອຸປະກອນໃໝ່ ໃນມູນຄ່າ 8.4 ລ້ານໂດລາສະຫະລັດ ໂດຍຜ່ານອົງການເຈນັດ.

ການໃຊ້ຈ່າຍໃນປີ 2013 (ໂດລາສະຫະລັດ)

<table>
<tr><td colspan="3">ລາຍຈ່າຍຂອງ ຄກລ ໃນປີ 2013 ແຍກອອກເປັນແຕ່ລະປະເທດ*</td><td>ຈຳນວນ</td></tr>
<tr><td rowspan="17">ຄກລ</td><td rowspan="5">ກອງທຶນຊ່ວຍເຫຼືອລ້າຂອງ ສປຊ</td><td>ອິດສະຕູາລີ</td><td>1,700,827</td></tr>
<tr><td>ໄອແລນ</td><td>249,740</td></tr>
<tr><td>ລຸກຊໍາບວກ</td><td>388,170</td></tr>
<tr><td>ນິວຊີແລນ</td><td>1,016,135</td></tr>
<tr><td>ສະວິດເຊີແລນ (ເອດດີຊີ)</td><td>1,183,078</td></tr>
<tr><td colspan="2"></td><td>4,537,950</td></tr>
<tr><td rowspan="3">ທຶນທີ່ຕົກລົງກັນເພື່ອອອກທຶນຮ່ວມ</td><td>ອິດສະຕູາລີ</td><td>1,189,661</td></tr>
<tr><td>ອິດສະຕູາລີ</td><td>510,758</td></tr>
<tr><td>ສະຫະພາບເອີລົບ</td><td>224,849</td></tr>
<tr><td colspan="2">ລວມທຶນທີ່ຕົກລົງກັນເພື່ອອອກທຶນຮ່ວມ</td><td>1,925,268</td></tr>
<tr><td rowspan="2">ທຶນຜ່ານ ສປຊ</td><td>ດີຟິດ</td><td>39,385</td></tr>
<tr><td>ເກົາຫຼີໃຕ້</td><td>15,000</td></tr>
<tr><td colspan="2">ລວມທຶນຜ່ານ ສປຊ</td><td>54,385</td></tr>
<tr><td>ທຶນຂອງ ສປຊ</td><td>ທຶນປົກກະຕິຂອງ ສປຊ</td><td>418,357</td></tr>
<tr><td colspan="2">ລວມທຶນຂອງ ສປຊ</td><td>418,357</td></tr>
<tr><td>ລວມທຶນຜ່ານ ສປຊ</td><td>6,935,959</td><td></td></tr>
<tr><td colspan="3">*ຮອດວັນທີ 24 ກຸມພາ 2014, ປື້ມສະຫຼຸບການເງິນຂອງ ສປຊ ປິດຢ່າງເປັນທາງການໃນເດືອນ ເມສາ 2014.</td></tr>
<tr><td rowspan="8">ທຶນສະໜັບສະໜູນແບບສອງຝ່າຍ</td><td colspan="2">ຍີ່ປຸ່ນ</td><td>91,567</td></tr>
<tr><td colspan="2">ອົງການເຈມັດ</td><td>75,472</td></tr>
<tr><td colspan="2">ອົງການແມັກ</td><td>12,714</td></tr>
<tr><td colspan="2">ໂປແລນ</td><td>15,056</td></tr>
<tr><td colspan="2">ອາເມລິກາ ຜ່ານບໍລິສັດສະເຕີລິ້ງ</td><td>1,442,829</td></tr>
<tr><td colspan="2">ເວີວິດເຕົ້າມາຍ</td><td>144,399</td></tr>
<tr><td colspan="2">ທຶນແຫຼ່ງອື່ນໆ* (ອົງການເອນຈີໂອ, ສູນຍຸ້ງມຍາມ, ອິນຕູີພິດ, ສະມາຄົມທ່ອງທ່ຽວ, ເງິນຄ່າຝຶກອົບຮົມຂອງນັກຮຽນ ແລະ ອື່ນໆ)</td><td>101,959</td></tr>
<tr><td colspan="2">ລວມທຶນສະໜັບສະໜູນແບບສອງຝ່າຍ</td><td>1,883,996</td></tr>
<tr><td colspan="3">ລວມທັງໝົດໃນປີ 2013</td><td>8,819,955</td></tr>
</table>

**ລາຍຈ່າຍຂອງ ຄກລ ໃນປີ 2013 ແບ່ງອອກເປັນແຕ່ລະປະເພດ***

| ລາຍການ | ລວມ |
| --- | ---: |
| ລາຍຈ່າຍສຳລັບບຸກຄະລາກອນ | 5,284,125 |
| ການຝຶກອົບຮົມ ແລະ ຈັດງານຕ່າງໆ | 223,944 |
| ລາຍຈ່າຍສຳລັບການເດີນທາງ | 129,863 |
| ລາຍຈ່າຍສຳລັບຫ້ອງການ, ບໍລິຫານ ແລະ ຄ່າຕິດຕັ້ງຕ່າງໆ | 415,751 |
| ລາຍຈ່າຍສຳລັບວຽກປະຕິບັດງານພາກສະໜາມ | 1,360,329 |
| ລາຍຈ່າຍສຳລັບວັດຖຸອຸປະກອນ (ຢູ່ຫ້ອງການ ແລະ ສະໜາມ) | 654,976 |
| ອຸປະກອນ (ແບັດເຕີລີ, ດິນລະເບີດ ແລະ ອື່ນໆ) | 185,347 |
| ຊຸດເຄື່ອງນຸ່ງພະນັກງານພາກສະໜາມ ແລະ ອຸປະກອນການແພດ | 172,535 |
| ອຸປະກອນຮັບໃຊ້ວຽກໂຄສະນາຊຸມຊົນ | 18,570 |
| ຄ່າບໍລິຫານຂອງ ສປຊ | 325,313 |
| ອື່ນໆ | (5) |
| ອື່ນໆ | 18,908 |
| ອື່ນໆ | (18,580) |
| ອື່ນໆ | 48,881 |
| ລວມ | ***8,819,955*** |

*** ລາຍຈ່າຍຮອດວັນທີ 24 ກຸມພາ 2014, ປຶ້ມສະຫຼຸບການເງິນຂອງ ສປຊ ປິດຢ່າງເປັນທາງການໃນເດືອນເມສາ 2014.**

# ອົງການເກັບກູ້ລະເບີດແມັກ (ແມັກ)

## ກິດຈະກຳໃນປີ 2013:

ວິໄສທັດຂອງອົງການແມັກຄື: ສ້າງຄວາມປອດໄພໃຫ້ແກ່ຊີວິດ ແລະ ສ້າງອະນາຄົດ ໃຫ້ແກ່ ຜູ້ຊາຍ, ຜູ້ຍິງ ແລະ ເດັກນ້ອຍ ທີ່ໄດ້ຮັບຜົນກະທົບຈາກ ລບຕ.

ການສ້າງຄວາມປອດໄພ ແລະ ສ້າງອະນາຄົດ ແມ່ນປະກອບມີ:

- ກວດກູ້ພື້ນທີ່ ລບຕ ຕົກຄ້າງ ຈາກສະໄໝສົງຄາມ.
- ຊອກຫາວິທີທາງ ເພື່ອຫຼຸດຜ່ອນຄວາມສ່ຽງ ທີ່ຈະພາໃຫ້ຖືກບາດເຈັບ ແລະ ເສຍຊີວິດ ຍ້ອນ ລບຕ ໃສ່ປະຊາຊົນໃນແຕ່ລະວັນ.
- ສ້າງເງື່ອນໄຂຄວາມປອດໄພ ແລະ ຄວາມໝັ້ນຄົງ ໃຫ້ແກ່ການພັດທະນາ ແນໃສ່ເຮັດໃຫ້ພື້ນທີ່ປອດຈາກ ລບຕ ຕົກຄ້າງ.

ໃນປີ 2013 ອົງການແມັກ ໄດ້ສືບຕໍ່ປະຕິບັດງານໃນສອງແຂວງ ທີ່ມີຜົນກະທົບສູງຈາກ ລບຕ ຕົກຄ້າງ ຄື: ແຂວງຊຽງຂວາງ ແລະ ແຂວງຄຳມ່ວນ.

ຜົນງານໝົດປີ, ໜ່ວຍງານເກັບກູ້ພື້ນທີ່ ສາມາດປົດປ່ອຍດິນໄດ້ທັງໝົດຫຼາຍກວ່າ 2,000,000 ຕາແມັດ. ໃນຊ່ວງດຳເນີນງານ ໜ່ວຍງານເກັບກູ້ ສາມາດເກັບກູ້ ແລະ ທຳລາຍ ລບຕ ໄດ້ຫຼາຍກວ່າ 7,000 ໜ່ວຍ. ຄິດສະເລັ່ຍແລ້ວ, ວິຊາການເກັບກູ້ລະເບີດຂອງອົງການແມັກ ສາມາດທຳລາຍລະເບີດໄດ້ 1 ໜ່ວຍ ໃນທຸກໆ 286 ຕາແມັດ ຂອງດິນທີ່ເກັບກູ້ແລ້ວ.

ດິນທີ່ເກັບກູ້ແລ້ວສ່ວນຫຼາຍ ແມ່ນຖືກນຳໃຊ້ເຂົ້າໃນການກະສິກຳເຊັ່ນວ່າ: ເຮັດນາ ແລະ ລ້ຽງສັດ. ຍ້ອນມີການປະສານງານຮ່ວມມືກັບອຳນາດການປົກຄອງແຂວງ, ເມືອງ ແລະ ອົງການພັດທະນາອື່ນໆເຊັ່ນວ່າ: ອົງການສຸພະນິມິດ ແລະ ກອງທຶນສາກົນເພື່ອເດັກ ຈຶ່ງເຮັດໃຫ້ອົງການແມັກ ສາມາດເກັບກູ້ພື້ນທີ່ດິນ






ໃຫ້ມີຄວາມປອດໄພໃຫ້ໂຄງການພັດທະນາພື້ນຖານໂຄງລ່າງ, ການສ້າງສຸກສາລາ, ໂຮງຮຽນ, ໂຄງການສ້າງລະບົບນ້ຳສະອາດ ແລະ ໂຄງການກໍ່ສ້າງລະບົບຊົນລະປະທານ.

ປັດໄຈຫຼັກຂອງໜ່ວຍງານເກັບກູ້ລະເບີດຂອງອົງການແມັກ ແມ່ນຕ້ອງມີຄວາມສາມາດໃນການພົວພັນກັບຊຸມຊົນ. ໂດຍຜ່ານການປຶກສາຫາລືກັບຊຸມຊົນ ຈຶ່ງເຮັດໃຫ້ໜ່ວຍງານກວດກູ້ຂອງອົງການແມັກ ສາມາດຮັບປະກັນໄດ້ວ່າ ການເກັບກູ້ຂອງອົງການແມັກ ແມ່ນສິ່ງທີ່ຊຸມຊົນຕ້ອງການ ແລະ ເປັນບູລິມະສິດສູງສຸດຂອງຊຸມຊົນ. ມີຫຼາຍປັດໃຈສຳຄັນ ທີ່ໃຊ້ເຂົ້າໃນການຈັດລຽງບູລິມະສິດໃນການກວດກູ້ ເປັນຕົ້ນແມ່ນ ການພົບຫຼັກຖານ ລບຕ ຕົກຄ້າງ ແລະ ບົດລາຍງານການເກີດອຸປະຕິເຫດໃນພື້ນທີ່ດັ່ງກ່າວ, ຂໍ້ມູນແຜນທີ່ການຖິ້ມລະເບີດຂອງສະຫະລັດອາເມລິກາ ແລະ ແຜນການນຳໃຊ້ດິນ ພາຍຫຼັງການເກັບກູ້.

ຜູ້ໃຫ້ທຶນລາຍໃຫຍ່ຂອງອົງການແມັກ ໃນປີ 2013 ແມ່ນກະຊວງການຕ່າງປະເທດຂອງສະຫະລັດອາເມລິກາ-ຫ້ອງການຫຼຸດຜ່ອນອາວຸດ ແລະ ການສູ້ຮົບ, ກະຊວງພັດທະນາສາກົນ (ລັດຖະບານອັງກິດ), ສະຫະພາບເອີລົບ ແລະ ກົມພົວພັນວຽກງານຕ່າງປະເທດ, ກົມການຄ້າ ແລະ ພັດທະນາ ແລະ ລັດຖະບານການາດາ. ພວກເຮົາໃນນາມອົງການ ຂໍສະແດງຄວາມຂອບໃຈບັນດາທ່ານໝົດທຸກພາກສ່ວນ ທີ່ໄດ້ສືບຕໍ່ໃຫ້ການຊ່ວຍເຫຼືອອົງການແມັກ ຢ່າງດີຕະຫຼອດມາ ໃນການດຳເນີນພາລະກິດໃນການກອບກູ້ເອົາຊີວິດ ແລະ ສ້າງອານາຄົດຢູ່ໃນ ສປປ ລາວ.

## ຜົນສຳເລັດຕົ້ນຕໍໃນປີ 2013:

ປີ 2013 ເປັນປີແຫ່ງຜົນສຳເລັດ ທີ່ສາມາດປະຕິບັດການເກັບກູ້ ລບຕ ອອກຈາກພື້ນທີ່ດິນທີ່ມີ ລບຕ ຕົກຄ້າງສູງ ໄດ້ຕາມແຜນການທີ່ຕັ້ງໄວ້. ອົງການເກັບກູ້ລະເບີດແມັກ ປະຕິບັດວຽກດ້ວຍ

ຄວາມເອົາໃຈໃສ່ ເພື່ອຮັບປະກັນໃຫ້ພື້ນທີ່ເກັບກູ້ໄປແລ້ວນັ້ນ ແມ່ນຖືກນຳໃຊ້ເຂົ້າໃນເປົ້າໝາຍການພັດທະນາ. ເນື້ອທີ່ດິນຫຼາຍກວ່າ 92% ທີ່ກວດກູ້ໄປແລ້ວນັ້ນ ໃນປີ 2013 ແມ່ນຖືກນຳໃຊ້ທັງໝົດເຂົ້າໃນການຜະລິດ ເປັນຕົ້ນແມ່ນ ການຂະຫຍາຍການກະສິກຳ, ການກໍ່ສ້າງພື້ນຖານໂຄງລ່າງ ແລະ ສູນຝຶກວິຊາຊີບ. ກິດຈະກຳທັງໝົດເຫຼົ່ານີ້ ແມ່ນຕອບສະໜອງໃຫ້ແກ່ຊຸມຊົນທີ່ທຸກຍາກ ໄດ້ສາມາດເຂົ້າເຖິງໂອກາດຕ່າງໆ ເພື່ອດຶງເອົາຖານະຄອບຄົວຂອງເຂົາເຈົ້າ ໃຫ້ຫຼຸດພົ້ນອອກຈາກຄວາມທຸກຍາກ, ສົ່ງເສີມການທຳມາຫາກິນ ແລະ ເຂົ້າເຖິງການບໍລິການທີ່ສຳຄັນຕ່າງໆໄດ້. ນອກຈາກຜົນປະໂຫຍດຂ້າງເທິງນັ້ນແລ້ວ, ອົງການແມັກ ຍັງກວດກູ້ ລບຕ ເພື່ອເພີ່ມຄວາມປອດໄພໃຫ້ແກ່ຊຸມຊົນ ແລະ ສ້າງຄວາມໝັ້ນຄົງ ແລະ ຫຼຸດຜ່ອນຄວາມຢ້ານກົວຂອງປະຊາຊົນດຳລົງຊີວິດຢູ່ກັບ ລບຕ ແລະ ຫຼຸດຜ່ອນການເກີດອຸປະຕິເຫດຍ້ອນ ລບຕ.

ໃນກາງປີ 2013, ອົງການແມັກ ໄດ້ດຳເນີນການສຳຫຼວດ ເພື່ອປະເມີນຜົນກະທົບສຳລັບໂຄງການທີ່ປະຕິບັດຢູ່ແຂວງຄຳມ່ວນ ແລະ ຊຽງຂວາງ ໃນໄລຍະ 36 ເດືອນ ທີ່ໄດ້ຮັບທຶນຈາກອົງການດີຟິດ. ການສຳຫຼວດ ໄດ້ດຳເນີນໄປພາຍໃນ 1,054 ໝູ່ບ້ານ ໂດຍໃຊ້ເວລາຫຼາຍກວ່າ 2 ເດືອນ. ຂອບເຂດຂອງຂໍ້ມູນພື້ນຖານໃນການສຳຫຼວດ ແມ່ນຄ້າຍຄືກັບກັບການສຳຫຼວດທີ່ເຄີຍປະຕິບັດມາກ່ອນໃນປີ 2011 ແລະ ຂໍ້ມູນທີ່ເກັບກຳໄດ້ໃນຊ່ວງເຮັດການສຳຫຼວດ ເພື່ອປະເມີນຜົນໃໝ່ນີ້ກໍ່ໄດ້ມີການເອົາມາສົມທຽບເຊັ່ນດຽວກັນ ເພື່ອເບິ່ງເຖິງຄວາມແຕກຕ່າງ. ແບບຟອມສອບຖາມຄົວເຮືອນ ແລະ ການສົນທະນາກັບບັນດາກຸ່ມເປົ້າໝາຍ ກໍ່ໄດ້ປະຕິບັດເປັນຢ່າງດີ ເພື່ອເກັບກຳຂໍ້ມູນສະຖິຕິການປ່ຽນແປງຊີວິດການເປັນຢູ່ຂອງປະຊາຊົນພາຍຫຼັງທີ່ອົງການແມັກ ກວດກູ້ ລບຕ ອອກຈາກພື້ນທີ່ໃຫ້ແລ້ວ.

ສິ່ງທີ່ພົບເຫັນໃນເວລາເຮັດການສຳຫຼວດ ມີຄື:

- ມີການເພີ່ມຄວາມປອດໄພໃຫ້ແກ່ຊຸມຊົນທີ່ຖືກກະທົບຈາກ ລບຕ, ຫຼຸດຜ່ອນອຸປະຕິເຫດທີ່ເກີດຂຶ້ນຍ້ອນ ລບຕ ແລະ ມີການນຳໃຊ້ພື້ນທີ່ດິນທີ່ເກັບກູ້ ລບຕ ອອກແລ້ວ.

- ເພີ່ມຄວາມປອດໄພໃຫ້ແກ່ດິນທີ່ນຳໃຊ້ເຂົ້າທາງດ້ານກະສິກຳ ແລະ ເພີ່ມການຜະລິດສະບຽງອາຫານໃຫ້ພຽງພໍ.

- ເປີດໂອກາດໃຫ້ຊຸມຊົນສ້າງເສດຖະກິດ, ສ້າງໂອກາດໃຫ້ຊຸມຊົນໄດ້ປະສົບການໃນການຈ້າງງານສູງຂຶ້ນ, ເພີ່ມລາຍຮັບໃຫ້ສູງຂຶ້ນກ່ວາເກົ່າ.

ຕົວເລກສະຖິຕິທີ່ສຳຄັນຈຳນວນໜຶ່ງ ທີ່ໄດ້ມາຈາກການສຳຫຼວດແມ່ນເປັນປະໂຫຍດຫຼາຍຢ່າງໃຫ້ແກ່ການປະຕິບັດວຽກເກັບກູ້ຂອງອົງການແມັກ, ຊຶ່ງສະແດງໃຫ້ເຫັນຄື:

- 21% ຂອງຈຳນວນປະຊາຊົນຕອບວ່າ ບໍ່ໄດ້ນຳໃຊ້ດິນພາຍຫຼັງການເກັບກູ້ ຍ້ອນວ່າ ມີຂໍ້ຈຳກັດທາງດ້ານເງື່ອນໄຂການດຳລົງຊີວິດ.



- ອີງໃສ່ຂໍ້ມູນຂອງອົງການແມັກ ໃຫ້ຮູ້ວ່າ ປະຊາຊົນບໍ່ສາມາດເຂົ້າໄປນຳໃຊ້ດິນໄດ້ ມີເຖິງ 43% ຍ້ອນວ່າ ພື້ນທີ່ຍັງມີ ລບຕ ຕົກຄ້າງ.

- 18% ຂອງປະຊາຊົນຕອບວ່າ ມີຄວາມກັງວົນກ່ຽວກັບ ລບຕ ໃນແຕ່ລະມື້ ແລະ 16% ຕອບວ່າ ລບຕ ແມ່ນບັນຫາທີ່ສົ່ງຜົນກະທົບຕໍ່ຊຸມຊົນຂອງເຂົາເຈົ້າ.

- ອີງໃສ່ການປະຕິບັດກິດຈະກຳຂອງອົງການແມັກ ມີ 92% ຕອບວ່າ ເຂົາເຈົ້າ ມີອາຫານກິນເປັນເວລາຫຼາຍເດືອນໃນປີຜ່ານມາ ແລະ ຖ້າທຽບໃສ່ຂໍ້ມູນພື້ນຖານຈາກການສຳຫຼວດ ແມ່ນເພີ່ມຂຶ້ນ (65%).

## ຂ່າວດີ:

ໃນເດືອນມີນາ 2013 ອົງການແມັກ ໄດ້ເຮັດວຽກຢູ່ບ້ານນາຝາຍ, ເມືອງຜາໄຊ, ແຂວງຊຽງຂວາງ.

ອົງການແມັກ ໄດ້ຮັບໃບສະເໜີຈາກອຳນາດການປົກຄອງທ້ອງຖິ່ນ ເພື່ອໃຫ້ໄປເກັບກູ້ພື້ນທີ່ຢູ່ພາຍໃນບ້ານ ເພາະວ່າ ຕາມການລາຍງານຢູ່ພາຍໃນບ້ານແມ່ນພົບເຫັນ ລບຕ ຕົກຄ້າງເປັນຈຳນວນຫຼວງຫຼາຍ ໂດຍສະເພາະ ແມ່ນຢູ່ໃນເຂດທີ່ຊຸມຊົນກຳລັງອາໃສຢູ່.

ພາຍຫຼັງທີ່ປະຕິບັດສຳເລັດກິດຈະກຳພົວພັນກັບຊຸມຊົນໃນເດືອນມີນາ 2013 ແລ້ວ, ອົງການແມັກ ໄດ້ນຳໃຊ້ທຶນທີ່ເຫຼືອເພື່ອເຄື່ອນກິດຈະກຳພົວພັນກັບຊຸມຊົນຢູ່ທີ່ບ້ານນາໄຜ່ ໃນເດືອນພຶດສະພາ 2013.

ທ່ານ ຈັນ ແລະ ສະມາຊິກຄອບຄົວຈຳນວນ 7 ຄົນ ດຳລົງຊີວິດຢູ່ບ້ານນີ້ຕະຫຼອດຊີວິດຂອງເຂົາເຈົ້າ ແລະ ເຂົາເຈົ້າຮັບຮູ້ດີວ່າພື້ນທີ່ຢູ່ພາຍໃນບ້ານຂອງພວກເຂົາ ແມ່ນມີ ລບຕ ຕົກຄ້າງຢູ່ຫຼາຍ. ລາວເວົ້າວ່າ: “ກ່ອນໜ້ານີ້ ພວກເຮົາໄດ້ພະຍາຍາມຂະຫຍາຍເນື້ອທີ່ນາຂອງພວກເຮົາອອກຕື່ມ ແລະ ໄດ້ພົບລະເບີດລູກຫວ່ານຕົກຄ້າງຢູ່. ລາວເວົ້າວ່າ ຕອນທີ່ລາວເຫັນລະເບີດລູກຫວ່ານນັ້ນ ລາວໄດ້ຍ້າຍພວກມັນໄປໄວ້ບ່ອນອື່ນ ໂດຍໃຊ້ມືຂອງລາວເອງ ແລະ ລາວເອົາພວກມັນໄປຝັງໄວ້ໃນຂຸມເກົ່າຂອງບົມໃຫຍ່. ລາວຮູ້ດີ ລາວກຳລັງຕົກຢູ່ຄວາມສ່ຽງທີ່ປະພຶດແນວ



ນັ້ນ ແຕ່ວ່າບໍ່ມີທາງເລືອກ ເນື່ອງຈາກວ່າ ຕ້ອງການນຳໃຊ້ພື້ນທີ່ດິນ ເພື່ອປູກເຂົ້າຫາລ້ຽງຄອບຄົວ”.

ອົງການແມັກ ໄດ້ເຮັດການເກັບກູ້ ລບຕ ອອກຈາກພື້ນທີ່ຂອງທ່ານຈັນໄດ້ທັງໝົດ 4,500 ຕາແມັດ ແລະ ສາມາດທຳລາຍ ລບຕ ໄດ້ທັງໝົດ 492 ໜ່ວຍ, ຊຶ່ງສ່ວນຫຼາຍແມ່ນລະເບີດລູກຫວ່ານ. ນັກວິຊາການເກັບກູ້ຂອງອົງການແມັກກ່າວວ່າ ພົບລະເບີດລູກຫວ່ານຕົກຄ້າງໃນທຸກໆ 9 ຕາແມັດ ແລະ ຖ້າສົມທຽບໃສ່ຂໍ້ມູນຂອງປະເທດຕ່າງໆໃນໂລກທີ່ມີ ລບຕ ຕົກຄ້າງເຊັ່ນດຽວກັນນີ້ ເຫັນວ່າ ບໍ່ມີປະເທດໃດໃນໂລກ ທີ່ມີ ລບຕ ຕົກຄ້າງໜັກຄືກັບ ສປປ ລາວ ອີກແລ້ວ, ມັນຕົກຄ້າງຢູ່ຫຼາຍອີຫຼີ.

ທ່ານ ຈັນ ກ່າວວ່າ: “ຍ້ອນອົງການແມັກ ມາກວດກູ້ ລບຕ ອອກຈາກພື້ນທີ່ໃຫ້ ລາວຈຶ່ງສາມາດນຳໃຊ້ດິນຂອງລາວຢ່າງມີຄວາມປອດໄພ ແລະ ບໍ່ເປັນຫ່ວງ ກ່ຽວກັບການເກີດອຸປະຕິເຫດຈາກ ລບຕ. ນັບຕັ້ງແຕ່ດິນຂອງລາວໄດ້ຮັບການເກັບກູ້ ລບຕ ອອກແລ້ວ ລາວແມ່ນສາມາດນຳໃຊ້ລົດໄຖນາ ແທນການເອົາຄວາຍໄຖນາ ແລະ ສາມາດນຳໃຊ້ເຄື່ອງອຸປະກອນສຳລັບເຮັດນາໄດ້ຢ່າງປອດໄພ. ປະຈຸບັນນີ້ ສິ່ງດັ່ງກ່າວ ເຮັດໃຫ້ການເຮັດນາໄວຂຶ້ນ, ງ່າຍຂຶ້ນສຳລັບລາວ ແລະ ຄອບຄົວຂອງລາວ. ຂ້າພະເຈົ້າດີໃຈຫຼາຍ ແລະ ຂໍສະແດງຄວາມຮູ້ບຸນຄຸນຕໍ່ອົງການແມັກ”.

## ວຽກຈຸດສຸມໃນປີ 2014:

ອົງການແມັກ ຈະສືບຕໍ່ເຮັດວຽກຢ່າງໃກ້ຊິດກັບອຳນາດການປົກຄອງຕ່າງໆຂອງລັດຖະບານລາວ ນັບແຕ່ຂັ້ນສູນກາງ, ຂັ້ນແຂວງ ແລະ ຂັ້ນເມືອງ ເພື່ອຮັບປະກັນໃຫ້ກິດຈະກຳເກັບກູ້ຂອງຕົນໄປຕາມແຜນພັດທະນາເສດຖະກິດ-ສັງຄົມຂອງ ສປປ ລາວ. ຄະນະພັດທະນາຊົນນະບົດ ແລະ ລຶບລ້າງຄວາມທຸກຍາກ ຈະເປັນຄູ່ຮ່ວມງານຫຼັກຂອງອົງການແມັກ ໃນຂົງເຂດວຽກງານນີ້ ຄືກັນກັບ ຫ້ອງການ ຄຊກລ. ໃນອານາຄົດ ພວກເຮົາຈະສືບຕໍ່ເຮັດວຽກກັບອຳນາດການປົກຄອງທ້ອງຖິ່ນ ເພື່ອຮັບປະກັນໃຫ້ປະຊາຊົນໄດ້ຮັບຜົນປະໂຫຍດຈາກການກວດກູ້ ລບຕ ຂອງອົງການແມັກ ແນ່ໃສ່ເຮັດໃຫ້ດິນມີຄວາມປອດໄພໃນເວລານຳໃຊ້ເຂົ້າໃນການຜະລິດກະສິກຳ ແລະ ກິດຈະກຳອື່ນໆ ເພື່ອສ້າງລາຍຮັບ, ປັບປຸງຄວາມປອດໄພ ແລະ ຄວາມໝັ້ນຄົງໃຫ້ແກ່ຊຸມຊົນ.

## ຄູ່ຮ່ວມງານ:

- ຄະນະກຳມະການຄຸ້ມຄອງແຫ່ງຊາດ ເພື່ອແກ້ໄຂບັນຫາລະເບີດບໍ່ທັນແຕກ ທີ່ຕົກຄ້າງຢູ່ ສປປ ລາວ (ຄຊກລ)
- ຄະນະພັດທະນາຊົນນະບົດ ແລະ ລຶບລ້າງຄວາມທຸກຍາກຂັ້ນສູນກາງ (ຄພທສ)
- ອຳນາດການປົກຄອງແຂວງ ແລະ ເມືອງ ຂອງແຂວງຊຽງຂວາງ ແລະ ແຂວງຄຳມ່ວນ
- ກອງທຶນຊ່ວຍເຫຼືອເດັກສາກົນ
- ອົງການສຸພະນິມິດລາວ
- ອົງການເຮວິທັດ
- ອົງການແຄສາກົນ
- ອົງການຄາລິທັດ
- ອົງການຊີອາເອັດສ໌
- ອົງການເວີອີດູເຄເຊັ່ນ
- ສາມະຄົມປັບປຸງຄຸນນະພາບຊີວິດ
- ກາແດງ
- ອົງການປັບປຸງທາງດ້ານສຸຂະພາບ
- ອົງການພັດທະນາສາມຫຼ່ຽມ

## ບຸກຄະລາກອນໃນປີ 2013:

| ພະນັກງານຫ້ອງການ | | | | ພະນັກງານຝ່າຍປະຕິບັດງານ (ພາກສະໜາມ) | | | |
|---|---|---|---|---|---|---|---|
| ຄົນລາວ | | ຄົນຕ່າງປະເທດ | | ຄົນລາວ | | ຄົນຕ່າງປະເທດ | |
| ຊາຍ | ຍິງ | ຊາຍ | ຍິງ | ຊາຍ | ຍິງ | ຊາຍ | ຍິງ |
| 38 | 14 | 2 | 1 | 180 | 70 | 3 | 0 |

## ຕົວເລກສະຖິຕິໃນປີ 2013:

| ການໂຄສະນາສຶກສາຄວາມສ່ຽງຈາກ ລບຕ ການໂຄສະນາຊຸມຊົນ | | | | | ການຊ່ວຍເຫຼືອຜູ້ຖືກເຄາະຮາຍຈາກ ລບຕ ຈຳນວນຜູ້ທີ່ໄດ້ຮັບການຊ່ວຍເຫຼືອ | | ໜ້າວຽກສຳຫຼວດ | | ໜ້າວຽກທຳລາຍເຄື່ອນທີ່ | |
|---|---|---|---|---|---|---|---|---|---|---|
| | ຜູ້ໄດ້ຮັບຜົນປະໂຫຍດ | | | | | | | | | |
| ຈ/ນຄັ້ງ ຍ້ຽມຢາມ | ໃຫຍ່ ຊາຍ | ໃຫຍ່ ຍິງ | ເດັກ ຊາຍ | ເດັກຍິງ | ທາງດ້ານ ດານເງິນ | ທາງດ້ານ ການແພດ | ຈ/ນບ້ານ | ຈ/ນຄັ້ງ ຢ້ຽມຢາມ | ຈ/ນ ບ້ານ | ຈ/ນຄັ້ງຢ້ຽມ ຢາມ |
| 23 | 64 | 55 | 427 | 375 | ບໍ່ມີ | ບໍ່ມີ | 59 | 240 | 86 | 1,374 |
| ລວມ | 64 | 55 | 427 | 375 | ບໍ່ມີ | ບໍ່ມີ | 59 | 240 | 86 | 1,374 |

### ເນື້ອທີ່ກວດກູ້:

| ຜ່ານການກວດກູ້ (ເຮັກຕາ) | | | ຜ່ານການສຳຫຼວດດ້ານວິຊາການ (ເຮັກຕາ) | | |
|---|---|---|---|---|---|
| ດິນກະສິກຳ | ດິນພັດທະນາ | ລວມ | ດິນກະສິກຳ | ດິນພັດທະນາ | ລວມ |
| 2,180,941 | 93,909 | 2,274,849 | 0 | 0 | 0 |

### ລະເບີດທີ່ພົບ, ຖືກຍ້າຍ ແລະ ຖືກທຳລາຍ:

| ລະເບີດທີ່ຖືກຍ້າຍ/ຖືກທຳລາຍ | | | | | |
|---|---|---|---|---|---|
| ໜ້າວຽກ | ບົມໃຫຍ່ | ລະເບີດລູກຫວ່ານ | ລະເບີດຝັງດິນ | ລບຕ ຊະນິດອື່ນໆ | ລວມ |
| ການທຳລາຍເຄື່ອນທີ່ | 5 | 2,019 | 0 | 554 | 2,578 |
| ການກວດກູ້ | 3 | 3,407 | 0 | 1,022 | 4,432 |
| *ລວມ* | ***8*** | ***5,426*** | ***0*** | ***1,576*** | ***7,010*** |

## ສະຖານທີ່ປະຕິບັດງານ:

| ໜ້າວຽກ | ແຂວງ ແລະ ເມືອງ ທີ່ປະຕິບັດກິດຈະກຳຢູ່ |
|---|---|
| ການກວດກູ້ | ຄຳມ່ວນ ແລະ ຊຽງຂວາງ |
| ການສຳຫຼວດ ແລະ ການທຳລາຍເຄື່ອນທີ່ | ຄຳມ່ວນ ແລະ ຊຽງຂວາງ |
| ການໂຄສະນາສຶກສາຄວາມສ່ຽງຈາກ ລບຕ | ຄຳມ່ວນ ແລະ ຊຽງຂວາງ |

## ທາງດ້ານການເງິນ:

### ການໃຊ້ຈ່າຍໃນປີ 2013 (ໂດລາສະຫະລັດ)

| ລາຍການ | ຈຳນວນ |
|---|---|
| ຄ່າໃຊ້ຈ່າຍສຳລັບບຸກຄະລາກອນ | 2,285,000 |
| ຄ່າໃຊ້ຈ່າຍສຳລັບການປະຕິບັດງານ | 833,000 |
| ຄ່າໃຊ້ຈ່າຍສຳລັບການປະຕິບັດງານພິເສດ | 0 |
| ຄ່າໃຊ້ຈ່າຍສຳລັບຊື້ວັດຖຸ-ຊັບສິນຄົງທີ່ | 139,000 |
| ຄ່າໃຊ້ຈ່າຍສຳລັບຊື້ວັດຖຸ-ຊັບສິນບໍ່ຄົງທີ່ | 1,932,000 |
| *ລວມ* | ***5,189,000*** |

ການສະໜັບສະໜູນຂອງຜູ້ໃຫ້ທຶນ ໃນປີ 2013 (ໂດລາສະຫະລັດ)

| ຜູ້ໃຫ້ທຶນ | ທຶນທີ່ໄດ້ຮັບໃນປີ 2013 |
|---|---:|
| ກອງທຶນອາຕາດິດ | 188,000 |
| ດີຟຽດ | 428,000 |
| ດີຟີດ | 1,428,000 |
| ສະຫະພາບເອີລົບ | 122,000 |
| ທຶນບໍລິຈາກຂອງສາທາລະນະ | 25,000 |
| ສະຫະລັດອາເມລິກາ-ຫ້ອງການຫຼຸດຜ່ອນອາວຸດ ແລະ ການຕໍ່ສູ້ | 2,998,000 |
| *ລວມ* | ***5,189,000*** |

## ການໂອນເງິນ:

ການໂອນເງິນໃຫ້ແກ່ອົງການປະຕິບັດງານອື່ນໆ (ໂດລາສະຫະລັດ)

| ມີອົງການໃດແດ່ ທີ່ທ່ານໂອນເງິນໃຫ້? | ຈຳນວນ |
|---|---:|
| ຄາລ | 13,000 |
| ສູນເກັບກູ້ລະເບີດຝັງດິນສາກົນ ເພື່ອມະນຸດສະທຳຂອງເຈນນີວາ | 9,000 |
| *ລວມ* | ***22,000*** |

# ອົງການຊ່ວຍເຫຼືອລ້າຂອງປະຊາຊົນນ໋ອກແວ (ເອັນພີເອ)

## ກິດຈະກຳໃນປີ 2013:

ອົງການເອັນພີເອ ໄດ້ດຳເນີນຊຸດການສຳຫຼວດ 3 ຢ່າງໃນປີ 2013, ຊຶ່ງຊຸດການສຳຫຼວດຈະປະກອບມີ (ການສຳຫຼວດແບບທົ່ວໄປ ແລະ ການສຳຫຼວດດ້ານວິຊາການ), ການກວດກູ້ ແລະ ການທຳລາຍເຄື່ອນທີ່. ໃນປີ 2013, ອົງການໄດ້ສຸມໃສ່ດຳເນີນການສຳຫຼວດເພື່ອກຳນົດພື້ນທີ່ຕົກຄ້າງຂອງລະເບີດລູກຫວ່ານຢ່າງເຕັມສ່ວນ, ຊຶ່ງວິທີການສຳຫຼວດດັ່ງກ່າວນີ້ໄດ້ເລີ່ມນຳໃຊ້ໃນທ້າຍປີ2010, ການສຳຫຼວດເພື່ອກຳນົດພື້ນທີ່ຕົກຄ້າງຂອງລະເບີດລູກຫວ່ານ ແມ່ນພື້ນຖານການສຳຫຼວດເພື່ອຊອກຫາພື້ນທີ່ການຕົກຄ້າງຂອງລະເບີດລູກຫວ່ານຢູ່ໃນ ສປປ ລາວ. ການສຳຫຼວດເພື່ອກຳນົດພື້ນທີ່ຕົກຄ້າງຂອງລະເບີດລູກຫວ່ານ ແມ່ນອົງການຈະດຳເນີນທັງການສຳຫຼວດແບບທົ່ວໄປ ແລະ ການສຳຫຼວດດ້ານວິຊາການຢູ່ໃນແຕ່ລະບ້ານໃນ 3 ແຂວງທີ່ພວກເຮົາເຮັດວຽກຢູ່. ນອກຈາກຊອກຫາລະເບີດລູກຫວ່ານແລ້ວ, ພວກເຮົາ ຍັງໄດ້ກຳນົດ ລບຕ ຊະນິດອື່ນໆອີກດ້ວຍໃນເວລາເຮັດການສຳຫຼວດ.

ນອກຈາກນັ້ນ, ອົງການເອັນພີເອ ຍັງໄດ້ດຳເນີນການກວດກູ້ ລບຕ ອອກຈາກເນື້ອທີ່ດິນ ຕາມການສະເໜີຂອງອຳນາດການປົກຄອງທ້ອງຖິ່ນອີກດ້ວຍ ໂດຍນຳໃຊ້ການສຳຫຼວດເພື່ອກຳນົດພື້ນທີ່ຕົກຄ້າງຂອງລະເບີດລູກຫວ່ານໄປນຳ.

## ຜົນສຳເລັດໃນປີ 2013:

ຜົນສຳເລັດໃນປີ 2013 ຂອງອົງການເອັນພີເອ ແມ່ນເປັນທີ່ໜ້າພໍໃຈ ຍ້ອນວ່າ ພວກເຮົາ ສາມາດດຳເນີນການສຳຫຼວດໄດ້ຫຼາຍກວ່າ 60 ຕາຕະລາງກິໂລແມັດຢູ່ແຂວງເຊກອງ, ສາລະວັນ ແລະ ອັດຕະປື, ສາມາດສ້າງພື້ນທີ່ອັນຕະລາຍໄດ້ 438 ຈຸດ ໃນເນື້ອທີ່ 26 ຕາຕະລາງກິໂລແມັດ. ໃນລະຫວ່າງການສຳຫຼວດເພື່ອກຳນົດພື້ນທີ່ຕົກຄ້າງຂອງລະເບີດລູກຫວ່ານ ອົງການເອັນພີເອ ສາມາດທຳລາຍ ລບຕ ທີ່ເຫັນໄດ້ຫຼາຍກວ່າ 10,000 ສິ້ນສ່ວນ. ນອກຈາກນັ້ນ, ອົງການເອັນພີເອ ຍັງສາມາດກວດກູ້ເນື້ອທີ່ດິນກະສິກຳໄດ້ 400,000 ຕາແມັດ, ຊຶ່ງມີຜູ້ໄດ້ຮັບຜົນປະໂຫຍດປະມານ 300 ຄົນ.

ໃນປີ 2013 ອົງການເອັນພີເອ ໄດ້ຂະຫຍາຍກຳລັງຂຶ້ນຕື່ມ ລວມທັງໝົດ 400 ຄົນ. ມາຮອດທ້າຍປີ 2013, ອົງການເອັນພີເອ ມີທີມງານກວດກູ້ ທັງໝົດ 18 ທີມງານ ຢູ່ໃນ 3 ແຂວງ.

## ຂ່າວດີ:

ຂ່າວດີຂອງອົງການເອັນພີເອ ແມ່ນການນຳໃຊ້ວິທີການສຳຫຼວດເພື່ອກຳນົດພື້ນທີ່ຕົກຄ້າງຂອງລະເບີດລູກຫວ່ານຢ່າງມີປະສິດທິຜົນ. ຮອດປະຈຸບັນນີ້, ອົງການເອັນພີເອ ສາມາດກຳນົດພື້ນທີ່ອັນຕະລາຍຈາກລະເບີດລູດຫວ່ານ ໄດ້ຫຼາຍກວ່າ 550 ຈຸດ ແລະ ໄດມີການລາຍງານໃຫ້ຫ້ອງການ ຄຊກລ ເພື່ອເອົາເຂົ້າໄວ້ໃນລະບົບຖານຂໍ້ມູນອິມສະມາ. ສາມາດເວົ້າໄດ້ວ່າ ນີ້ແມ່ນຂໍ້ມູນຄັ້ງທຳອິດກ່ຽວກັບການກຳນົດພື້ນທີ່ອັນຕະລາຍຈາກລະເບີດລູກຫວ່ານທີ່ເຄີຍໄດ້ເອົາເຂົ້າໄວ້ໃນລະບົບຖານຂໍ້ມູນອິມສະມາ, ຊຶ່ງຫ້ອງການ ຄຊກລ ສາມາດກຳນົດເປັນພື້ນທີ່ໃຫ້ບັນດາອົງການປະຕິບັດງານລົງໄປປະຕິບັດການກວດກູ້ ລບຕ ອີງຕາມການຈັດລຽງບູລິມະສິດ.ພວກເຮົາຮູ້ສຶກດີໃຈຫຼາຍທີ່ການສຳຫຼວດໄດ້ມີການປຶກສາຫາລືກັນຢູ່ໃນ ສປປ ລາວ- ໄດ້ມີການຈັດລຽງບູລິມະສິດການສຳຫຼວດໃນພື້ນທີ່ບ່ອນທີ່ຈະມີການພັດທະນາຢ່າງແທ້ຈິງ, ແຕ່ໃນຂອບເຂດທົ່ວປະເທດ ກໍ່ຕ້ອງໄດ້ມີການສຳຫຼວດເຊັ່ນດຽວກັນ ແລະ ຖ້າມີການຕົກລົງກັນໄດ້ວິທີການສຳຫຼວດທີ່ອົງການເອັນພີເອເຮັດຢູ່ນີ້ແມ່ນຈະມີຜົນປະໂຫຍດຫຼາຍ.

## ວຽກຈຸດສຸມໃນປີ 2014:

ໃນປີ 2014, ອົງການເອັນພີເອ ຈະສືບຕໍ່ເຮັດການສຳຫຼວດ ແລະ ການສຳຫຼວດເພື່ອກຳນົດພື້ນທີ່ຕົກຄ້າງຂອງລະເບີດລູກຫວ່ານ ຍັງຄົງຈະແມ່ນວິທີການຕົ້ນຕໍ ແລະ ຍັງຈະສືບຕໍ່ໃນອະນາຄົດ. ພວກເຮົາຖືໄດ້ວ່າ ເປັນອົງການປະຕິບັດງານໜຶ່ງ ທີ່ມີປະສົບການບໍ່ໜ້ອຍໃນການປະຕິບັດວຽກງານແກ້ໄຂບັນຫາ ລບຕ ຢູ່ ສປປ ລາວ ແລະ ພວກເຮົາຄາດວ່າ ທຶນຊ່ວຍເຫຼືອເພີ່ມເຕີມແມ່ນຈະເຂົ້າມາໃໝ່ເພື່ອນຳໃຊ້ເຂົ້າໃນການດຳເນີນການສຳຫຼວດໃນປີ 2014 ໂດຍຈະສຸມໃສ່ການສຳຫຼວດເປັນຕົ້ນຕໍ. ທຶນຊ່ວຍເຫຼືອໃໝ່ນີ້ ອາດຈະນຳໃຊ້ເຂົ້າໃນການເຮັດທົດລອງສຳຫຼວດຢູ່ໃນບາງຈຸດສຸມພັດທະນາຂອງລັດຖະບານ ກໍ່ໄດ້.

ນອກຈາກນັ້ນ, ພວກເຮົາກໍ່ຈະເຮັດການກວດກູ້ເຊັ່ນດຽວກັນຢູ່ໃນເຂດພື້ນທີ່ບູລິມະສິດ ແລະ ຈະປະສານສົມທົບກັບອຳນາດການປົກຄອງທ້ອງຖິ່ນ.

## ຄູ່ຮ່ວມງານ:

- ຫ້ອງການ ຄຊກລ
- ຄກລ
- ອົງການແຄສາກົນ
- ອຳນາດການປົກຄອງແຂວງ ແລະ ເມືອງ

**ພວກເຮົາດຳເນີນງານ ເພື່ອປັບປຸງ ແລະ ຮັກສາສາຍສຳພັນທີ່ດີໃນການເຮັດວຽກຮ່ວມກັບຄູ່ຮ່ວມງານຕ່າງໆ.**



ພະນັກງານອົງການເອັນພີເອນຳໃຊ້ ແທບເລຼດ ສຳລັບການລາຍງານ.



ຫົວໜ້າທີມງານສຳຫຼວດເພື່ອກຳນົດພື້ນທີ່ລະເບີດລູກຫວ່ານ ຕົກຄ້າງ ກຳລັງໃຫ້ຄຳແນະນຳແກ່ລູກທີມຂອງຕົນເອງ.

## ບຸກຄະລາກອນໃນປີ 2013:

| ພະນັກງານຫ້ອງການ | | | | ພະນັກງານຝ່າຍປະຕິບັດງານ (ພາກສະໜາມ) | | | |
|---|---|---|---|---|---|---|---|
| ຄົນລາວ | | ຄົນຕ່າງປະເທດ | | ຄົນລາວ | | ຄົນຕ່າງປະເທດ | |
| ຊາຍ | ຍິງ | ຊາຍ | ຍິງ | ຊາຍ | ຍິງ | ຊາຍ | ຍິງ |
| 40 | 16 | 4 | 0 | 243 | 77 | 3 | 0 |

## ຕົວເລກສະຖິຕິໃນປີ 2013:

| ການໂຄສະນາສຶກສາຄວາມສ່ຽງຈາກ ລບຕ ການໂຄສະນາສຶກສາຊຸມຊົນ | | | | | ການຊ່ວຍເຫຼືອຜູ້ຖືກເຄາະຮ້າຍຈາກ ລບຕ ຈຳນວນຜູ້ທີ່ໄດ້ຮັບການຊ່ວຍເຫຼືອ | | ການສຳຫຼວດ | | ການທຳລາຍເຄື່ອນທີ່ | |
|---|---|---|---|---|---|---|---|---|---|---|
| | ຜູ້ໄດ້ຮັບຜົນປະໂຫຍດ | | | | | | | | | |
| ຈ/ນຄັ້ງ ຢ້ຽມຢາມ | ໃຫຍ່ ຊາຍ | ໃຫຍ່ ຍິງ | ເດັກ ຊາຍ | ເດັກຍິງ | ດ້ານການ ເງິນ | ດ້ານການ ແພດ | ຈ/ນ ບ້ານ | ຈ/ນຄັ້ງ ຢ້ຽມຢາມ | ຈ/ນ ບ້ານ | ຈ/ນຄັ້ງ ຢ້ຽມຢາມ |
| 0 | 0 | 0 | 0 | 0 | 0 | 0 | 234 | 234 | 44 | 44 |

## ເນື້ອທີ່ກວດກູ້:

| ຜ່ານການກວດກູ້ (ຮຕ) | | | ຜ່ານການສຳຫຼາດດ້ານວິຊາການ ເພື່ອກຳນົດພື້ນທີ່ລະເບີດລູກຫວ່ານຕົກຄ້າງ (ຮຕ) | | |
|---|---|---|---|---|---|
| ດິນກະສິກຳ | ດິນພັດທະນາ | ລວມ | ດິນກະສິກຳ | ດິນພັດທະນາ | ລວມ |
| 0 | 34.5 | 34.5 | 9,169 | 0 | 9,169 |

### ລະເບີດທີ່ພົບ, ຖືກຍ້າຍ ແລະ ຖືກທຳລາຍ:

| ລະເບີດທີ່ຖືກຍ້າຍ/ຖືກທຳລາຍ | | | | | |
|---|---|---|---|---|---|
| ໜ້າວຽກ | ບົມໃຫຍ່ | ລະເບີດລູກຫວ່ານ | ລະເບີດຝັງດິນ | ລບຕ ຊະນິດອື່ນໆ | ລວມ |
| ການທຳລາຍເຄື່ອນທີ່ | 0 | 0 | | 2,177 | 2,177 |
| ການກວດກູ້ | 0 | 770 | 0 | 52 | 822 |
| ສຳຫຼວດດ້ານວິຊາການ | 0 | 9,729 | 0 | 0 | 9,729 |
| *ລວມ* | ***0*** | ***10,499*** | ***0*** | ***2,229*** | ***12,728*** |

## ພື້ນທີ່ປະຕິບັດງານ:

| ໜ້າວຽກ | ແຂວງ ແລະ ເມືອງ ທີ່ປະຕິບັດກິດຈະກຳ |
|---|---|
| ການກວດກູ້ | ເມືອງສາລະວັນ-ແຂວງສາລະວັນ, ເມືອງທ່າແຕງ-ແຂວງເຊກອງ |
| ການສຳຫຼວດ ແລະ ການທຳລາຍເຄື່ອນທີ່ | ທຸກໆເມືອງໃນແຂວງສາລະວັນ, ແຂວງເຊກອງ ແລະ ແຂວງອັດຕະປື |

## ທາງດ້ານການເງິນ:

### ການໃຊ້ຈ່າຍໃນປີ 2013 (ໂດລາສະຫະລັດ)

| ລາຍການ | ຈຳນວນ |
|---|---:|
| ຄ່າໃຊ້ຈ່າຍສຳລັບບຸກຄະລາກອນ | 1,900,000 |
| ຄ່າໃຊ້ຈ່າຍສຳລັບການປະຕິບັດງານ | 1,600,000 |
| ຄ່າໃຊ້ຈ່າຍສຳລັບການປະຕິບັດງານພິເສດ | 0 |
| ຄ່າໃຊ້ຈ່າຍສຳລັບຊື້ວັດຖຸ-ຊັບສິນຄົງທີ່ | 450,000 |
| ຄ່າໃຊ້ຈ່າຍສຳລັບຊື້ວັດຖຸ-ຊັບສິນບໍ່ຄົງທີ່ | 200,000 |
| *ລວມ* | ***4,150 ,000*** |

### ການສະໜັບສະໜູນຂອງຜູ້ໃຫ້ທຶນ ໃນປີ 2013 (ໂດລາສະຫະລັດ)

| ຜູ້ໃຫ້ທຶນ | ທຶນທີ່ໄດ້ຮັບໃນປີ 2013 |
|---|---:|
| ກະຊວງການຕ່າງປະເທດນໍ່ອກແວ | 2,000,000 |
| ໂທລະພາບຂອງນໍ່ອກແວ | 1,250,000 |
| ສະພະພັນການຄ້າຂອງນໍ່ອກແວ | 150,000 |
| ກະຊວງການຕ່າງປະເທດອາເມລິກາ-ຫ້ອງການຫຼຸດຜ່ອນອາວຸດ ແລະ ການສູ້ຮົບ | 750,000 |
| *ລວມ* | ***4,150,000*** |

# SODI! ອົງການສາກົນຮ່ວມໃຈບໍລິການ (ໂຊດີ)

## ກິດຈະກຳໃນປີ 2013:

ອົງການໂຊດີ ໄດ້ສືບຕໍ່ປະຕິບັດໂຄງການຂອງຕົນ ພາຍໃນແຂວງບໍລິຄຳໄຊ ໂດຍສຸມໃສ່ເມືອງຄຳເກີດ. ອົງການໂຊດີ ໄດ້ສຸມໃສ່ເກັບກູ້ ລບຕ ໃນເຂດສະໜາມສູ້ຮົບເກົ່າຢູ່ໃນເມືອງຄຳເກີດ. ນອກຈາກນັ້ນ, ອົງການໂຊດີ ຍັງດຳເນີນການທຳລາຍເຄື່ອນທີ່. ນອກຈາກພື້ນທີ່ ທີ່ອົງການໂຊດີ ຮັບຜິດຊອບຢູ່ແລ້ວ ອົງການ ຍັງສາມາດຕອບຮັບການທຳລາຍ ລບຕ ທີ່ພົບເຫັນແບບເຄື່ອນທີ່ ຢູ່ເມືອງອື່ນໆພາຍໃນແຂວງບໍລິຄຳໄຊອີກດ້ວຍ. ທຸກໆ ລບຕ ຕົກຄ້າງ ທີ່ພົບເຫັນຢູ່ເທິງໜ້າດິນ ແມ່ນສາມາດສະເໜີຂໍການກວດກູ້ ຜ່ານໜ່ວຍງານໂຄສະນາຊຸມຊົນ ຫຼື ໜ່ວຍງານໂຄສະນາສຶກສາຄວາມສ່ຽງຈາກ ລບຕ ຫຼື ໂທເຂົ້າມາສາຍດ່ວນຫາອົງການໂຊດີເລີຍກໍ່ໄດ້. ໃນແຕ່ລະມື້ ໜ່ວຍງານກວດກູ້ ຫຼື ໜ່ວຍງານໂຄສະນາສຶກສາຄວາມສ່ຽວຈາກ ລບຕ ແມ່ນມີການຕິດຕໍ່ພົບພັນກັນຢ່າງເປັນປະຈຳ ໂດຍສະເພາະແມ່ນພື້ນທີ່ບູລິມະສິດການພັດທະນາເສດຖະກິດ-ສັງຄົມທີ່ນອນຢູ່ໃນເຂດສະໜາມສູ້ຮົບເກົ່າ ແມ່ນພວກເຮົາ ຈະມີໜ່ວຍງານທຳລາຍເຄື່ອນທີ່ປະຈຳຢູ່. ໜ້າທີ່ສຳຄັນຂອງໜ່ວຍງານໂຄສະນາສຶກສາຄວາມສ່ຽງຈາກ ລບຕ ແລະ ໜ່ວຍງານກວດກູ້ ແມ່ນສະໜອງການໂຄສະນາສຶກສາຄວາມສ່ຽງຈາກ ລບຕ ໃຫ້ແກ່ເດັກນ້ອຍ ແລະ ຜູ້ໃຫຍ່ ທີ່ດຳລົງຊີວິດໃນເຂດຊຸມຊົນທີ່ໄດ້ຮັບຜົນກະທົບ ແນໃສ່ໃຫ້ເຂົາເຈົ້າ ໄດ້ຮັບຮູ້ຄວາມອັນຕະລາຍ ແລະ ວິທີການຫຼີກລ້ຽງໃນເວລາເຫັນ ລບຕ ເປັນຕົ້ນແມ່ນ ວິທີການປັກໝາຍບ່ອນທີ່ພົບເຫັນ ລບຕ ຢ່າງປອດໄພ ແລະ ວິທີການໂທສາຍດ່ວນຫາອົງການໂຊດີ ເພື່ອໄປທຳລາຍ. ນອກຈາກນັ້ນ, ໜ່ວຍງານໂຄສະນາສຶກສາຄວາມສ່ຽງ ຍັງເຮັດໜ້າທີ່ໃນການເກັບກຳຂໍ້ມູນ ລບຕ ເພື່ອສະໜັບສະໜູນໃຫ້ແກ່ໜ່ວຍງານສຳຫຼວດອີກດ້ວຍ. ໜ່ວຍງານໂຄສະນາສຶກສາຄວາມສ່ຽງ ໄດ້ຕິດຕາມ ແລະ ປະເມີນຜົນຕົວຈິງສະໜາມເກັບກູ້ທີ່ສຳເລັດແລ້ວ ພາຍຫຼັງມອບຮັບໃຫ້ເຈົ້າຂອງດິນ ເພື່ອຮັບປະກັນວ່າ ພື້ນທີ່ເກັບກູ້ໄປແລ້ວນັ້ນ ໄດ້ຖືກນຳໃຊ້ຕາມຈຸດປະສົງທີ່ສະເໜີມາໃນເບື້ອງຕົ້ນຫຼືບໍ. ການປະຕິບັດແບບນີ້ ແມ່ນຈະນຳມາຊຶ່ງການສ້າງສາຍພົວພັນຢ່າງໃກ້ຊິດກັບສະມາຊິກຂອງຊຸມຊົນ ແລະ ສ້າງຄວາມສະດວກໃຫ້ອົງການໂຊດີ ໄດ້ເຄື່ອນໄຫວວຽກໄດ້ຢ່າງອິດສະຫຼະ ໂດຍໄດ້ຮັບການສະໜັບສະໜູນຈາກຊຸມຊົນ.

**ບູລິມະສິດໃນການກວດກູ້ ປະກອບມີ:**

- ເປັນດິນກະສິກຳ
- ເປັນດິນປຸກສ້າງໂຮງຮຽນ
- ເປັນພື້ນທີ່ປຸກສ້າງເຮືອນຢູ່
- ເປັນພື້ນທີ່ຕັ້ງບ້ານໃໝ່

ໃນທົກເດືອນທ້າຍປີ, ອົງການໂຊດີລາວ ໄດ້ປັບປຸ່ງການປະຕິບັດງານຂອງຕົນຈາກການທີ່ສຸມໃສ່ແຕ່ການສະເໜີຮ້ອງຂໍເພື່ອໄປເກັບກູ້ມາເປັນການເກັບກູ້ ໂດຍອີງໃສ່ຫຼັກຖານຂອງ ລບຕ ທີ່ພົບເຫັນຕົວຈິງ. ເພື່ອໃຫ້ສາມາດຮູ້ໄດ້ພື້ນທີ່ຕົກຄ້າງຂອງ ລບຕ ໄດ້ຢ່າງຖືກຕ້ອງ ແລະ ໜ້າເຊື່ອຖືໄດ້ ອົງການໂຊດີ ໄດ້ເພີ່ມທີມງານສຳຫຼວດດ້ານວິຊາຂຶ້ນຕື່ມເປັນ 4 ທີມ ເພື່ອລົງສຳຫຼວດຢູ່ຕາມບ້ານ ແລະ ຊຸມຊົນຕ່າງໆ ເພື່ອເກັບກຳຫຼັກຖານ ລບຕ ຕົກຄ້າງ ເພື່ອນຳໄປກຳນົດເປັນບູລິມະສິດໃນການກວດກູ້ຕໍ່ໄປ. ນອກຈາກນັ້ນ, ອົງການໂຊດີ ຍັງໄດ້ຮັບຮອງເອົາຫຼັກການດຳເນີນການເກັບກູ້ ແບບອີງໃສ່ການວິເຄາະຂໍ້ມູນເພື່ອປົດປ່ອຍເນື້ອທີ່ດິນ ໂດຍບໍ່ປະຕິບັດການເກັບກູ້.

ທີມງານທີ່ສ້າງສຳເລັດໃນ 6 ເດືອນທ້າຍປີ ປະກອບມີ:

- 2 ທີມງານກວດກູ້ເຂດສະໜາມສູ້ຮົບເກົ່າ ມີ 2 ພະແນກໃນແຕ່ລະທີມ.
- 1 ທີມງານທຳລາຍເຄື່ອນທີ່.
- 4 ທີມງານສຳຫຼວດ
- 1 ທີມງານກວດກາຄຸ້ມຄອງຄຸນນະພາບ
- 1 ທີມງານໂຄສະນາສຶກສາຄວາມສ່ຽງຈາກ ລບຕ ແລະ 1 ທີມງານໂຄສະນາສຶກສາຊຸມຊົນ.

ທີມງານປະຕິບັດງານເຫຼົ່ານີ້ ໄດ້ຮັບການສະໜັບສະໜູນຈາກທີມງານສະໜອງຈັດຊື້, ການເງິນ ແລະ ບໍລິຫານ. ຊ່ຽວຊານຂອງໜ່ວຍງານຄຸ້ມຄອງຄຸນນະພາບ ໄດ້ສະໜັບສະໜູນການພັດທະນາລະບົບຄຸ້ມຄອງຄຸນນະພາບ ແລະ ໄດ້ພັດທະນາລະບຽບການ ແລະ ຂັ້ນຕອນຕ່າງໆດີຂຶ້ນກວ່າເກົ່າ. ພ້ອມດຽວນັ້ນ, ການໃຫ້ຊາວບ້ານເຂົ້າມາຊ່ວຍໃນການກະກຽມພື້ນທີ່ກ່ອນການກວດກູ້ນັ້ນ ກໍ່ແມ່ນຍັງສືບຕໍ່ປະຕິບັດຢູ່ເຊັ່ນດຽວກັນ.

## ຜົນສຳເລັດຕົ້ນຕໍໃນປີ 2013:

ເປົ້າໝາຍຕ່າງໆ ທີ່ກຳນົດໃວ້ໃນແຜນວຽກປີ 2013 ບັນລຸໄດ້ເກືອບທັງໝົດ. ໃນທົກເດືອນທ້າຍປີ ແນວຄວາມຄິດຂອງການປະຕິບັດງານເກັບກູ້ ທີ່ປ່ຽນຈາກການຮັບໃບສະເໜີຈາກເຈົ້າຂອງດິນໃຫ້ໄປເກັບກູ້ ມາເປັນການຮັບໃບສະເໜີເພື່ອຂໍການເກັບກູ້ ໂດຍອີງໃສຂໍ້ມູນຫຼັກຖານການຕົກຄ້າງຂອງ ລບຕ ທີ່ພົບເຫັນ. ສ່ວນການປ່ຽນແປງດ້ານອື່ນໆກໍ່ແມ່ນການຮັບຮອງເອົາຫຼັກການດຳເນີນການເກັບກູ້ ແບບອີງໃສ່ການວິເຄາະຂໍ້ມູນເພື່ອປົດປ່ອຍເນື້ອທີ່ດິນ ໂດຍບໍ່ປະຕິບັດການເກັບກູ້. ວິທີການແບບນີ້ ແມ່ນການເກັບກູ້ໄປຈົນຮອດຈຸດໃດໜຶ່ງແລ້ວບໍ່ພົບເຫັນຫຼັກຖານ ແລະ ຈະດຳເນີນການເກັບກູ້ອອກ ໄປຕື່ມອີກຈາກຈຸດທີ່ພົບເຫັນຫຼັກຖານນັ້ນ ຫ່າງອອກໄປ (50ມ). ວິທີການນີ້ ແມ່ນຈະຊ່ວຍຫຼຸດຜ່ອນໄດ້ ເນື້ອທີ່ດິນທີ່ບໍ່ຈຳເປັນຕ້ອງເກັບກູ້ ຍ້ອນບໍ່ມີ ລບຕ ຕົກຄ້າງ. ວິທີການແບບໃໝ່ນີ້ ແມ່ນການພັດທະນາເຄື່ອງມືໃນການສຳຫຼວດອັນໃໝ່, ສິ່ງຜົນໃຫ້ມີການກຳນົດບຸລິມະສິດໜ້າວຽກແບບໃໝ່ ແລະ ມີການສ້າງລະບົບຄຸ້ມຄອງຂໍ້ມູນທີ່ດີຂຶ້ນກວ່າເກົ່າ. ໂຄງຮ່າງຂອງໜ່ວຍງານຕ່າງໆເຫຼົ່ານັ້ນ ແມ່ນຖືກປ່ຽນແປງໄປ ຕາມສະພາບຕົວຈິງ. ອີງໃສ່ຜົນໄດ້ຮັບ, ມີເນື້ອທີ່ຫຼາຍກວ່າ 2,700,000 ຕາແມັດ ສາມາດປົດປ່ອຍດິນຜ່ານການສຳຫຼວດດ້ານວິຊາການ ແລະ ແບບທົ່ວໄປ ຢູ່ພາຍໃນ 3 ໝູ່ບ້ານ. ເນື້ອທີ່ຫຼາຍກວ່າ 948,000 ຕາແມັດ ໄດ້ຮັບການເກັບກູ້ ໂດຍໜ່ວຍງານເກັບກູ້ພື້ນທີ່ສະໜາມສູ້ຮົບເກົ່າ ແລະ ມີເນື້ອທີ່ດິນປະມານ 140,000 ຕາແມັດ ໄດ້ຮັບການເກັບກູ້ ໂດຍໜ່ວຍງານເກັບກູ້ພື້ນທີ່ຂະໜາດນ້ອຍ. ພົບເຫັນ ລບຕ ເກືອບ 1,200 ໜ່ວຍ ແລະ ຖືກທຳ

ລາຍໝົດໃນປີນັ້ນ. ຜ່ານການດຳເນີນກິດຈະກຳໂຄສະນາສຶກສາຄວາມສ່ຽງຈາກ ລບຕ ມີຜູ້ເຂົ້າຮ່ວມຮັບຟັງທັງໝົດ 7,000 ຄົນ. ກິດຈະກຳທີ່ຕິດພັນກັບໜ້າວຽກໂຄສະນາສຶກສາຄວາມສ່ຽງຈາກ ລບຕ ມີກິດຈະກຳພົວພັນກັບຊຸມຊົນ ເພື່ອຊຸກຍູ້ໃຫ້ປະຊາຊົນໃນທ້ອງຖິ່ນ ໄດ້ເຂົ້າມາມີສ່ວນຮ່ວມໃນການວາງແຜນ ແລະ ປະສານງານກິດຈະກຳສຳຫຼວດ.

## ຂ່າວໂສກເສົ້າ:

ໃນປີ 2013 ອົງການໂຊດີ ໄດ້ປະເຊີນໜ້າກັບບັນຫາຫຍຸ້ງຍາກ ແລະ ສິ່ງທ້າທາຍຫຼາຍຢ່າງ. ຫົວໜ້າໂຄງການ ໄດ້ຖືກຍ້າຍອອກໂດຍໄດ້ຮັບການແຈ້ງເຕືອນບອກລ່ວງໜ້າແບບກະທັນຫັນໃນທ້າຍປີ 2012 ແລະ ຈະມີຜູ້ຈັດການວ່າການແທນມາຮັບຕຳແໜ່ງນີ້ແທນຊົ່ວຄາວ; ອຳນວຍການຄົນໃໝ່ປະຈຳພາກພື້ນ ທ່ານ ໂຈຫາເນັກ ອໍເດັນດໍ ທີ່ຫາກໍ່ເຂົ້າມາຮັບຕຳແໜ່ງໃໝ່ໃນເດືອນກໍລະກົດ ໄດ້ເສຍຊີວິດລົງຢ່າງບໍ່ຄາດຝັນໃນເດືອນກັນຍາ ຈຶ່ງບໍ່ສາມາດແຕ່ງຕັ້ງຜູ້ຂຶ້ນມາແທນໃໝ່ໄດ້ກ່ອນທ້າຍເດືອນຕຸລາ. ດັ່ງນັ້ນ, ໂຄງການຈຶ່ງໄດ້ດຳເນີນການທົບທວນຄືນ ທັງໝົດ ແລະ ສ້າງໂຄງຮ່າງການຈັດຕັ້ງໃໝ່ຂຶ້ນ ໂດຍມີການບັນຈຸພະນັກງານໃໝ່, ສ້າງລະບົບບໍລິຫານໃໝ່, ກຳນົດລະບຽບ, ຫຼັກການ ແລະ ມີການປ່ຽນແປງວິທີການປະຕິບັດງານໃໝ່. ສຳລັບພະນັກງານຄົນລາວໃນໄລຍະນີ້ ເຂົາເຈົ້າອາດຈະຕົກຢູ່ໃນສະພາບທີ່ບໍ່ອຸ່ນອ່ຽງຫຼຸ່ນທ່ຽງກັບຄວາມບໍ່ແນ່ນອນກ່ຽວກັບການສືບຕໍ່ຈ້າງງານຂອງເຂົາເຈົ້າ. ເຖິງຢ່າງໃດກໍ່ຕາມ, ພະນັກງານສ່ວນໃຫຍ່ ກໍ່ຍັງໃຫ້ສືບຕໍ່ປະຕິບັດໜ້າທີ່ຕໍ່ໄປ ໂດຍໃຫ້ແຕ່ລະຄົນປະຕິຍານຕົນ ແລະ ໃຫ້ຄວາມຊື່ສັດຕໍ່ໂຄງການເປັນຢ່າງສູງ, ພະນັກງານບາງຈຳນວນໄດ້ເອົາໃຈໃສ່ຢ່າງພິເສດ ເພື່ອໃຫ້ໂຄງການໄດ້ມີການສືບຕໍ່. ຕໍ່ສິ່ງດັ່ງກ່າວ ອົງການໂຊດີ ຂໍສະແດງຄວາມຮູ້ບຸນຄຸນເປັນຢ່າງສູງຕໍ່ພະນັກງານລາວ ທີ່ສຸມໃສ່ເຮັດວຽກຢ່າງຫ້າວຫັນກັບອົງການໂຊດີຕະຫຼອດມາ.

ອີກເທື່ອໜຶ່ງ, ອົງການໂຊດີ ຂໍຖືໂອກາດນີ້ ສະແດງຄວາມຂອບໃຈຫ້ອງການ ຄຊກລ ທີ່ໃຫ້ການສະໜັບສະໜູນ ແລະ ໃຫ້ຄຳແນະນຳທີ່ດີຕໍ່ອົງການໂຊດີ ພ້ອມດ້ວຍ ບັນດາອົງການປະຕິບັດງານອື່ນໆທີ່ປະຕິບັດໜ້າທີ່ຢູ່ ສປປ ລາວ ທີ່ໄດ້ເຂົ້າມາຊ່ວຍເຫຼືອອົງການໂຊດີ ໃນເວລາມີຄວາມຈຳເປັນ ໂດຍໃຫ້ການຊ່ວຍເຫຼືອ ແລະ ໃຫ້ຄຳແນະນຳດ້ວຍຄວາມຈິງໃຈ. ດັ່ງນັ້ນ, ອົງການໂຊດີ ຈຶ່ງຂໍສະແດງຄວາມຂອບໃຈອີກເທື່ອໜຶ່ງຕໍ່ບັນດາທ່ານໝົດທຸກຄົນ ທີ່ມີສ່ວນກ່ຽວຂ້ອງໃນການຮ່ວມມືທີ່ດີ ແລະ ມີນ້ຳໃຈກວ້າງຂວາງ.



## ວຽກຈຸດສຸມໃນປີ 2014:

ຍ້ອນມີການປ່ຽນແປງລະບຽບການໃຫ້ທຶນຂອງກະຊວງການຕ່າງປະເທດເຢຍລະມັນ ຈຶ່ງເຮັດໃຫ້ອົງການໂຊດີ ບໍ່ສາມາດສືບຕໍ່ກິດຈະກຳເກັບກູ້ລະເບີດໃນປີ 2014 ໄດ້. ແຜນງານເກັບກູ້ ລບຕ ຈະສືບຕໍ່ໂດຍອົງການເກັບກູ້ ລບຕ ທີ່ບໍ່ແມ່ນຂອງລັດຖະບານຈາກປະເທດເບນຊິກ ຊື່ຫຍໍ້ວ່າ ອາໂປໂປ. ວຽກຈຸດສຸມຂອງອົງການໂຊດີຢູ່ ສປປ ລາວ ແມ່ນສືບຕໍ່ເກັບກູ້ ລບຕ ໃຫ້ໂຄງການພັດທະນາຕ່າງໆ.

## ຄູ່ຮ່ວມງານ:

ອົງການໂຊດີ ໄດ້ປະສານງານຢ່າງໃກ້ຊິດກັບອຳນາດການປົກຄອງແຂວງບໍລິຄຳໄຊ ແລະ ຄະນະຊີ້ນຳວຽກງານແກ້ໄຂບັນຫາ ລບຕ ຂັ້ນແຂວງ ຕະຫຼອດຮອດອຳນາດການປົກຄອງເມືອງຄຳເກີດ. ຄູ່ຮ່ວມງານໂຄງການພັດທະນາຂອງພວກເຮົາແມ່ນ ສາມະຄົມລາວ-ເຢຍລະມັນ ເພື່ອການພັດທະນາ ຊຽນຫຍໍ້ວ່າ (ຈີແອວເອດີ).

## ບຸກຄະລາກອນໃນປີ 2013:

| ພະນັກງານຫ້ອງການ | | | | ພະນັກງານຝ່າຍປະຕິບັດງານ (ພາກສະໜາມ) | | | |
|---|---|---|---|---|---|---|---|
| ຄົນລາວ | | ຄົນຕ່າງປະເທດ | | ຄົນລາວ | | ຄົນຕ່າງປະເທດ | |
| ຊາຍ | ຍິງ | ຊາຍ | ຍິງ | ຊາຍ | ຍິງ | ຊາຍ | ຍິງ |
| 7 | 7 | 2 | 1 | 42 | 13 | 1 | 0 |

## ຕົວເລກສະຖິຕິໃນປີ 2013:

| ການໂຄສະນາສຶກສາຄວາມສ່ຽງຈາກ ລບຕ ການໂຄສະນາສຶກສາຊຸມຊົນ | | | | | ການຊ່ວຍເຫຼືອຜູ້ຖືກເຄາະຮ້າຍຈາກ ລບຕ ຈຳນວນຜູ້ທີ່ໄດ້ຮັບການຊ່ວຍເຫຼືອ | | ການສຳຫຼວດ | | ການທຳລາຍເຄື່ອນທີ່ | |
|---|---|---|---|---|---|---|---|---|---|---|
| | ຜູ້ໄດ້ຮັບຜົນປະໂຫຍດ | | | | | | | | | |
| ຈ/ນຄັ້ງ | ໃຫຍ່ ຊາຍ | ໃຫຍ່ ຍິງ | ເດັກ ຊາຍ | ເດັກຍິງ | ດ້ານການ ເງິນ | ດ້ານການ ແພດ | ຈ/ນ ບ້ານ | ຈ/ນຄັ້ງ | ຈ/ນ ບ້ານ | ຈ/ນຄັ້ງ ຢ້ຽມຢາມ |
| 44 | 1,079 | 1,080 | 2,366 | 2,366 | ບໍ່ມີ | ບໍ່ມີ | 0 | 0 | 0 | 216 |

### ເນື້ອທີ່ກວດກູ້:

| ຜ່ານການກວດກູ້ (ເຮັກຕາ) | | | ຜ່ານການສຳຫຼວດດ້ານວິຊາການ (ເຮັກຕາ) | | |
|---|---|---|---|---|---|
| ດິນກະສິກຳ | ດິນພັດທະນາ | ລວມ | ດິນກະສິກຳ | ດິນພັດທະນາ | ລວມ |
| | | 108.7982 | | | 1.8924 |

### ລະເບີດທີ່ພົບ, ຖືກຍ້າຍ ແລະ ຖືກທຳລາຍ:

| ລະເບີດທີ່ຖືກຍ້າຍ/ຖືກທຳລາຍ | | | | | |
|---|---|---|---|---|---|
| ໜ້າວຽກ | ບົມໃຫຍ່ | ລະເບີດລູກຫວ່ານ | ລະເບີດຝັງດິນ | ລບຕ ຊະນິດອື່ນໆ | ລວມ |
| ການທຳລາຍເຄື່ອນທີ່ | 6 | 637 | 0 | 94 | 737 |
| ການກວດກູ້ | 0 | 273 | 0 | 190 | 463 |
| *ລວມ* | ***6*** | ***910*** | ***0*** | ***284*** | ***1200*** |

## ພື້ນທີ່ການປະຕິບັດງານ:

| ໜ້າວຽກ | ແຂວງ ແລະ ເມືອງ ທີ່ປະຕິບັດກິດຈະກຳ |
|---|---|
| ການກວດກູ້ | ແຂວງບໍລິຄຳໄຊ-ເມືອງຄຳເກີດ |
| ການສຳຫຼວດ ແລະ ການທຳລາຍເຄື່ອນທີ່ | ແຂວງບໍລິຄຳໄຊ-ເມືອງຄຳເກີດ, ເມືອງປາກກະດິງ, ເມືອງທ່າພະບາດ ແລະ ເມືອງປາກຊັນ. |
| ການໂຄສະນາສຶກສາຄວາມສ່ຽງຈາກ ລບຕ | ແຂວງບໍລິຄຳໄຊ-ເມືອງຄຳເກີດ |

## ທາງດ້ານການເງິນ:

### ການໃຊ້ຈ່າຍໃນປີ 2013 (ໂດລາສະຫະລັດ)

| ລາຍການ | ລວມ |
|---|---:|
| ຄ່າໃຊ້ຈ່າຍສຳລັບບຸກຄະລາກອນ | 907,223 |
| ຄ່າໃຊ້ຈ່າຍສຳລັບການປະຕິບັດງານ | 195,479 |
| ຄ່າໃຊ້ຈ່າຍສຳລັບການປະຕິບັດງານພິເສດ | ບໍ່ມີ |
| ຄ່າໃຊ້ຈ່າຍສຳລັບຊື້ວັດຖຸ-ຊັບສິນຄົງທີ່ | 9,626 |
| ຄ່າໃຊ້ຈ່າຍສຳລັບຊື້ວັດຖຸ-ຊັບສິນບໍ່ຄົງທີ່ | 29,740 |
| *ລວມ* | ***1,142,067*** |

### ການສະໜັບສະໜູນຂອງຜູ້ໃຫ້ທຶນໃນປີ 2013 (ໂດລາສະຫະລັດ)

| ຜູ້ໃຫ້ທຶນ | ເງິນທີ່ໄດ້ຮັບໃນປີ 2013 |
|---|---:|
| ກະຊວງການຕ່າງປະເທດເຢຍລະມັນ | 1,123,214 |
| ທຶນຂອງອົງການເອງ (ໄດ້ຈາກການບໍລິຈາກ) | 18,853 |
| *ລວມ* | ***1,142,067*** |

# ເຮໂລທຼາດ (ເຮໂລ)



## ກິດຈະກຳໃນປີ 2013:

ໃນປີ 2013, ກິດຈະກຳທີ່ອົງການເຮໂລທຼາດ ປະຕິບັດໄດ້ປະກອບມີໜ້າວຽກສຳຫຼວດທົ່ວໄປ, ໜ້າວຽກສຳຫຼວດດ້ານວິຊາການ, ໜ້າວຽກທຳລາຍເຄື່ອນທີ່ ແລະ ໜ້າວຽກໂຄສະນາສຶກສາຄວາມສ່ຽງຈາກ ລບຕ, ຊຶ່ງໜ້າວຽກດັ່ງກ່າວນີ້ ແມ່ນຖືກປະຕິບັດຢູ່ເມືອງວິລະບູລີ ແລະ ເມືອງເຊໂປນ-ແຂວງສະຫັວນນະເຂດ, ໂດຍໄດ້ຮັບທຶນຈາກກະຊວງການຕ່າງປະເທດອາເມລິກາ ຈຶ່ງເຮັດໃຫ້ອົງການເຮໂລ ສາມາດປະກອບທີມງານແບບເຮັດໜ້າທີ່ໄດ້ຫຼາຍຢ່າງ (ເຮັດທັງການສຳຫຼວດ, ການທຳລາຍເຄື່ອນທີ່ ແລະ ໂຄສະນາສຶກສາຄວາມສ່ຽງຈາກ ລບຕ) ຂຶ້ນ 3 ທີມ ແລະ ທີມງານກວດກູ້ ລບຕ 3 ທີມ ໃນເດືອນມັງກອນ 2013. ໂດຍໄດ້ຮັບທຶນເພີ່ມຕື່ມອີກຈາກກະຊວງການຕ່າງປະເທດອາເມລິກາ ອົງການເຮໂລຈຶ່ງໄດ້ຂະຫຍາຍທີມງານເພີ່ມຕື່ມອີກໃນຕຸລາ 2013 ເປັນ 6 ທີມງານສຳຫຼວດແບບເຮັດໜ້າທີ່ໄດ້ຫຼາຍຢ່າງ ແລະ ທີມງານກວດກູ້ 5 ທີມງານ.

ທີມງານສຳຫຼວດແບບເຮັດໜ້າທີ່ໄດ້ຫຼາຍຢ່າງ (ເຮັດທັງການສຳຫຼວດ, ການທຳລາຍເຄື່ອນທີ່ ແລະ ໂຄສະນາສຶກສາຄວາມສ່ຽງຈາກ ລບຕ).

ທີມງານສຳຫຼວດແບບເຮັດໜ້າທີ່ໄດ້ຫຼາຍຢ່າງ (ເຮັດທັງການສຳຫຼວດ, ການກວດກູ້ ແລະ ໂຄສະນາສຶກສາຄວາມສ່ຽງຈາກ ລບຕ) ໄດ້ສ້າງຜົນປະໂຫຍດຢ່າງຫຼວງຫຼາຍດ້ານຄຸນນະພາບ ແລະ ນຳໃຊ້ຊັບພະຍາກອນຢ່າງມີປະສິດທິພາບໃນການປະຕິບັດງານໃຫ້ແກ່ໂຄງການ.

### ການໂຄສະນາສຶກສາຄວາມສ່ຽງຈາກ ລບຕ.

ອົງການເຮໂລທຼາດ ໄດ້ຖືເອົາກິດຈະກຳໂຄສະນາສຶກສາຄວາມສ່ຽງຈາກ ລບຕ ເປັນວຽກທີ່ສຳຄັນວຽກໜຶ່ງ ເພື່ອໃຫ້ຮັບປະກັນວ່າ ແຕ່ລະທີມງານສຳຫຼວດແບບເຮັດໜ້າທີ່ໄດ້ຫຼາຍຢ່າງ (ເຮັດທັງການສຳຫຼວດ, ການທຳລາຍເຄື່ອນທີ່ ແລະ ໂຄສະນາສຶກສາຄວາມສ່ຽງຈາກ ລບຕ) ຂອງອົງການເຮໂລ ປະກອບມີພະນັກງານທີ່ສາມາດເວົ້າພາສາຊົນເຜົ່າໄດ້ປະກອບຢູ່ໃນທີມ ເພື່ອສ້າງເງື່ອນໄຂສະດວກໃນເວລາດຳເນີນກິດຈະກຳໂຄສະນາສຶກສາຄວາມສ່ຽງຈາກ ລບຕ. ໃນປີ 2013, ອົງການເຮໂລທຼາດ ໄດ້ດຳເນີນກິດຈະກຳໂຄສະນາສຶກສາຄວາມສ່ຽງຈາກ ລບຕ ໄດ້ 18 ຄັ້ງ ແລະ ມີຜູ້ໄດ້ຮັບຜົນປະໂຫຍດ ຈຳນວນ 1,264 ຄົນ.

### ການທຳລາຍເຄື່ອນທີ່.

ອົງການເຮໂລທຼາດ ໄດ້ເອົາໃຈໃສ່ປະສານສົມທົບຢ່າງຕັ້ງໜ້າກັບຊຸມຊົນຕ່າງໆ ເພື່ອກຳນົດພື້ນທີ່ ລບຕ ຕົກຄ້າງ. ທີມງານທຳລາຍເຄື່ອນທີ່ຂອງອົງການເຮໂລທຼາດ ເຮັດໜ້າທີ່ໃນການເຄື່ອນຍ້າຍ ແລະ ທຳລາຍ ລບຕ ທີ່ຕົກຄ້າງອອກຈາກບ້ານ. ໃນປີ 2013, ອົງການເຮໂລທຼາດ ສາມາດດຳເນີນການທຳລາຍເຄື່ອນທີ່ໄດ້ 325 ຄັ້ງ ແລະ ທຳລາຍ ລບຕ ໄດ້ຈຳນວນ 2,476 ໜ່ວຍ.

### ການສຳຫຼວດ.

ອົງການເຮໂລທຼາດ ໄດ້ສືບຕໍ່ປັບປຸງວິທີການສຳຫຼວດທົ່ວໄປ ແລະ ການສຳຫຼວດດ້ານວິຊາການ ເພື່ອແນໃສ່ເຮັດໃຫ້ມີວິທີການສຳຫຼວດຊອກຫາ ລບຕ ທີ່ຕົກຄ້າງທີ່ມີປະສິທິຜົນໃນຂະແໜງການແກ້ໄຂບັນຫາ ລບຕ.

### ການສຳຫຼວດທົ່ວໄປ ແລະ ການສຳຫຼວດດ້ານວິຊາການ.

ພາຍຫຼັງທີ່ໄດ້ປຶກສາຫາລືກັບຫ້ອງການ ຄຊກຊ ແລະ ອຳນາດການປົກຄອງເມືອງແລ້ວ, ອົງການ ກໍ່ໄດ້ເລີ່ມດຳເນີນການສຳຫຼວດທົ່ວໄປ ຢູ່ຊຸມຊົນຕ່າງໆ ໃນບ່ອນທີ່ທີມງານສຳຫຼວດ ໄດ້ມີການໂອ້ລົມກັບອຳນາດການປົກຄອງ ແລະ ເຈົ້າຂອງດິນໄວ້ກ່ອນໜ້ານັ້ນແລ້ວ. ພື້ນທີ່ໃດທີ່ບໍ່ພົບເຫັນຫຼັກຖານການຕົກຄ້າງຂອງລະເບີດລູກຫວ່ານຢູ່, ອົງການເຮໂລທຼາດກໍ່ຈະບັນທຶກໄວ້ ໂດຍໃຫ້ສອດຄ່ອງຕາມມາດຕະຖານແຫ່ງຊາດ ແລະ ຈະກຳນົດພື້ນທີ່ດັ່ງກ່າວເປັນພື້ນທີ່ສີຂຽວ (ບໍ່ຕ້ອງການເກັບກູ້). ແຕ່ຖ້າພົບເຫັນ ລບຕ ຊະນິດອື່ນໆຕົກຄ້າງຢູ່ ກໍ່ຈະເຮັດການທຳລາຍເລີຍ.

### ການສຳຫຼວດທາງດ້ານວິຊາການເພື່ອກຳນົດພື້ນທີ່ລະເບີດລູກຫວ່ານຕົກຄ້າງ.

ເມື່ອພື້ນທີ່ໄດ້ຖືກພິສູດແລ້ວວ່າ ມີຫຼັກຖານ ລບຕ ຕົກຄ້າງ ທີມງານ ກໍ່ຈະລົງໄປດຳເນີນການສຳຫຼວດດ້ານວິຊາການໃນສະໜາມນັ້ນໆ ໂດຍຈະປະຕິບັດການທຳລາຍ ລບຕ ທັງໝົດທີ່ພົບເຫັນຕາມຂັ້ນຕອນ. ເມື່ອການສຳຫຼວດດ້ານວິຊາການສຳເລັດແລ້ວ ຈຸດພື້ນທີ່ໆຖືກຢັ້ງຢືນວ່າອັນຕະລາຍຈະຖືກສ້າງຂຶ້ນ ແລະ ກຳນົດບູລິມະສິດໃນການເກັບກູ້ຕໍ່ໄປ. ຂໍ້ມູນທັງໝົດຈະຕ້ອງແຈ້ງໃຫ້ອົງການຂອງລັດຖະບານຮັບຊາບ, ຊຶ່ງລັດຖະບານ ສາມາດນຳໃຊ້ຂໍ້ມູນເຫຼົ່ານັ້ນ ເຂົ້າໃນການວາງແຜນພັດທະນາໂຄງການຕ່າງໆ.

ໃນປີ 2013, ທີມງານສຳຫຼວດຂອງອົງການເຮໂລທຼາດ ສາມາດສ້າງພື້ນທີ່ອັນຕະລາຍໄດ້ 59 ຈຸດ ລວມເປັນເນື້ອທີ່ທັງໝົດ 3,784,974 ຕາແມັດ.

**ການກວດກູ້ ລບຕ.**

ການດຳເນີນງານຂອງທີມງານເກັບກູ້ພື້ນທີ່ຂອງອົງການເຮໂລທູາດ ແມ່ນຈະອີງໃສ່ຂໍ້ມູນຫຼັກຖານການຕົກຄ້າງຂອງ ລບຕ ເປັນຕົ້ນຕໍ. ພື້ນທີ່ໃດທີ່ໄດ້ຮັບການຢືນຢັນຈາກການສຳຫຼວດດ້ານວິຊາການແລ້ວວ່າ ມີລະເບີດລູກຫວ່ານຕົກຄ້າງຢູ່ຈິງ ພື້ນທີ່ນັ້ນຕ້ອງໄດ້ເຮັດການເກັບກູ້ຢ່າງເຕັມສ່ວນ. ໃນປີ 2013, ອົງການເຮໂລທູາດ ສາມາດເກັບກູ້ພື້ນທີ່ທີ່ຢືນຢັນວ່າອັນຕະລາຍຜ່ານການສຳຫຼວດດ້ານວິຊາການ ໄດ້ທັງໝົດ 333,304 ຕາແມັດ, ສາມາດທຳລາຍລະເບີດລູກຫວ່ານ ແລະ ລບຕ ຊະນິດອື່ນໆໄດ້ 1,765 ໜ່ວຍ. ພື້ນທີ່ສ່ວນໃຫຍ່ທີ່ຖືກເກັບກູ້ ແມ່ນມີລະເບີດລູກຫວ່ານ ແລະ ລບຕ ຊະນິດອື່ນໆ ຕົກຄ້າງຢູ່ເກືອບທຸກບ່ອນ.

## ຜົນສຳເລັດຕົ້ນຕໍໃນປີ 2013:

ໃນເດືອນຕຸລາ 2013 ອົງການເຮໂລທູາດ ໄດ້ຮັບທຶນຊ່ວຍເຫຼືອຈາກກະຊວງຕ່າງປະເທດສະຫະລັດອາເມລິກາ-ຫ້ອງການຫຼຸດຜ່ອນອາວຸດ ແລະ ການສູ້ຮົບ ເພື່ອຂະຫຍາຍຄວາມອາດສາມາດໃນການກວດກູ້ຂອງອົງການເຮໂລທູາດ ຈາກ 3 ທີມ ມາເປັນ 5 ທີມ ແລະ ເພີ່ມຈຳນວນພະນັກງານຄົນລາວຈາກ 85 ຄົນ ຂຶ້ນມາເປັນ 125 ຄົນ.

ໃນປີ 2013, ອົງການເຮໂລທູາດ ໄດ້ສຸມໃສ່ຈັດຕັ້ງປະຕິບັດການສຳຫຼວດ ແລະ ໄດ້ກຳນົດວິທີການສຳຫຼວດແບບໃໝ່ອອກມາ, ຊຶ່ງໄດ້ມີການນຳສະເໜີໃຫ້ພະນັກງານຂອງອົງການ, ຄູ່ຮ່ວມງານພາຍນອກຕ່າງໆ ແລະ ຄູ່ຮ່ວມພັດທະນາຕ່າງໆ. ເພື່ອກັ່ນຕອງ ແລະ ວິເຄາະຂໍ້ມູນທີ່ລວບລວມໄດ້ຈາກວິທີການສຳຫຼວດແບບໃໝ່ນີ້ໃຫ້ມີຄວາມຖືກຕ້ອງ ແລະ ເປັນໄປຕາມຂະບວນການພະແນກແຜນທີ່ (ຈີໄອເອັດສ) ຂອງອົງການເຮໂລທູາດ ກໍ່ໄດ້ມີການກວດສອບ ແລະ ຮັບຮອງຄືນອີກເທື່ອໜຶ່ງ. ປະຈຸບັນນີ້, ພະນັກງານຂອງອົງການເຮໂລທູາດ ໄດ້ນຳໃຊ້ລະບົບນຳທາງຈີໄອເອັສ ທີ່ມີຄວາມສາມາດສື່ສານໄດ້ຢ່າງສົມບູນກັບຫ້ອງການເຮໂລທູາດ ແລະ ພົວພັນກັບຜູ້ໄດ້ຮັບຜົນປະໂຫຍດຕ່າງໆຈາກພາຍນອກ.

ຜົນສຳເລັດດ້ານອື່ນໆອີກ ແມ່ນຝຶກອົບຮົມວິຊາສະເພາະດ້ານຕ່າງໆໃຫ້ກັບພະນັກງານ. ຍ້ອນວ່າປີ 2013 ແມ່ນປີທຳອິດຂອງການເລີ່ມຕົ້ນປະຕິບັດງານ ຈຶ່ງເຮັດໃຫ້ຕ້ອງໄດ້ສຸມໃສ່ການຝຶກອົບຮົມຫຼາຍ ເພື່ອປັບປຸງຄວາມອາດສາມາດ ແລະ ເພີ່ມຄວາມໝັ້ນໃຈໃຫ້ແກ່ພະນັກງານ. ໃນປີ 2013, ຫຼາຍໆການຝຶກອົບຮົມ ແລະ ຫຼັກສູດຝຶກອົບຮົມຍົກລະດັບ ໄດ້ຈັດຂຶ້ນສຳລັບພະນັກງານເຊັ່ນວ່າ: ຫຼັກສູດນັກເກັບກູ້ພື້ນຖານ ຂັ້ນ 1 ແລະ 2, ແພດ (ຍົກລະດັບຄືນ) ແລະ ຫຼັກສູດຕັດບົມ. ອົງການ ມີຄວາມພູມໃຈທີ່ສາມາດເປີດຫຼັກສູດການຝຶກອົບຮົມຂຶ້ນດ້ວຍຕົນເອງ ໂດຍມີຊ່ຽວຊານຕ່າງປະເທດທີ່ມີປະສົບການເຂົ້າມາສິດສອນໃຫ້ຢ່າງເປັນປະຈຳ. ພະນັກງານບໍລິຫານຂອງອົງການ ໄດ້ເປີດຫຼັກສູດຝຶກອົບຮົມວິຊາຕ່າງໆທີ່ຈຳເປັນໃຫ້ແກ່ພະນັກງານຂອງອົງການເຊັ່ນວ່າ: ຫຼັກສູດການນຳໃຊ້ຄອມພິວເຕີ້ໂປແກຼມເອັກເຊວ, ໂປແກຼມເອັສເຊັດສ ແລະ ແຜນທີ່ (ຈີໄອເອສ).

ອົງການເຮໂລທູາດ ເຊື່ອໝັ້ນວ່າ ການສະໜອງຫຼັກສູດຝຶກອົບຮົມໃນຄັ້ງນີ້ບໍ່ພຽງແຕ່ຊ່ວຍປັບປຸງຄວາມອາດສາມາດໃຫ້ແກ່ພະນັກງານຂອງອົງການໃນໄລຍະສັ້ນເທົ່ານັ້ນ ແຕ່ຍັງເປັນການສົ່ງເສີມອາຊີບຕິດໂຕໃຫ້ແກ່ເຂົາເຈົ້າໃນໄລຍະຍາວອີກດ້ວຍ. ຄວາມຮູ້ ແລະ ຄວາມສາມາດດ້ານການແພດ ທີ່ພະນັກງານຂອງອົງການ ໄດ້ຮຽນຮູ້ໃນຫຼັກສູດນີ້ ບໍ່ພຽງແຕ່ນຳໃຊ້ເຂົ້າສະເພາະແຕ່ການຍົກຍ້າຍຄົນເຈັບຢູ່ພາກສະໜາມເທົ່ານັ້ນ ແຕ່ຍັງຊ່ວຍໃຫ້ພະນັກງານມີຄວາມຮູ້ຄວາມສາມາດໃນການ ໃຫ້ການບໍລິການປະຖົມພະຍາບານເບື້ອງຕົ້ນ ໃນກໍລະນີເກີດອຸປະຕິເຫດບົນທ້ອງຖະໜົນ ແລະ ການໃຫ້ການບໍລິການສຸກເສີນປິ່ນປົວບາດແຜທີ່ຖືກໄຟໄໝ້ອີກດ້ວຍ.

## ຂ່າວດີ:

ລາເຕືອງແມ່ນບ້ານແຫ່ງໜຶ່ງຢູ່ເມືອງເຊໂປນ ເປັນບ້ານຂອງເຜົ່າໄຕູ ອາໃສຢູ່ມາແຕ່ດັ້ງເດີມ, ຊຶ່ງໄດ້ຍົກຍ້າຍມາຕັ້ງຖິ່ນຖານຢູ່ທີ່ນີ້ເປັນເວລາຫຼາຍກວ່າ 800 ປີແລ້ວ. ບ້ານລາເຕືອງ ເປັນບ້ານຫ່າງໄກສອກຫຼີກ ທິດຕະເວັນອອກສ່ຽງໃຕ້ຕິດກັບຊາຍແດນປະເທດ ສສ ຫວຽດນາມ, ຫ່າງຈາກຕົວເມືອງເຊໂປນ 42 ກມ. ປະຈຸບັນນີ້, ຢູ່ພາຍໃນບ້ານ ມີປະຊາຊົນທັງໝົດ 245 ຄົນ, ມີ 43 ຄອບຄົວ. ການທຳມາຫາກິນຫາລ້ຽງຊີບຂອງຊາວບ້ານສ່ວນໃຫຍ່ ແມ່ນການເຮັດໄຮ່ ທີ່ເປັນລາຍຮັບຕົ້ນຕໍ ເພື່ອລ້ຽງຊີບພໍແຕ່ກຸ້ມກິນ.

ໃນປີ 2013 ອົງການເອັນຈີໂອຂອງເຢຍລະມັນ ຊື່ວ່າ ເວວທັງເກີຮິບ ໄດ້ສ້າງຕັ້ງໂຄງການຮັບປະກັນທາງດ້ານສະບຽງອາຫານຂຶ້ນຢູ່ບ້ານລາເຕືອງ. ໂຄງການໄດ້ສຸມໃສ່ການຮັບປະທາງດ້ານບຽງອາຫານໃຫ້ແກ່ກຸ່ມເປົ້າໝາຍທີ່ດ້ອຍໂອກາດໃນປະຈຸບັນໂດຍການຂະຫຍາຍເນື້ອທີ່ນາ, ການຂຸດໜອງປາ ລວມທັງ ໂຄງການພັດທະນາການສຶກສາອື່ນໆ. ເນື່ອງຈາກວ່າ ດິນທີ່ຕ້ອງການນຳໃຊ້ເຂົ້າໃນການປະຕິບັດໂຄງການເຫຼົ່ານີ້ ຍັງມີຄວາມສົງໄສວ່າ ມີ ລບຕ ຕົກຄ້າງຢູ່, ອົງການເວວທັງເກີຮິບ ຈຶ່ງໄດ້ສະເໜີໃຫ້ອົງການເຮໂລທູາດ ດຳເນີນການສຳຫຼວດ ແລະ ເກັບກູ້ ລບຕ ອອກຈາກພື້ນທີ່ຂອງໂຄງການ ກ່ອນເລີ່ມປະຕິບັດໂຄງການ. ການປະຕິບັດໂຄງການຂອງອົງການເວວທັງເກີຮິບ ໄດ້ປະເຊີນໜ້າກັບແຮງກົດດັນທາງດ້ານໄລຍະເວລາຂອງໂຄງການທີ່ເຫຼືອສັ້ນເຕັມທີ ຍ້ອນວ່າ ກອງທຶນຊ່ວຍເຫຼືອບ້ານລາເຕືອງ ໃກ້ຈະສິ້ນສຸດລົງໃນທ້າຍເດືອນກໍລະກົດ 2014 ນີ້. ແຕ່ຍ້ອນໄດ້ຮັບການຮ່ວມມືທີ່ດີຈາກອຳນາດການປົກຄອງຂອງເມືອງເຊໂປນ ຈຶ່ງໃຫ້ອົງການເຮໂລທູາດ ສາມາດສືບຕໍ່ດຳເນີນງານຢູ່ໃນບ້ານລາເຕືອງ ໄດ້ຕື່ມອີກ ໃນສົກປີ 2013/2014. ໂດຍອີງໃສ່ຂໍ້ມູນຈາກການສຳຫຼວດດ້ານວິຊາການ ຈຶ່ງເຮັດໃຫ້ອົງການເຮໂລທູາດສາມາດຈຳແນກພື້ນທີ່ຕົກຄ້າງ ແລະ ພື້ນທີ່ໆບໍ່ມີການຕົກຄ້າງຂອງ ລບຕ ໄດ້ຢ່າງມີປະສິດທິພາບ ຢູ່ພາຍໃນຂອບເຂດບ້ານແຫ່ງນີ້. ໃນເດືອນມັງກອນ 2014, ໜ່ວຍງານເກັບກູ້ອົງການເຮໂລທູາດ ຈະເລີ່ມປະຕິບັດການກວດກູ້ ລບຕ ຢູ່ບ້ານລາເຕືອງອີກເທື່ອໜຶ່ງ ເພື່ອສືບຕໍ່ສະໜັບສະໜູນການດຳເນີນງານຂອງອົງການເວວທັງເກີຮິບ ໃຫ້ສຳເລັດຕາມແຜນການທີ່ຕັ້ງໄວ້.

ອົງການເຮໂລທູາດ ແລະ ອົງການເວວທັງເກີຮິບ ໄດ້ເອົາໃຈໃສ່ເຮັດວຽກປະສານງານ ເພື່ອສະໜັບສະໜູນໃຫ້ແກ່ໂຄງການຊ່ວຍເຫຼືອມະນຸດສະທຳ. ສິ່ງນີ້ ສະແດງໃຫ້ເຫັນວ່າ ການພົວພັນສານລະຫວ່າງບັນດາອົງການປະຕິບັດງານຕ່າງໆ, ອົງການເອັນຈີໂອ ແລະ ອຳນາດການປົກຄອງຂອງລັດຖະບານ ໄດ້ຮັບການຄຸ້ມຄອງດ້ວຍຄວາມເອົາໃຈໃສ່ ສົ່ງຜົນກະທົບໃຫ້ທຶນຊ່ວຍເຫຼືອເຂົ້າໃນການພັດທະນາທາງດ້ານມະນຸດສະທຳມີປະສິດທິຜົນຫຼາຍຂຶ້ນກວ່າເກົ່າ.

## ວຽກຈຸດສຸມໃນປີ 2014:

ໃນປີ 2014, ອົງການເຮໂລທູາດ ຈະສືບຕໍ່ເຮັດການສຳຫຼວດ ແລະ ເກັບກູ້ ຢູ່ເມືອງເຊໂປນ ແລະ ເມືອງວິລະບູລີ-ແຂວງສະຫວັນນະເຂດ. ອົງການຈະສຸມໃສ່ການປັບປຸງມາດຕະຖານ ແລະ ປະສິດຕິພາບການປະຕິບັດງານຂອງຕົນ ເພື່ອໃຫ້ສາມາດສະໜອງຂໍ້ມູນທີ່ລະອຽດກ່ຽວກັບໄພຂົ່ມຂູ ຂອງ ລບຕ ທີ່ຍັງຕົກຄ້າງ

ຢູ່ໃນດິນແດນ ຂອງ ສ ປປ ລາວ.

ໃນປີ 2014, ອົງການ ຈະກຳນົດໜ້າວຽກບູລິມະສິດກວດກູ້ ລບຕ ຮັບໃຊ້ແຜນພັດທະນາຊົນນະບົດ ແລະ ລຶບລ້າງຄວາມທຸກຍາກ. ໝາຍຄວາມວ່າ ໜ້າວຽກສຳຫຼວດ ແລະ ກວດກູ້ ຈະໄດ້ມີການຈັດລຽງບູລິມະສິດບ່ອນທີ່ໂຄງການພັດທະນາຊົນນະຊົດ ແລະ ລຶບລ້າງຄວາມທຸກຍາກ ຈະໄປຈັດຕັ້ງປະຕິບັດ ເພື່ອຕອບສະໜອງຜົນປະໂຫຍດໃຫ້ແກ່ການສ້າງເສດຖະກິດ-ສັງຄົມຂອງຊຸມຊົນຢູ່ທ້ອງຖິ່ນທີ່ອາໃສຢູ່ພາຍໃນແຂວງສະຫັວນນະເຂດ. ຂັ້ນຕອນໃນການກຳນົດບູລິມະສິດໜ້າວຽກເຫຼົ່ານີ້, ອົງການຈະມີການປະສານການປະສານງານຢ່າງໃກ້ສິດກັບອົງການຕ່າງໆຂອງລັດຖະບານ ແລະ ອົງການເອັນຈີໂອອື່ນໆ.

ອົງການເຣໂລຫຼາດ ໃຫ້ຄວາມເຊື່ອໝັ້ນວ່າ ຈະສືບຕໍ່ປັບປຸງອົງການໃຫ້ດີຂຶ້ນກວ່າເກົ່າ ແລະ ຈະປະກາດຮັບສະໝັກເອົາພະນັກງານປະສານກັບຊຸມຊົນຄົນໃໝ່/ພະນັກງານໂຄສະນາສຶກສາຄວາມສ່ຽງຈາກ ລບຕ ທີ່ສາມາດສື່ສານພາສາທ້ອງຖິ່ນໄດ້ຫຼາຍພາສາ (ພາສາຊົນເຜົ່າ). ພະນັກງານຄົນໃໝ່ນີ້ ຈະເປັນຜູ້ທົບທວນແຜນງານໂຄສະນາສຶກສາຄວາມສ່ຽງ ໃນປະຈຸບັນຄືນໃໝ່ໝົດ ເພື່ອປັບປຸງວິທີການເຂົ້າເຖິງຊຸມຊົນ ແລະ ການດຳເນີນກິດຈະກຳໂຄສະນາສຶກສາຄວາມສ່ຽງຈາກ ລບຕ ໃຫ້ດີຂຶ້ນກວ່າເກົ່າ.

ອົງການ ຈະເລັ່ງໃສ່ການສືບຕໍ່ຂະຫຍາຍກິດຈະກຳອອກຕື່ມໃນປີ 2014 ແລະ ຈະສືບຕໍ່ສ້າງສາຍພົວພັນການເຮັດວຽກທີ່ດີກັບຄາລ ທີ່ປະຕິບັດວຽກຢູ່ແຂວງສະຫວັນນະເຂດເຊັ່ນດຽວກັນ.

## ຄູ່ຮ່ວມງານ:

ຄູ່ຮ່ວມງານຂອງອົງການເຣໂລຫຼາດູ ປະກອບມີ ອົງການພັດທະນາ ແລະ ອຳນາດການປົກຄອງທ້ອງຖິ່ນຕ່າງໆ, ຊຶ່ງພາກສ່ວນເຫຼົ່ານີ້ ແມ່ນມີບົດບາດສຳຄັນຫຼາຍຕໍ່ການດຳເນີນງານຂອງອົງການເຣໂລຫຼາດູ. ຜ່ານການຮ່ວມມື ແລະ ມີການພົວພັນທີ່ດີກັບພາກສ່ວນຂ້າງເທິງນີ້ ຈຶ່ງເຮັດໃຫ້ອົງການເຣໂລຫຼາດ ສາມາດກຳນົດເປົ້າໝາຍໃນການເຮັດວຽກໄດ້ເປັນຢ່າງດີ ແລະ ເຂົ້າເຖິງຜູ້ໄດ້ຮັບຜົນປະໂຫຍດຈາກການສຳຫຼວດ ແລະ ການເກັບກູ້. ອົງການເຣໂລຫຼາດ ໄດ້ເຮັດວຽກຮ່ວມກັບອົງການພັດທະນາສາກົນຕ່າງໆຫຼາຍໆໂຄງການທີ່ກຳລັງປະຕິບັດງານຢູ່ແຂວງສະຫວັນນະເຂດ ເຊັ່ນວ່າ: ອົງການເວວທັງເກີຮິບ, ອົງການບັນເທົາທຸກຂອງກາໂຕລິກ ແລະ ອົງການສຸພະນິມິດ ເປັນຕົ້ນ. ເພື່ອເຮັດໃຫ້ທຶນຊ່ວຍເຫຼືອຂອງຜູ້ໃຫ້ທຶນເກີດຜົນປະໂຫຍດຫຼາຍຢ່າງ ອົງການເຣໂລຫຼາດ ເຊື່ອໝັ້ນວ່າ ຜົນໄດ້ຮັບຈາກການທີ່ໄດ້ເຮັດວຽກ ເພື່ອມະນຸດສະທຳນັ້ນ ແມ່ນຈະສົ່ງຜົນກະທົບດ້ານບວກໃຫ້ແກ່ຊຸມຊົນທີ່ມີຜົນກະທົບຈາກ ລບຕ ຢູ່ແຂວງສະຫວັນນະເຂດ. ໂຮງຮຽນຕ່າງໆທີ່ອົງການບັນເທົາທຸກຂອງກາໂຕລິກໄດ້ປະຕິບັດໂຄງການສະໜອງອາຫານທ່ຽງນັ້ນ ແມ່ນໄດ້ຖືກກຳນົດເປັນເປົ້າໝາຍໃນການດຳເນີນກິດຈະກຳໂຄສະນາສຶກສາຄວາມສ່ຽງຈາກ ລບຕ ຂອງອົງການ ເພື່ອແນໃສ່ເຮັດໃຫ້ເດັກນ້ອຍ ສາມາດເຂົ້າເຖິງກິດຈະກຳໂຄສະນາສຶກສາຄວາມສ່ຽງ



ປະຈຸບັນນີ້ ເດັກນ້ອຍທີ່ອາໄສຢູ່ບ້ານລາເຕືອງ ແມ່ນສາມາດແລ່ນຫຼິ້ນຢູ່ໃນຊຸມຊົນໄດ້ຢ່າງປອດໄພ. ຍ້ອນວ່າ ອົງການເຣໂລຫຼາດ ໄດ້ດຳເນີນກິດຈະກຳໂຄສະນາສຶກສາຄວາມສ່ຽງຈາກ ລບຕ, ການສຳຫຼວດທົ່ວໄປ ແລະ ການກວດກູ້ ລບຕ ຢູ່ພາຍໃນບ້ານຂອງເຂົາເຈົ້າ.

ຈາກ ລບຕ ໄດ້ຢ່າງທົ່ວເຖິງ. ການເປັນຄູ່ຮ່ວມງານກັບອົງການສຸພະນິດມິດ ນັ້ນ ອົງການເຮໂລຫຼາດ ມີໜ້າທີ່ຊ່ວຍໃນການສຳຫຼວດ ແລະ ເກັບກູ້ ລບຕ ທີ່ຕົກຄ້າງ ອອກຈາກເນື້ອທີ່ດິນກ່ອນໂຄງການພັດທະນາທາງດ້ານ (ວຽກງານກະສິກຳ) ຈະເລີ່ມຈັດຕັ້ງປະຕິບັດ.

ຜູ້ທີ່ໄດ້ຮັບຜົນປະໂຫຍດຕົ້ນຕໍຈາກການດຳເນີນງານຂອງອົງການເຮໂລຫຼາດ ແມ່ນປະຊາຊົນທີ່ອາໄສ ຢູ່ແຂວງສະຫວັນນະເຂດ. ປະຊົນຊົນຜູ້ທີ່ປະເຊີນໜ້າແຕ່ລະວັນ ກັບໄພຂົ່ມຂູ່ຈາກ ລບຕ ຕົກຄ້າງ ຢູ່ໃນດິນຂອງເຂົາເຈົ້າ, ຢູ່ໃນພື້ນທີ່ການກໍ່ສ້າງພື້ນຖານໂຄງລ່າງ, ຢູ່ພາຍໃນໂຮງຮຽນ ແລະ ຢູ່ໃນບ້ານ ຈະແມ່ນຜູ້ທີ່ໄດ້ຮັບຜົນປະໂຫຍດຕົ້ນຕໍຈາກການສຳຫຼວດ, ການເກັບກູ້, ການທຳລາຍເຄື່ອນທີ່ ແລະ ການໂຄສະນາສຶກສາຄວາມສ່ຽງຈາກ ລບຕ ຈາກອົງການຂອງພວກເຮົາ ຢູ່ພາຍໃນເມືອງເຊໂປນ ແລະ ເມືອງວິລະບູລີ. ອົງການເຮໂລຫຼາດ ໄດ້ຮັບສະໝັກເອົາພະນັກງານປະຕິບັດງານທ້ອງຖິ່ນທີ່ເປັນຄົນລາວຈາກເມືອງເຊໂປນ ແລະ ເມືອງວິລະບູລີ ເພື່ອປະກອບສ່ວນໃຫ້ມີການຈ້າງງານເກີດຂຶ້ນ ແນໃສ່ປະກອບສ່ວນເຂົ້າໃນການສ້າງເສດຖະກິດ-ສັງຄົມຂອງຊຸມຊົນພາຍໃນທ້ອງຖິ່ນ.

ນອກຈາກນັ້ນ, ອົງການເຮໂລຫຼາດ ຍັງໄດ້ສືບຕໍ່ເຂົ້າໄປມີສ່ວນຮ່ວມໃນການປະເມີນ ແລະ ປັບປຸງລະບຽບໃນການສຳຫຼວດເພື່ອກຳນົດພື້ນທີ່ ລບຕ ຕົກຄ້າງ ຢູ່ໃນ ສປປ ລາວ ອີກດ້ວຍ. ອົງການເຮໂລຫຼາດ ເຊື່ອໝັ້ນວ່າ ການປະເມີນ ແລະ ການພັດທະນາລະບຽບການສຳຫຼວດແບບໃໝ່ນີ້ ຈະມາດປະກອບສ່ວນອັນໃຫຍ່ຫຼວງໃຫ້ແກ່ການບັນລຸເປົ້າໝາຍສະຫັດສະວັດດ້ານການພັດທະນາ ທີ 9 ຂອງລັດຖະບານລາວ ແນໃສ່ເຮັດໃຫ້ລັດຖະບານລາວ ໄດ້ຮັບຜົນປະໂຫຍດໂດຍກົງຈາກການດຳເນີນງານຂອງອົງການເຮໂລຫຼາດ.

## ບຸກຄະລາກອນໃນປີ 2013:

| ພະນັກງານຫ້ອງການ | | | | ພະນັກງານຝ່າຍປະຕິບັດງານ (ພາກສະໜາມ) | | | |
|---|---|---|---|---|---|---|---|
| ຄົນລາວ | | ຄົນຕ່າງປະເທດ | | ຄົນລາວ | | ຄົນຕ່າງປະເທດ | |
| ຊາຍ | ຍິງ | ຊາຍ | ຍິງ | ຊາຍ | ຍິງ | ຊາຍ | ຍິງ |
| 17 | 6 | 0 | 0 | 73 | 22 | 2 | 0 |

## ຕົວເລກສະຖິຕິໃນປີ 2013:

| ການໂຄສະນາສຶກສາຄວາມສ່ຽງຈາກ ລບຕ ການໂຄສະນາສຶກສາຊຸມຊົນ | | | | | ການຊ່ວຍເຫຼືອຜູ້ຖືກເຄາະຮ້າຍຈາກ ລບຕ ຈຳນວນຜູ້ທີ່ໄດ້ຮັບການຊ່ວຍເຫຼືອ | | ການສຳຫຼວດ | | ການທຳລາຍເຄື່ອນທີ່ | |
|---|---|---|---|---|---|---|---|---|---|---|
| | ຜູ້ໄດ້ຮັບຜົນປະໂຫຍດ | | | | | | | | | |
| ຈ/ນຄັ້ງ | ໃຫຍ່ ຊາຍ | ໃຫຍ່ ຍິງ | ເດັກ ຊາຍ | ເດັກ ຍິງ | ດ້ານການ ເງິນ | ດ້ານການ ແພດ | ຈ/ນ ບ້ານ | ຈ/ນຄັ້ງ ຍຸ້ງຍາມ | ຈ/ນ ບ້ານ | ຈ/ນຄັ້ງ ຍຸ້ງຍາມ |
| 18 | 333 | 317 | 312 | 302 | ບໍ່ມີ | ບໍ່ມີ | 11 | ຫຼາຍກວ່າ 12 ເດືອນ | 11 | ຫຼາຍກວ່າ 12 ເດືອນ |

## ເນື້ອທີ່ກວດກູ້:

| ຜ່ານການກວດກູ້ (ເຮັກຕາ) | | | ຜ່ານການສຳຫຼວດດ້ານວິຊາການ (ເຮັກຕາ) | | |
|---|---|---|---|---|---|
| ດິນກະສິກຳ | ດິນພັດທະນາ | ລວມ | ດິນກະສິກຳ | ດິນພັດທະນາ | ລວມ |
| 27.7902 | 5.5402 | 33.3304 | | | 378.4974 |

### ລະເບີດທີ່ພົບ, ຖືກຍ້າຍ ແລະ ຖືກທຳລາຍ:

| ລະເບີດທີ່ຖືກຍ້າຍ/ຖືກທຳລາຍ | | | | | |
|---|---|---|---|---|---|
| ໜ້າວຽກ | ບົມໃຫຍ່ | ລະເບີດລູກຫວ່ານ | ລະເບີດຝັງດິນ | ລບຕ ຊະນິດອື່ນໆ | ລວມ |
| ການທຳລາຍເຄື່ອນທີ່ | 13 | 1,169 | 0 | 1,283 | 2,465 |
| ການກວດກູ້ | 0 | 763 | 0 | 993 | 1,756 |
| *ລວມ* | ***13*** | ***1,932*** | ***0*** | ***2,276*** | ***4,221*** |

## ພື້ນທີ່ການປະຕິບັດງານ:

| ໜ້າວຽກ | ແຂວງ ແລະ ເມືອງ ທີ່ປະຕິບັດກິດຈະກຳ |
|---|---|
| ການກວດກູ້ | ແຂວງສະຫວັນນະເຂດ-ເມືອງເຊໂປນ ແລະ ເມືອງວິລະບູລີ |
| ການສຳຫຼວດ ແລະ ການທຳລາຍເຄື່ອນທີ່ | ແຂວງສະຫວັນນະເຂດ-ເມືອງເຊໂປນ ແລະ ເມືອງວິລະບູລີ |
| ການໂຄສະນາສຶກສາຄວາມສ່ຽງຈາກ ລບຕ | ແຂວງສະຫວັນນະເຂດ-ເມືອງເຊໂປນ ແລະ ເມືອງວິລະບູລີ |

## ທາງດ້ານການເງິນ:

### ການໃຊ້ຈ່າຍໃນປີ 2013 (ໂດລາສະຫະລັດ)

| ລາຍການ | ຈຳນວນ |
|---|---:|
| ຄ່າໃຊ້ຈ່າຍສຳລັບບຸກຄະລາກອນ | 560,642.40 |
| ຄ່າໃຊ້ຈ່າຍສຳລັບການປະຕິບັດງານ | 535,743.99 |
| ຄ່າໃຊ້ຈ່າຍສຳລັບການປະຕິບັດງານພິເສດ | ບໍ່ມີ |
| ຄ່າໃຊ້ຈ່າຍສຳລັບຊື້ວັດຖຸ-ຊັບສິນຄົງທີ່ | 20,507.72 |
| ຄ່າໃຊ້ຈ່າຍສຳລັບຊື້ວັດຖຸ-ຊັບສິນບໍ່ຄົງທີ່ | 312,513.69 |
| *ລວມ* | ***1,429,407.80*** |

### ການສະໜັບສະໜູນຂອງຜູ້ໃຫ້ທຶນໃນປີ 2013 (ໂດລາສະຫະລັດ)

| ຜູ້ໃຫ້ທຶນ | ເງິນທີ່ໄດ້ຮັບໃນປີ 2013 |
|---|---:|
| ກະຊວງການຕ່າງປະເທດອາເມລິກາ-ຫ້ອງການຫຼຸດຜ່ອນອາວຸດ ແລະ ການສູ້ຮົບ | 1,339,407.80 |
| ເງິນບໍລິຈາກໃຫ້ແກ່ອົງການເຮໂລຫຼາດ (ທຶນຕົ້ນຕໍ) | 90,000.00 |
| *ລວມ* | ***1,429,407.80*** |

# ບໍລິສັດເກັບກູ້ ລບຕ ພາຍໃນ ແລະ ຕ່າງປະເທດ

## ບໍລິສັດອາສາ ເກັບກູ້ລະເບີດ ຈຳກັດ

### ກິດຈະກຳໃນປີ 2013:

ໃນ 2013, ບໍລິສັດອາສາ ເກັບກູ້ລະເບີດ ຈຳກັດ ໄດ້ດຳເນີນການສຳຫຼວດ ແລະ ກວດກູ້ ລບຕ ຕາມແລວຕິດຕັ້ງເສົາສາຍສົ່ງໄຟຟ້າແຮງສູງ 115 ກິໂລວັດ ແລະ 500 ກິໂລວັດ ຈາກເມືອງຊຽງເງິນ ແຂວງຫຼວງພະບາງ ຫາ ເມືອງຫົງສາ-ແຂວງໄຊຍະບູລີ ແລະ ຈາກເມືອງຫົງສາ ຫາ ຊຽງຮອນ-ແຂວງໄຊຍະບູລີ ເຊັ່ນດຽວກັນ.

### ຜົນສຳເລັດໃນປີ 2013:

- ໄດ້ສຳເລັດການກວດກູ້ ລບຕ ໃນພື້ນທີ່ການກໍ່ສ້າງຖານເສົາໄຟຟ້າແຮງສູງ 115 ກິໂລວັດ ຈຳນວນ 20 ຕົ້ນ, ກວດກູ້ໃນເນື້ອທີ່ 6x6 ແມັດ ສຳລັບແຕ່ລະຕົ້ນ, ລວມທັງໝົດ 80 ຂຸມ, ໃນເນື້ອທີ່ທັງໝົດ 2,880 ຕາແມັດ.
- ໄດ້ສຳເລັດການກວດກູ້ ລບຕ ໃນພື້ນທີ່ການກໍ່ສ້າງຖານເສົາໄຟຟ້າແຮງສູງ 500 ກິໂລວັດ ຈຳນວນ 9 ຕົ້ນ, ກວດກູ້ໃນເນື້ອທີ່ 10x10 ແມັດ ສຳລັບແຕ່ລະຕົ້ນ, ລວມທັງໝົດ 36 ຂຸມ, ໃນເນື້ອທີ່ທັງໝົດ 36,000 ຕາແມັດ.

### ວຽກຈຸດສຸມໃນປີ 2014:

ບໍລິສັດອາສາ ເກັບກູ້ລະເບີດ ຈຳກັດ ຈະສືບຕໍ່ວຽກທີ່ຍັງບໍ່ທັນສຳເລັດໃນປີ 2013, ຊຶ່ງມີດັ່ງລຸ່ມນີ້:

- ສືບຕໍ່ກວດກູ້ ລບຕ ໃນພື້ນທີ່ການກໍ່ສ້າງເສົາໄຟຟ້າແຮງສູງ 115 ກິໂລວັດ ຈາກສະຖານນີໄຟຟ້າໂຄກສະອາດ ຫາ ສວນວິຕາ ຢູ່ເມືອງໄຊທານີ, ນະຄອນຫຼວງວຽງຈັນ ໃນເນື້ອທີ່ທັງໝົດ 10,000 ຕາແມັດ.
- ສືບຕໍ່ຕິດຕາມວຽກການກໍ່ສ້າງສະໜາມກ໋ອບຢູ່ເມືອງຄຳ, ແຂວງຊຽງຂວາງ.
- ສືບຕໍ່ດຳເນີນການສຳຫຼວດໃນເຂດພື້ນທີ່ກໍ່ສ້າງເຂື່ອນໄຟຟ້ານ້ຳງຽບ ຢູ່ແຂວງບໍລິຄຳໄຊ.

### ລູກຄ້າ:

- ບໍລິສັດຊຽນການໄຟຟ້າ ຈຳກັດ
- ປະຊາຊົນທີ່ອາໄສຢູ່ໃນເຂດໂຄງການຂອງບໍລິສັດອາສາ

### ບຸກຄະລາກອນໃນປີ 2013:

| ພະນັກງານຫ້ອງການ | | | | ພະນັກງານຝ່າຍປະຕິບັດງານ (ພາກສະໜາມ) | | | |
|---|---|---|---|---|---|---|---|
| ຄົນລາວ | | ຄົນຕ່າງປະເທດ | | ຄົນລາວ | | ຄົນຕ່າງປະເທດ | |
| ຊາຍ | ຍິງ | ຊາຍ | ຍິງ | ຊາຍ | ຍິງ | ຊາຍ | ຍິງ |
| 2 | 1 | 0 | 0 | 10 | 1 | 0 | 0 |

### ພື້ນທີ່ການປະຕິບັດງານ:

| ໜ້າວຽກ | ແຂວງ ແລະ ເມືອງ ທີ່ປະຕິບັດກິດຈະກຳ |
|---|---|
| ການກວດກູ້ | ແຂວງຫຼວງພະບາງ, ແຂວງໄຊຍະບູລີ ແລະ ນະຄອນຫຼວງວຽງຈັນ |
| ການສຳຫຼວດ ແລະ ການທຳລາຍເຄື່ອນທີ່ | ແຂວງຫຼວງພະບາງ, ແຂວງໄຊຍະບູລີ ແລະ ນະຄອນຫຼວງວຽງຈັນ |

### ທາງດ້ານການເງິນ: ການໃຊ້ຈ່າຍໃນປີ 2013 (ໂດລາສະຫະລັດ)

| ລາຍການ | ຈຳນວນ |
|---|---|
| ຄ່າໃຊ້ຈ່າຍສຳລັບບຸກຄະລາກອນ | 73,500 |
| ຄ່າໃຊ້ຈ່າຍສຳລັບການປະຕິບັດງານ | 5,350 |
| ຄ່າໃຊ້ຈ່າຍສຳລັບການປະຕິບັດງານພິເສດ | 8,500 |
| ຄ່າໃຊ້ຈ່າຍສຳລັບຊື້ວັດຖຸ-ຊັບສິນຄົງທີ່ | 12,250 |
| ຄ່າໃຊ້ຈ່າຍສຳລັບຊື້ວັດຖຸ-ຊັບສິນບໍ່ຄົງທີ່ | 93,350 |
| *ລວມ* | ***108,950*** |

## ການສະໜັບສະໜູນຂອງຜູ້ໃຫ້ທຶນໃນປີ 2013 (ໂດລາສະຫະລັດ)

| ຜູ້ໃຫ້ທຶນ | ຈຳນວນ |
|---|---:|
| ທຶນຂອງບໍລິສັດເອງ | 108,950 |
| *ລວມ* | ***108,950*** |

# ບໍລິສັດພິນສັກດາ ເກັບກູ້ລະເບີດ ຈຳກັດ (ພີເອັດສ໌ດີ)

## ກິດຈະກຳໃນປີ 2013:

ໃນປີ 2013, ບໍລິສັດພິນສັກດາ ເກັບກູ້ລະເບີດ ຈຳກັດ (ພີເອັດສ໌ດີ) ໄດ້ສືບຕໍ່ກວດກູ້ ລບຕ ໃຫ້ແກ່ ບໍລິສັດຊູມູລະ ທີ່ປະຕິບັດໂຄງການ ຢູ່ທີ່ບ້ານພະນອນດົງ, ເມືອງປາກຊ່ອງ, ແຂວງຈຳປາສັກ ໃນເນື້ອທີ່ 207 ເຮັກຕາ.

ບໍລິສັດພີເອັດສ໌ດີ ໄດ້ສຳເລັດ 100% ການກວດກູ້ ແລະ ທຳລາຍ ລບຕ ໃຫ້ແກ່ ບໍລິສັດຊູມູລະ ຢູ່ບ້ານພະນອນດົງ, ເມືອງປາກຊ່ອງ, ແຂວງຈຳປາສັກ ໃນເນື້ອທີ່ 207 ເຮັກຕາ.

## ວຽກຈຸດສຸມໃນປີ 2014:

- ບໍລິສັດພີເອັດສ໌ດີ ຈະສືບຕໍ່ດຳເນີນການກວດກູ້ ລບຕ ຕື່ມອີກ ໃຫ້ແກ່ ບໍລິສັດຊູມູລະ ໃນເນື້ອທີ່ປູກໄມ້ເປັນຢາ ຢູ່ບ້ານນາເຕີ, ພາວ ແລະ ສະຫວັນເມືອງ ຢູ່ແຂວງສາລະວັນ ລວມເນື້ອທີ່ 200 ເຮັກຕາ.
- ສືບຕໍ່ດຳເນີນການກວດກູ້ ລບຕ ໃນເນື້ອທີ່ໂຄງການຕິດຕັ້ງສາຍສົ່ງໄຟຟ້າ ເຂົ້າ 33 ບ້ານ ຢູ່ 3 ເມືອງ ຂອງແຂວງຫົວພັນ ລວມໄລຍະທາງ 154 ກິໂລແມັດ.




## ລູກຄ້າ:

- ບໍລິສັດຊູມູລະ
- ບໍລິສັດເກັບກູ້ລະເບີດເຈມັດ

## ບຸກຄະລາກອນໃນປີ 2013:

| ພະນັກງານຫ້ອງການ | | | | ພະນັກງານຝ່າຍປະຕິບັດງານ (ພາກສະໜາມ) | | | |
|---|---|---|---|---|---|---|---|
| ຄົນລາວ | | ຄົນຕ່າງປະເທດ | | ຄົນລາວ | | ຄົນຕ່າງປະເທດ | |
| ຊາຍ | ຍິງ | ຊາຍ | ຍິງ | ຊາຍ | ຍິງ | ຊາຍ | ຍິງ |
| 4 | 3 | 0 | 0 | 47 | 13 | 0 | 0 |

## ຕົວເລກສະຖິຕິໃນປີ 2013:

| ຜ່ານການກວດກູ້ (ເຮັກຕາ) | | |
|---|---|---|
| ດິນກະສິກຳ | ດິນພັດທະນາ | ລວມ |
| 207 | 0 | 207 |

### ລະເບີດທີ່ພົບ, ຖືກຍ້າຍ ແລະ ຖືກທຳລາຍ:

| ລະເບີດທີ່ຖືກຍ້າຍ/ຖືກທຳລາຍ | | | | | |
|---|---|---|---|---|---|
| ໜ້າວຽກ | ບົມໃຫຍ່ | ລະເບີດລູກຫວ່ານ | ລະເບີດຝັງດິນ | ລບຕ ຊະນິດອື່ນໆ | ລວມ |
| ການກວດກູ້ | 0 | 0 | 0 | 0 | *0* |
| *ລວມ* | *0* | *0* | *0* | *0* | *0* |

## ພື້ນທີ່ການປະຕິບັດງານ:

| ໜ້າວຽກ | ແຂວງ ແລະ ເມືອງ ທີ່ປະຕິບັດກິດຈະກຳ |
|---|---|
| ກວດກູ້ | ເມືອງປາກຊ່ອງ-ແຂວງຈຳປາສັກ |

## ທາງດ້ານການເງິນ:

### ການໃຊ້ຈ່າຍໃນປີ 2013 (ໂດລາສະຫະລັດ)

| ລາຍການ | ຈຳນວນ |
|---|---:|
| ຄ່າໃຊ້ຈ່າຍສຳລັບບຸກຄະລາກອນ | |
| ຄ່າໃຊ້ຈ່າຍສຳລັບການປະຕິບັດງານ | |
| ຄ່າໃຊ້ຈ່າຍສຳລັບການປະຕິບັດງານພິເສດ | |
| ຄ່າໃຊ້ຈ່າຍສຳລັບຊື້ວັດຖຸ-ຊັບສິນຄົງທີ່ | |
| *ລວມ* | ***800,000*** |

### ການສະໜັບສະໜູນຂອງຜູ້ໃຫ້ທຶນໃນປີ 2013 (ໂດລາສະຫະລັດ)

| ຜູ້ໃຫ້ທຶນ | ຈຳນວນ |
|---|---:|
| ທຶນຂອງບໍລິສັດເອງ | 800,000 |
| *ລວມ* | ***800,000*** |

# ບໍລິສັດສີບຸນເຮືອງ ເກັບກູ້ລະເບີດ ຈຳກັດ (ເອັດສ໌ບີເຫັດ)

## ກິດຈະກຳໃນປີ 2013:

ໃນປີ 2013, ບໍລິສັດສີບຸນເຮືອງ ເກັບກູ້ລະເບີດ ຈຳກັດ ໄດ້ຮັບເໝົາເກັບກູ້ ລບຕ ໃຫ້ແກ່ບໍລິສັດສະໂຕລາເອັນໄຊ ຢູ່ເມືອງນອງ ແລະ ເຊໂປນ-ແຂວງສະຫວັນນະເຂດ ແລະ ເມືອງຕະໂອ້ຍ-ແຂວງສາລະວັນ.



## ຜົນສຳເລັດໃນປີ 2013:

ການເກັບກູ້ ລບຕ ຂອງບໍລິສັດ ໃນປີ 2013 ແມ່ນປະສົບຜົນສຳເລັດຕາມແຜນການທີ່ວາງໄວ້, ຊຶ່ງສະແດງອອກ ສາມາດເກັບກູ້ ລບຕ ອອກຈາກເນື້ອທີ່ໄດ້ທັງໝົດ 520 ເຮັກຕາ (ຢູ່ແຂວງສະຫວັນນະເຂດ 382 ເຮັກຕາ ແລະ ຢູ່ແຂວງສາລະວັນ 138 ເຮັກຕາ).

## ລູກຄ້າ:

ໃນປີ 2013, ລູກຄ້າຂອງເຮົາແມ່ນບໍລິສັດສະໂຕລາເອັນໄຊ.



## ບຸກຄະລາກອນໃນປີ 2013:

| ພະນັກງານຫ້ອງການ | | | | ພະນັກງານຝ່າຍປະຕິບັດງານ (ພາກສະໜາມ) | | | |
|---|---|---|---|---|---|---|---|
| ຄົນລາວ | | ຄົນຕ່າງປະເທດ | | ຄົນລາວ | | ຄົນຕ່າງປະເທດ | |
| ຊາຍ | ຍິງ | ຊາຍ | ຍິງ | ຊາຍ | ຍິງ | ຊາຍ | ຍິງ |
| 1 | 2 | 0 | 0 | 40 | 5 | 0 | 0 |

## ຕົວເລກສະຖິຕິໃນປີ 2013:

### ການກວດກູ້:

| ຜ່ານການກວດກູ້ (ເຮັກຕາ) | | |
|---|---|---|
| ດິນກະສິກຳ | ດິນພັດທະນາ | ລວມ |
| 520 | 0 | 520 |

### ລະເບີດທີ່ພົບ, ຖືກຍ້າຍ ແລະ ຖືກທຳລາຍ:

| ລະເບີດທີ່ຖືກຍ້າຍ/ຖືກທຳລາຍ | | | | | |
|---|---|---|---|---|---|
| ໜ້າວຽກ | ບົມໃຫຍ່ | ລະເບີດລູກຫວ່ານ | ລະເບີດຝັງດິນ | ລບຕ ຊະນິດອື່ນໆ | ລວມ |
| ການກວດກູ້ | 0 | 360 | 18 | 0 | ***378*** |

## ພື້ນທີ່ການປະຕິບັດງານ:

| ໜ້າວຽກ | ແຂວງ ແລະ ເມືອງ ທີ່ປະຕິບັດກິດຈະກຳ |
|---|---|
| ການກວດກູ້ | ເມືອງນອງ, ເມືອງເຊໂປນ-ແຂວງສະຫວັນນະເຂດ.<br>ເມືອງຕະໂອ້ຍ-ແຂວງສາລະວັນ. |

## ທາງດ້ານການເງິນ:

### ການໃຊ້ຈ່າຍໃນປີ 2013 (ໂດລາສະຫະລັດ)

| ລາຍການ | ຈຳນວນ |
|---|---|
| ຄ່າໃຊ້ຈ່າຍສຳລັບບຸກຄະລາກອນ | 139,000 |
| ຄ່າໃຊ້ຈ່າຍສຳລັບການປະຕິບັດງານ | 31,600 |
| ຄ່າໃຊ້ຈ່າຍສຳລັບການປະຕິບັດງານພິເສດ | 0 |
| ຄ່າໃຊ້ຈ່າຍສຳລັບຊື້ວັດຖຸ-ຊັບສິນຄົງທີ່ | 37,500 |
| ຄ່າໃຊ້ຈ່າຍສຳລັບຊື້ວັດຖຸ-ຊັບສິນບໍ່ຄົງທີ່ | 19,200 |
| *ລວມ* | ***227,300*** |

### ການສະໜັບສະໜູນຂອງຜູ້ໃຫ້ທຶນໃນປີ 2013 (ໂດລາສະຫະລັດ)

| ຜູ້ໃຫ້ທຶນ | ຈຳນວນ |
|---|---|
| ທຶນຂອງບໍລິສັດເອງ | 250,000 |
| ລວມ | ***250,000*** |

# ບໍລິສັດແສງເພັດ ເກັບກູ້ລະເບີດ ຈຳກັດ (ເອັດສ໌ພີ)

## ກິດຈະກຳໃນປີ 2013:

ໃນປີ 2013, ບໍລິສັດເອັດສ໌ພີ ເກັບກູ້ລະເບີດ ຈຳກັດ (ແສງເພັດ) ໄດ້ດຳເນີນການກວດກູ້ ລບຕ ໃນເຂດພື້ນທີ່ໂຄງການຕິດຕັ້ງສາຍສົ່ງໄຟຟ້າ, ສະຖານນີໄຟຟ້າ ແລະ ໂຄງການສ້າງເຂື່ອນໄຟຟ້າ.

- ຕະຫຼອດການດຳເນີນງານ ພວກເຮົາສາມາດກວດກູ້ ແລະ ທຳລາຍ ລບຕ ໃຫ້ແກ່ລັດວິສະຫະກິດໄຟຟ້າລາວໃນຂອບເຂດຊາຍແດນໂຄງການກໍ່ສ້າງເຂື່ອນໄຟຟ້ານ້ຳຈຽນ (ແຕ່ເມືອງທາໂທມ ຫາ ເມືອງລູນ-ແຂວງຊຽງຂວາງ) ໃນເນື້ອທີ່ 1,100 ເຮັກຕາ.
- ໄດ້ສຳເລັດການກວດກູ້ ລບຕ ໃນເນື້ອທີ່ໂຄງການຕິດຕັ້ງສາຍສົ່ງໄຟຟ້າ ຄວາມແຮງ 115 ກິໂລວັດ ຈາກສະຖານນີໄຟຟ້າໜອງເດີນ ຫາ ສະຖານນີໄຟຟ້າເຊໂນ ຫາ ສະຖານນີໄຟຟ້າພີນ-ແຂວງສະຫວັນນະເຂດ ໃນເນື້ອທີ່ 3,020,000 ຕາແມັດ.
- ໄດ້ສຳເລັດການກວດກູ້ລບຕ ໃນຂອບເຂດຊາຍແດນອ້ອມສະຖານນີໄຟຟ້າໜອງເດີນ, ສະຖານນີໄຟຟ້າເຊໂນ ແລະ ສະຖານນີໄຟຟ້າພີນ-ແຂວງສະຫວັນນະເຂດ ໃນເນື້ອທີ່ 240,000 ຕາແມັດ.
- ໄດ້ສຳເລັດການກວດກູ້ ລບຕ ໃນເນື້ອທີ່ໂຄງການຕິດຕັ້ງເສົາສົ່ງໄຟຟ້າ ຄວາມແຮງ 500 ກິໂລວັດ ລວມມີທັງໝົດ 473 ຕົ້ນ, ກວດກູ້ໃນເນື້ອທີ່ 15 ແມັດ x 15 ແມັດ x 3 ແມັດ ສຳລັບແຕ່ລະຕົ້ນ ລວມເນື້ອທີ່ທັງໝົດ 319,275 ຕາແມັດ.

## ວຽກຈຸດສຸມໃນປີ 2014:

ບໍລິສັດເອັດສ໌ພີ ວາງແຜນຈະກວດກູ້ ລບຕ ໃນເນື້ອທີ່ໂຄງການຕິດຕັ້ງສາຍສົ່ງໄຟຟ້າ ຄວາມແຮງ 115 ກິໂລວັດ ແລະ ສະຖານນີໄຟຟ້າ ຈາກແຂວງສະຫວັນນະເຂດ ຫາ ແຂວງສາລະວັນ ໄລຍະທາງ 75 ກິໂລແມັດ (187 ເຮັກຕາ).

## ລູກຄ້າ:

ລູກຄ້າຂອງເຮົາໃນປີ 2013 ແມ່ນກະຊວງພະລັງງານ ແລະ ບໍ່ແຮ່.

## ບຸກຄະລາກອນໃນປີ 2013:

| ພະນັກງານຫ້ອງການ | | | | ພະນັກງານຝ່າຍປະຕິບັດງານ (ພາກສະໜາມ) | | | |
|---|---|---|---|---|---|---|---|
| ຄົນລາວ | | ຄົນຕ່າງປະເທດ | | ຄົນລາວ | | ຄົນຕ່າງປະເທດ | |
| ຊາຍ | ຍິງ | ຊາຍ | ຍິງ | ຊາຍ | ຍິງ | ຊາຍ | ຍິງ |
| 15 | 11 | 0 | 0 | 86 | 6 | 0 | 0 |

## ຕົວເລກສະຖິຕິໃນປີ 2013:

### ເນື້ອທີ່ກວດກູ້:

| ຜ່ານການກວດກູ້ (ເຮັກຕາ) | | |
|---|---|---|
| ດິນກະສິກຳ | ດິນພັດທະນາ | ລວມ |
| 0 | 1,458 | 1,458 |

### ລະເບີດທີ່ພົບ, ຖືກຍ້າຍ ແລະ ຖືກທຳລາຍ:

| ລະເບີດທີ່ຖືກຍ້າຍ/ຖືກທຳລາຍ | | | | | |
|---|---|---|---|---|---|
| ໜ້າວຽກ | ບົມໃຫຍ່ | ລະເບີດລູກຫວ່ານ | ລະເບີດຝັງດິນ | ລບຕ ຊະນິດອື່ນໆ | ລວມ |
| ການກວດກູ້ | 2 | 320 | 0 | 501 | ***823*** |

## ພື້ນທີ່ການປະຕິບັດງານ:

| ໜ້າວຽກ | ແຂວງ ແລະ ເມືອງ ທີ່ປະຕິບັດກິດຈະກຳ |
|---|---|
| ການກວດກູ້ | ແຂວງຊຽງຂວາງ ແລະ ສະຫວັນນະເຂດ |

## ທາງດ້ານການເງິນ:

### ການໃຊ້ຈ່າຍໃນປີ 2013 (ໂດລາສະຫະລັດ)

| ລາຍການ | ຈຳນວນ |
|---|---:|
| ຄ່າໃຊ້ຈ່າຍສຳລັບບຸກຄະລາກອນ | |
| ຄ່າໃຊ້ຈ່າຍສຳລັບການປະຕິບັດງານ | |
| ຄ່າໃຊ້ຈ່າຍສຳລັບການປະຕິບັດງານພິເສດ | |
| ຄ່າໃຊ້ຈ່າຍສຳລັບຊື້ວັດຖຸ-ຊັບສິນຄົງທີ່ | |
| ຄ່າໃຊ້ຈ່າຍສຳລັບຊື້ວັດຖຸ-ຊັບສິນບໍ່ຄົງທີ່ | |
| *ລວມ* | ***3,183,128*** |

### ການສະໜັບສະໜູນຂອງຜູ້ໃຫ້ທຶນໃນປີ 2013 (ໂດລາສະຫະລັດ)

| ຜູ້ໃຫ້ທຶນ | ຈຳນວນ |
|---|---:|
| ທຶນຂອງບໍລິສັດເອງ | 3,661,128 |
| *ລວມ* | ***3,661,128*** |

# ບໍລິສັດເອັກທີດີ ເກັບກູ້ລະເບີດ ຈຳກັດ (ເອັກທີດີ)

## ກິດຈະກຳໃນປີ 2013:

ໃນປີ 2013, ບໍລິສັດເອັກທີດີ ໄດ້ດຳເນີນການກວດກູ້ ລບຕ ໃຫ້ແກ່ ພະແນກສາຍສົ່ງ-ກະຊວງພະລັງງານ ແລະ ບໍ່ແຮ່ ໃນເຂດພື້ນທີ່ໂຄງການຕິດຕັ້ງສາຍສົ່ງໄຟຟ້າ ແລະ ສະຖານນີໄຟຟ້າ, ຊຶ່ງການກວດກູ້ໄດ້ເລີ່ມຕົ້ນຂຶ້ນ ໃນເດືອນເມສາ 2013. ນອກຈາກນັ້ນ, ບໍລິສັດເອັກທີດີ ຍັງໄດ້ດຳເນີນການກວດກູ້ ລບຕ ໃນເຂດພື້ນທີ່ໂຄງການຕິດຕັ້ງສາຍສົ່ງໄຟຟ້າ ຄວາມແຮງ 115 ກິໂລວັດ ຈາກທ່າສະລາ ຫາ ຫ້ວຍກຊາວ ແລະ ດຶງໄປຫາ ສະຖານນີໄຟຟ້າຫ້ວຍກຊາວ ຢູ່ແຂວງບໍລິຄຳໄຊ.

## ຜົນສຳເລັດຕົ້ນຕໍ ໃນປີ 2013:

1. ການກວດກູ້ ລບຕ ຢູ່ເມືອງຄຳເກີດ ໃນເຂດພື້ນທີ່ໂຄງການຕິດຕັ້ງສາຍສົ່ງໄຟຟ້າ ຄວາມແຮງ 115 ກິໂລວັດ ຈາກ ທ່າສະລາ ຫາ ຫ້ວຍກຊາວ:

- ໄດ້ສຳເລັດການກວດກູ້ ລບຕ ໃນເນື້ອທີ່ໂຄງການຕິດຕັ້ງເສົາສົ່ງໄຟຟ້າ ຈຳນວນ 151 ຕົ້ນ ກວດກູ້ໃນເນື້ອທີ່ 15 ແມັດ x 15 ແມັດ x 6 ແມັດ ສຳລັບແຕ່ລະຕົ້ນ ລວມເນື້ອທີ່ທັງໝົດ 94,375 ຕາແມັດ.
- ໄດ້ສຳເລັດການກວດກູ້ ລບຕ ໃນຂອບເຂດຊາຍແດນອ້ອມໂຄງການຕິດຕັ້ງສາຍສົ່ງໄຟຟ້າ ໃນເນື້ອທີ່ 750,000 ຕາແມັດ.

2. ການກວດກູ້ ລບຕ ຢູ່ເມືອງຄຳເກີດ ໃນເຂດພື້ນທີ່ສະຖານນີໄຟຟ້າ ຫ້ວຍກຊາວ:

- ໄດ້ສຳເລັດການກວດກູ້ ລບຕ ໃນຂອບເຂດຊາຍແດນອ້ອມສະຖານນີໄຟຟ້າຫ້ວຍກຊາວ ໃນເນື້ອທີ່ 90,000 ຕາແມັດ.

## ວຽກຈຸດສຸມໃນປີ 2014:

ໃນປີ 2014, ບໍລິສັດເອັກທີດີ ວາງແຜນຈະກວດກູ້ ລບຕ ໃຫ້ແກ່ໂຄງການກໍ່ສ້າງເຂື່ອນໄຟຟ້ານ້ຳງຽບ ໃນເຂດພື້ນທີ່ໂຄງການຕິດຕັ້ງສາຍສົ່ງໄຟຟ້າ ແລະ ສະຖານນີໄຟຟ້າ ແຕ່ ນາໝໍ້-ແຂວງອຸດົມໄຊ ຫາ ເມືອງບຸນໃຕ້-ແຂວງຜົ້ງສາລີ ຄວາມຍາວ 120 ກິໂລແມັດ.

## ລູກຄ້າ:

ກະຊວງພະລັງງານ ແລະ ບໍ່ແຮ່.

## ບຸກຄະລາກອນໃນປີ 2013:

| ພະນັກງານຫ້ອງການ | | | | ພະນັກງານຝ່າຍປະຕິບັດງານ (ພາກສະໜາມ) | | | |
|---|---|---|---|---|---|---|---|
| ຄົນລາວ | | ຄົນຕ່າງປະເທດ | | ຄົນລາວ | | ຄົນຕ່າງປະເທດ | |
| ຊາຍ | ຍິງ | ຊາຍ | ຍິງ | ຊາຍ | ຍິງ | ຊາຍ | ຍິງ |
| 3 | 1 | 0 | 0 | 36 | 0 | 0 | 0 |

## ຕົວເລກສະຖິຕິໃນປີ 2013:

### ເນື້ອທີ່ກວດກູ້:

| ຜ່ານການກວດກູ້ (ເຮັກຕາ) | | |
|---|---|---|
| ດິນກະສິກຳ | ດິນພັດທະນາ | ລວມ |
| 0 | 93 | 93 |

### ລະເບີດທີ່ພົບ, ຖືກຍ້າຍ ແລະ ຖືກທຳລາຍ:

| ລະເບີດທີ່ຖືກຍ້າຍ/ຖືກທຳລາຍ | | | | | |
|---|---|---|---|---|---|
| ໜ້າວຽກ | ບົມໃຫຍ່ | ລະເບີດລູກຫວ່ານ | ລະເບີດຝັງດິນ | ລບຕ ຊະນິດອື່ນໆ | ລວມ |
| Clearance | 0 | 0 | 0 | 0 | *0* |

## ພື້ນທີ່ການປະຕິບັດງານ:

| ໜ້າວຽກ | ແຂວງ ແລະ ເມືອງ ທີ່ປະຕິບັດກິດຈະກຳ |
|---|---|
| ການກວດກູ້ | ທ່າສະລາ, ຫ້ວຍກຊາວ-ເມືອງຄຳເກີດ-ແຂວງບໍລິຄຳໄຊ |

## ທາງດ້ານການເງິນ:

ການໃຊ້ຈ່າຍໃນປີ 2013 (ໂດລາສະຫະລັດ)

| ລາຍການ | ຈຳນວນ |
|---|---:|
| ຄ່າໃຊ້ຈ່າຍສຳລັບບຸກຄະລາກອນ | 96,000 |
| ຄ່າໃຊ້ຈ່າຍສຳລັບການປະຕິບັດງານ | 75,000 |
| ຄ່າໃຊ້ຈ່າຍສຳລັບການປະຕິບັດງານພິເສດ | 0 |
| ຄ່າໃຊ້ຈ່າຍສຳລັບຊື້ວັດຖຸ-ຊັບສິນຄົງທີ່ | 200,000 |
| ຄ່າໃຊ້ຈ່າຍສຳລັບຊື້ວັດຖຸ-ຊັບສິນບໍ່ຄົງທີ່ | 12,000 |
| *ລວມ* | ***315,500*** |

## ການສະໜັບສະໜູນຂອງຜູ້ໃຫ້ທຶນໃນປີ 2013 (ໂດລາສະຫະລັດ)

| ຜູ້ໃຫ້ທຶນ | ຈຳນວນ |
|---|---:|
| ທຶນຂອງບໍລິສັດເອງ | |
| ລວມ | ***250,000*** |

# ບໍລິສັດແບັກເທັກລາວ ເກັບກູ້ລະເບີດ ຈໍາກັດ (ແບັກເທັກ)

ບໍລິສັດແບັກເທັກລາວ ເກັບກູ້ລະເບີດ ແມ່ນບໍລິສັດສາຂາໃນເຄືອຂອງກຸ່ມບໍລິສັດແບັກເທັກໂລກ ແລະ ໄດ້ເຂົ້າມາຕັ້ງສາຂາຢູ່ໃນ ສປປ ລາວ ເພື່ອໃຫ້ບໍລິການອັນມີຄຸນນະພາບສູງໃນການແກ້ໄຂບັນຫາລບຕ/ລະເບີດຝັງດິນຢູ່ພາຍໃນພາກພື້ນ ແລະ ເຂດປາຊີຟິກ.

ບໍລິສັດແບັກເທັກ ແມ່ນບໍລິສັດສະມາຊິກໃນບັນດາກຸ່ມບໍລິສັດທີ່ດໍາເນີນທຸລະກິດບໍລິການກ່ຽວກັບການກວດກູ້ລະເບີດຂອງໂລກ. ມີຫ້ອງການໃຫຍ່ຕັ້ງຢູ່ປະເທດອັງກິດ ແລະ ມີບໍລິສັດສາຂາຕັ້ງຢູ່ປະເທດດູໄບ, ອິດສະຕາລີ, ກໍາປູເຈຍ, ອີລັກ, ສປປ ລາວ ແລະ ໂມຊໍາບິກ. ແບັກເທັກ ເລີ່ມດໍາເນີນທຸລະກິດບໍລິການທາງດ້ານການກວດກູ້ ລບຕ ໃນໂລກ ແຕ່ປີ 1999 ເປັນຕົ້ນມາຈົນເຖິງປະຈຸບັນ ແລະ ໄດ້ສໍາເລັດໂຄງການກວດກູ້ ລບຕ ຢູ່ຫຼາຍກວ່າ 45 ປະເທດ.

ບັນດາຜົນງານທີ່ແບັກເທັກ ເຄີຍປະຕິບັດຜ່ານມາ ປະກອບມີການກວດກູ້ ລບຕ, ລະເບີດຝັງດິນ, ການລົງສືບສວນຫາສາເຫດ ແລະ ສໍາຫຼວດເບິ່ງ ລບຕ ຕົກຄ້າງຢູ່ພື້ນທີ່ຕົວຈິງ ທັງຢູ່ໃນພື້ນດິນ ແລະ ຢູ່ໃຕ້ນໍ້າ, ການກວດກາຄຸ້ມຄອງຄຸນນະພາບ, ການປະເມີນເບິ່ງຄວາມສ່ຽງ, ການຝຶກອົບຮົມກ່ຽວກັບການກວດກູ້ ລບຕ, ສະໜອງວັດຖຸອຸປະກອນ ແລະ ໃຫ້ຄໍາປຶກສາກ່ຽວກັບການແກ້ໄຂບັນຫາ ລບຕ.

ນອກຈາກນັ້ນ, ແບັກເທັກ ຍັງໃຫ້ບໍລິການທາງດ້ານຊ່ຽວຊານແບບອິດສະຫຼະທີ່ມີປະສົບການສູງກ່ຽວກັບທຸກບັນຫາທີ່ພົວພັນກັບບັນຫາ ລບຕ, ຊຶ່ງລູກຄ້າຂອງແບັກເທັກ ປະກອບມີ ລັດຖະບານ, ອົງການປ້ອງກັນຊາດ, ສະຫະປະຊາຊາດ, ສະຫະພາບເອີລົບ, ອັງກິດ, ກຸ່ມນາໂຕ, ກຸ່ມປະເທດທີ່ມີບໍ່ນໍ້າມັນ, ອາຍແກັດ, ອຸດສະຫະກໍາກໍ່ສ້າງຕ່າງໆ ແລະ ບັນດາອົງການຈັດຕັ້ງສາກົນ ທັງພາຍໃນ ແລະ ຕ່າງປະເທດ ບໍ່ວ່າຈະຢູ່ໃນສະພາບແວດລ້ອມໃດກໍ່ຕາມ ເປັນຕົ້ນແມ່ນ ປະເທດທີ່ມີສົງຄາມ ແລະ ຫຼັງສົງຄາມສິ້ນສຸດ.

ແບັກເທັກ ສັນຍາຈະສະໜອງການບໍລິການທີ່ມີປະສິດທິພາບ ແລະ ປະສິດທິຜົນ ເຂົ້າໃນການຈັດຕັ້ງປະຕິບັດໂຄງການຂອງລູກຄ້າ ໂດຍຜ່ານການດໍາເນີນງານແບບໃໝ່ ແລະ ມີມືອາຊີບ, ພະນັກງານມີຄວາມຫ້າວຫັນ, ມີສຸຂະພາບທີ່ແຂງແຮງ, ມີການນໍາໃຊ້ເຕັກໂນໂລຊີໃໝ່ ເຂົ້າໃນການດໍາເນີນງານ ແລະ ມີພະນັກງານຊ່ຽວຊານຕ່າງປະເທດທີ່ມີປະສົບການສູງ ຜ່ານການຝຶກອົບຮົມພາກສະໜາມມາເປັນຢ່າງດີ, ຊຶ່ງຢັ້ງຢືນໄດ້ຈາກມາດຕະຖານສາກົນຮັບຮອງການປະຕິບັດງານ ໄອເອັດໂອ 9001:2008, ໄອເອັດໂອ 18001 ແລະ ໄອເອັດໂອ ໄອ400ແອວ.

## ກິດຈະກໍາໃນປີ 2013:

ຕະຫຼອດປີ 2013, ແບັກເທັກ ໄດ້ດໍາເນີນກິດຈະກໍາຕ່າງໆດັ່ງລຸ່ມນີ້:

- ໄດ້ສະໜັບສະໜູນການກວດກູ້ ລບຕ ໃຫ້ແກ່ການດໍາເນີນກິດຈະກໍາໃນການສໍາຫຼວດຂຸດຄົ້ນບໍ່ແຮ່ຂອງບໍລິສັດລາວຊານໄຊ ຢູ່ເມືອງຊານໄຊ, ແຂວງອັດຕະປື.
- ໄດ້ກວດກູ້ເສັ້ນທາງເຂົ້າຫາພື້ນທີ່ການສໍາຫຼວດບໍ່ແຮ່ຂອງບໍລິສັດສໍາຫຼວດຂຸດຄົ້ນບໍ່ແຮ່ຢູ່ເອັມເອັມຊີ ຢູ່ເມືອງວຽງຄໍາ ແຂວງຫຼວງພະບາງ.
- ໄດ້ດໍາເນີນການກວດກູ້ ລບຕ ໃຫ້ແກ່ບໍລິສັດໄຟຟ້ານໍ້າເທີນ 2 ເປັນຕົ້ນແມ່ນລະເບີດບົມໃຫຍ່, ເຂດພື້ນທີ່ບ່ອນທີ່ມີປ່າລົງ, ທາງເຂົ້າຫາໂຄງການປັບປຸງຕາຄ່າຍສາຍສົ່ງໄຟຟ້າຄວາມແຮງ 500 ກິໂລວັດ ຢູ່ເມືອງຍົມມະລາດ ແຂວງຄໍາມ່ວນ.
- ກວດກູ້ ລບຕ ໃຫ້ແກ່ບໍລິສັດສໍາຫຼວດຂຸດຄົ້ນບໍ່ແຮ່ຢູ່ເອັມເອັມຊີ ຢູ່ເມືອງວຽງຄໍາ ແຂວງຫຼວງພະບາງ.
- ກວດກູ້ ລບຕ ຢູ່ໃຕ້ນໍ້າ ເພື່ອສະໜັບສະໜູນການເຮັດບົດຄົ້ນຄວ້າກ່ຽວກັບສະພາບແວດລ້ອມຂອງນໍ້າຂອງມະຫາວິທະຍາໄລໂຫລູດ ໃຫ້ແກ່ບໍລິສັດໄຟຟ້ານໍ້າເທີນ ຢູ່ເມືອງນາກາຍ ແຂວງຄໍາມ່ວນ.
- ກວດກູ້ ລບຕ ໃນເຂດພື້ນທີ່ໆເຮັດການທົດລອງກ່ຽວກັບຟີຊິກຂອງບໍລິສັດຊານໄຊຂຸດຄົ້ນແຮ່ອາລູມີນຽມ.
- ກວດກູ້ ລບຕ ໃນເຂດຂຸດຄົ້ນບໍ່ແຮ່ ໃຫ້ແກ່ບໍລິສັດນໍ້າເທີນ ຢູ່ແຂວງຄໍາມ່ວນ.
- ກວດກູ້ ລບຕ ເພື່ອສະໜັບສະໜູນໃຫ້ແກ່ບໍລິສັດນໍ້າເທີນ ໃນການສ້າງຮອງລະບາຍນໍ້າເຂື່ອນຢູ່ເມືອງນາກາຍ, ແຂວງຄໍາມ່ວນ.
- ກວດກູ້ ລບຕ ບ່ອນທາງເຂົ້າຫາພື້ນທີ່ສໍາຫຼວດກ່ຽວກັບຊີວະນານາພັນ ແລະ ສັດນໍ້າ ຂອງບໍລິສັດເອັນເອັນ 3 ຢູ່ເຂດພາກເໜືອຂອງລາວ.

## ຜົນສໍາເລັດຕົ້ນຕໍໃນປີ 2013:

ແບັກເທັກ ຍັງຄົງສືບຕໍ່ຮັກສາຊື່ສຽງທາງດ້ານຄຸນນະພາບໃນການກວດກູ້ ລບຕ, ຊຶ່ງແບັກເທັກ ໄດ້ຊະນະການເຮັດສັນຍາກັບລູກຄ້າຕ່າງໆໃນການບໍລິການກວດກູ້ ລບຕ ໃຫ້ ເພື່ອສະໜັບສະໜູນໃຫ້ແກ່ການພັດທະນາພື້ນຖານໂຄງລ່າງ, ກວດກູ້ ລບຕ ເພື່ອພັດທະນາທາງດ້ານກະສິກໍາ ແລະ ເຂດພື້ນທີ່ຂຸດຄົ້ນບໍ່ແຮ່.

ນອກຈາກສິ່ງທີ່ກ່າວມາຂ້າງເທິງນັ້ນ, ແບັກເທັກ ຍັງໄດ້ສືບຕໍ່ ແລະ ຂະຫຍາຍການໂຄສະນາສຶກສາຄວາມສ່ຽງຈາກ ລບຕ ຢູ່ໃນເຂດພື້ນທີ່ເຮັດວຽກຂອງບໍລິສັດອີກດ້ວຍ. ວຽກງານດັ່ງກ່າວ ຈະບໍ່ສາມາດເກີດຂຶ້ນໄດ້ ຖ້າປັດສະຈາກການສະໜັບສະໜູນຢ່າງເອື້ອເຟື້ອເພື່ອແຜ່ຂອງລູກຄ້າ.

ພ້ອມນັ້ນ, ແບັກເທັກ ຍັງໄດ້ສືບຕໍ່ຝຶກອົບຮົມຫຼັກສູດການນໍາໃຊ້ເຄື່ອງສະຫວ່ານຂຸດເຈາະເລິກໃຫ້ແກ່ພະນັກງານ ເປັນເວລາ 3 ມື້, ຫຼັກສູດບໍາລຸງຄືນການປະຖົມພະຍາບານຂັ້ນຕົ້ນ ແລະ ການນໍາໃຊ້ຄອມພິວເຕີ້.

ອີງຕາມສະພາບເສດຖະກິດໃນປີ 2013, ແບັກເທັກ ກໍ່ຄືກັບບັນດາອົງການອື່ນໆ ທີ່ໄດ້ປະເຊີນໜ້າກັບຂໍ້ຫຍຸ້ງຍາກຫຼາຍຢ່າງໃນຊ່ວງປີຜ່ານມາ, ຊຶ່ງມັນກໍ່ເປັນໂຕກະຕຸ້ນອີກຢ່າງໜຶ່ງ ທີ່ເຮັດໃຫ້ເຮົາຕ້ອງມີຄວາມເຂັ້ມແຂງຂຶ້ນຕື່ມ ເພື່ອໃຫ້ສາມາດຍາດເອົາໄດ້ບັນດາໂຄງການຕ່າງໆ ທີ່ຕ້ອງການຢາກກວດກູ້ ລບຕ. ເຖິງຢ່າງໃດກໍ່ຕາມ, ການປະເຊີນໜ້າສິ່ງທ້າທາຍດັ່ງກ່າວນັ້ນ ໄດ້ເຮັດໃຫ້ພວກເຮົາຕ້ອງມີການຝຶກອົບຮົມໃຫ້ພະນັກງານຄົນລາວ ໃຫ້ມີຄວາມຮູ້ ແລະ ມີຄຸນນະພາບໃນການກວດກູ້ ລບຕ ໃຫ້ຫຼາຍຂຶ້ນກວ່າເກົ່າ. ພ້ອມນັ້ນ, ພວກເຮົາ ກໍ່ຍັງໄດ້ດໍາເນີນການພັດທະນາຂີດຄວາມສາມາດຂອງພະນັກງານອີກດ້ວຍ ໃນໄລຍະເຮັດການຝຶກອົບຮົມ.

ແບັກເທັກ ໄດ້ຈັດການຝຶກອົບຮົມຫຼັກສູດການນໍາໃຊ້ ຈີໄອເອັດ ແລະ ອາກູຈີໄອເອັດ ໃຫ້ແກ່ພະນັກງານຂອງບໍລິສັດ, ສືບຕໍ່ປັບປຸງຄວາມຮູ້ຂອງພະນັກງານອາວຸໂສ ໂດຍການສົ່ງໄປຮຽນຕໍ່ລະດັບປະລິນຍາໂທສາຂາການຄຸ້ມຄອງບໍລິຫານວຽກງານພັດທະນາ, ຝຶກອົບຮົມກ່ຽວກັບພາສາອັງກິດໃຫ້ພະນັກງານຖາວອນທີ່ເປັນຄົນລາວ (ນັກທໍາລາຍ ລບຕ ຂັ້ນ 3 ແລະ ຂັ້ນ 4), ຜູ້ຊ່ວຍບໍລິຫານ, ທັກສະໃນການປັບປຸງ ແລະ ພັດທະນາທຸລະກິດ, ການວາງແຜນທຸລະກິດ, ແຜນການຕະຫຼາດ ແນໃສ່ປັບປຸງຄວາມສາມາດໃຫ້ແກ່ພະນັກງານທ້ອງຖິ່ນທີ່ເປັນຄົນລາວ.

ແບັກເທັກ ໄດ້ຈັດການຝຶກອົບຮົມຫຼັດສູດບໍາລຸງຄືນກ່ຽວກັບການເຮັດປະຖົມພະຍາບານຂັ້ນຕົ້ນ ໃຫ້ແກ່ພະນັກງານທັງໝົດທີ່ມີສ່ວນຮ່ວມໃນການກວດກູ້ ລບຕ ໃຫ້ແກ່ບໍລິສັດຂຸດຄົ້ນແຮ່ທາດອາລູມີນຽມແອວເອັດເອັມ, ຊຶ່ງພາຍຫຼັງຈົບຫຼັກສູດແລ້ວ ກໍ່ໄດ້ມີການມອບໃບຢັ້ງຢືນສາກົນໃຫ້ແຕ່ລະຄົນ ທີ່ເຂົ້າຮ່ວມຝຶກອົບຮົມມອບໂດຍນັກສໍາມະນາກອນຄົນຕ່າງປະເທດ, ຊຶ່ງກອງປະຊຸມຝຶກອົບຮົມດັ່ງກ່າວນີ້ ຈັດຂຶ້ນໃນເດືອນພະຈິກ 2013.

ນອກຈາກນັ້ນ, ໃນປີ 2013 ແບັກເທັກ ຍັງໄດ້ຂະຫຍາຍກໍາລັງການກວດກູ້ ລບຕ ຂຶ້ນຕື່ມອີກຫຼາຍກວ່າ 100 ຄົນ ເພື່ອສະໜອງການບໍລິການກວດກູ້ ລບຕ ຢູ່ໃນ ສປປ ລາວ. ຮອດທ້າຍປີ 2013, ແບັກເທັກ ໄດ້ເຄື່ອນໄຫວວຽກງານກວດກູ້ ລບຕ ໃຫ້ແກ່ລູກຄ້າ ຢູ່ໃນ 4 ແຂວງທີ່ມີ ລບຕ ຕົກຄ້າງຢູ່ ສປປ ລາວ ຄື:

- ແຂວງອັດຕະປື
- ແຂວງເຊກອງ
- ແຂວງຄໍາມ່ວນ
- ແຂວງຫຼວງພະບາງ

ນອກຈາກນັ້ນ, ແບັກເທັກ ຍັງໄດ້ສະໜັບສະໜູນການທົດລອງສືບສວນຫາ ລບຕ ແບບນໍາໃຊ້ຟີຊິກ ຢູ່ເມືອງຊານໄຊ, ສືບຕໍ່ປັບປຸງເຕັກໂນໂລຊີການກວດກູ້ ລບຕ ແລະ ປັບປຸງຄຸນນະພາບເຄື່ອງມືທີ່ຈະນໍາໃຊ້ເຂົ້າໃນການກວດກູ້ ລບຕ ໃຫ້ດີຂຶ້ນກວ່າເກົ່າ.

## ຂ່າວດີ:

ແບັກເທັກໄດ້ສືບຕໍ່ເຮັດວຽກຕາມສັນຍາໃຫ້ແກ່ບໍລິສັດລາວຊານໄຊຂຸດຄົ້ນບໍ່ແຮ່, ບໍລິສັດລີໄອທິນໂຕ ເພື່ອສະໜັບສະໜູນໃຫ້ແກ່ການສໍາຫຼວດແຮ່ທາດອາລູມີນຽມ ຢູ່ແຂວງອັດຕະປື. ນອກຈາກນັ້ນ, ພວກເຮົາ ຍັງໄດ້ສືບຕໍ່ສະໜັບສະໜູນກວດກູ້ ລບຕ ຢ່າງເປັນປະຈໍາ ໃຫ້ແກ່ໂຄງການການສໍາຫຼວດບໍ່ແຮ່ຂອງບໍລິສັດຢູນາຍເຕັດຢູ່ທາງພາກເໜືອ ແລະ ບໍລິສັດນໍ້າເທີນ ສໍາລັບໂຄງການຕິດຕັ້ງໄຟຟ້າ.

ຜ່ານການດໍາເນີນງານຂ້າງເທິງນັ້ນ, ແບັກເທັກ ໄດ້ມີການຝຶກອົບຮົມ ແລະ ຮັບສະໝັກພະນັກງານຄົນລາວຕື່ມຫຼາຍ 1,000 ຄົນ ໃນປີ 2013 ເພື່ອນໍາໃຊ້ເຂົ້າໃນການຖາງປ່າ ແລະ ປະກອບເປັນທີມງານ ແນໃສ່ສ້າງເສດຖະກິດຢູ່ໃນຊຸມຊົນໃຫ້ດີຂຶ້ນ.

## ວຽກຈຸດສຸມໃນປີ 2014:

ແບັກເທັກ ຈະສືບຕໍ່ເຮັດວຽກຮ່ວມກັບບັນດາອົງການຈັດຕັ້ງຕ່າງໆ ຢູ່ໃນ ສປປ ລາວ ໃນການກວດກູ້ ລບຕ ອອກຈາກພື້ນ. ພວກເຮົາຈະສືບຕໍ່ຮັບສະໝັກພະນັກງານຄົນລາວຢູ່ທ້ອງຖິ່ນ ເພື່ອປະກອບເຂົ້າເປັນທີມກວດກູ້ ລບຕ ສະໜັບສະໜູນໃຫ້ແກ່ບໍລິສັດລາວຊານໄຊ, ຢູເອັມເອັມຊີ ຢູ່ເມືອງວຽງຄໍາ, ແຂວງຫຼວງພະບາງ ແລະ ບໍລິສັດນໍ້າເທີນ ຢູ່ແຂວງຄໍາມ່ວນ.

ແບັກເທັກ ຈະສືບຕໍ່ຮັກສາສາຍສໍາພັນທີ່ດີກັບບັນດາອົງການຈັດຕັ້ງຂອງລາວ ແລະ ຕ່າງປະເທດ ທີ່ມີສ່ວນກ່ຽວຂ້ອງກັບອົງການຂອງເຮົາ. ໃນປີ 2014 ພວກເຮົາ ຈະສຸມໃສ່ກວດກູ້ ລບຕ ໃຫ້ແກ່ໂຄງການທາງລົດໄຟ ລາວ-ຈີນ ແລະ ບໍລິສັດພູເບ້ຍມາຍນິ້ງ ຢູ່ແຂວງຊຽງຂວາງ.

ພ້ອມນັ້ນ, ແບັກເທັກ ກໍ່ຈະສືບຕໍ່ສຸມໃສ່ຮັກສາ ແລະ ປັບປຸງເພີ່ມເຕີມການດໍາເນີນງານໃຫ້ມີຄວາມປອດໄພ ເພື່ອເຮັດໃຫ້ອຸບັດຕິເຫດເປັນສູນ ທີ່ອາດຈະສົ່ງຜົນກະທົບຕໍ່ການດໍາເນີນງານ.

ພວກເຮົາ ຈະສືບຕໍ່ປັບປຸງມາດຕະຖານການດໍາເນີນງານຂອງບໍລິສັດ ໃນຂົງເຂດວຽກບຸກຄະລາກອນ, ສຸຂະພາບ, ຄວາມປອດໄພ, ການຄຸ້ມຄອງບໍລິຫານສິ່ງແວດລ້ອມ ແລະ ຈັດການຝຶກອົບຮົມ ກ່ຽວກັບ:

- ການພົວພັນຕິດຕໍ່ສື່ສານ.
- ຂັ້ນຕອນໃນການຖາງປ່າ.
- ການດໍາເນີນງານຢ່າງມີຄວາມປອດໄພ.
- ການດໍາເນີນງານໃຫ້ສອດຄ່ອງກັບມາດຕະຖານສາກົນໃນການ ກວດກູ້ລະເບີດຝັງດິນ, ມາດຕະຖານແຫ່ງຊາດ ແລະ ມາດຕະຖານການປະຕິບັດງານ.
- ການກວດກາຄຸ້ມຄອງຄຸນນະພາບພາຍໃນ.
- ການບັນທຶກວຽກປະຈໍາວັນ.
- ການບັນທຶກຂໍ້ມູນພື້ນທີ່ສໍາເລັດການກວດກູ້.
- ຂັ້ນຕອນໃນການມອບໂອນດິນໃຫ້ເຈົ້າຂອງພາຍຫຼັງສໍາເລັດການກວດກູ້.

## ລູກຄ້າ:

ໃນປີ 2013 ແບັກເທັກ ໄດ້ສືບຕໍ່ຮັດແໜ້ນສາຍພົວພັນທີ່ດີກັບລູກຄ້າ 3 ລາຍໃຫຍ່ຄື ບໍລິສັດຂຸດຄົ້ນບໍ່ແຮ່ລາວ-ສັນໄຊ, ບໍລິສັດເຂື່ອນໄຟຟ້ານໍ້າເທີນ 2 ແລະ ບໍລິສັດຂຸດຄົ້ນບໍ່ແຮ່ຢູນາຍເຕັດ.

ໃນຊ່ວງປີ 2013 ແບັກເທັກ ສາມາດກວດກູ້ເນື້ອທີ່ໄດ້ຫຼາຍກວ່າ 100 ເຮັກຕາ ແລະ ໄດ້ມອບໂອນດິນທີ່ກວດກູ້ ແລ້ວຄືນໃຫ້ເຈົ້າຂອງດິນເພື່ອນໍາໃຊ້ເຂົ້າໃນການຜະລິດ ໂດຍປັ້ດສະຈາກຄວາມຄວາມສ່ຽງຈາກ ລບຕ ຕົກຄ້າງ.

## ບຸກຄະລາກອນໃນປີ 2013:

| ພະນັກງານຫ້ອງການ | | | | ພະນັກງານຝ່າຍປະຕິບັດງານ (ພາກສະໜາມ) | | | |
|---|---|---|---|---|---|---|---|
| ຄົນລາວ | | ຄົນຕ່າງປະເທດ | | ຄົນລາວ | | ຄົນຕ່າງປະເທດ | |
| ຊາຍ | ຍິງ | ຊາຍ | ຍິງ | ຊາຍ | ຍິງ | ຊາຍ | ຍິງ |
| 1 | 2 | 1 | 1 | 109 | 0 | 1 | 0 |

### ເນື້ອທີ່ກວດກູ້:

| ຜ່ານການກວດກູ້ (ເຮັກຕາ) | | | ຜ່ານການສຳຫຼວດດ້ານວິຊາການ (ເຮັກຕາ) | | |
|---|---|---|---|---|---|
| ດິນກະສິກຳ | ດິນພັດທະນາ | ລວມ | ດິນກະສິກຳ | ດິນພັດທະນາ | ລວມ |
| 0 | 39.73 | 39.73 | 0 | 0 | 0 |

### ລະເບີດທີ່ພົບ, ຖືກຍ້າຍ ແລະ ຖືກທຳລາຍ:

| ລະເບີດທີ່ຖືກຍ້າຍ/ຖືກທຳລາຍ | | | | | |
|---|---|---|---|---|---|
| ໜ້າວຽກ | ບົມໃຫຍ່ | ລະເບີດລູກຫວ່ານ | ລະເບີດຝັງດິນ | ລບຕ ຊະນິດອື່ນໆ | ລວມ |
| ການທຳລາຍເຄື່ອນທີ່ | 0 | 0 | 0 | 0 | 0 |
| ການກວດກູ້ | 0 | 87 | 2 | 171 | 260 |
| *ລວມ* | ***0*** | ***87*** | ***2*** | ***171*** | ***260*** |

## ພື້ນທີ່ການປະຕິບັດງານ:

| ໜ້າວຽກ | ແຂວງ ແລະ ເມືອງ ທີ່ປະຕິບັດກິດຈະກຳ |
|---|---|
| ການກວດກູ້ | ເມືອງຊານໄຊ-ແຂວງອັດຕະປື, ເມືອງຍົມມະລາດ ແລະ ນາກາຍ-ແຂວງບໍລິຄຳໄຊ ແລະ ເມືອງວຽງຄຳ-ແຂວງຫຼວງພະບາງ |
| ການສຳຫຼວດ ແລະ ການທຳລາຍເຄື່ອນທີ່ | ເມືອງວຽງຄຳ-ແຂວງຫຼວງພະບາງ |

## ທາງດ້ານການເງິນ:
### ການໃຊ້ຈ່າຍໃນປີ 2013 (ໂດລາສະຫະລັດ)

| ລາຍການ | ຈຳນວນ |
|---|---|
| *ລວມ* | ***901,000*** |

### ການສະໜັບສະໜູນຂອງຜູ້ໃຫ້ທຶນໃນປີ 2013 (ໂດລາສະຫະລັດ)

| ຜູ້ໃຫ້ທຶນ | ຈຳນວນ |
|---|---|
| ທຶນຂອງບໍລິສັດເອງ | 901,000 |
| *ລວມ* | ***901,000*** |

# ບໍລິສັດມິວເຊີດສ໌ ເກັບກູ້ລະເບີດ ຈຳກັດ (ມິວເຊີດສ໌)

## ກິດຈະກຳໃນປີ 2013:

ໃນປີ 2013, ຖືໄດ້ວ່າເປັນປີທຳອິດທີ່ອົງການມິວເຊີດສ໌ ສາມາດເຮັດສຳເລັດວຽກງານຂອງຕົນໄດ້ ພາຍຫຼັງທີ່ແຍກຕົນເອງອອກຈາກບໍລິສັດຮ່ວມທຸນ ມາເປັນບໍລິສັດຈຳກັດພຽງຜູ້ດຽວ. ພ້ອມນັ້ນ, ກໍ່ເປັນປີທີ່ຄົບຮອບ 20 ປີພໍດີ ໃນການປະຕິບັດວຽກງານກວດກູ້ ລບຕ ຢູ່ໃນ ສປປ ລາວ. ໃນຊ່ວງ 2 ທົດສະວັດທີ່ຜ່ານມາ ບໍລິສັດ ສາມາດດຳເນີນການກວດກູ້ ລບຕ ໄດ້ຫຼາຍກວ່າ 70 ໂຄງການ, ສາມາດກວດກູ້ເນື້ອທີ່ໄດ້ຫຼາຍກວ່າ 1,000 ເຮັກຕາ ແລະ ທຳລາຍ ລບຕ ໄດ້ຫຼາຍກວ່າ 10,000 ໜ່ວຍ.

ໃນປີ 2013, ມິວເຊີດສ໌ ໄດ້ມີການປັບໃຊ້ລະບົບການກວດກາຄຸ້ມຄອງຄຸນນະພາບ ເພື່ອສືບຕໍ່ປັບປຸງການເຮັດວຽກໃຫ້ມີຄວາມປອດໄພ ແລະ ໃຫ້ໄດ້ຮັບຜົນຜະລິດຫຼາຍຂຶ້ນກວ່າເກົ່າ. ນອກຈາກນັ້ນ, ມິວເຊີດສ໌ ຍັງໄດ້ປັບໃຊ້ນະໂຍບາຍ ແລະ ຂັ້ນຕອນຕ່າງໆ ທີ່ຫ້ອງການໃຫຍ່ນຳໃຊ້ຢູ່ແຄນເບີລາແລະອົດສະຕຣາລີ. ປະຈຸບັນນີ້, ລະບົບການກວດກາຄຸ້ມຄອງຄຸນນະພາບຂອງພວກເຮົາ ແມ່ນໄດ້ນຳໃຊ້ເຂົ້າໃນການປະຕິບັດງານເປັນທີ່ຮຽບຮ້ອຍແລ້ວ, ສ່ວນວ່າ ການກວດສອບພາຍນອກນັ້ນ ມີແຜນຈະເລີ່ມຕົ້ນດຳເນີນໃນປີ 2014. ອີງໃສ່ການດຳເນີນການກວດສອບພາບນອກທີ່ໄດ້ຮັບຜົນສຳເລັດ ຈຶ່ງເຮັດໃຫ້ບໍລິສັດມິວເຊີດສ໌ ໄດ້ຮັບການຢັ້ງຢືນຮັບຮອງທາງດ້ານມາດຕະຖານສາກົນ ໃນການດຳເນີນງານ 9001:2008 ແລະ ໂອເຫັດເອັດສ໌ເອເອັດສ 18001:2007 ກ່ຽວກັບລະບົບການກວດກາຄຸ້ມຄອງຄຸນນະພາບ.

ໃນຊ່ວງປີ 2013, ມິວເຊີດສ໌ ໄດ້ສ້າງຫ້ອງການຕາງໜ້າຂຶ້ນຢູ່ຮ່າໂນ້ຍ, ສສ ຫວຽດນາມ, ຊຶ່ງເປົ້າໝາຍແມ່ນເພື່ອນຳເອົາບົດຮຽນໃນການກວດກູ້ ລບຕ ຢູ່ໃນ ສປປ ລາວ ເຂົ້າໄປນຳໃຊ້ຢູ່ທີ່ນັ້ນ ເພື່ອຊ່ວຍເຫຼືອປະຊາຊົນຊາວຫວຽດນາມ.

ການກວດກູ້ ລບຕ ອອກຈາກພື້ນທີ່ ເພື່ອສະໜັບສະໜູນໃຫ້ແກ່ການພັດທະນາມີຄວາມປອດໄພຢູ່ໃນແຂວງທີ່ມີຄວາມທຸກຍາກ ແມ່ນເພື່ອນຳເອົາຜົນປະໂຫຍດມາໃຫ້ແກ່ປະຊາຊົນລາວບັນດາເຜົ່າທັງໝົດ. ບໍລິສັດມິວເຊີດສ໌ ໃນນາມເປັນບໍລິສັດເອກະຊົນສະແຫວງຫາຜົນກຳໄລດຳເນີນການກວດກູ້ ລບຕ ໂດຍປັດສະຈາກທຶນຊ່ວຍເຫຼືອຂອງປະເທດຜູ້ໃຫ້ທຶນ.

ຕະຫຼອດປີ 2013, ມິວເຊີດສ໌ ສາມາດກວດກູ້ເນື້ອທີ່ໄດ້ 646,370 ຕາແມັດ ໃນຄວາມເລິກ 25 ຊັງຕີແມັດ ແລະ ເນື້ອທີ່ຈຳນວນ 673,171 ຕາແມັດ ໃນລະດັບຄວາມເລິກເກີນ 25 ຊັງຕີແມັດ ໂດຍປະກອບມີ:

1. ເຂດພື້ນທີ່ສຳຫຼວດບໍ່ແຮ່
2. ເຂດບໍ່ແຮ່
3. ເຂດການກໍ່ສ້າງ
4. ເຂດພື້ນທີ່ສຶກສາຄວາມເປັນໄປໄດ້ໃນການຕິດຕັ້ງໝໍ້ແບ່ງຈາຍໄຟຟ້າ
5. ເຂດການພັດທະນາຂອງຊຸມຊົນ.

ມິວເຊີດສ໌ ສາມາດທຳລາຍ ລບຕ ທີ່ພົບເຫັນ ໄດ້ຈຳນວນ 393 ໜ່ວຍ ແລະ ລບຕ ນ້ອຍຊະນິດອື່ນໆຫຼາຍກວ່າ 1,000 ສິ້ນສ່ວນ.

ມິວເຊີດສ໌ ສັນຍາວ່າຈະຈະສືບຕໍ່ປະຕິບັດການກວດກູ້ ລບຕ ເພື່ອຫຼຸດຜົນຜົນກະທົບຈາກ ລບຕ ຢູ່ໃນ ສປປ ລາວ ຕໍ່ໄປອີກໃນອະນາຄົດ ແລະ ຈະສືບຕໍ່ຮັກສາຊື່ສຽງທີ່ວ່າ "ເປັນບໍລິສັດເກັບກູ້ ລບຕ ທີ່ດີເລີດຢູ່ໃນຂົງເຂດອາຊີ".



*ການຊອກຫາ ລບຕ ໂດຍນຳໃຊ້ເຄື່ອງກວດລາດລູບໜ້າກວ້າງ.*

## ຜົນສຳເລັດຕົ້ນຕໍໃນປີ 2013:

ໃນປີ 2013, ມິວເຊີດສ໌ ໄດ້ສ້າງຕຳແໜ່ງງານຜູ້ຈັດການພາກສະໜາມຂອງຕົນຂຶ້ນມາ ແລະ ທ່ານ ລິງເພັດ ແມ່ນຜູ້ທີ່ຖືກແຕ່ງຕັ້ງໄດ້ຮັບຕຳແໜ່ງນີ້ ເພື່ອເຮັດໜ້າໃນການຄຸ້ມຄອງບໍລິຫານວຽກປະຕິບັດງານຢູ່ພາກສະໜາມ. ຜູ້ກ່ຽວ ໄດ້ເຮັດວຽກກັບມິວເຊີດສ໌ ຕັ້ງແຕ່ປີ 1997 ພ້ອມທັງເປັນພະນັກງານວິຊາການທຳລາຍລະເບີດຂັ້ນ 3. ລິງເພັດ ໄດ້ດຳເນີນການກວດສອບພາຍນອກທຸກໆໂຄງການກວດກູ້ ລບຕ ຂອງມິວເຊີດສ໌ຢູ່ພາກສະໜາມ.

ເຕັກໂນໂລຊີໃໝ່ - ມິວເຊີດສ໌ ໄດ້ສືບຕໍ່ທົບທວນເຕັກໂນໂລຊີໃໝ່ "ອຸປະກອນນຳໃຊ້ເຂົ້າໃນການກວດກູ້" ທີ່ນຳໃຊ້ປະຈຸບັນຢູ່ປະເທດອົດສະຕຣາລີ ແລະ ເຂດປາຊີຟິກໃຕ້, ຊຶ່ງເຕັກໂນໂລຊີດັ່ງກ່າວນີ້ ແມ່ນມີຄວາມ

ເໝາະສົມກັບສະພາບພື້ນດິນຢູ່ອາຊີຕາເວັນອອກສ່ຽງໃຕ້. ນັກທໍລະນີວິທະຍາຂອງມິວເຊີດສ໌ ໄດ້ຕິດຕາມຢ່າງໃກ້ຊິດການຄົ້ນຄ້ວາເຕັກໂນໂລຊີຕ່າງໆໃນການກວດກູ້ ລບຕ ຢູ່ໃນຂອບເຂດທົ່ວໂລກ ແນໃສ່ນຳເຂົ້າມາທົດລອງນຳໃຊ້ຢູ່ໃນ ສປປ ລາວ.

ເພື່ອເປັນການຫຼຸດຜ່ອນຕົ້ນທຶນ ແລະ ປັບປຸງການດຳເນີນງານຂອງອຸດສາຫະກຳຂຸດຄົ້ນບໍ່ແຮ່ໃຫ້ມີຄວາມປອດໄພ ມິວເຊີດສ໌ ໄດ້ສຸມໃສ່ພະຍາມຄົ້ນຄ້ວາຊອກຫາເຕັກໂນໂລຊີໃໝ່ໆ ເພື່ອນຳໃຊ້ເຂົ້າໃນການຊອກຫາ ລບຕ ທີ່ຕົກຄ້າງຢູ່ເລິກ ໃຫ້ໄດ້ຮັບຜົນດີ.

ໃນເດືອນພຶດສະພາ 2013, ມິວເຊີດສ໌ ໄດ້ດຳເນີນການທົດລອງເຄື່ອງກວດຊອກຫາ ລບຕ ລະບົບພິເສດຢູ່ແຂວງຊຽງຂວາງ. ທຶນສະໜັບສະໜູນການທົດລອງສ່ວນໜຶ່ງແມ່ນໄດ້ມາຈາກບໍລິສັດພູເບ້ຍມາຍນິ້ງ. ຜົນການທົດລອງພົບວ່າ ເຄື່ອງກວດຊະນິດນີ້ ແມ່ນເຕັກໂນໂລຊີທີ່ມີຄວາມເໝາະສົມເພື່ອນຳໃຊ້ເຂົ້າໃນການກວດກູ້ ລບຕ ສະໜັບສະໜູນໃຫ່ແກ່ອຸດສາຫະກຳຂຸດຄົ້ນບໍ່ແຮ່.

ບໍລິສັດເອັມເອັມຈີ ກວດກູ້ ລບຕ ຢູ່ເຊໂປນ ໄດ້ມີການແລກປ່ຽນບົດຮຽນຜົນການທົດລອງເຄື່ອງກວດຊະນິດດັ່ງກ່າວ ແລະ ປະສົບການຜ່ານມາກ່ຽວກັບເຕັກໂນໂລຊີແບບນີ້ ຮ່ວມກັບມິວເຊີດສ໌ ແລະ ມິວເຊີດສ໌ ຈະສືບຕໍ່ຮ່ວມກັບບໍລິສັກເອັມເອັມຈີ ຕິດຕາມຢ່າງໃກ້ຊິດ ເພື່ອໃຫ້ສາມາດນຳໃຊ້ໄດ້ໃນອະນາຄົດ.

ໃນຊ່ວງປີ 2011/2012 ຊ່ວງລະດູແລ້ງ ແມ່ນຊ່ວງທີ່ກິດຈະການຂອງບໍລິສັດມີການຂະຫຍາຍຕົວຫຼາຍຢູ່ໃນ ສປປ ລາວ ສ່ວນວ່າຊ່ວງ 6 ເດືອນທ້າຍປີແມ່ນເລີ່ມຄົງທີ່. ໃນເວລາວາງແຜນຂະຫຍາຍລູກຄ້າຕື່ມໃນແຕ່ລະຄັ້ງ ແມ່ນຈະອີງໃສ່ສະຖານະພາບທາງການເງິນຂອງຕົນເອງກ່ອນວ່າ ມີພຽງພໍທີ່ນຳໃຊ້ເຂົ້າໃນການດຳເນີນງານກ່ອນລ່ວງໜ້າໄດ້ຫຼືບໍ່. ນອກຈາກນັ້ນ, ພວກເຮົາ ຍັງໄດ້ສຳເລັດການຮັບສະໝັກເອົາພະນັກງານຖາວອນທີ່ເປັນຄົນລາວ 2 ຕຳແໜ່ງ ແລະ ອີກ 2 ຕຳແໜ່ງງານຊົ່ວຄາວສຳລັບພະນັກງານຄົນລາວ. ການຂະຫຍາຍລູກຄ້າແບບອີງໃສ່ສະພາບການເງິນ ແລະ ການສ້າງຕັ້ງຫ້ອງການຕາງໜ້າຂຶ້ນຢູ່ທີ່ຫວຽດນາມນັ້ນ ຈຸດປະສົງແມ່ນເພື່ອຢາກສ້າງຮາກຖານໃຫ້ທຸລະກິດຂອງມິວເຊີດສ໌ ມີການຂະຫຍາຍຕົວຕື່ມອີກໃນສົກປີ 2014/15.

## ວຽກຈຸດສຸມໃນປີ 2014:

ສິ່ງທ້າທາຍຂອງມິວເຊີດສ໌ ລວມມີການແຂ່ງຂັນທາງດ້ານທຸລະກິດ ແລະ ເຕັກນິກວິຊາການທີ່ນຳໃຊ້ເຂົ້າໃນການກວດກູ້ ລບຕ.

ທາງດ້ານທຸລະກິດ ແມ່ນມິວເຊີດສ໌ ຕ້ອງການຢາກຂະຫຍາຍລູກຄ້າທີ່ມີຄວາມຫຼາກຫຼາຍທາງດ້ານທຸລະກິດຕື່ມ. ນອກຈາກນັ້ນ, ມິວເຊີດສ໌ ຍັງຕ້ອງການຢາກຈະຂະຫຍາຍທຸລະກິດຕື່ມໃນທົ່ວພາກພື້ນ, ຊຶ່ງການສ້າງຕັ້ງຫ້ອງການຜູ້ຕາງໜ້າຂອງມິວເຊີດສ໌ ຢູ່ທີ່ຮາໂນ້ຍ ນັ້ນ ແມ່ນເປັນບາດກ້າວທີ່ເດີນມາຖືກຕ້ອງແລ້ວ.

ການບໍລິການການກວດກູ້ ລບຕ ໃຫ້ແກ່ອຸດສາຫະກຳດ້ານຕ່າງໆ ແມ່ນເຮັດໃຫ້ເຮົາປະເຊີນໜ້າກັບສິ່ງທ້າທາຍຕ່າງໆຫຼາຍຂຶ້ນກວ່າເກົ່າທາງດ້ານເຕັກນິກວິຊາການທີ່ຈະນຳໃຊ້ເຂົ້າໃນການກວດກູ້ ລບຕ. ການເພີ່ມລະດັບການກວດເລິກ ແມ່ນສິ່ງທີ່ຈຳເປັນຫຼາຍສຳລັບພື້ນທີ່ສຳຫຼວດບໍ່ແຮ່ທີ່ມີ ລບຕ ຕົກຄ້າງ ແລະ ມີຄວາມສຳຄັນສຳລັບໂຄງການກໍ່ສ້າງພື້ນຖານໂຄງລ່າງ ຂອງ ສປປ ລາວ ໃນອານາຄົດ ເປັນຕົ້ນແມ່ນ ໂຄງການກໍ່ສ້າງທາງລົດ ໄຟ.

## ລູກຄ້າ:

ບໍລິສັດພູເບ້ຍມາຍນິ້ງ ທີ່ດຳເນີນງານທາງດ້ານການສຳຫຼວດຂຸດຄົ້ນບໍ່ແຮ່ ຢູ່ໃນເຂດພູຄຳ, ບ້ານຫ້ວຍໄຊ ແຂວງຊຽງຂວາງ. ພ້ອມນັ້ນ, ບໍລິສັດພູເບ້ຍມາຍນິ້ງ ຍັງໄດ້ສືບຕໍ່ຮັກສາມາດຕະຖານກ່ຽວກັບການກວດກູ້ ລບຕ ໃຫ້ຄົງສູງໄວ້ຕະຫຼອດ ເພື່ອຄວາມປອດໄພຢູ່ໃນສະຖານທີ່ເຮັດວຽກ ພ້ອມດ້ວຍ ໄດ້ສະໜອງທຶນເຂົ້າໃສ່ການກວດກູ້ ລບຕ ເພື່ອຊ່ວຍເຫຼືອຊຸມຊົນຢູ່ທ້ອງຖິ່ນ ໃຫ້ມີຄວາມປອດໄພເຊັ່ນດຽວກັນ.

ນອກຈາກນັ້ນ, ມິວເຊີດສ໌ ຍັງໄດ້ດຳເນີນການກວດກູ້ ລບຕ ໃຫ້ກັບບັນດາບໍລິສັດເອກະຊົນ ທັງພາຍໃນ ແລະ ຕ່າງປະເທດ ສຳລັບໂຄງການຂະໜາດນ້ອຍ ຢູ່ໃນ ສປປ ລາວ ສຳລັບປີ 2013 ຄື:

- ຈີໄອແມັບ ລາວ
- ແອວຈີ ກາແຣດ ຮາເຊັນ




*ທ່ານ ມາລາທອງ ໄດ້ຮັບໃບຍ້ອງຍໍ ແລະ ເງິນໂບນັດ.*

- ມາຍເວກ ລາວ
- ສິນໄຊ
- 3 ມາຍນິ້ງ
- ໂດມິນຽນ (ລາວ) ມາຍນິ້ງ
- ມອດ ແມັກໂດໂນ
- ອິມແພັກ ເອັນເນີຈີ ເອເຊຍ
- ເຊກອງ ລີເວີ້ ມາຍນິ້ງ

ບັນດາລູກຄ້າທັງໝົດຂ້າງເທິງນັ້ນ ແມ່ນໄດ້ສະໜອງການຊ່ວຍເຫຼືອກູ້ ລບຕ ແບບທີ່ດີທີ່ສຸດ ເພື່ອສະໜັບສະໜູນໃຫ້ແກ່ບັນດາຊຸມຊົນທ້ອງຖິ່ນຕ່າງໆຂອງລາວ ເນື່ອງຈາກວ່າວຽກງານດັ່ງກ່າວນີ້ ຖືໄດ້ວ່າເປັນສ່ວນໜຶ່ງທີ່ນອນຢູ່ໃນແຜນງານພັດທະນາແບບຍືນຍົງຂອງເຂົາເຈົ້າ.

## ຂ່າວດີ:

ຜົນສຳເລັດຂອງບໍລິສັດມິວເຊີດສ໌ ແມ່ນການທີ່ໄດ້ມີສ່ວນຮ່ວມໃນການກວດກູ້ ລບຕ ອອກຈາກພື້ນທີ່ຢູ່ໃນຊຸມຊົນທ້ອງຖິ່ນ. ຜົນປະໂຫຍດທີ່ສົ່ງຜົນໃຫ້ຊຸມຊົນປະກອບມີ ການຈ້າງງານ, ມີການນຳໃຊ້ແຮງງານຂອງທ້ອງຖິ່ນເຂົ້າໃນການກວດກູ້ ລບຕ ແລະ ການປະກອບສ່ວນທາງດ້ານການເງິນ ໂດຍສະເພາະແມ່ນໄດ້ສືບຕໍ່ສະໜອງການຝຶກອົບຮົມ ແລະ ການສຶກສາດ້ານຕ່າງໆ. ການຝຶກອົບຮົມກ່ຽວກັບການເປັນຜູ້ນຳ, ພາສາ, ການສຶກສາ ແລະ ທັກສະໃນການນຳໃຊ້ຄອມພິວເຕີ້ ແມ່ນສິ່ງຜົນກະທົບດ້ານບວກໃຫ້ແກ່ຊີວິດການເປັນຢູ່ຂອງຄອບຄົວຜູ້ທີ່ເຂົ້າຮ່ວມຝຶກອົບຮົມ ດີຂຶ້ນກວ່າເກົ່າ.




ໃນວັນທີ 22 ທັນວາ 2013, ສະຫາຍ ພິນສະຫວັນ ມາລາທອງ ໜຶ່ງໃນຜູ້ເຂົ້າຮ່ວມການຝຶກອົບຮົມກ່ຽວກັບການປິ່ນປົວບາດແຜຂອງບໍລິສັດມິວເຊີດສ໌ ໄດ້ໄປພົບປະສັງສັນຢູ່ເຮືອນໝູ່ທີ່ນະຄອນຫຼວງວຽງຈັນ. ເມື່ອໄປຮອດ ເມຍຂອງໝູ່ລາວ ຊື່ນາງ ວົງສາ ໄດ້ຍິນສຽງລູກແອວຢູ່ໃນເຮືອນ ຈຶ່ງໄດ້ຍ່າງເຂົ້າໄປເບິ່ງລູກຊາຍນ້ອຍຂອງລາວ ຊື່ ຕາໂລ້. ອີກຈັກໜ້ອຍໜຶ່ງ ນາງ ວົງສາ ກໍ່ໄດ້ຫອບລູກແລ່ນອອກມານອກເຮືອນແບບເປັນໜ້າຕົກໃຈ.

ສະຫາຍ ມາລາທອງ ໄດ້ດຶງເອົາເດັກນ້ອຍຄົນນັ້ນອອກຈາກແມ່ຂອງລາວ ແລະ ວາງລາວລົງໄວ້ທີ່ພື້ນ. ໂຕຂອງລາວກໍ່າເຫຼືອງ, ບໍ່ຫາຍໃຈ ແລະ ບໍ່ມີການຕອບສະໜອງ. ຫຼັງຈາກນັ້ນ, ສະຫາຍ ມາລາທອງ ຈຶ່ງໄດ້ປ້ຳຫົວໃຈຂອງລາວ. ທັນທີທັນໃດນັ້ນ, ຕາໂລ້ ກໍ່ຟື້ນຂຶ້ນມາພ້ອມສຽງໄຫ້. ຫຼັງຈາກນັ້ນ, ກໍ່ໄດ້ນຳສົ່ງລາວໄປໂຮງໝໍເພື່ອດູແລອາການຕໍ່.

## ບຸກຄະລາກອນໃນປີ 2013:

| ພະນັກງານຫ້ອງການ | | | | ພະນັກງານຝ່າຍປະຕິບັດງານ (ພາກສະໜາມ) | | | |
|---|---|---|---|---|---|---|---|
| ຄົນລາວ | | ຄົນຕ່າງປະເທດ | | ຄົນລາວ | | ຄົນຕ່າງປະເທດ | |
| ຊາຍ | ຍິງ | ຊາຍ | ຍິງ | ຊາຍ | ຍິງ | ຊາຍ | ຍິງ |
| 3 | 6 | 4 | 2 | 278 | 201 | 13 | 0 |

## ຕົວເລກສະຖິຕິໃນປີ 2013:

### ເນື້ອທີ່ກວດກູ້:

| ຜ່ານການກວດກູ້ (ເຮັກຕາ) | | |
|---|---|---|
| ດິນກະສິກຳ | ດິນພັດທະນາ | ລວມ |
| 0 | 131.95 | 131.95 |

### ລະເບີດທີ່ພົບ, ຖືກຍ້າຍ ແລະ ຖືກທຳລາຍ:

| ລະເບີດທີ່ຖືກຍ້າຍ/ຖືກທຳລາຍ | | | | | |
|---|---|---|---|---|---|
| ໜ້າວຽກ | ບົມໃຫຍ່ | ລະເບີດລູກຫວ່ານ | ລະເບີດຝັງດິນ | ລບຕ ຊະນິດອື່ນໆ | ລວມ |
| ການກວດກູ້ | 8 | 186 | 0 | 199 | ***393*** |

## ພື້ນທີ່ການປະຕິບັດງານ:

| ໜ້າວຽກ | ແຂວງ ແລະ ເມືອງ ທີ່ປະຕິບັດກິດຈະກຳ |
|---|---|
| ການກວດກູ້ | ຊຽງຂວາງ, ໄຊສົມບູນ, ບໍລິຄຳໄຊ, ຄຳມ່ວນ, ສະຫວັນນະເຂດ, ເຊກອງ, ສາລະວັນ ແລະ ອັດຕະປື |
| ການສຳຫຼວດ ແລະ ການທຳລາຍເຄື່ອນທີ່ | ແຂວງວຽງຈັນ |
| ກວດກູ້ທາງເຂົ້າ | ທົ່ວພັນ, ຊຽງຂວາງ ແລະ ອັດຕະປື |

## ທາງດ້ານການເງິນ:

### ການໃຊ້ຈ່າຍໃນປີ 2013 (ໂດລາສະຫະລັດ)

| ລາຍການ | ຈຳນວນ |
|---|---|
| ຄ່າໃຊ້ຈ່າຍສຳລັບບຸກຄະລາກອນ | 1,039,006 |
| ຄ່າໃຊ້ຈ່າຍສຳລັບການປະຕິບັດງານ | 829,352 |
| ຄ່າໃຊ້ຈ່າຍສຳລັບການປະຕິບັດງານພິເສດ | 26,500 |
| ຄ່າໃຊ້ຈ່າຍສຳລັບຊື້ວັດຖຸ-ຊັບສິນຄົງທີ່ | 28,002 |
| ຄ່າໃຊ້ຈ່າຍສຳລັບຊື້ວັດຖຸ-ຊັບສິນບໍ່ຄົງທີ່ | 82,568 |
| *ລວມ* | ***2,005,428*** |

### ການສະໜັບສະໜູນຂອງຜູ້ໃຫ້ທຶນໃນປີ 2013 (ໂດລາສະຫະລັດ)

| ຜູ້ໃຫ້ທຶນ | ຈຳນວນ |
|---|---|
| ທຶນຂອງບໍລິສັດເອງ | 2,005,428 |
| *ລວມ* | ***2,005,428*** |

# ກົມຊ່າງແສງ, ກະຊວງປ້ອງກັນປະເທດ ຮ່ວມກັບ ບໍລິສັດ ເອັມເອັມຈີ ລ້ານຊ້າງມິນເນີໂຣນ (ເອັມເອັມຈີ)

## ກິດຈະກຳໃນປີ 2013:

ບໍລິສັດເອັມເອັມຈີ ລ້ານຊ້າງມິນເນີໂຣນ ເກັບກູ້ລະເບີດ (ເອັມເອັມຈີ) ໄດ້ເຮັດການສຳຫຼວດພື້ນທີ່ຈຳນວນ 607 ເຮັກຕາ, ລວມທັງໝົດໃຊ້ເວລາຢູ່ 1,164,128 ຊົ່ວໂມງ ແລະ ສາມາດທຳລາຍ ລບຕ ໄດ້ຈຳນວນ 912 ໜ່ວຍ ເພື່ອສະໜັບສະໜູນໃຫ້ແກ່ການດຳເນີນວຽກງານຂຸດຄົ້ນບໍ່ຄຳຂອງບໍລິສັດ ແລະ ໂຄງການພັດທະນາຊຸມຊົນທ້ອງຖິ່ນຢູ່ໃນບໍລິເວນດັ່ງກ່າວ.

(ໝາຍເຫດ) ຕົວເລກການສຳຫຼວດ ແມ່ນລວມເອົາຕົວເລກໃນເຂດທີ່ມີການກວດກູ້ຕາມຫຼຸມເຈາະນຳ.

## ຜົນສຳເລັດຕົ້ນຕໍໃນປີ 2013:

**ຜົນສຳເລັດທາງດ້ານຄວາມປອດໄພໃນປີ 2013 (ເບິ່ງຕາຕະລາງຂ້າງລຸ່ມ)**

| ຈຳນວນຄັ້ງໄດ້ຮັບບາດເຈັບ | ຈຳນວນຄັ້ງປິ່ນປົວຮັກສາໃຫ້ແກ່ຜູ້ໄດ້ຮັບບາດເຈັບ | ຈຳນວນຄັ້ງເຮັດປະຖົມພະຍາບານ | ລວມຈຳນວນຄັ້ງຖືກບາດເຈັບ | ຊົ່ວໂມງເຮັດວຽກທັງໝົດ | ອັດຕາຄວາມຖີ່ຂອງການບາດເຈັບໃນເວລາເຮັດວຽກ |
|---|---|---|---|---|---|
| 01 | 01 | 01 | 03 | 1,164,128 | 1.72 |

**ຜົນສຳເລັດໃນການສ້າງຄວາມອາດສາມາດໃຫ້ພະນັກງານທ້ອງຖິ່ນໃນປີ 2013 (ເບິ່ງຕາຕະລາງຂ້າງລຸ່ມ)**

| ຫຼັກສູດ | ສະຖານທີ່ | ຈຳນວນ |
|---|---|---:|
| ແພດ | ເມືອງເຊໂປນ | 90 |
| ສອບເສັງເອົາໃບຂັບຂີ່ | ແຂວງສະຫວັນນະເຂດ | 08 |
| ພາສາອັງກິດສຳລັບຄົນລາວ | ເມືອງເຊໂປນ | 17 |
| ຄອມພິວເຕີ້/ຊອບແວ | ເມືອງເຊໂປນ | 09 |
| ຫຼັກສູດຄວາມປອດໄພຂອງເອັມເອັມຈີ | ເມືອງເຊໂປນ | 393 |
| ການເປັນຜູ້ຊີ້ນຳວຽກການພັດທະນາ | ເມືອງເຊໂປນ | 05 |
| ເອັກແພັກ | ເມືອງເຊໂປນ | 04 |
| ແຜນການຊີ້ນຳວຽກງານພັດທະນາ | ເມືອງເຊໂປນ | 02 |
| ນັກຂັບລົດ ເມນຊີ ມູກ | ເມືອງເຊໂປນ | 03 |

ຜົນສຳເລັດທີ່ໄດ້ຮັບ (ຍັງມີການສືບຕໍ່ປັບປຸງຢູ່ໃນປະຈຸບັນ)

ພະແນກເກັບກູ້ ລບຕ ຂອງບໍລິສັດເອັມເອັມຈີ-ການນຳໃຊ້ລະບົບການຊອກຫາ ລບຕ ໂດຍນຳໃຊ້ເຄື່ອງກວດຍີ່ຫໍ້ ອຸນຕາທີອີເອັມ.

ຄວາມເປັນມາ.

ພາຍຫຼັງທີ່ມີການທົດລອງນຳໃຊ້ເຄື່ອງດັ່ງກ່າວໃນພື້ນທີ່ຕົວຈິງໃນປີ 2012 ເພື່ອແນໃສ່ໃຫ້ສາມາດປະຕິບັດງານໄດ້ຢ່າງມີປະສິດທິຜົນ ແລະ ຫາຂໍ້ແກ້ໄຂຂໍ້ຈຳກັດການນຳໃຊ້ເຄື່ອງດັ່ງກ່າວ ທີ່ເກີດມາຈາກສະພາບທາງທໍລະນີວິທະຍາ ທີ່ເຂົ້າມາເປັນໂຕບັນຫາໃນການນຳໃຊ້ເຄື່ອງກວດດັ່ງກ່າວ. ໃນປີ 2013 ພະນັກງານທໍລະນີວິທະຍາປະຈຳພະແນກກວດກູ້ລບຕຂອງບໍລິສັດ ໄດ້ພາກັນສຸມໃສ່ຄົ້ນຄວ້າ ເພື່ອເບິ່ງການປະຕິບັດງານຂອງເຄື່ອງໃຫ້ຫຼາຍຂຶ້ນກວ່າເກົ່າ ເພື່ອໃຫ້ສາມາດກຳນົດໄດ້ວ່າ ເຄື່ອງກວດດັ່ງກ່າວນີ້ແມ່ນມີຄຸນລັກສະນະພິເສດອັນໃດແທ້ເພື່ອໃຊ້ເປັນເຄື່ອງມືໃນການຊອກຫາ ລບຕ ໃຫ້ໄດ້ຢ່າງມີປະສິດທິຜົນ. ເຄື່ອງກວດດັ່ງກ່າວນີ້ ເປົ້າໝາຍແມ່ນເພື່ອຊອກຫາລະເບີດບົມໃຫຍ່ ຊະນິດ ເອັມເຄ 81 ໜັກ 205 ປອນ ໃນລະດັບຄວາມເລິກ 2.6 ແມັດ. ນັກທຳລາຍລະເບີດຂອງບໍລິສັດ ໄດ້ນຳເອົາເຄື່ອງດັ່ງກ່າວ ໄປທົດລອງຢູ່ເມືອງເຊໂປນ, ຊຶ່ງຕົວເຄື່ອງປະກອບມີ ຕົວຮັບຄື້ນສັນຍາແມ່ເຫຼັກໄຟຟ້າຕົ້ນຕໍ ແລະ ມີວົງຈອນຮັບສັນຍາຂະໜາດໃຫຍ່, ມີລະ

### ■ ການທົດລອງ.

ການທົດລອງຂັ້ນເບື້ອງຕົ້ນໄດ້ສຳເລັດໃນເດືອນມີນາ 2013 ແລະ ການທົດລອງແບບເຕັມສ່ວນແມ່ນສຳເລັດໃນເດືອນມິຖຸນາ 2013. ການທົດລອງແມ່ນດຳເນີນໃນຫຼາຍຮູບແບບຢູ່ໃນພື້ນທີ່ໂຄງການຂອງເອັມເອັມຈີ ຮ່ວມກັບບໍລິສັດຜູ້ຜະລິດ ຫຼື ສະໜອງເຄື່ອງກວດ ໂດຍມີການທົດສອບກັບລະເບີດຝັງດິນ ແລະ ທົດສອບກັບລະເບີດເອັມເຄ 81 ແລະ ເອັມເຄ 82 ປະມານ 10 ກວ່າໜ່ວຍ ໃນລະດັບຄວາມເລິກທີ່ແຕກຕ່າງກັນ ແຕ່ວ່າ ບໍລິສັດເອັມເອັມຈີ ບໍ່ໄດ້ມີການແຈ້ງບໍລິສັດທີ່ຜະລິດ ຫຼື ສະໜອງເຄື່ອງກວດດັ່ງກ່າວ ໃຫ້ຮັບຊາບກ່ອນລ່ວງໜ້າແຕ່ຢ່າງໃດວ່າ ໄດ້ມີການຝັງລະເບີດ ເພື່ອທົດສອບໄວ້ຈັກໜ່ວຍຢູ່ພື້ນດິນ, ຫຼາຍປານໃດ ແລະ ຢູ່ໃນຄວາມເລິກຊ່ຳໃດ, ຊຶ່ງການເຮັດແບບນີ້ ກໍ່ເພື່ອຢາກຮູ້ປະສິດທິພາບຂອງເຄື່ອງກວດວ່າ ຈະສາມາດກວດຈັບຫາລະເບີດໄດ້ດີຊ່ຳໃດ. ນອກຈາກນັ້ນ, ພວກເຮົາ ຍັງໄດ້ມີການທົດສອບຢູ່ຕາມສະພາບພື້ນທີ່ສະເພາະໃດໜຶ່ງນຳ ເປັນຕົ້ນແມ່ນ ທົດສອບໃນເຂດພື້ນທີ່ທີ່ເປັນຂີ້ຕົມ ແລະ ເປັນບວກຫຼຸມ. ພ້ອມດຽວນັ້ນ, ກໍ່ຍັງໄດ້ມີການປັບປຸງຄວາມໄວຂອງເວລາແບບມີ ຈີພີເອັດ ເຂົ້າຊ່ວຍ ເພື່ອໃຫ້ສາມາດຮູ້ໄດ້ໄວຕຳແໜ່ງຂອງເປົ້າໝາຍ ອີກດ້ວຍ. ຍ້ອນມີພະນັກງານວິຊາການຄົນລາວ ໄດ້ເຂົ້າມາມີສ່ວນຮ່ວມໃນຂະບວນການການທົດລອງນຳໃຊ້ອຸປະກອນທໍລະນີວິທະຍາດັ່ງກ່າວນີ້ຫຼາຍ ໃນເວລາທີ່ມີການທົດລອງຢູ່ທີ່ເມືອງເຊໂປນ ປະສົມປະສານກັບການນຳໃຊ້ເຄື່ອງມືດີຈີຕອນ ຢູ່ວຽກປະຈຳວັນຢ່າງເປັນປະຈຳ ຈຶ່ງເຮັດໃຫ້ເຂົາເຈົ້າກາຍເປັນຜູ້ທີ່ມີຄວາມຊ່ຽວຊານໃນດ້ານນີ້.

### ■ ຜົນໄດ້ຮັບ:

ຜົນການທົດສອບ ໃຫ້ຮູ້ວ່າ ເຄື່ອງກວດຍີ່ຫໍ້ ອຸນຕາທີອີເອັມ ແມ່ນສາມາດກວດຈັບຫາເປົ້າໝາຍໄດ້ດີ. ມີສອງຢ່າງທີ່ບໍ່ໄດ້ຄາດໄວ້ເກີດຂຶ້ນໃນເວລາການທົດລອງ ແມ່ນການຫຼຸດລົງຂອງ "ຂໍ້ຜິດພາດ" ແລະ ມີການເພີ່ມຂຶ້ນຂອງຜົນໄດ້ຮັບ ໂດຍໄດ້ມີການນຳໃຊ້ຮູບແບບທົດສອບ



ແບບຈັດລຽງເປັນຕາຕະລາງແຖວຍາວ ແລະ ເຮັດການສຳຫຼວດໃຫ້ຫຼາຍຂຶ້ນຕື່ມກວ່າເກົ່າ. ຂໍ້ມູນທີ່ໄດ້ມາຈາກການເຮັດທົດລອງຢູ່ເມືອງເຊໂປນ ໄດ້ຖືກຮັບຮອງວ່າ ຖ້ານຳໃຊ້ເຄື່ອງກວດຊະນິດນີ້ເຂົ້າໃນການດຳເນີນງານຊອກຫາ ລບຕ ຂອງເອັມເອັມຈີ ແມ່ນຈະສົ່ງຜົນດີຕໍ່ການປັບປຸງຄຸນນະພາບວຽກງານກວດກູ້ ລບຕ ໃຫ້ດີຂຶ້ນກວ່າເກົ່າ ແລະ ຈະຫຼຸດຜ່ອນຄວາມສ່ຽງທີ່ຈະກະທົບຕໍ່ຊື່ສຽງຂອງບໍລິສັດ.

## ຂ່າວດີ: ເມນຊີ ມູກ ເອັມ540

ໃນເດືອນພະຈິກ 2013, ພະແນກກວດກູ້ ລບຕ ຂອງບໍລິສັດເອັມເອັມຈີ ໄດ້ສັ່ງຊື້ລົດຈັກຊຸດຂະໜາດໃຫຍ່ ຍີ່ຫໍ້ ເມນຊີ ມູກ ເອັມ540 ທີ່ຜະລິດມາຈາກປະເທດສະວິດ ເພື່ອນຳໃຊ້ເຂົ້າໃນການຖາງປ່າ/ອະນາໄມພື້ນທີ່ ເພື່ອກຽມໃສ່ດຳເນີນການກວດກູ້ ລບຕ. ລົດຈັກດັ່ງກາວ ເຮັດໃຫ້ສາມາດຫຼຸດຜ່ອນຄວາມສ່ຽງໄດ້ຫຼາຍຕໍ່ການເກີດອຸປະຕິເຫດຈາກ ລບຕ ແຕກຂຶ້ນ ໃນເວລາທີ່ດຳເນີນການຖາງປ່າອະນາໄມພື້ນທີ່ສຳລັບການກວດກູ້ ລບຕ. ພະນັກງານ 3 ຄົນ ຂອງ ຄູກລ ໄດ້ເຂົ້າມາຝຶກນຳໃຊ້ລົດຈັກດັ່ງກາວ ເປັນເວລາ 4 ອາທິດ. ໃນຕົ້ນປີ 2014 ນີ້ ພວກເຮົາ ຈະນຳສະເໜີຕໍ່ ຄຊກລ ເພື່ອຢັ້ງຢືນຮັບຮອງການນຳໃຊ້ລົດຈັກຊຸດຂະໜາດໃຫຍ່ດັ່ງກ່າວນີ້.

ຄຸນລັກສະນະພິເສດຂອງລົດຈັກຊຸດຂະໜາດໃຫຍ່:

- ຫ້ອງຄົນຂັບ ມີຍາງພະລາສະຕິກໝາຊັ້ນດີປົກຫຸ້ມ ທີ່ເຄືອບດ້ວຍຄາບອນເນັດ ດ້ວຍຄວາມໜາ 12 ມິນ ເພື່ອປ້ອງກັນການກະທົບ.
- ມີລະບົບປ້ອງກັນໃນເວລາລົດປີ້ນ ແລະ ລະບົບປ້ອງກັນໃນເວລາມີສິ່ງຂອງຕົກໃສ່.
- ມີຂາທີ່ສາມາດເຄື່ອນຍ້າຍໄດ້ຢ່າງອິດສະຫຼະ ໃນສະພາບພື້ນທີ່ຊັນ ແລະ ທຸລະກັນດານ.
- ສາມາດນຳໃຊ້ເຂົາໃນການຍົກຍໍ ແລະ ຕ່າງເຄື່ອງຂອງໄດ້ເປັນຈຳອນວນຫຼາຍ.
- ຕີນລົດສາມາດຮອງຮັບຕໍ່ການກະແທກ ໃນເວລານຳໃຊ້ຢູ່ໃນເຂດພື້ນທີ່ປ່າໄມ້.

## ວຽກຈຸດສຸມໃນປີ 2014:

- ການປະຕິບັດວຽກຄວາມປອດໄພ (ໃຫ້ມີອຸບັດເຫດເປັນສູນ).
- ຈັດຕັ້ງປະຕິບັດເຄື່ອງກົນຈັດຕັດຫຍ້າ ແລະ ເຄື່ອງກົນຈັກ ທີ່ໃຊ້ເຂົ້າໃນການກະກຽມພື້ນທີ່ສຳລັບການ ກວດກູ້ ລບຕ.
- ປະຕິບັດແຜນການ ແລະ ປັບປຸງຄວາມອາດສາມາດໃຫ້ແກ່ພະນັກງານທ້ອງຖິ່ນ.
- ເຊັນບົດບັນທຶກຄວາມເຂົ້າໃຈກັບກະຊວງປ້ອງກັນປະເທດ
- ທົດລອງນຳໃຊ້ເຄື່ອງກວດຊອກຫາ ລບຕ ໃນເຂດທີ່ມີທາດເຫຼັກເຈືອປົນ.
- ສືບຕໍ່ດຳເນີນການປັບປຸງວຽກງານທີ່ສຳຄັນ.
- ນຳໃຊ້ທຶນໜ້ອຍ ແຕ່ໃຫ້ໄດ້ຜົນຜະລິດຫຼາຍ.

## ລູກຄ້າ:

ບໍລິສັດ ເອັມເອັມຈີ, ນຳໃຊ້ທຶນຕົນເອງ

## ບຸກຄະລາກອນໃນປີ 2013:

| ພະນັກງານຫ້ອງການ | | | | ພະນັກງານຝ່າຍປະຕິບັດງານ (ພາກສະໜາມ) | | | |
|---|---|---|---|---|---|---|---|
| ຄົນລາວ | | ຄົນຕ່າງປະເທດ | | ຄົນລາວ | | ຄົນຕ່າງປະເທດ | |
| ຊາຍ | ຍິງ | ຊາຍ | ຍິງ | ຊາຍ | ຍິງ | ຊາຍ | ຍິງ |
| 5 | 6 | 0 | 0 | 238 | 118 | 7 | 0 |

## ຕົວເລກສະຖິຕິໃນປີ 2013:

### ເນື້ອທີ່ກວດກູ້:

| ຜ່ານການກວດກູ້ (ເຮັກຕາ) | | |
|---|---|---|
| ດິນກະສິກຳ | ດິນພັດທະນາ | ລວມ |
| 0 | 186 | 186 |

### ລະເບີດທີ່ພົບ, ຖືກຍ້າຍ ແລະ ຖືກທຳລາຍ:

| ລະເບີດທີ່ຖືກຍ້າຍ/ຖືກທຳລາຍ | | | | | |
|---|---|---|---|---|---|
| ໜ້າວຽກ | ບົມໃຫຍ່ | ລະເບີດລູກຫວ່ານ | ລະເບີດຝັງດິນ | ລບຕ ຊະນິດອື່ນໆ | ລວມ |
| ການກວດກູ້ | 7 | 317 | 0 | 588 | 912 |

## ພື້ນທີ່ການປະຕິບັດງານ:

| ໜ້າວຽກ | ແຂວງ ແລະ ເມືອງ ທີ່ປະຕິບັດກິດຈະກຳ |
|---|---|
| ການກວດກູ້ | ເມືອງວິລະບູລີ-ແຂວງສະຫວັນນະເຂດ |

## ທາງດ້ານການເງິນ:

### ການໃຊ້ຈ່າຍໃນປີ 2013 (ໂດລາສະຫະລັດ)

| ລາຍການ | ຈຳນວນ |
|---|---|
| ຄ່າໃຊ້ຈ່າຍສຳລັບບຸກຄະລາກອນ | 3,909,080 |
| ຄ່າໃຊ້ຈ່າຍສຳລັບການປະຕິບັດງານ | 924,776 |
| ຄ່າໃຊ້ຈ່າຍສຳລັບການປະຕິບັດງານພິເສດ | 0 |
| ຄ່າໃຊ້ຈ່າຍສຳລັບຊື້ວັດຖຸ-ຊັບສິນຄົງທີ່ | 198,782 |
| ຄ່າໃຊ້ຈ່າຍສຳລັບຊື້ວັດຖຸ-ຊັບສິນບໍ່ຄົງທີ່ | 750,000 |
| *ລວມ* | ***5,782,638*** |

### ການສະໜັບສະໜູນຂອງຜູ້ໃຫ້ທຶນໃນປີ 2013 (ໂດລາສະຫະລັດ)

| ຜູ້ໃຫ້ທຶນ | ຈຳນວນ |
|---|---|
| ທຶນຂອງບໍລິສັດເອງ | ***5,782,638*** |
| ລວມ | ***5,782,638*** |

# ອົງການປະຕິບັດງານຊ່ວຍເຫຼືອຜູ້ຖືກເຄາະຮ້າຍຈາກ ລບຕ ແລະ ໂຄສະນາສຶກສາຄວາມສ່ຽງຈາກ ລບຕ

## ສະມາຄົມຊ່ວຍເຫຼືອລ້າ ແລະ ບັນເທົາທຸກຂອງຍີ່ປຸ່ນ (ເອເອອາຣ) (ເຮັດກິດຈະກຳໂຄສະນາສຶກສາຄວາມສ່ຽງຈາກ ລບຕ)




*ອາສາສະໝັກສຸກສາລາຂັ້ນບ້ານ ໄດ້ຮັບການຝຶກອົບຮົມກ່ຽວກັບການປະຖົມພະຍາບານ, ປື້ມນ້ອຍ, ແຜ່ນພັບ ແລະ ໂພດສະເຕີ້ ພາຍຫຼັງສຳເລັດການຝຶກອົບຮົມ.*

ອົງການເອເອອາຣ໌ ໄດ້ສະໜອງການຝຶກອົບຮົມກ່ຽວກັບການເຮັດປະຖົມພະຍາບານຂັ້ນຕົ້ນໃຫ້ແກ່ພະຍາບານປະຈຳສຸກສາລາ ແລະ *ອາສາສະໝັກສຸກສາລາຂັ້ນບ້ານ ແນໃສ່ ເພື່ອຊ່ວຍເຫຼືອບັນດາຜູ້ທີ່ໄດ້ຮັບບາດເຈັບຍ້ອນອຸປະຕິເຫດຈາກ ລບຕ ຢູ່ແຂວງຊຽງຂວາງ. ນອກຈາກນັ້ນ* ອົງການເອເອອາຣ໌ ຍັງໄດ້ສະໜັບສະໜູນ ຄກລ ກ່ຽວກັບກິດຈະກຳໂຄສະນາສຶກສາຄວາມສ່ຽງຈາກ ລບຕ ໂດຍການສະໜອງອຸປະກອນໂຄສະນາຈຳນວນໜຶ່ງໃຫ້.

### ກິດຈະກຳໃນປີ 2013:

ໃນປີ 2013, ອົງການເອເອອາຣ໌ ໄດ້ດຳເນີນງານກ່ຽວກັບການສ້າງຄວາມເຂັ້ມແຂງໃນການດູແລປິ່ນປົວແບບສຸກເສີນໃຫ້ແກ່ຜູ້ຖືກເຄາະຮ້າຍຈາກ ລບຕ ແລະ ລະບົບການຂົນສົ່ງຄົນເຈັບ ໃຫ້ແກ່ພະຍາບານປະຈຳສຸກສາລາ ແລະ ອາສາສະໝັກສຸກສາລາຂັ້ນບ້ານ. ໃນຊ່ວງການຝຶກອົບຮົມນັ້ນ, ກໍ່ໄດ້ມີການຈັດຝຶກອົບຮົມກ່ຽວກັບການເປັນຄູຝຶກເຊັ່ນດຽວກັນໃຫ້ແກ່ພະນັກງານຂອງໂຮງໝໍເມືອງ, ຊຶ່ງພາຍຫຼັງສຳເລັດແລ້ວກຸ່ມຄົນເຫຼົ່ານີ້ ແມ່ນຈະໄດ້ນຳໄປສິດສອນໃຫ້ແກ່ຜູ້ອື່ນໆຢູ່ໃນການຝຶກອົບຮົມກ່ຽວກັບການເຮັດປະຖົມພະຍາບານຂັ້ນຕົ້ນໃນຄັ້ງຕໍ່ໄປ.

ໃນຊ່ວງ 4 ເດືອນຕົ້ນປີ 2013, ອົງການເອເອອາຣ໌ ໄດ້ສະໜອງການຝຶກອົບຮົມກ່ຽວກັບການເຮັດປະຖົມພະຍາບານຂັ້ນຕົ້ນ ໃຫ້ແກ່ພະຍາບານປະຈຳສຸກສາລາ ແລະ ອາສາສະໝັກສຸກສາລາຂັ້ນບ້ານ ຢູ່ເມືອງແປກ, ຜາໄຊ, ຄຳ ແລະ ພູກູດ ເພື່ອສະຫຼຸບຜົນການຈັດຕັ້ງປະຕິບັດໂຄງການໄລຍະ 2. ສຳລັບໂຄງການໄລຍະ 3 ແມ່ນເລີ່ມຂຶ້ນໃນເດືອນມິຖຸນາ ແລະ ອົງການເອເອອາຣ ໄດ້ຂະຫຍາຍພື້ນທີ່ເປົ້າໝາຍໄປເມືອງຄູນ ແລະ ໜອງແຮດຕື່ມ, ຊຶ່ງເປັນບ່ອນທີ່ໄດ້ມີການຈັດການຝຶກອົບຮົມກ່ຽວກັບການເປັນຄູຝຶກ ແລະ ການເຮັດປະຖົມພະຍາບານຂັ້ນຕົ້ນໃຫ້ແກ່ພະຍາບານປະຈຳສຸກສາລາ ແລະ ອາສາສະໝັກສຸກສາລາຂັ້ນບ້ານມາກ່ອນໜ້ານີ້ແລ້ວ.

ນອກຈາກການຝຶກອົບຮົມກ່ຽວກັບການເຮັດປະຖົມພະຍາບານຂັ້ນຕົ້ນແລ້ວ, ອົງການເອເອອາຣ ຍັງໄດ້ແຕ່ງປະດິດບົດຮ້ອງໂຄສະນາຄວາມອັນຕະລາຍຂອງ ລບຕ ຂຶ້ນມາອີກສຳລັບເດັກນ້ອຍ. ຫຼັງຈາກສຳເລັດ ແລ້ວ ກໍ່ໄດ້ມີການມອບບົດເພັງດັ່ງກ່າວໃຫ້ແກ່ ຄກລ ຢູ່ແຂວງຊຽງຂວາງ ເພື່ອນຳໃຊ້ເຂົ້າໃນການດຳເນີນກິດຈະກຳໂຄສະນາສຶກສາຄວາມສ່ຽງຈາກ ລບຕ.

ກິດຈະກຳຕົ້ນຕໍທີ່ໄດ້ປະຕິບັດໃນປີ 2013 ປະກອບມີ:

- ສະໜອງການຝຶກອົບຮົມກ່ຽວກັບການເປັນຄູຝຶກ ໃຫ້ແກ່ພະນັກງານໂຮງໝໍເມືອງຄູນ ແລະ ໜອງແຮດ ໄລຍະເວລາ 6 ມື້.
- ສະໜອງການຝຶກອົບຮົມ ເປັນເວລາ 3 ມື້ ກ່ຽວກັບການເຮັດປະຖົມພະຍາບານຂັ້ນຕົ້ນ ແລະ ສະໜອງອຸປະກອນຈຳນວນໜຶ່ງໃຫ້ແກ່ອາສາສະໝັກສຸກສາລາຂັ້ນບ້ານ ຢູ່ເມືອງຄຳ, ພູກູດ ແລະ ຄູນ.
- ໄດ້ຈັດພິມ ແລະ ແຈກຢາຍປື້ມນ້ອຍຂໍ້ມູນ, ແຜ່ນພັບ ແລະ ໂພດສ໌ເຕີ້ ກ່ຽວກັບ ລບຕ ແລະ ການເຮັດປະຖົມພະຍາບານ ໃຫ້ແກ່ອາສາສະໝັກສຸກສາລາຂັ້ນບ້ານ ຢູ່ເມືອງຄຳ, ພູກູດ ແລະ ຄູນ.
- ໄດ້ສະໜອງການຝຶກອົບຮົມກ່ຽວກັບການເຮັດປະຖົມພະຍາບານຂັ້ນຕົ້ນໃຫ້ແກ່ພະຍາບານປະຈຳສຸກສາລາ ຢູ່ເມືອງແປກ, ຜາໄຊ ແລະ ຄູນ ໄລຍະເວລາ 4 ມື້.
- ໄດ້ສະໜອງອຸປະກອນການແພດໃນການປິ່ນປົວບາດແຜ ແລະ ປື້ມນ້ອຍຂໍ້ມູນໃຫ້ແກ່ສຸກສາລາ ຢູ່ເມືອງແປກ, ຜາໄຊ ແລະ ຄູນ.
- ໄດ້ຈັດກອງປະຊຸມຂັ້ນບ້ານ ຢູ່ໃນບ້ານເປົ້າໝາຍຂອງເມືອງແປກ, ຄຳ, ພູກູດ ແລະ ຄູນ ແລະ ໄດ້ແຈກຢາຍໃບປິວ ແລະ ໂພດສ໌ເຕີ້ກ່ຽວກັບການເຮັດປະຖົມພະຍາບານຂັ້ນຕົ້ນ.
- ໄດ້ສະໜອງອຸປະກອນການແພດໃນການປິ່ນປົວບາດແຜ ໃຫ້ແກ່ໂຮງໝໍເມືອງແປກ, ຜາໄຊ, ຄຳ, ພູກູດ, ຄູນ ແລະ ໜອງແຮດ.
- ໄດ້ສະໜອງບົດຮ້ອງໂຄສະນາສຶກສາຄວາມສ່ຽງຈາກ ລບຕ ໃຫ້ແກ່ ຄກລ ແຂວງຊຽງຂວາງ.
- ໄດ້ສະໜັບສະໜູນຫ້ອງການປະສານງານ ຄຊກລ ແຂວງຊຽງຂວາງ ໃນການລົງສຳພາດເກັບກຳຂໍ້ມູນຜູ້ຖືກເຄາະຮ້າຍຈາກ ລບຕ.

### ຜົນສຳເລັດຕົ້ນຕໍໃນປີ 2013:

ຜົນສຳເລັດຕົ້ນຕໍໃນການດຳເນີນໂຄງການຢູ່ແຂວງຊຽງຂວາງ ໃນປີ 2013 ປະກອບມີ:

- ພະນັກງານໂຮງໝໍເມືອງ 8 ຄົນ ທີ່ມາຈາກເມືອງຄູນ ແລະ ໜອງແຮດ ໄດ້ຮັບການເພີ່ມພູນທັກສະ ແລະ ຄວາມຮູ້ ໃນການເຮັດປະຖົມພະຍາບານຂັ້ນຕົ້ນ ແລະ ທັກສະໃນການສິດສອນ ຜ່ານການຝຶກອົບຮົມກ່ຽວກັບການເປັນຄູຝຶກ.
    - ຄູຝຶກທີ່ຈົບມາຈາກການຝຶກອົບຮົມກ່ຽວກັບການເປັນຄູຝຶກຢູ່ເມືອງຄູນ ໄດ້ສະໜອງການຝຶກອົບຮົມກ່ຽວກັບການເຮັດປະຖົມພະຍາບານຂັ້ນຕົ້ນ ໃຫ້ແກ່ອາສາສະໝັກສຸກສາລາຂັ້ນບ້ານ ຈຳນວນ 136 ຄົນ.
- ອາສາສະໝັກສຸກສາລາຂັ້ນ 185 ຄົນ ຢູ່ເມືອງຄຳ, ພູກູດ ແລະ ຄູນ ໄດ້ຮັບການເພີ່ມພູນທັກສະ ແລະ ຄວາມຮູ້ຢູ່ໃນການຝຶກອົບຮົມກ່ຽວກັບການເຮັດປະຖົມພະຍາບານຂັ້ນຕົ້ນ.
    - ຜົນໄດ້ຮັບ ກ່ອນ ແລະ ຫຼັງ ການຝຶກອົບຮົມ ສາມາດຮູ້ໄດ້ເຖິງການປ່ຽນແປງທີ່ດີທາງດ້ານຄວາມຮູ້ ພາຍຫຼັງຝຶກອົບຮົມ.

- ອາສາສະໝັກສຸກສາລາຂັ້ນບ້ານ ມີໜ້າທີ່ຮັບຜິດຊອບຫຼາຍຂຶ້ນກວ່າເກົ່າ ແລະ ມີຄວາມຫ້າວຫັນໃນການເຮັດວຽກປິ່ນປົວການແພດສຸກເສີນຢູ່ໃນບ້ານ.

- ປຶ້ມນ້ອຍຂໍ້ມູນ ຫຼາຍກວ່າ 300 ຫົວ ແລະ ແຜ່ນພັບ ແລະ ໂປດສເຕີ້ 2,000 ແຜ່ນ ກ່ຽວກັບການເຮັດປະຖົມພະຍາບານຂັ້ນຕົ້ນ ໄດ້ຖືກພິມອອກມາ ແລະ ແຈກຢາຍ ໃຫ້ແກ່ອາສາສະໝັກສຸກສາລາຂັ້ນບ້ານ ຢູ່ໃນເມືອງເປົ້າໝາຍ.
  - ການປະເມີນຜົນຫຼັງການຝຶກອົບຮົມ ຊີ້ໃຫ້ເຫັນວ່າ ອຸປະກອນເຫຼົ່ານີ້ ແມ່ນໄດ້ຖືກນຳໃຊ້ເຂົ້າໃນວຽກຕົວຈິງແທ້ ໂດຍອາສາສະໝັກສຸກສາລາຂັ້ນບ້ານ ແລະ ໄດ້ຖ່າຍທອດຄວາມຮູ້ຕໍ່ໃຫ້ແກ່ຊາວບ້ານ.

- ພະຍາບານປະຈຳຢູ່ສຸກສາລາ 75 ຄົນ ຢູ່ເມືອງແປກ, ຜາໄຊ ແລະ ຄູນ ໄດ້ຮັບການເພີ່ມພູນທັກສະ ແລະ ຄວາມຮູ້ ໃນການເຮັດປະຖົມພະຍາບານຂັ້ນຕົ້ນ ຜ່ານການຝຶກອົບຮົມ.

- ໂຮງໝໍເມືອງ 8 ແຫ່ງ ໄດ້ຮັບອຸປະກອນການແພດໃນການປິ່ນປົວບາດແຜ.

- ອາສາສະໝັກສຸກສາລາຂັ້ນບ້ານ 185 ຄົນ ຢູ່ເມືອງຄຳ, ພູກູດ ແລະ ຄູນ ໄດ້ຮັບອຸປະກອນເຄື່ອງເຮັດປະຖົມພະຍາບານຂັ້ນຕົ້ນ, ປຶ້ມນ້ອຍຂໍ້ມູນ ແລະ ແຜ່ນພັບ.

- ສຸກສາລາ 18 ແຫ່ງ ຢູ່ເມືອງແປກ, ຜາໄຊ. ຄຳ ແລະ ພູກູດ ໄດ້ຮັບອຸປະກອນການແພດໃນການດູແລບາດແຜ, ປຶ້ມນ້ອຍຂໍ້ມູນ ແລະ ແຜ່ນພັບ.

- ກອງປະຊຸມຂັ້ນບ້ານ ໄດ້ຈັດຂຶ້ນຢູ່ໃນ 36 ບ້ານ ຢູ່ໃນເມືອງແປກ, ຜາໄຊ, ຄຳ ແລະ ພູກູດ.
  - ມີຊາວບ້ານເຂົ້າຮ່ວມ 1,797 ຄົນ (ຊາຍ: 653 ຄົນ, ຍິງ 833 ຄົນ ແລະ ເດັກນ້ອຍ 311 ຄົນ).
  - ຊາວບ້ານ ໄດ້ຮັບຮູ້ຄວາມສຳຄັນຂອງການເຮັດປະຖົມພະຍາບານຂັ້ນຕົ້ນ ແລະ ຄວາມອັນຕະລາຍຂອງ ລບຕ ໃນເວລາເຂົ້າຮ່ວມ ກອງປະຊຸມ ແລະ ບັນດາແຜ່ນພັບ ແລະ ພິດສເຕີ້ ກໍ່ໄດ້ຖືກແຈກຢາຍໃຫ້ຊາວບ້ານນຳ.
  - 'ຄົນຂັບລົດໃນເວລາສຸກເສີນ' ທີ່ມີລົດເປັນຂອງຕົນເອງ ໄດ້ຖືກແຕ່ງຕັ້ງໃຫ້ເຮັດໜ້າທີ່ໃນການຂົນສົ່ງຜູ້ຖືກເຄາະຮ້າຍຈາກ ລບຕ ໄປໂຮງໝໍ.

- ໄດ້ມີການສຳພາດຜູ້ຖືກເຄາະຮ້າຍຈາກ ລບຕ 29 ຄົນ ທີ່ມາຈາກເມືອງແປກ, ຜາໄຊ, ພູກູດ, ຄຳ ແລະ ໜອງແຮດ.

- ຄກລ ແຂວງຊຽງຂວາງ ໄດ້ຮັບເອົາບົດຮ້ອງໂຄສະນາສຶກສາຄວາມສ່ຽງຈາກ ລບຕ ສະບັບພາສາລາວ ເພື່ອນຳໃຊ້ເຂົ້າໃນການດຳເນີນກິດຈະກຳ.

## ວຽກຈຸດສຸມໃນປີ 2014:

ໃນປີ 2014, ອົງການເອເອອາຣ໌ ຈະສືບຕໍ່ສະໜອງການຝຶກອົບຮົມໃຫ້ແກ່ອາສາສະໝັກສຸກສາລາຂັ້ນບ້ານ ແລະ ພະຍາບານປະຈຳສຸກສາລາ ແລະ ຈະສະໜອງອຸປະກອນໃນການດູແລບາດແຜຈຳນວນໜຶ່ງໃຫ້ແກ່ສຸກສາລາ ຢູ່ເມືອງໜອງແຮດ. ນອກຈາກນັ້ນ, ທີມງານເຄື່ອນທີ່ຂອງອົງການເອເອອາຣ ຍັງຈະລົງຢ້ຽມຢາມບ້ານທີ່ຖືກຄັດເລືອກວ່າມີຄວາມສ່ຽງສູງຈາກ ລບຕ ຕົກຄ້າງ ຢູ່ເມືອງໜອງແຮດ ເພື່ອເຮັດການໂຄສະນາກ່ຽວກັບ ລບຕ ແລະ ສິດສອນຄວາມຮູ້ພື້ນຖານໃນການເຮັດປະຖົມພະຍາບານຂັ້ນຕົ້ນ. ກ່ຽວກັບການເຮັດວຽກຮ່ວມກັບທີມງານພົວພັນຊຸມຊົນຂອງ ຄກລ ແຂວງຊຽງຂວາງ ໃນການດຳເນີນກິດຈະກຳໂຄສະນາສຶກສາຄວາມສ່ຽງຈາກ ລບຕ ນັ້ນ ອົງການເອເອອາຣ໌ ຈະສະໜອງພິດສເຕີ້ກ່ຽວກັບການໂຄສະນາສຶກສາຄວາມສ່ຽງຈາກ ລບຕ, ປຶ້ມຊຽນ ແລະ ບົດຮ້ອງກ່ຽວກັບການໂຄສະນາສຶກສາຄວາມສ່ຽງຈາກ ລບຕ ສະບັບພາສາມົ້ງ ແລະ ຂະມຸ ໃຫ້ແກ່ ຄກລ.

## ຂ່າວດີ:

ໃນປີ 2013, ອົງການເອເອອາຣ໌ ໄດ້ລົງຢ້ຽມຢາມອາສາສະໝັກສຸກສາລາຂັ້ນບ້ານ ແລະ ແພດປະຈຳສຸກສາລາ 25 ຄົນ ພາຍຫຼັງການປະເມີນຜົນຝຶກອົບຮົມກ່ຽວກັບຄວາມຮູ້ທາງດ້ານການເຮັດປະຖົມພະຍາບານຂັ້ນຕົ້ນ ແລະ ທັກສະໃນການລອງເຮັດເບິ່ງຈາກທີ່ໄດ້ຮຽນມາ ແລະ ການປ່ຽນແປງພຶດຕິກຳ. ເປີເຊັນສະເລ່ຍຂອງຄຳຕອບທີ່ຖືກຕ້ອງ ຫຼັງຈາກການຝຶກອົບຮົມ ມີເຖິງ 60-70 ເປີເຊັນ ແລະ ມີບາງຈຳນວນກໍ່ຕອບວ່າ ຍາກຫຼາຍທີ່ຈະເຂົ້າເຖິງການປະຖົມພະຍາບານຂັ້ນຕົ້ນໄດ້. ໃນເວລາລົງຢ້ຽມຢາມນັ້ນ ເຫັນໄດ້ວ່າ ອາສາສະໝັກສຸກສາລາຂັ້ນບ້ານ ແລະ ແພດປະຈຳສຸກສາລາ ມີການປັບປຸງດີຂຶ້ນຫຼາຍກວ່າເກົ່າທາງດ້ານເຕັກນິກໃນການຫ້າມເລືອດ, ປິ່ນປົວບາດແຜໄຟໄໝ້ ແລະ ການດາມກະດູກແຕກຫັກ. ໜຶ່ງໃນອາສາສະໝັກສຸກສາລາຂັ້ນບ້ານ ຊື່ນາງອຸ່ນມາ ໄດ້ບອກພວກເຮົາກ່ຽວກັບປະສົບການຂອງລາວວ່າ "ມີອຸບັດຕິເຫດຈາກ ລບຕ ເຫດການໜຶ່ງເກີດຂຶ້ນ ເປັນຕາຢ້ານຫຼາຍ ສິ່ງຜົນໃຫ້ເດັກນ້ອຍ ໄດ້ຮັບບາດເຈັບຢ່າງສາຫັດ. ໃນຕອນນັ້ນ, ຂ້ອຍໄດ້ໃຊ້ຜ້າເປື້ອນຜືນໜຶ່ງ ເພື່ອເຮັດການຫ້າມເລືອດ. ຫຼັງຈາກນັ້ນ, ບາດແຜຂອງເດັກນ້ອຍຄົນນັ້ນ ກໍ່ມີອາການຕິດເຊື້ອອັກເສບ. ຖ້າວ່າ ຂ້ອຍຮູ້ຈັກວິທີການຫ້າມເລືອດທີ່ຖືກຕ້ອງໃນຕອນນັ້ນ ບາດແຜຂອງເດັກນ້ອຍຄົນນັ້ນກໍ່ຄົງຈະບໍ່ຕິດເຊື້ອ. ປະຈຸບັນນີ້, ຂ້ອຍຮູ້ສຶກດີໃຈຫຼາຍ ທີ່ໄດ້ຮຽນຮູ້ວິທີການເຮັດປະຖົມພະຍາບານຂັ້ນຕົ້ນ ຈາກການຝຶກອົບຮົມຂອງອົງການເອເອອາຣ. ຂ້ອຍສາມາດນຳໃຊ້ຄວາມຮູ້ທີ່ໄດ້ຮຽນມາເຂົ້າໃນການຮັກສາຄົນເຈັບດ້ວຍຄວາມໝັ້ນໃຈ". ອຸ່ນມາ ບໍ່ພຽງແຕ່ເປັນອາສາສະໝັກສຸກສາລາຂັ້ນບ້ານເທົ່ານັ້ນ ແຕ່ຍັງມີໜ້າທີ່ຕຳແໜ່ງເປັນເຖິງນາຍບ້ານອີກດ້ວຍ. ລາວກ່າວວ່າ "ຂ້ອຍຫວັງວ່າ ຈະໄດ້ມີໂອກາດຍົກລະດັບຄວາມຮູ້ໃນດ້ານນີ້ຕື່ມອີກ ເພື່ອຊ່ວຍເຫຼືອປະຊາຊົນຢູ່ໃນບ້ານຂອງຂ້ອຍ. ເມື່ອໃດທີ່ຂ້ອຍຮຽນຮູ້ໄດ້ຫຼາຍແລ້ວ ຂ້ອຍຕ້ອງການຈະຖ່າຍທອດຄວາມຮູ້ດັ່ງກ່າວນີ້ ໃຫ້ແກ່ອາສາສະໝັກສຸກສາລາຂັ້ນບ້ານຜູ້ອື່ນໆຕໍ່".



*ອາສາສະໝັກສຸກສາລາຂັ້ນບ້ານ ຮຽນຝຶກແອບການດາມກະດູກແຕກຢູ່ໃນຊ່ວງຝຶກອົບຮົມ*

## ຄູ່ຮ່ວມງານ:

- ອົງການເອເອອາຣ໌ ເຮັດວຽກໂດຍກົງກັບສູນຟື້ນຟູໜ້າທີ່ການ, ສູນຟື້ນຟູໜ້າທີ່ການຂັ້ນແຂວງ, ພະແນກສາທາລະນະສຸກແຂວງ ລວມທັງ ໂຮງໝໍເມືອງ ແລະ ອຳນາດການປົກຄອງຂັ້ນບ້ານ.
- ງົບປະມານສຳລັບໂຄງການແມ່ນໄດ້ມາຈາກກະຊວງການຕ່າງປະເທດຍີ່ປຸ່ນ, ທຶນຊ່ວຍເຫຼືອຂອງອົງການ ເອັນຈີໂອ ຂອງຍີ່ປຸ່ນ ແລະ ເງິນບໍລິຈາກຂອງປະຊາຊົນຍີ່ປຸ່ນ.




ພະຍາບານປະຈຳສຸກສາລາ ຝຶກແອບການວັດແທກຄວາມດັນເລືອດ ໃນຂະນະຝຶກອົບຮົມ.




ອົງການເອເອອາຣ໌ ມອບອຸປະກອນສຳລັບການດູແລປິ່ນປົວບາດແຜ ໃຫ້ແກ່ສຸກສາລາ ໃນນາມຕາງໜ້າໃຫ້ພະນັກງານໂຮງໝໍເມືອງ.




ອົງການເອເອອາຣ໌ ໄດ້ພາກັນແຕ່ງປຶ້ມເພັງ ກ່ຽວກັບການໂຄສະນາສຶກສາຄວາມສ່ຽງຈາກ ລບຕ ເພື່ອສະໜັບສະໜູນການດຳເນີນກິດຈະກຳໂຄສະນາສຶກສາຄວາມສ່ຽງຈາກ ລບຕ ຂອງຄູກລ ຢູ່ແຂວງຊຽງຂວາງ.



ພະນັກງານຂອງອົງການເອເອອາຣ໌ ລົງຢ້ຽມຢາມຜູ້ຖືກເຄາະຮ້າຍຈາກ ລບຕ ເພື່ອເກັບກຳຂໍ້ມູນ. ເດັກສອງຄົນນີ້ ແມ່ນຜູ້ຖືກເຄາະຮ້າຍຈາກ ລບຕ ຢູ່ເມືອງຄຳ.

## ບຸກຄະລາກອນໃນປີ 2013:

| ພະນັກງານຫ້ອງການ | | | | ພະນັກງານຝ່າຍປະຕິບັດງານ (ພາກສະໜາມ) | | | |
|---|---|---|---|---|---|---|---|
| ຄົນລາວ | | ຄົນຕ່າງປະເທດ | | ຄົນລາວ | | ຄົນຕ່າງປະເທດ | |
| ຊາຍ | ຍິງ | ຊາຍ | ຍິງ | ຊາຍ | ຍິງ | ຊາຍ | ຍິງ |
| 1 | 1 | 0 | 0 | 7 | 0 | 0 | 2 |

## ຕົວເລກສະຖິຕິໃນປີ 2013:

| ຜູ້ໄດ້ຮັບຜົນປະໂຫຍດ | | | | |
|---|---|---|---|---|
| ການຝຶກອົບຮົມກ່ຽວກັບການປະຖົມພະຍາບານຂັ້ນຕົ້ນ | | | ກອງປະຊຸມຢູ່ຂັ້ນບ້ານ | ການເກັບກຳຂໍ້ມູນ |
| ພະນັກງານ ປະຈຳຢູ່ໂຮງໝໍແຂວງ | ພະຍາບານ ປະຈຳຢູ່ສຸກສາລາ | ອາສາສະໝັກ ສຸກສາລາຂັ້ນບ້ານ | ຊາວບ້ານ | ຜູ້ຖືກເຄາະຮ້າຍ ຈາກ ລບຕ |
| *8* | 73 | 1,797 | 1,797 | 29 |

## ພື້ນທີ່ປະຕິບັດງານ:

| ໜ້າວຽກ | ແຂວງ ແລະ ເມືອງ ທີ່ປະຕິບັດກິດຈະກຳ |
|---|---|
| ການຝຶກອົບຮົມກ່ຽວກັບການປະຖົມພະຍາບານຂັ້ນຕົ້ນ | ເມືອງແປກ, ຜາໄຊ, ຄຳ, ພູກູດ, ຄູນ ແລະ ໜອງແຮດ ຢູ່ແຂວງຊຽງຂວາງ |

## ທາງດ້ານການເງິນ:

### ຄ່າໃຊ້ຈ່າຍໃນປີ 2013: (ໂດລາສະຫະລັດ)

| ລາຍການ | ຈຳນວນ |
|---|---:|
| ຄ່າໃຊ້ຈ່າຍສຳລັບບຸກຄະລາກອນ | 39,000 |
| ຄ່າໃຊ້ຈ່າຍສຳລັບການປະຕິບັດງານ | 90,300 |
| ຄ່າໃຊ້ຈ່າຍສຳລັບການປະຕິບັດງານພິເສດ | 0 |
| ຄ່າໃຊ້ຈ່າຍສຳລັບຊື້ວັດຖຸ-ຊັບສິນຄົງທີ່ | 12,700 |
| ຄ່າໃຊ້ຈ່າຍສຳລັບຊື້ວັດຖຸ-ຊັບສິນບໍ່ຄົງທີ່ | 0 |
| *ລວມ* | ***142,000*** |

### ການສະໜັບສະໜູນຂອງຜູ້ໃຫ້ທຶນ ໃນປີ 2013: (ໂດລາສະຫະລັດ)

| ຜູ້ໃຫ້ທຶນ | ເງິນທີ່ໄດ້ຮັບໃນປີ 2013 |
|---|---:|
| ກະຊວງການຕ່າງປະເທດຍີ່ປຸ່ນ | 187,800 |
| *ລວມ* | ***187,800*** |

# ອົງການຊ່ວຍເຫຼືອບັນເທົາທຸກຂອງກາໂຕລິກ (ຊີອາເອັດສ໌)

## (ດຳເນີນກິດຈະກຳໂຄສະນາສຶກສາຄວາມສ່ຽງຈາກ ລບຕ ແລະ ການຊ່ວຍເຫຼືອຜູ້ຖືກເຄາະຮ້າຍຈາກ ລບຕ)

## ກິດຈະກຳໃນປີ 2013:

ປະຈຸບັນນີ້ ອົງການຊ່ວຍເຫຼືອບັນເທົາທຸກຂອງກາໂຕລິກ ກຳລັງດຳເນີນ ກິດຈະກຳກ່ຽວກັບການຕອບຮັບປະຖົມພະຍາບານຢູ່ຂັ້ນບ້ານຄື: ເຊື່ອມສານການປິ່ນປົວບາດແຜ ແລະ ການໂຄສະນາສຶກສາຄວາມສ່ຽງຈາກ ລບຕ ຢູ່ໃນຊຸມຊົນທີ່ມີຄວາມສ່ຽງສູງຢູ່ທີ່ເມືອງໄຊບົວທອງ-ແຂວງຄຳມ່ວນ. ໂຄງການມີໄລຍະ 2 ປີ ໂດຍໄດ້ຮັບທຶນຊ່ວຍເຫຼືອຈາກກະຊວງການຕ່າງປະເທດອາເມລິກາ-ຫ້ອງການຫຼຸດຜ່ອນອາວຸດ ແລະການສູ້ຮົບ ແລະ ໂຄງການນີ້ ສືບຕໍ່ໃຫ້ສຳເລັດຈົນຮອດທ້າຍເດືອນທັນວາ 2014 ໂດຍສົມທົບກັບກະຊວງສາທາລະນະສຸກ.

ອົງການຊີອາເອັດສ໌ ໄດ້ຂະຫຍາຍກິດຈະກຳໂຄສະນາສຶກສາຄວາມສ່ຽງຈາກ ລບຕ ເຂົ້າໄປຊຸມຊົນທີ່ມີ ລບຕ ຕົກຄ້າງສູງ. ຈາກບົດຮຽນທີ່ຖອດຖອນໄດ້ໃນການດຳເນີນໂຄງການໄລຍະທີ 1 ຈຶ່ງເຮັດໃຫ້ອົງການຊີອາເອັດສ໌ ຈຶ່ງຕ້ອງໄດ້ມີການປັບໃຊ້ກິດຈະກຳໂຄສະນາສຶກສາຄວາມສ່ຽງຈາກ ລບຕ ໃຫ້ລວມມີວິທີການຮຽນແບບໃໝ່ ເພື່ອຊຸກຍູ້ໃຫ້ມີການເຂົ້າມາມີສ່ວນຮ່ວມຫຼາຍຂຶ້ນຈາກຊາວບ້ານ ໂດຍສະເພາະແມ່ນ ແມ່ຍິງ ແລະ ເດັກນ້ອຍ.

ອົງການຊີອາເອັດສ໌ ກຳລັງເຄື່ອນໄຫວວຽກຢູ່ທັງໝົດ 40 ບ້ານ ຢູ່ໃນເມືອງໄຊບົວທອງ ເພື່ອສະໜັບສະໜູນຄະນະກຳມະການຊີ້ນຳວຽກງານສຶກສາຂັ້ນເມືອງ ປັບປຸງແຜນທີ່ບ້ານ ແລະ ແຜນຕອບຮັບສຸກເສີນ. ດ້ວຍການປະສານງານກັບອົງການຊີອາເອັດສ໌ ແລະ ຄູ່ຮ່ວມງານ, ຄະນະກຳມະການຊີ້ນຳວຽກງານສຶກສາຂັ້ນເມືອງ ຈຶ່ງໄດ້ຜະລິດແຜນປ້າຍໄມ້ຂຶ້ນມາ ແລະ ແຕ້ມແຜນທີ່ລົງໃສ່. ຫຼັງຈາກນັ້ນ, ກໍ່ໄດ້ເອົາໄປຕິດໄວ້ຢູ່ຈຸດທີ່ເໝາະສົມຂອງຊຸມຊົນ.

ອົງການຊີອາເອັດສ໌ ກຳລັງສຸມໃສ່ສ້າງຄວາມອາດສາມາດໃຫ້ແກ່ແພດປະຈຳສຸກສາລາຂັ້ນເມືອງ, ອາສາສະໝັກສຸກສາລາຂັ້ນເມືອງ ແລະຜູ້ຕອບຮັບປະຖົມພະຍາບານຂັ້ນບ້ານ ເພື່ອສະໜອງການປະຖົມພະຍາ ບານສຸກເສີນ ແລະ ປິ່ນປົວບາດແຜ ເພື່ອຮັກສາຊີວິດ ແລະ ອະໄວຍະວະຂອງຜູ້ທີ່ຖືກເຄາະຮ້າຍຈາກອຸປະຕິເຫດ ລບຕ. ການຝຶກອົບຮົມ ກ່ຽວກັບການກອບກູ້ເອົາຊີວິດ ໄດ້ດຳເນີນຢູ່ໃນທັງໝົດ 40 ບ້ານຢູ່ເມືອງໄຊບົວທອງ ແລະ 47 ບ້ານເປົ້າໝາຍຢູ່ເມືອງບົວລະພາ ໂດຍເນັ້ນໜັກໃສ່ການຝຶກອົບຮົມກ່ຽວກັບການປໍ້າຫົວໃຈ ແລະ ການຫ້າມເລືອດ. ນອກຈາກນັ້ນ, ອົງການຊີອາເອັດສ໌ ຍັງໄດ້ສະໜອງອຸປະກອນການແພດຈຳນວນໜຶ່ງໃຫ້ແກ່ສຸກສາລາ, ອາສາສະໝັກສຸກສາລາຂັ້ນບ້ານ ແລະ ຜູ້ຕອບຮັບປະຖົມພະຍາບານຂັ້ນບ້ານ ຂອງເມືອງບົວລະພາ.

## ຜົນສຳເລັດຕົ້ນຕໍ ແຕ່ເດືອນກໍລະກົດ ເຖິງ ທັນວາ 2013:

- ອົງການຊີອາເອັດສ ໄດ້ເຮັດຂໍ້ຕົກລົງຮ່ວມກັບອຳນາດການປົກຄອງທ້ອງຖິ່ນ ແລະ ສະມາຊິກຂອງຊຸມຊົນ ເພື່ອຂະຫຍາຍໂຄງການອອກໄປ 47 ບ້ານເປົ້າໝາຍຢູ່ໃນເມືອງບົວລະພາ.
- ສະມາຊິກຈາກຄະນະກຳມະການຊີ້ນຳວຽກງານສຶກສາຂັ້ນເມືອງ 41 ທ່ານ ທີ່ມາຈາກ 20 ບ້ານໄດ້ຮັບຜົນກະທົບສູງຈາກ ລບຕ ຕົກຄ້າງ ຢູ່ເມືອງບົວລະພາ ໄດ້ຮັບການຝຶກອົບຮົມກ່ຽວກັບວິທີການເຮັດວຽກຮ່ວມກັນໃນການດຳເນີນກິດຈະກຳໂຄສະນາສຶກສາຄວາມສ່ຽງຈາກ ລບຕ.
- ສະມາຊິກຈາກຄະນະກຳມະການຊີ້ນຳວຽກງານສຶກສາຂັ້ນເມືອງທີ່ມາຈາກ 20 ບ້ານໄດ້ຮັບຜົນກະທົບສູງຈາກ ລບຕ ຕົກຄ້າງ ຢູ ເມືອງໄຊບົວທອງ ໄດ້ສຳເລັດການດຳເນີນກິດຈະກຳໂຄສະນາສຶກສາຄວາມສ່ຽງຈາກ ລບຕ ຢູ່ພາຍໃນຊຸມຊົນຂອງເຂົາເຈົ້າ ໂດຍເນັ້ນໜັກໃສ່ໃຫ້ແມ່ຍິງ ແລະ ເດັກນ້ອຍໄດ້ເຂົ້າມາມີສ່ວນຮ່ວມໃຫ້ຫຼາຍຂຶ້ນ.
- ກອງທຶນສຳລັບການປິ່ນປົວບາດແຜຂອງກຳປູເຈຍ ໄດ້ສະໜອງການຝຶກອົບຮົມເປັນເວລາ 5 ມື້ ໃຫ້ແກ່ນັກຝຶກອົບຮົມ 6 ທ່ານ ກ່ຽວກັບການເຮັດປະຖົມພະຍາບານຂັ້ນຕົ້ນ ແລະ ການປິ່ນປົວບາດແຜ ຢູ່ແຂວງຄຳມ່ວນ ຄື: 2 ຄົນມາຈາກສຸກສາລາຢູ່ເມືອງໄຊບົວທອງ ແລະ ບົວລະພາ ແລະ 3 ຄົນມາຈາກໂຮງໝໍແຂວງ.
- ໃນຊ່ວງການຝຶກອົບຮົມນັ້ນ ຜູ້ເຂົ້າຮ່ວມຝຶກອົບຮົມ ກໍ່ໄດ້ທົດລອງເຮັດການປະຖົມພະຍາບານຂັ້ນຕົ້ນ ແລະ ການປິ່ນປົວບາດແຜໃຫ້ແກ່ຜູ້ຖືກເຄາະຮ້າຍຈາກ ລບຕ 20 ຄົນ ຢູ່ເມືອງບົວລະພາ.
- ຜູ້ເຂົ້າຮ່ວມຝຶກອົບຮົມ ໄດ້ດຳເນີນການຝຶກອົບຮົມຍົກລະດັບຄືນໃຫ້ແກ່ແພດທີ່ເຮັດໜ້າທີ່ປິ່ນປົວຜູ້ຖືກເຄາະຮ້າຍຈາກ ລບຕ 12 ຄົນ ກ່ຽວກັບການເຮັດການປະຖົມພະຍາບານຂັ້ນຕົ້ນ ແລະ ການປິ່ນປົວບາດແຜ ຢູ່ເມືອງໄຊບົວທອງ.
- ຊາວບ້ານ ຈຳນວນ 13 ຄົນ ຢູ່ເມືອງໄຊບົວທອງ ໄດ້ສຳເລັດການເຮັດແຜນທີ່ບ້ານ ແລະ ແຜນຕອບຮັບສຸກເສີນຂອງບ້ານ.

## ຜົນສຳເລັດຕົ້ນຕໍໃນປີ 2013:

ໂຄງການຕອບຮັບການເຮັດປະຖົມພະຍາບານຂອງອົງການຊີອາເອັດສ ແມ່ນສຸມໃສ່ດຳເນີນການໂຄສະນາສຶກສາຄວາມສ່ຽງຈາກ ລບຕ ໃຫ້ແກ່ ບ້ານທີ່ມີຄວາມສ່ຽງສູງຈາກ ລບຕ ຕົກຄ້າງ ໂດຍການສ້າງຄວາມອາດສາມາດໃຫ້ແກ່ບ້ານໃນການເຮັດປະຖົມພະຍາບານໃຫ້ແກ່ຜູ້ທີ່ຖືກອຸປະຕິເຫດຈາກ ລບຕ ໃຫ້ມີຊີວິດລອດ ແລະ ບາດແຜໄດ້ຮັບການຮັກສາຢ່າງຖືກຕ້ອງໃນຕອນນັ້ນ. ອົງການຊີອາເອັດສ໌ ໄດ້ເຮັດວຽກຮ່ວມກັບກະຊວງສາທາລະນະສຸກ, ໂຮງໝໍເມືອງ, ສຸກສາລາ ແລະ ຊຸມຊົນ ເພື່ອສ້າງ “ຕອງໂສ້ສຳລັບຜູ້ລອດຊີວິດຈາກ ລບຕ” ຂຶ້ນ ເພື່ອປິ່ນປົວຮັກສາຜູ້ຖືກເຄາະຮ້າຍຈາກ ລບຕ ໂດຍໄດ້ສະໜອງການຝຶກອົບຮົມໃຫ້ແກ່ຄູ່ຮ່ວມງານທີ່ສຳຄັນຕ່າງໆ ຄື: ແພດທີ່ເຮັດໜ້າທີ່ປິ່ນປົວຜູ້ຖືກເຄາະຮ້າຍຈາກ ລບຕ, ອາສາສະໝັກສຸກສາລາຂັ້ນບ້ານ ແລະ ຜູ້ຕອບຮັບປະຖົມພະຍາບານຂັ້ນບ້ານ.

ອົງການຊີອາເອັດສ໌ ໄດ້ມີການປຶກສາຫາລືກັບຄູ່ຮ່ວມງານຕ່າງໆຢູ່ໃນເມືອງບົວລະພາ ເພື່ອໂຮມເອົາ 47 ບ້ານເປົ້າໝາຍຢູ່ໃນເມືອງບົວລະພາເພື່ອໂຄງການໂຄສະນາສຶກສາຄວາມສ່ຽງຈາກ ລບຕ ຮ່ວມກັນ. ພ້ອມນັ້ນ, ອົງການຊີອາເອັດສ ແລະ ຄູ່ຮ່ວມງານຈາກເມືອງບົວລະພາ ແລະໄຊບົວທອງ ຍັງໄດ້ຄັດເລືອກເອົາພະນັກງານແພດເພື່ອເຮັດໜ້າທີ່ໃນການເປັນຄູຝຶກຕົ້ນຕໍ, ມີພາລະບົດບາດໃນການດຳເນີນການຝຶກອົບຮົມໃຫ້ແກ່ແພດທີ່ເຮັດໜ້າທີ່ປິ່ນປົວຜູ້ຖືກເຄາະຮ້າຍຈາກລບຕ, ອາສາສະໝັກສຸກສາລາຂັ້ນບ້ານ ແລະ ຜູ້ຕອບຮັບປະຖົມພະຍາບານຂັ້ນບ້ານຄືນອື່ນໆ.

ຄູ່ຮ່ວມງານຂອງອົງການຊີອາເອັດສ ດັ່ງເຊັ່ນ ກອງທຶນສຳລັບການປິ່ນປົວບາດແຜຂອງກຳປູເຈຍ ໄດ້ສະໜອງການຝຶກອົບຮົມໃຫ້ແກ່ແພດທີ່ເຮັດໜ້າທີ່ປິ່ນປົວຜູ້ຖືກເຄາະຮ້າຍຈາກ ລບຕ ກ່ຽວກັບທັກສະໃນການປິ່ນປົວບາດແຜສຸກເສີນໃຫ້ແກ່ຜູ້ຖືກເຄາະຮ້າຍຈາກ ລບຕ. ນອກຈາກນັ້ນ, ອົງການຊີອາເອັດສ, ກອງທຶນສຳລັບການປິ່ນປົວບາດແຜຂອງກຳປູເຈຍ ແລະ ກະຊວງສາທາລະນະສຸກ ຍັງໄດ້ກະກຽມແພດ

ຈຳນວນໜຶ່ງ ໃຫ້ເຂົ້າໄປຝຶກອົບຮົມໃຫ້ແກ່ອາສາສະໝັກສຸກສາລາຂັ້ນບ້ານ ແລະ ຜູ້ຕອບຮັບປະຖົມພະຍາບານຂັ້ນບ້ານ ອີກດ້ວຍ. ແຕ່ລະຄົນຮູ້ສຶກວ່າຂ້ອນຂ້າງເຂົ້າໃຈດີກ່ຽວກັບການເຮັດປະຖົມພະຍາບານ ແລະ ການຊ່ວຍຊີວິດຄົນເຈັບບໍ່ໃຫ້ຕາຍ ກໍ່ເຮັດໄດ້ດີເຊັ່ນດຽວກັນ. ມາຮອດທ້າຍປີ 2013, ບັນດາແພດທີ່ເຮັດໜ້າທີ່ປິ່ນປົວຜູ້ຖືກເຄາະຮ້າຍຈາກ ລບຕ ໄດ້ພາກັນກະກຽມການຝຶກອົບຮົມຕໍ່ໃຫ້ແກ່ອາສາສະໝັກສຸກສາລາຂັ້ນບ້ານ ແລະ ຜູ້ຕອບຮັບປະຖົມພະຍາບານຂັ້ນບ້ານ ຄົນອື່ນໆ ຢູ່ເມືອງໄຊບົວທອງ ແລະ ບົວລະພາ, ຊຶ່ງຈະຈັດຂຶ້ນໃນປີ 2014.

ພ້ອມນັ້ນ, ກິດຈະກຳໂຄສະນາສຶກສາຄວາມສ່ຽງຈາກ ລບຕ ທີ່ໄດ້ປະຕິບັດໃນຊ່ວງປີ 2013 ກໍ່ໄດ້ຮັບຜົນສຳເລັດເຊັ່ນດຽວກັນ. ໃນລະຫວ່າງກອງປະຊຸມຝຶກອົບຮົມກ່ຽວກັບການວາງແຜນກິດຈະກຳໂຄສະນາສຶກສາຄວາມສ່ຽງຈາກ ລບຕ ນັ້ນ, ຄູ່ຮ່ວມງານ ກໍ່ໄດ້ມີການປະກອບສ່ວນວ່າ ຕ້ອງເນັ້ນໜັກໃສ່ແມ່ຍິງ ແລະ ເດັກນ້ອຍໃຫ້ຫຼາຍຂຶ້ນກວ່າເກົ່າ. ອົງການຊີອາເອັດສ໌ ໄດ້ເຮັດວຽກຮ່ວມກັບຄະນະກຳມະການຊີ້ນຳວຽກງານສຶກສາຂັ້ນເມືອງ ເພື່ອກຳນົດເອົາຄົວເຮືອນເປົ້າໝາຍ ໃຫ້ເຂົ້າມາມີສ່ວນຮ່ວມໃນວຽກງານໂຄສະນາສຶກສາຄວາມສ່ຽງຈາກ ລບຕ ເພື່ອຕັດຊ່ອງຫວ່າງທີ່ມີຢູ່ໃຫ້ໝົດໄປ. ທັງໝົດ 20 ບ້ານເປົ້າໝາຍ ເພື່ອດຳເນີນກິດຈະກຳໂຄສະນາສຶກສາຄວາມສ່ຽງຈາກ ລບຕ ໄດ້ມີການເຄື່ອນໄຫວກິດຈະກຳໂຄສະນາຕ່າງໆຂຶ້ນຢູ່ຕາມບ້ານຂອງຕົນ ໂດຍສະເລ່ຍ ມີຜູ້ເຂົ້າຮ່ວມທີ່ເປັນແມ່ຍິງ 77 ເປີເຊັນ ແລະ ເດັກນ້ອຍ ມີ 19 ເປີເຊັນ. ອົງການຊີອາເອັດສ ຈະສົມທົບກັບຊຸມຊົນ ສືບຕໍ່ຕິດຕາມຄວາມຕ້ອງການໃນການສະໜັບສະໜູນອື່ນໆອີກ ໃນປີ 2014.

## ວຽກຈຸດສຸມໃນປີ 2014:

ອົງການຊີອາເອັດສ໌ ຈະສືບຕໍ່ຂະຫຍາຍການຝຶກອົບຮົມກ່ຽວກັບການເຮັດປະຖົມພະຍາບານຂັ້ນຕົ້ນ ແລະ ການປິ່ນປົວບາດແຜ ໃຫ້ແກ່ອາສາສະໝັກສຸກສາລາຂັ້ນບ້ານ ແລະ ຜູ້ຕອບຮັບປະຖົມພະຍາບານຂັ້ນບ້ານ ຢູ່ໃນເມືອງບົວລະພາ ແລະ ໄຊບົວທອງ ໃນປີ 2014. ອົງການຊີອາເອັດສ ຈະເຮັດວຽກຮ່ວມກັບຄູ່ຮ່ວມງານ ເພື່ອກຳນົດການຝຶກອົບຮົມອອກມາໃຫ້ມີປະສິດທິຜົນ ແລະ ຈະປັບປຸງຂໍ້ແນະນຳຂຶ້ນມາ ເພື່ອປັບປຸງການຝຶກອົບຮົມໃນອະນາຄົດ. ນອກຈາກນັ້ນ, ອົງການຊີອາເອັດສ ຍັງຈະໄດ້ສົມທົບກັບຊຸມຊົນ ຕິດຕາມການດຳເນີນກິດຈະກຳໂຄສະນາສຶກສາຄວາມສ່ຽງຈາກ ລບຕ ໂດຍສະເພາະແມ່ນກຸ່ມທີ່ໄດ້ຖືກກຳນົດໄວ້ຕັ້ງແຕ່ຕົ້ນແລ້ວ ເພື່ອເບິ່ງວ່າມີຄວາມຕ້ອງການຫຍັງເພີ່ມຕື່ມອີກ. ພ້ອມນັ້ນ, ກໍ່ຈະປະເມີນຜົນ ແລະ ນຳໃຊ້ຂໍ້ຄວາມໂຄສະນາສະເພາະອີງຕາມສະພາບຄວາມເປັນຈິງ. ນອກຈາກນັ້ນ, ອົງການຊີອາເອັດສ໌ ຈະຮັບປະກັນໃຫ້ 40 ບ້ານເປົ້າໝາຍ ຢູ່ເມືອງໄຊບົວທອງ ສຳເລັດແຜນທີ່ຊຸມຊົນຂອງເຂົາເຈົ້າ ແລະ ແຜນຕອບຮັບສຸກເສີນຂອງບ້ານ.

ອົງການຊີອາເອັດສ໌ ຈະສືບຕໍ່ເຮັດວຽກຮ່ວມກັບບັນດາຄູ່ຮ່ວມງານຢູ່ໃນເມືອງບົວລະພາ ເພື່ອກຳນົດເບິ່ງຊ່ອງຫວ່າງຂອງແຜນງານ ແລະ ກຳນົດຄວາມຕ້ອງການຂອງໂຄງການໃນອະນາຄົດ. ບາງຊຸມຊົນຢູ່ໃນເມືອງບົວລະພາ ໄດ້ຖືກກຳນົດໄວ້ແລ້ວວ່າ ມີ ລບຕ ຕົກຄ້າງຢູ່ຈິງ, ແຕ່ວ່າພັດບໍ່ສາມາດປະສານງານກັບພາກສ່ວນກ່ຽວຂ້ອງໄດ້ ເພື່ອເຮັດການເຄື່ອນຍ້າຍ ຫຼື ທຳລາຍ. ອົງການຊີອາເອັດສ ຈະສ້າງການເຊື່ອມໂຍງລະຫວ່າງ ຊຸມຊົນຕ່າງໆຢູ່ໃນເມືອງບົວລະພາ ແລະ ອົງການເກັບກູ້ ລບຕ ຂຶ້ນ ເພື່ອໃຫ້ມີການປະສານງານກັນ ໃນການເຂົ້າໄປເຮັດການກວດກູ້ ລບຕ ຢູ່ພາຍໃນເມືອງ.

## ຄູ່ຮ່ວມງານ:

ຄູ່ຮ່ວມງານຕົ້ນຕໍຂອງອົງການຊີອາເອັດສ໌ ແມ່ນກະຊວງສາທາລະນະສຸກ. ນອກຈາກນັ້ນ, ອົງການຊີອາເອັດສ ຍັງໄດ້ເຮັດວຽກຢ່າງໃກ້ຊິດກັບຫ້ອງການສຸກສາລາຂັ້ນເມືອງ ແລະ ແຂວງ ລວມທັງ ຫ້ອງການສຶກສາຂັ້ນເມືອງ. ບໍ່ສະເພາະເທົ່ານັ້ນ, ອົງການຊີອາເອັດສ໌ ຍັງເປັນຄູ່ຮ່ວມງານກັບກອງທຶນສຳລັບການປິ່ນປົວບາດແຜຂອງກຳປູເຈຍ ນຳອີກ ເພື່ອຄັດເລືອກເອົາ "ນັກຝຶກອົບຮົມຫຼັກແຫຼ່ງ" ຈາກເມືອງໄຊບົວທອງ ແລະ ບົວລະພາ ແລະ ແນໃສ່ຮັບປະກັນໃຫ້ວິທີການສິດສອນຕ່າງໆ ໄດ້ຖືກຮັບຮອງ ແລະ ນຳໃຊ້ຢ່າງເໝາະສົມ ເຂົ້າໃນການຝຶກອົບຮົມ. ນອກຈາກນັ້ນ, ອົງການຊີອາເອັດສ໌, ຫ້ອງການ ຄຊກລ ແລະ ກະຊວງສາທາລະນະສຸກ ຈະໄດ້ຕິດຕາມການຝຶກອົບຮົມທັງໝົດຢ່າງເປັນປົກກະຕິ ເພື່ອຮັບປະກັນໃຫ້ການຝຶກອົບຮົມມີຄຸນນະພາບ, ມີການແລກປ່ຽນ ແລະ ມີການສະໜັບສະໜູນ ແລະ ເປັນທິດທາງໃຫ້ແກ່ຜູ້ເຂົ້າຝຶກອົບຮົມໃໝ່ທີ່ຈະເຮັດໜ້າທີ່ໃນການປິ່ນປົວຜູ້ຖືກເຄາະຮ້າຍຈາກ ລບຕ.

## ຂ່າວດີ: ອາສາສະໝັກສຸກສາລາຂັ້ນບ້ານ.

ທ້າວ ບຸນມາ ອາຍຸ 38 ປີ, ນາຍບ້ານໆຜັກກາດ, ຊຶ່ງເປັນຊຸມຊົນນ້ອຍໜຶ່ງຕັ້ງຢູ່ຫ່າງຈາກຈຸດໃຈກາງເມືອງໄຊບົວທອງ ປະມານ 20 ກິໂລແມັດ ປະກອບມີພົນລະເມືອງທັງໝົດ 650 ຄົນ ແລະ ເປັນບ້ານທີ່ໄດ້ຮັບຜົນກະທົບສູງຈາກ ລບຕ ຕົກຄ້າງ. ໃນເດືອນກັນຍາ 2013, ອົງການຊີອາເອັດສ ແລະ ພະນັກງານຂອງເມືອງ ໄດ້ຈັດການຝຶກອົບຮົມໃຫ້ທ້າວ ບຸນມາ ແລະ ສະມາຊິກຄົນອື່ນໆໃນຊຸມຊົນ ໃນການປັບປຸງແຜນທີ່ບ້ານ ແລະ ແຜນຕອບຮັບສຸກເສີນຂອງບ້ານ. ພາຍຫຼັງທີ່ຊຸມຊົນຮູ້ວິທີການພື້ນຖານກ່ຽວກັບການສ້າງແຜນທີ່ຂອງຊຸມຊົນລົງໃສ່ເຈ້ຍແລ້ວ ອົງການຊີອາເອັດສ ກໍ່ໄດ້ຈັດການຝຶກອົບຮົມແບບລົງເລິກລາຍລະອຽດໃນການສ້າງແຜນທີ່ຖາວອນ ເພື່ອປັກຫຼັກໄວ້ຢູ່ໃນຈຸດທີ່ເໝາະສົມຂອງຊຸມຊົນ.



*ທ້າວ ຄຳຫຼ້າ, ພະນັກງານຈາກພະແນກສຶກສາເມືອງໄຊບົວທອງ ກຳລັງດຳເນີນການປະເມີນຜົນຢູ່ໃນບ້ານໂພນສະຫວັນ*



*ສຸກສາລາບ້ານນາກະພໍ້ ມີພຽງແຕ່ອາສາສະໝັກສຸກສາລາຂັ້ນບ້ານພຽງຄົນດຽວ ແລະ ແພດ 2-3 ຄົນ ປະຈຳຢູ່*

ໂດຍການສະໜັບສະໜູນຂອງອົງການຊີອາເອັດສ໌ ແລະ ຄູ່ຮ່ວມງານ, ທ້າວ ບຸນມາ ໄດ້ແບ່ງກຸ່ມຊາວບ້ານອອກເປັນ 2 ກຸ່ມ, ຊຶ່ງກຸ່ມທີ 1 ແມ່ນຮັບຜິດຊອບໃນການປະດິດແຜ່ນກະດານໄມ້ຂຶ້ນມາ ແລະ ກຸ່ມທີ 2 ແມ່ນຮັບຜິດຊອບໃນການແຕ້ມແຜນທີ່ ແລະ ຕິບແຕ່ງລົງໃສ່ແຜ່ນໄມ້ທີ່ກຽມໄວ້ແລ້ວນັ້ນ. ທ້າວ ບຸນມາ ກ່າວວ່າ “ແຜນທີ່ຂອງຊຸມຊົນ ແລະ ແຜນຕອບຮັບສຸກເສີນຂອງບ້ານ ທີ່ສ້າງຂຶ້ນມານີ້ ແມ່ນມີຄຸນປະໂຫຍດຫຼາຍສໍາລັບຊາວບ້ານຢູ່ພາຍໃນບ້ານຂອງຂ້ອຍ ແລະ ຜູ້ເຂົ້າມາຢ້ຽມຢາມຈາກບ້ານອື່ນໆ ຍ້ອນວ່າ ແຜນທີ່ ສາມາດບອກໃຫ້ຮູ້ວ່າຢູ່ພື້ນທີ່ໃດແດ່ຂອງບ້ານມີ ລບຕ ຕົກຄ້າງ ແລະ ອັນຕະລາຍ ເປັນຕົ້ນແມ່ນ ຢູ່ເທິງພູ, ປ່າ ແລະ ພື້ນທີ່ຕ່າງໆຢູ່ພາຍໃນຊຸມຊົນ. ນອກຈາກນັ້ນ, ແຜນທີ່ ຍັງສາມາດຊີ້ໃຫ້ເຫັນເສັ້ນທາງ ແລະ ທາງຍ່າງນ້ອຍຕ່າງໆຢູ່ພາຍໃນບ້ານ ແລະ ທາງເຂົ້າຫາບ້ານ ແນໃສ່ອໍານວຍຄວາມສະດວກໃຫ້ແກ່ຜູ້ທີ່ເຂົ້າມາຢ້ຽມຢາມ ສາມາດຊອກຫາເສັ້ນທາງເຂົ້າຫາບ້ານພີ່ນ້ອງຂອງເຂົາເຈົ້າໄດ້ຢ່າງວ່ອງໄວ. ນອກຈາກນັ້ນ, ແຜນຕອບຮັບສຸກເສີນຂອງບ້ານ ຍັງສາມາດບອກໃຫ້ຮູ້ ນໍາເບີໂທລະສັບຕິດຕໍ່ກັບອາສາສະໝັກປິ່ນປົວການແພດໄດ້ອີກດ້ວຍ ໃນເວລາທີ່ມີອຸປະຕິເຫດຈາກ ລບຕ ເກີດຂຶ້ນຢູ່ໃນບ້ານ”.

ປະຈຸບັນນີ້, ອົງການຊີອາເອັດສ໌ ກໍາລັງເຮັດວຽກຮ່ວມກັບ 40 ບ້ານຢູ່ພາຍໃນເມືອງໄຊບົວທອງ ແນໃສ່ເພື່ອໃຫ້ສໍາເລັດແຜນທີ່ຂອງຊຸມຊົນ ແລະ ແຜນຕອບຮັບສຸກເສີນຂອງບ້ານ. ພາຍໃຕ້ການຊີ້ນໍາຂອງທ້າວ ບຸນມາ ຈຶ່ງເຮັດໃຫ້ບ້ານຜັກກາດ ເປັນຊຸມຊົນແຫ່ງທີ່ 4 ທີ່ເຮັດສໍາເລັດແຜນທີ່ຂອງຊຸມຊົນໄດ້ຢ່າງວ່ອງໄວ. ຊາວບ້ານຫຼາຍໆຄົນ ແລະ ສະມາຊິກຄະນະກໍາມະການຊີ້ນໍາວຽກງານສຶກສາຂັ້ນເມືອງ ໄດ້ໃຫ້ຄໍາເຫັນວ່າແຜນທີ່ດັ່ງກ່າວ ເບິ່ງແລວເຂົ້າໃຈງ່າຍ ແລະ ສີສັນທີ່ຕິບແຕ່ງລົງໃສ່ແຜນທີ່ນັ້ນ ກໍ່ມີຄວາມຄ້າຍຄືກັບບ້ານຂອງຈິງ!.

## ບຸກຄະລາກອນໃນປີ 2013:

| ພະນັກງານຫ້ອງການ | | | | ພະນັກງານຝ່າຍປະຕິບັດງານ (ພາກສະໜາມ) | | | |
|---|---|---|---|---|---|---|---|
| ຄົນລາວ | | ຄົນຕ່າງປະເທດ | | ຄົນລາວ | | ຄົນຕ່າງປະເທດ | |
| ຊາຍ | ຍິງ | ຊາຍ | ຍິງ | ຊາຍ | ຍິງ | ຊາຍ | ຍິງ |
| 4 | 3 | 1 | 1 | 2 | 0 | 1 | 0 |

## ຕົວເລກສະຖິຕິໃນປີ 2013:

| ການໂຄສະນາສຶກສາຄວາມສ່ຽງຈາກ ລບຕ ການໂຄສະນາສຶກສາຊຸມຊົນ | ຜູ້ໄດ້ຮັບຜົນປະໂຫຍດ | | | | ການຊ່ວຍເຫຼືອຜູ້ຖືກເຄາະຮ້າຍຈາກ ລບຕ ຈໍານວນຜູ້ທີ່ໄດ້ຮັບການຊ່ວຍເຫຼືອ | | ການສໍາຫຼວດ | | ການທໍາລາຍເຄື່ອນທີ່ | |
|---|---|---|---|---|---|---|---|---|---|---|
| ຈ/ນຄັ້ງ ຢ້ຽມຢາມ | ໃຫຍ່ ຊາຍ | ໃຫຍ່ ຍິງ | ເດັກ ຊາຍ | ເດັກ ຍິງ | ດ້ານການ ເງິນ | ດ້ານການ ແພດ | ຈ/ນ ບ້ານ ຢ້ຽມຢາມ | ຈ/ນຄັ້ງ ຢ້ຽມຢາມ | ຈ/ນ ບ້ານ | ຈ/ນຄັ້ງ ຢ້ຽມຢາມ |
| ພະຈິກ ແລະ ທັນວາ | 256 | 866 | 99 | 160 | 0 | 0 | 0 | 0 | 1,026 | 77 |

## ພື້ນທີ່ການປະຕິບັດງານ:

| ໜ້າວຽກ | ແຂວງ ແລະ ເມືອງ ທີ່ປະຕິບັດກິດຈະກໍາ |
|---|---|
| ການໂຄສະນາສຶກສາຄວາມສ່ຽງຈາກ ລບຕ | ເມືອງໄຊບົວທອງ |
| ການຊ່ວຍເຫຼືອຜູ້ຖືກເຄາະຮ້າຍຈາກ ລບຕ | ເມືອງບົວລະພາ ແລະ ໄຊບົວທອງ-ແຂວງຄໍາມ່ວນ |

## ທາງດ້ານການເງິນ:

ລາຍຈ່າຍໃນປີ 2013: (ໂດລາສະຫະລັດ)

| ລາຍການ | ຈຳນວນ |
|---|---:|
| ຄ່າໃຊ້ຈ່າຍສຳລັບບຸກຄະລາກອນ | 31,750 |
| ຄ່າໃຊ້ຈ່າຍສຳລັບການປະຕິບັດງານ | 53,316 |
| ຄ່າໃຊ້ຈ່າຍສຳລັບການປະຕິບັດງານພິເສດ | 0 |
| ຄ່າໃຊ້ຈ່າຍສຳລັບຊື້ວັດຖຸ-ຊັບສິນຄົງທີ່ | 0 |
| ຄ່າໃຊ້ຈ່າຍສຳລັບຊື້ວັດຖຸ-ຊັບສິນບໍ່ຄົງທີ່ | 0 |
| *ລວມ* | ***87,654*** |

ການສະໜັບສະໜູນຂອງຜູ້ໃຫ້ທຶນໃນປີ 2013: (ໂດລາສະຫະລັດ)

| ຜູ້ໃຫ້ທຶນ | ທຶນທີ່ໄດ້ຮັບໃນປີ 2013 |
|---|---:|
| ກະຊວງການຕ່າງປະເທດອາເມລິກາ, ຫ້ອງການຫຼຸດຜ່ອນອາວຸດ ແລະ ການສູ້ຮົບ | 87,654 |
| *ລວມ* | ***87,654*** |

# ອົງການຊ່ວຍເຫຼືອດ້ານອົງຄະທຽມ ແລະ ເຄື່ອງຄ້ຳຊູ (ໂຄບ)

## (ດຳເນີນກິດຈະກຳໂຄສະນາສຶກສາຄວາມສ່ຽງຈາກ ລບຕ ແລະ ການຊ່ວຍເຫຼືອຜູ້ຖືກເຄາະຮ້າຍຈາກ ລບຕ)

### ກິດຈະກຳໃນປີ 2013:

ອົງການໂຄບ ໄດ້ເຮັດວຽກຮ່ວມກັບສູນການການແພດ ແລະ ຟື້ນຟູໜ້າທີ່ການ ເພື່ອເພີ່ມຂອດການບໍລິການທີ່ມີຄຸນນະພາບທາງດ້ານອົງຄະທຽມ ແລະ ເຄື່ອງຄ້ຳຊູ ຢູ່ໃນ ສປປ ລາວ. ໜ້າວຽກຕົ້ນຕໍຂອງພວກເຮົາແມ່ນສະໜັບສະໜູນກ່ຽວກັບການປັບປຸງຄວາມອາດສາມາດໄລຍະຍາວ ເພື່ອຮັບປະກັນຄຸນນະພາບການບໍລິການຟື້ນຟູໃຫ້ແກ່ຄົນພິການ ລວມທັງ ຜູ້ໃຫຍ່ ແລະ ເດັກນ້ອຍ ທີ່ໄດ້ຮັບບາດເຈັບມາຈາກອຸປະຕິເຫດລະເບີດລູກຫວ່ານ ແລະ ລບຕ ຊະນິດອື່ນໆ.

ປະຈຸບັນນີ້ ອົງການໂຄບ ໄດ້ເຮັດວຽກກັບສູນຟື້ນຟູໜ້າທີ່ການ 5 ແຫ່ງ ຄື: ຢູ່ແຂວງຫຼວງພະບາງ, ຊຽງຂວາງ, ສະຫວັນນະເຂດ, ຈຳປາສັກ ແລະ ນະຄອນຫຼວງວຽງຈັນ. ອົງການໂຄບ ໄດ້ສະໜັບສະໜູນຄົນພິການຕ່າງໆຢູ່ໃນສູນແຕ່ລະແຫ່ງ ໂດຍການມອບເງິນຄ່າເດີນທາງ, ຄ່າອາຫານການກິນ ແລະ ສະຖານທີ່ພັກເຊົາ ໃຫ້ແກ່ຄົນເຈັບ ແລະ/ຫຼື ຜູ້ທີ່ຕິດຕາມມານຳ ຕາມຄວາມຈຳເປັນ ໃນຊ່ວງທີ່ເຂົ້າມາປິ່ນປົວຮັກສາ. ນອກຈາກນັ້ນ, ອົງການໂຄບ ຍັງໃຫ້ການສະໜັບສະໜູນທາງດ້ານການເງິນສຳລັບຄ່າປິ່ນປົວ ແລະ ຄ່າເຮັດອົງຄະທຽມ ແລະ ເຄື່ອງຄ້ຳຊູນຳອີກດ້ວຍ, ຊຶ່ງອົງການໂຄບ ໄດ້ມີການຈັດການຝຶກອົບຮົມຂຶ້ນໃຫ້ແກ່ພະນັກງານສັງກັດລັດຄົນລາວ ແລະ ສະໜອງອຸປະກອນທີ່ສຳຄັນຈຳນວນໜຶ່ງໃຫ້ແກ່ສູນຟື້ນຟູໜ້າທີ່ການຂັ້ນສູນກາງ ແລະ ຂັ້ນແຂວງ.

ນອກຈາກນັ້ນ, ອົງການໂຄບ ຍັງໄດ້ສຸມໃສ່ຊອກຫາວິທີທາງແກ້ໄຂ ເພື່ອໃຫ້ສາມາດການສະໜອງການບໍລິການແບບປະສົມປະສານ ເພື່ອສະໜອງການບໍລິການທີ່ຈຳເປັນໃຫ້ແກ່ຄົນເຈັບ. ອົງການໂຄບ ໄດ້ສືບຕໍ່ສ້າງຄວາມເຂັ້ມແຂງທາງດ້ານຄວາມຮູ້ ແລະ ທັກສະໃຫ້ແກ່ພະນັກງານຂອງສູນຟື້ນຟູໜ້າທີ່ການ ກ່ຽວກັບການສະໜອງການບໍລິການຟື້ນຟູແບບປະສົມປະສານ ລວມມີ ການເຮັດກາຍຍະພາບບຳບັດ ແລະ ສິດສອນກ່ຽວກັບການປະກອບອາຊີບ. ຕະຫຼອດປີ, ອົງການໂຄບ ໄດ້ເຮັດວຽກຮ່ວມກັບທີ່ປຶກສາຝ່າຍລາວ 3 ຄົນ ກ່ຽວກັບ (ອົງຄະທຽມ ແລະ ເຄື່ອງຄ້ຳຊູ, ການເຮັດກາຍຍະພາບບຳບັດ ແລະ ສິດສອນກ່ຽວກັບການປະກອບອາຊີບ) ເພື່ອສ້າງທັກສະທາງດ້ານວິຊາການຢູ່ໃນສູນຟື້ນຟູໜ້າທີ່ການ 5 ແຫ່ງໃນທົ່ວປະເທດ.

ນອກຈາກນັ້ນ, ອົງການໂຄບ ຍັງໄດ້ຈັດກອງປະຊຸມສຳມະນາຂຶ້ນໃນເດືອນພະຈິກ ກ່ຽວກັບການຄວບຄຸມຄຸນນະພາບໃຫ້ແກ່ພະນັກງານພະແນກອົງຄະທຽມ ແລະ ເຄື່ອງຄ້ຳຊູ ແລະ ພະນັກງານບໍລິຫານ ຂອງສູນຟື້ນຟູໜ້າທີ່ການ ຈຳນວນ 50 ຄົນ. ກອງປະຊຸມສຳມະນາດັ່ງກ່າວ ໄດ້ຮັບການສະໜັບສະໜູນໂດຍອົງການກາແດງສາກົນ-ທຶນຫວ່ງສະໜັບສະໜູນຄົນພິການ ແລະ ທຶນຈາກກອງທຶນພັດທະນາຂອງອາເມລິກາ, ຊຶ່ງຊ່ຽວຊານທີ່ເຂົ້າມາຝຶກໃຫ້ໃນຄັ້ງນີ້ແມ່ນມາຈາກປະເທດອິນເດຍ ແລະ ຫວຽດນາມ ເພື່ອເຂົ້າມາຊ່ວຍໃນການກຳນົດສິ່ງທ້າທາຍ ແລະ ໂອກາດຕ່າງໆ ເພື່ອເຮັດແນວໃດໃຫ້ມີການບໍລິການຟື້ນຟູຢ່າງມີຄຸນນະພາບຢູ່ໃນ ສປປ ລາວ. ຫຼັງຈາກການຝຶກອົບຮົມແລ້ວ, ໃນທ້າຍປີ 2013 ກໍ່ໄດ້ມີການແຕ່ງຕັ້ງທີມງານຮັບຜິດຊອບໃນການຄວບຄຸມຄຸນນະພາບຂຶ້ນມາໃໝ່ ແລະ ໄດ້ເລີ່ມດຳເນີນການປະເມີນຜົນ ແລະ ຈັດຕັ້ງປະຕິບັດການດູແລຄວບຄຸມຂັ້ນຕອນຕ່າງໆໃນການຜະລິດ ລວມທັງ ດູແລຄວບຄຸມທາງດ້ານນະໂຍບາຍຢູ່ໃນສູນການແພດ ແລະ ຟື້ນຟູໜ້າທີ່ການຢູ່ຂັ້ນສູນກາງ ແລະ ຂັ້ນແຂວງ ອີກດ້ວຍ.






*ພະນັກງານຂອງອົງການໂຄບ ແລະ ພະນັກງານເຮັດວຽກຜະລິດອົງຄະທຽມ ແລະ ເຄື່ອງຄ້ຳຊູ ກຳລັງເຮັດວຽກຮ່ວມກັນ ເພື່ອຜະລິດແຂນຂາທຽມ ໃຫ້ແກ່ຄົນເຈັບ.*

ໂຄງການເຊື່ອມຕໍ່ການບໍລິການຂອງອົງການໂຄບ ໄດ້ເລີ່ມຂຶ້ນໃນປີ 2009 ເພື່ອເຮັດໜ້າທີ່ໃນການໂຄສະນາ ແລະ ຊ່ວຍເຫຼືອປະຊາຊົນໃຫ້ສາມາດເຂົ້າເຖິງການບໍລິການໄດ້. ຍ້ອນຂາດເຕັກໂນໂລຊີໃນການຕິດຕໍ່ສື່ສານກັນ, ສະພາບຖະໜົນທີ່ເປ່ເພ, ການຂົນສົ່ງຄົມມະນາຄົມມີຂໍ້ຈຳກັດ ແລະ ສະພາບການເງິນກໍ່ບໍ່ຄ່ອງຕົວ ຈຶ່ງເຮັດໃຫ້ຄົນພິການຫຼາຍໆຄົນ ບໍ່ສາມາດເຂົ້າເຖິງການບໍລິການຂອງສູນຟື້ນຟູໜ້າທີ່ການຂັ້ນສູນກາງ ແລະ ຂັ້ນແຂວງໄດ້. ໃນຊ່ວງປີ 2013, ທີມງານເຊື່ອມຕໍ່ການບໍລິການຂອງອົງການໂຄບ ໄດ້ເຮັດການປະເມີນຜົນກ່ຽວກັບການປິ່ນປົວຄົນເຈັບຢູ່ໃນ 5 ແຂວງ ເພື່ອເບິ່ງກ່ຽວກັບຄວາມຕ້ອງການຂອງປະຊາຊົນໃນການເຂົ້າເຖິງການບໍລິການ. ນອກຈາກນັ້ນ, ຍັງໄດ້ຜະລິດໃບປິວອອກມາຈຳນວນ 2,800 ແຜ່ນ, ພິດສເຕີ້ 2,300 ແຜ່ນ ແລະ ປື້ມກະຕູນ 1,100 ຫົວ ເພື່ອເພີ່ມການໂຄສະນາກ່ຽວກັບການບໍລິການ ເພື່ອໃຫ້ປະຊາຊົນສາມາດຮັບຮູ້ ແລະ ເຂົ້າເຖິງໄດ້ໃນອະນາຄົດ.



*ຊາຍຄົນໜຶ່ງ ທີ່ສູນເສຍຂາ ກຳລັງຝຶກແອບຍ່າງປະຄອງຕົນເອງດ້ວຍໄມ້ຄ້ຳແຂນ ຢູ່ທີ່ສູນການແພດ ແລະ ຟື້ນຟູໜ້າທີ່ການ ຢູ່ນະຄອນຫຼວງວຽງຈັນ. ຂັ້ນຕອນໃນການວັດແທກອົງຄະທຽມໃໝ່ໃສ່ຂາຂອງລາວ ແລະ ການຝຶກແອບໃຫ້ລາວໃນການໃສ່ຂາທຽມໃໝ່ນັ້ນ ແມ່ນໃຊ້ເວລາປະມານ 2 ອາທິດ.*

## ຜົນສຳເລັດຕົ້ນຕໍໃນປີ 2013:

ອຸປະສັກອັນໜຶ່ງເພື່ອເຂົ້າເຖິງການບໍລິການ ແມ່ນເງິນສຳລັບຄ່າປິ່ນປົວຮັກສາ ແລະ ຄ່າຢູ່ຄ່າກິນ ຢູ່ທີ່ສູນຟື້ນຟູໜ້າທີ່ການ ໃນເວລາເຂົ້າມາຮັບການບໍລິການອົງຄະທຽມ ເນື່ອງຈາກວ່າ ບາງທ່ານ ກໍ່ຈຳເປັນຕ້ອງໄດ້ນອນຢູ່ທີ່ນັ້ນ 1 ມື້ ຫຼື 1 ອາທິດ ເພື່ອໃຊ້ເວລາປັບໂຕເຂົ້າໃນການນຳໃຊ້ອົງຄະທຽມໃໝ່ໃຫ້ພໍດີກັບອະໄວຍະວະຂອງຕົນ ແລະ ຝຶກຊ້ອມນຳໃຊ້ມັນໃຫ້ຄ່ອງຕົວ. ແຕ່ບໍ່ຕ້ອງເປັນຫ່ວງ ເພາະວ່າ ອົງການໂຄບ ແມ່ນຮັບຜິດຊອບຄ່າໃຊ້ຈ່າຍໃຫ້ທັງໝົດ ບໍ່ວ່າຈະເປັນຄົນເຈັບທີ່ມາໃສ່ເຄື່ອງຄ້ຳຊູ ແລະ ອົງຄະທຽມ ຫຼືວ່າ ຈະເປັນຜູ້ທີ່ລອດຊີວິດຈາກ ລບຕ ທີ່ບໍ່ມີຄວາມສາມາດຈ່າຍຄ່າປິ່ນປົວ, ຄ່າເດີນທາງ, ຄ່າອາຫານການກິນ ແລະ ຄ່າພັກເຊົາ ໃນຊ່ວງເຂົ້າມາປິ່ນປົວນັ້ນ ແມ່ນອົງການໂຄບຈ່າຍໃຫ້ທັງໝົດ.

ໃນລະຫວ່າງເດືອນມັງກອນ ຫາ ເດືອນທັນວາ 2013, ອົງການໂຄບໄດ້ໃຫ້ການສະໜັບສະໜູນຄື:

- ໄດ້ສະໜອງອົງຄະທຽມ ແລະ ເຄື່ອງຄ້ຳຊູ 913 ອັນ ໃຫ້ແກ່ຄົນເຈັບ, ໃນນັ້ນ ມີອົງຄະທຽມ 572 ອັນ ແລະ ເຄື່ອງຄ້ຳຊູ 341 ອັນ.
- ມີຄົນເຈັບ 233 ຄົນ ລອດຊີວິດຈາກອຸປະຕິເຫດ ລບຕ, ໃນນັ້ນ, 10% ແມ່ນຜູ້ທີ່ຫາກໍ່ລອດຊີວິດໃໝ່.
- ນອກຈາກນັ້ນ, ຍັງໄດ້ແຈກຢາຍອຸປະກອນຄ້ຳຊູອື່ນໆຈຳນວນ 113 ອັນ (ຕັ່ງ 3 ແຈ, ອຸປະກອບເສີມຊູຮ່າງກາຍ ແລະ ອື່ນໆ).
- ຄົນເຈັບທີ່ເປັນເດັກນ້ອຍ 1,017 ຄົນ ໄດ້ຮັບການຝຶກແບບກາຍຍະພາບບຳບັດ/ການຝຶກອາຊີບ ແລະ ເດັກນ້ອຍຕີນເປ 97 ຄົນ ໄດ້ຮັບການຜ່າຕັດ.

ນອກຈາກການຝຶກອົບຮົມກ່ຽວກັບການດູແລຄວບຄຸມຄຸນນະພາບ ທີ່ໄດ້ກ່າວມາຂ້າງເທິງນັ້ນແລ້ວ, ອົງການໂຄບ ຍັງໄດ້ຈັດຫຼັກສູດການຝຶກອົບຮົມດ້ານອື່ນໆຂຶ້ນຫຼາຍຄັ້ງ ເພື່ອສະໜອງການຝຶກອົບຮົມທາງດ້ານການຝຶກອາຊີບ ເພື່ອເພີ່ມພູນທັກສະໃນການເຮັດອາຊີບໃຫ້ແກ່ພະນັກງານຂອງສູນຟື້ນຟູໜ້າທີ່ການຂັ້ນສູນກາງ ແລະ ຂັ້ນແຂວງ ເພື່ອນຳໄປຖ່າຍທອດຕໍ່ໃຫ້ແກ່ຄົນອື່ນໆ ໂດຍສະເພາະແມ່ນຄົນພິການ ແລະ ຜູ້ທີ່ລອດຊີວິດຈາກ ລບຕ.

ນອກນີ້, ອົງການໂຄບ ຍັງໄດ້ຈັດກອງປະຊຸມສຳມະນາຂຶ້ນໜຶ່ງຄັ້ງກ່ຽວກັບການນຳສະເໜີໂຄງການເຊື່ອມຕໍ່ການບໍລິການ ໂດຍມີຜູ້ເຂົ້າຮ່ວມທັງໝົດ 38 ຄົນ ທີ່ມາຈາກສາລາເມືອງ ແລະ ແຂວງໄຊຍະບູລີ ແລະ ຕາງໜ້າສຸກສາລາຂັ້ນບ້ານ ເພື່ອເປັນເຈົ້າການໃນການປະຕິບັດວຽກງານບໍລິການກ່ຽວກັບການຟື້ນຟູຕ່າງໆໃຫ້ຄົນເຈັບ ແລະ ໄດ້ມີການສ້າງຕັ້ງເຄືອຂ່າຍການປະສານງານໃຫ້ເຂົ້າໄປຢູ່ໃນໂຄງປະກອບການຈັດຕັ້ງຂອງລັດຖະບານ. ສຳລັບການຝຶກອົບຮົມ 2 ຄັ້ງ ກ່ຽວກັບການປະສານງານ ທີ່ຈັດຂຶ້ນເຊັ່ນດຽວໃນປີ 2013 ແມ່ນເນັ້ນໜັກໃສ່ການຝຶກອົບຮົມໃຫ້ແກ່ທ່ານໝໍໃຫຍ່ ທີ່ປະຈຳຢູ່ໂຮງໝໍເມືອງ ແລະ ແຂວງ ໃນການຈຳແນກຄົນເຈັບໃຫ້ຖືກເປົ້າໝາຍ ແລະ ມີເຄືອຂ່າຍໃນການຂົນສົ່ງຄົນເຈັບມາໂຮງໝໍ. ຕະຫຼອດປີ, ທີມງານເຊື່ອມຕໍ່ການບໍລິການຂອງອົງການໂຄບ ໄດ້ເຮັດການປະເມີນຜົນຄືນການຈັດຕັ້ງປະຕິບັດວຽກງານຜ່ານມາ ຢູ່ໃນ 22 ເມືອງ ໃນ 5 ແຂວງ. ປະຊາຊົນ ຈຳນວນ 858 ຄົນ ໄດ້ຖືກປະເມີນຄືນ ແລະ ປະຊາຊົນ ຈຳນວນ 426 ຄົນ ໄດ້ຖືກເຊື້ອເຊີນໃຫ້ເຂົ້າຮ່ວມຮັບການບໍລິການຟື້ນຟູຢູ່ທີ່ສູນຟື້ນຟູໜ້າທີ່ການຂັ້ນສູນກາງ ແລະ ຂັ້ນແຂວງ. ນອກຈາກນັ້ນ, ປະຊາຊົນ ຈຳນວນ 80 ຄົນ ຍັງໄດ້ຖືກສົ່ງຕໍ່ໄປປິ່ນປົວຢູ່ໃນຂະແໜງອື່ນໆທີ່ພົວພັນກັບພະຍາດຂອງຕົນ.

## ຂ່າວດີ:

ການປັບປຸງການບໍລິການຟື້ນຟູໃຫ້ມີຄຸນນະພາບໃນ ສປປ ລາວ:

ເຮົາຈະສາມາດຮັບປະກັນໄດ້ແນວໃດວ່າ ຄຸນນະພາບໃນການບໍລິການຟື້ນຟູສຸຂະພາບທາງດ້ານຮ່າງກາຍແມ່ນທົ່ວເຖິງຜູ້ຖືກເຄາະຮ້າຍຈາກ ລບຕ ແລະ ຄົນພິການອື່ນໆ ໃນທົ່ວປະເທດ? ນີ້ແມ່ນຄຳຖາມໜຶ່ງທີ່ສຳຄັນຈາກຜູ້ເຂົ້າຮ່ວມປະຊຸມ ຢູ່ໃນກອງປະຊຸມສຳມະນາກ່ຽວກັບການດູແລຄວບຄຸມຄຸນນະພາບໃນການຜະລິດອົງຄະທຽມ ແລະ ເຄື່ອງຄ້ຳຊູ ທີ່ຫາກໍ່ຈັດຂຶ້ນໃນເດືອນພະຈິກ ຜ່ານມານີ້ ຢູ່ທີ່ສູນການແພດ ແລະ ຟື້ນຟູໜ້າທີ່ການ

ຫົວຂໍ້ກອງປະຊຸມແມ່ນ "ການດູແລຄວບຄຸມຄຸນນະພາບໃນການຜະລິດອົງຄະທຽມ ແລະ ເຄື່ອງຄ້ຳຊູ" ຈັດຂຶ້ນໂດຍສູນຟື້ນຟູໜ້າທີ່ການ ແລະ ອົງການໂຄບ ໂດຍໄດ້ຮັບການສະໜັບສະໜູນຈາກກອງທຶນເພື່ອການພັດທະນາຂອງອາເມລິກາ ແລະ ອົງການກາແດງສາກົນ-ງົບປະມານຫວງການຊ່ວຍເຫຼືອຄົນພິການ. ກອງປະຊຸມດັ່ງກ່າວ ມີຜູ້ເຂົ້າຮ່ວມທັງໝົດ 50 ຄົນ ທີ່ເຮັດວຽກກ່ຽວກັບການຟື້ນຟູໃນຂອບເຂດທົ່ວປະເທດ ໂດຍມີນັກສຳມະນາກອນທີ່ມາຈາກປະເທດອິນເດຍ ແລະ ຫວຽດນາມ.

ໃນຊ່ວງກ່າວເປີດກອງປະຊຸມສຳມະນາຢ່າງເປັນທາງການນັ້ນ ລັດຖະມົນຕີວ່າການກະຊວງສາທາລະນະສຸກ ທ່ານ ສາດສະດາຈານ ດຣ



*ການສະໜອງອຸປະກອນທີ່ຈຳເປັນ ແລະ ຝຶກອົບຮົມທາງດ້ານເຕັກນິກວິຊາການໃຫ້ແກ່ພະນັກງານ ແມ່ນວຽກງານສະໜັບສະໜູນທີ່ສຳຄັນຂອງອົງການໂຄບ.*

ບຸນກອງ ສີຫາວົງ ໄດ້ກ່າວວ່າ "ອົງການໂຄບ ໄດ້ຊ່ວຍເຫຼືອສະໜັບສະໜູນໂຄງການຜະລິດອົງຄະທຽມ ແລະ ເຄື່ອງຄ້ຳຊູ ໃນຂອບເຂດທົ່ວປະເທດ ໂດຍການສະໜອງວັດຖຸອຸປະກອນ ແລະ ຈັດການຝຶກອົບຮົມໃຫ້ແກ່ພະນັກງານຄົນລາວ". ຫວັງຢ່າງຍິ່ງວ່າ "ສູນການແພດ ແລະ ຟື້ນຟູໜ້າທີ່ການ ຈະສາມາດຮຽນຮູ້ໄດ້ຫຼາຍ ແລະ ມີການແລກປ່ຽນປະສົບການຮ່ວມກັນ ຢູ່ກອງປະຊຸມໃນຄັ້ງນີ້".

ອົງການໂຄບ ໄດ້ເລີ່ມໃຫ້ການສະໜັບສະໜູນສູນຟື້ນຟູໜ້າທີ່ການແຕ່ປີ 1997 ເປັນຕົ້ນມາ ເພື່ອແນໃສ່ການບໍລິການທີ່ມີຄຸນນະພາບທາງດ້ານອົງຄະທຽມ ແລະ ເຄື່ອງຄ້ຳຊູ ໃຫ້ແກ່ຄົນພິການທີ່ມີຄວາມຕ້ອງການ ແລະ ປະຈຸບັນນີ້ ແມ່ນກຳລັງເຮັດວຽກຮ່ວມກັບສູນຟື້ນຟູໜ້າທີ່ການ 5 ແຫ່ງໃນຂອບເຂດທົ່ວປະເທດ.

"ພວກເຮົາຂໍສະແດງຄວາມຮູ້ບຸນຄຸນຕໍ່ການສະໜັບສະໜູນຂອງສາກົນ ແລະ ຫວັງວ່າ ກອງປະຊຸມໃນຄັ້ງນີ້ ຈະສາມາດນຳອອກມາໄດ້ແຜນການປະຕິບັດວຽກທີ່ລະອຽດ ເພື່ອເຮັດແນວໃດໃຫ້ສູນຟື້ນຟູໜ້າທີ່ການ, ອົງການໂຄບ ແລະ ຄູ່ຮ່ວມງານສາກົນຕ່າງໆ ສາມາດກ້າວເດີນໄປຂ້າງໜ້າໄດ້ອີກຕໍ່ໄປ ແລະ ສາມາດສະໜອງໄດ້ການບໍລິການໃຫ້ແກ່ຄົນພິການຢູ່ໃນ ສປປ ລາວ ໃຫ້ໄດ້ຢ່າງທົ່ວເຖິງ". ກ່າວໂດຍ ທ່ານ ດຣ ຄຳເພັດ ມະນີວົງ ອຳນວຍການສູນຟື້ນຟູໜ້າທີ່ການ.

ໃນໄລຍະກອງປະຊຸມສຳມະນາ 4 ມື້ ເຮັດໃຫ້ສິ່ງທ້າທາຍຕ່າງໆທີ່ເປັນອຸປະສັກຕໍ່ການດຳເນີນງານ ໄດ້ຖືກກຳນົດອອກມາ ແລະ ແຜນການເຮັດວຽກຮ່ວມກັນໃນອະນາຄົດ ກໍ່ໄດ້ມີການຕົກລົງເຫັນດີຮ່ວມກັນ. ທີມງານດູແລຄວບຄຸມການຜະລິດຂອງສູນຟື້ນຟູໜ້າທີ່ການ ໄດ້ຮັບການສ້າງຕັ້ງຂຶ້ນ ແລະ ມີໜ້າທີ່ຮັບຜິດຊອບໃນການປະເມີນຜົນ ແລະ ກວດສອບການຈັດຕັ້ງປະຕິບັດໃນແຕ່ລະຂັ້ນຕອນຂອງການຜະລິດ ລວມທັງ ດູແລໃນເລື່ອງຂອງນະໂຍບາຍຕ່າງໆຢູ່ໃນທັງໝົດ 5 ສູນຟື້ນຟູໜ້າທີ່ການໃນທົ່ວປະເທດ.

## ວຽກຈຸດສຸມໃນປີ 2014:

- ເພີ່ມຄຸນນະພາບຂອງການບໍລິການ ໂດຍສຸມໃສ່ການຝຶກອົບຮົມທາງດ້ານວິຊາການໃຫ້ພະນັກງານຂອງສູນຟື້ນຟູໜ້າທີ່ການ ແລະ ວິຊາການຜະລິດຕັ່ງນ້ຳນັ່ງ ດ້ວຍຫຼັກສູດຝຶກອົບຮົມສະເພາະ, ຈັດການຝຶກອົບຮົມກ່ຽວກັບການກວດສອບຂຶ້ນທີ່ສູນການແພດ ແລະ ຟື້ນຟູໜ້າທີ່ການ ຢູ່ນະຄອນຫຼວງວຽງຈັນ ເພື່ອຮັບປະກັນໃຫ້ວຽກງານການດູແລຄວບຄຸມຜະລິດ ມີປະສິດທິພາບ.
- ຈັດຕັ້ງປະຕິບັດການສຳຫຼວດເບິ່ງຜູ້ທີ່ໄດ້ຮັບຜົນປະໂຫຍດ ແລະ ປັບປຸງແຜນການດຳເນີນງານ ເພື່ອຮັບປະກັນໃຫ້ ຜູ້ທີ່ນຳໄປປະຕິບັດຕໍ່ມີແນວຄວາມຄິດໃນການຈັດຕັ້ງປະຕິບັດວຽກຢ່າງເປັນລະບົບ ເປັນຕົ້ນແມ່ນ ການຕິດຕາມດູແລຄວບຄຸມຄຸນນະພາບໃນການເຮັດວຽກ ແລະ ມີການສືບຕໍ່ຝຶກອົບຮົມ.
- ສະໜັບສະໜູນການບໍລິການອົງຄະທຽມ ແລະ ເຄື່ອງຄ້ຳຊູ ໃຫ້ແກ່ຜູ້ທີ່ບໍ່ສາມາດຈ່າຍໄດ້ຄ່າບໍລິການເຄື່ອງຄ້ຳຊູ ແລະ ອົງຄະທຽມ ຢູ່ໃນ 5 ສູນຟື້ນຟູໜ້າທີ່ການ.
- ປັບປຸງຄຸນນະພາບໃນການດູແລຮັກສາເຄື່ອງຄ້ຳຊູ ແລະ ອົງຄະທຽມ ເພື່ອໃຫ້ໃຊ້ໄດ້ດົນ ແລະ ຮັກສາຄຸນນະພາບຂອງມັນໃຫ້ຄົງຢູ່ເດີມ.
- ສະໜອງການສະໜັບສະໜູນໃຫ້ແກ່ຊ່ວງທີ່ມີການມອບໂອນວຽກກ່ຽວກັບການຝຶກວິຊາຊີບ ແລະ ເຮັດກາຍຍະພາບບຳບັດ ຄືນໃຫ້ແກ່ສູນຟື້ນຟູໜ້າທີ່ການ ແນໃສ່ເພີ່ມຄວາມຮັບຜິດຊອບໃຫ້ຫຼາຍຂຶ້ນກວ່າເກົ່າໃນການປະຕິບັດກິດຈະກຳດັ່ງກ່າວ.
- ເພີ່ມຈຳນວນເປີເຊັນຂອງຄົນເຈັບທີ່ເຂົ້າມາຜ່ານອົງການໂຄບໃຫ້ຫຼາຍຂຶ້ນກວ່າເກົ່າ ໂດຍສະເພາະແມ່ນ ຜູ້ທີ່ຕ້ອງການເຂົ້າເຖິງການບໍລິການ ໂດຍນຳໃຊ້ການເຊື່ອມຕໍ່ການບໍລິການຂອງໂຄບ.
- ປັບປຸງ ແລະ ຕິດຕາມ ເພື່ອກຳນົດ ແລະ ແກ້ໄຂອຸປະສັກຕົ້ນຕໍທີ່ເປັນສິ່ງກີດຂວາງໃຫ້ແກ່ການເຂົ້າເຖິງການບໍລິການຂອງຄົນພິການ ໃນຂອບເຂດທົ່ວປະເທດ.
- ປະເມີນຄວາມເປັນໄດ້ໃນການສ້າງຄລີນິກແບບເຄື່ອນທີ່ ເພື່ອເພີ່ມການເຂົ້າເຖິງການບໍລິການໃຫ້ໄດ້ງ່າຍຂຶ້ນກວ່າເກົ່າ.
- ປັບປຸງຄວາມສາມາດໃນການເກັບກຳຂໍ້ມູນ ເພື່ອຮັບປະກັນໃຫ້ຂໍ້ມູນທີ່ເກັບກຳມາໄດ້ນັ້ນ ສອດຄ່ອງຕາມຄວາມຕ້ອງການຂອງສູນການແພດ ແລະ ຟື້ນຟູໜ້າທີ່ການ.



*ກຸ່ມຄົນພິການ ໃຊ້ເວລານັ່ງລົມກັນຫຼິ້ນຢູ່ທາງດ້ານນອກສູນການແພດ ແລະ ຟື້ນຟູໜ້າທີ່ການ*

## ຄູ່ຮ່ວມງານ:

ສູນຟື້ນຟູໜ້າທີ່ການ ແມ່ນຂຶ້ນກັບກະຊວງສາທາລະນະສຸກ ຖືກສ້າງຕັ້ງຂຶ້ນໃນປີ 1963 ມີໜ້າທີ່ໃນການສະໜອງ ແລະ ປະສານງານກ່ຽວກັບການບໍລິການຟື້ນຟູໃນຂອບເຂດທົ່ວປະເທດ. ຕັ້ງແຕ່ອົງການໂຄບ ແລະ ສູນຟື້ນຟູໜ້າທີ່ການ ໄດ້ເລີ່ມເປັນຄູ່ຮ່ວມງານກັນແຕ່ປີ 1997 ເປັນຕົ້ນມາ ທັງສອງພາກສ່ວນກໍ່ມີເປົ້າໝາຍລວມໃນການຮ່ວມມືກັນອັນດຽວກັນ ເພື່ອສະໜັບສະໜູນການພັດທະນາທັກສະທາງດ້ານວິຊາໃນການຟື້ນຟູ ຢູ່ໃນ ສປປ ລາວ ໃຫ້ມີຄວາມຍືນຍົງ ເພື່ອໃຫ້ສາມາດສືບຕໍ່ພັດທະນາການບໍລິການດັ່ງກາວຢູ່ໃນ ສປປ ລາວ ໄດ້ຕໍ່ໄປ.

## ບຸກຄະລາກອນໃນປີ 2013:

| ພະນັກງານຫ້ອງການ | | | | ພະນັກງານຝ່າຍປະຕິບັດງານ (ພາກສະໜາມ) | | | |
|---|---|---|---|---|---|---|---|
| ຄົນລາວ | | ຄົນຕ່າງປະເທດ | | ຄົນລາວ | | ຄົນຕ່າງປະເທດ | |
| ຊາຍ | ຍິງ | ຊາຍ | ຍິງ | ຊາຍ | ຍິງ | ຊາຍ | ຍິງ |
| 7 | 3 | 1 | 2 | 0 | 0 | 0 | 0 |

## ຕົວເລກສະຖິຕິ 2013:

| ການຊ່ວຍເຫຼືອຜູ້ຖືກເຄາະຮ້າຍຈາກ ລບຕ<br>ຈຳນວນຜູ້ທີ່ໄດ້ຮັບການຊ່ວຍເຫຼືອ | |
|---|---|
| ທາງດ້ານການເງິນ | ທາງດ້ານການແພດ |
| 0 | 233 |

## ພື້ນທີ່ການປະຕິບັດງານ:

| ໜ້າວຽກ | ແຂວງ ແລະ ເມືອງ ທີ່ປະຕິບັດກິດຈະກຳ |
|---|---|
| **ການຊ່ວຍເຫຼືອຜູ້ຖືກເຄາະຮ້າຍຈາກ ລບຕ** | ການຊ່ວຍເຫຼືອຜູ້ຖືກເຄາະຮ້າຍຈາກ ລບຕ ແມ່ນດຳເນີນຜ່ານສູນການແພດ ແລະ ຟື້ນຟູໜ້າທີ່ການຢູ່ແຂວງຈຳປາສັກ, ຫຼວງພະບາງ, ສະຫວັນນະເຂດ, ຊຽງຂວາງ ແລະ ນະຄອນຫຼວງວຽງຈັນ ບວກກັບ ບາງກິດຈະກຳທີ່ປະຕິບັດຢູ່ແຂວງອຸດົມໄຊ. ບັນດາສູນຟື້ນຟູຂ້າງເທິງນີ້ ແນໃສ່ຮັບປະກັນໃຫ້ສາມາດຄອບຄຸມການໃຫ້ບໍລິການໃຫ້ໄດ້ຢ່າງທົ່ວເຖິງ. |

ນອກຈາກນັ້ນ, ທີມງານເຊື່ອມຕໍ່ການບໍລິການຂອງອົງການໂຄບ ຍັງໄດ້ດຳເນີນການປະເມີນຜົນຢູ່ໃນ 22 ເມືອງ ຢູ່ໃນແຂວງຈຳປາສັກ, ຄຳມ່ວນ, ຫຼວງນ້ຳທາ, ໄຊຍະບູລີ ແລະ ອັດຕະປື ນຳອີກດ້ວຍ (ກະລຸນາເບິ່ງລາຍລະອຽດຊື່ຂອງເມືອງຢູ່ຕາຕະລາງຂ້າງລຸ່ມ).

| ແຂວງ | ເມືອງ |
|---|---|
| **ຈຳປາສັກ** | ສຸຄຸມມາ, ຈຳປາສັກ, ໂພນທອງ, ມູນລະປະໂມກ ແລະ ປະທຸມພອນ |
| **ຄຳມ່ວນ** | ໜອງບົກ, ເຊບັ້ງໄຟ, ບົວລະພາ, ໄຊບົວທອງ ແລະ ນາກາຍ |
| **ຫຼວງນ້ຳທາ** | ວຽງພູຄາ, ລອງ, ສິງ, ນາແລ ແລະ ນ້ຳທາ |
| **ໄຊຍະບູລີ** | ພຽງ, ໄຊຍະບູລີ, ປາກລາຍ, ທົ່ງມີໄຊ, ບໍ່ແຕນ ແລະ ແກ່ນທ້າວ |
| ອັດຕະປື | ພູວົງ |

## ທາງດ້ານການເງິນ:

ລາຍຈ່າຍໃນປີ 2013: (ໂດລາສະຫະລັດ)

| ລາຍການ | ຈຳນວນ |
|---|---:|
| ຄ່າໃຊ້ຈ່າຍສຳລັບບຸກຄະລາກອນ | 281,998.51 |
| ຄ່າໃຊ້ຈ່າຍສຳລັບການປະຕິບັດງານ | 532,158.01 |
| ຄ່າໃຊ້ຈ່າຍສຳລັບການປະຕິບັດງານພິເສດ | 0 |
| ຄ່າໃຊ້ຈ່າຍສຳລັບຊື້ວັດຖຸ-ຊັບສິນຄົງທີ່ | 0 |
| ຄ່າໃຊ້ຈ່າຍສຳລັບຊື້ວັດຖຸ-ຊັບສິນບໍ່ຄົງທີ່ | 0 |
| *ລວມ* | ***814,156.52*** |

ການສະໜັບສະໜູນຂອງຜູ້ໃຫ້ທຶນໃນປີ 2013 (ໂດລາສະຫະລັດ)

| ຜູ້ໃຫ້ທຶນ | ທຶນທີ່ໄດ້ຮັບໃນປີ 2013 |
|---|---:|
| ທຶນຊ່ວຍເຫຼືອເພື່ອການພັດທະນາຂອງອົດສະຕູາລີ (ອອດສ໌ເອດ) | 185,797.94 |
| ຊີບີເອັມ (ທຶນສຳລັບຄົນຕາບອດຂອງຄຼິດສະໂຕເຟີ້) | 109,071.26 |
| ຈີດີຈີ (ກຸ່ມພັດທະນາໂລກ) | 28,370.05 |
| ອົງການກາແດງສາກົນ ຫຼື ໄອຊີອາຊີ-ທຶນພິເສດສຳລັບຊ່ວຍເຫຼືອຄົນພິການ | 55,117.11 |
| ເອັນແອວເອ (ອົງການບັນເທົາທຸກພະຍາດຂີ້ເຮື້ອນຂອງປະເທດເນເທີແລນ) | 48,935.00 |
| ກະຊວງການຕ່າງປະເທດນໍອກແວ | 41,998.59 |
| ທຶນຊ່ວຍເຫຼືອເພື່ອການພັດທະນາຂອງອາເມລິກາ (ຢູເອັດສ໌ເອດ) | 612,576.00 |
| *ລວມ* | ***1,081,865.95*** |

# ສູນການແພດ ແລະ ຟື້ນຟູໜ້າທີ່ການ (ຊີເອັມອາ)
## (ດຳເນີນກິດຈະກຳການຊ່ວຍເຫຼືອຜູ້ຖືກເຄາະຮ້າຍຈາກ ລບຕ)

ສູນຟື້ນຟູໜ້າທີ່ການ ຂຶ້ນກັບກະຊວງສາທາລະນະສຸກ ມີໜ້າທີ່ໃນການຕ້ານຄວາມພິການ, ສະໜອງການປິ່ນປົວທາງການແພດ, ການສຶກສາພິເສດ ແລະ ການຝຶກປະກອບອາຊີບ ໃຫ້ແກ່ຄົນພິການທຸກໆປະເພດ ຢູ່ໃນ ສປປ ລາວ. ພວກເຮົາເຮັດວຽກຢ່າງໃກ້ຊິດກັບບັນດາອົງການເອັນຈີໂອຕ່າງໆ ໃນການຊ່ວຍເຫຼືອຜູ້ຖືກເຄາະຮ້າຍຈາກ ລບຕ ມາເປັນເວລາຫຼາຍປີ.

## ກິດຈະກຳໃນປີ 2013:

- ໄດ້ສະໜອງຂາທຽມໃຫ້ແກ່ຜູ້ຖືກເຄາະຮ້າຍ ຈຳນວນ 912 ອັນ.
- ໄດ້ສະໜອງເຄື່ອງຄ້ຳຊູ ຈຳນວນ 763 ອັນ.
- ໄດ້ສະໜອງລໍ້ເລື່ອນໃຫ້ແກ່ຄົນພິການ ຜູ້ທີ່ບໍ່ສາມາດເຄື່ອນຍ້າຍຕົນເອງໄດ້ຢ່າງລຳພັງ ຈຳນວນ 352 ຄັນ ແລະ ລົດຖີບສາມລໍ້ 143 ຄັນ.
- ນັກຮຽນທີ່ເປັນຄົນພິການ ໄດ້ຮຽນຈົບຈາກໂຮງຮຽນວິຊາຊີບໃຫ້ແກ່ຄົນພິການ ຢູ່ບ້ານສີເກີດ, ນະຄອນຫຼວງວຽງຈັນ ຈຳນວນ 96 ຄົນ.
- ໄດ້ສະໜອງການຟື້ນຟູແບບອີງໃສ່ຊຸມຊົນເປັນພື້ນຖານ ໃຫ້ແກ່ຄົນພິການທຸກໆປະເພດ ຈຳນວນ 256 ຄົນ ຢູ່ໃນ 7 ເມືອງ.
- ໄດ້ເຮັດວຽກຮ່ວມກັບບັນດາອົງການເອັນຈີໂອຕ່າງໆ ຄື: ອົງການສຶກສາໂລກ ແລະ ສະມາຄົມສຳລັບການປິ່ນປົວສຸກເສີນໃຫ້ແກ່ຜູ້ຖືກເຄາະຮ້າຍຈາກ ລບຕ ຢູ່ໃນ 6 ແຂວງ ຄື: ຊຽງຂວາງ, ຫົວພັນ, ຄຳມ່ວນ, ສາລະວັນ, ເຊກອງ ແລະ ອັດຕະປື (ລາຍລະອຽດມີຢູ່ໃນບົດລາຍງານສະເພາະຂອງອົງການສຶກສາໂລກ ແລະ ອົງການຊ່ວຍເຫຼືອເພື່ອບັນເທົາທຸກຂອງຍີ່ປຸ່ນ).

## ຜົນສຳເລັດຕົ້ນຕໍໃນປີ 2013:

ແມ່ນການເຮັດການປະເມີນຜົນກ່ຽວກັບການເຮັດຄຼີນິກ ຢູ່ໃນແຂວງຈຳປາສັກ, ຄຳມ່ວນ, ຫຼວງນ້ຳທາ, ໄຊຍະບູລີ ແລະ ອັດຕະປື ລວມມີຄົນເຈັບທີ່ເຂົ້າມາໃຊ້ບໍລິການທັງໝົດ 858 ຄົນ ແລະ ຄົນເຈັບ ຈຳນວນ 424 ຄົນ ແມ່ນຖືກເຊີນໃຫ້ເຂົ້າມາໃຊ້ບໍລິການເພື່ອປິ່ນປົວ.

## ຄູ່ຮ່ວມງານ:

ກະຊວງສາທາລະນະສຸກ, ກົມປິ່ນປົວສຸກຂະພາບ ແລະ ສູນຟື້ນຟູໜ້າທີ່ການເອງ ມີນະໂຍບາຍໃນການສະໜອງການບໍລິການປິ່ນປົວສຸຂະພາບ ໂດຍອີງໃສ່ເສົາຄ້ຳ 7 ປະການ ໃນການຊ່ວຍເຫຼືອຜູ້ຖືກເຄາະຮ້າຍຈາກ ລບຕ ໃນຂອບເຂດທົ່ວປະເທດ ໂດຍການປະສານສົມທົບກັບບັນດາອົງການໂຄບ, ອົງການສຶກສາໂລກ, ອົງການເອເອອາຣ, ອົງການຊີບີເອັມ, ອົງການດີໄອຊີ ແລະ ອົງການເຫັດໄອ ເພື່ອສະໜອງການບໍລິການປິ່ນປົວສຸຂະພາບ ແລະ ການຟື້ນຟູໃຫ້ແກ່ຜູ້ຖືກເຄາະຮ້າຍຈາກ

## ບຸກຄະລາກອນໃນປີ 2013:

| ພະນັກງານຫ້ອງການ | | | | ພະນັກງານຝ່າຍປະຕິບັດງານ (ພາກສະໜາມ) | | | |
|---|---|---|---|---|---|---|---|
| ຄົນລາວ | | ຄົນຕ່າງປະເທດ | | ຄົນລາວ | | ຄົນຕ່າງປະເທດ | |
| ຊາຍ | ຍິງ | ຊາຍ | ຍິງ | ຊາຍ | ຍິງ | ຊາຍ | ຍິງ |
| 9 | 15 | 0 | 3 | 77 | 90 | 1 | 0 |

## ຕົວເລກສະຖິຕິໃນປີ 2013:

| ການໂຄສະນາສຶກສາຄວາມສ່ຽງຈາກ ລບຕ ການໂຄສະນາສຶກສາຊຸມຊົນ | | | | | ການຊ່ວຍເຫຼືອຜູ້ຖືກເຄາະຮ້າຍຈາກ ລບຕ ຈຳນວນຜູ້ທີ່ໄດ້ຮັບການຊ່ວຍເຫຼືອ | | ການສຳຫຼວດ | | ການທຳລາຍເຄື່ອນທີ່ | |
|---|---|---|---|---|---|---|---|---|---|---|
| | ຜູ້ໄດ້ຮັບຜົນປະໂຫຍດ | | | | | | | | | |
| ຈ/ນຄັ້ງຢ້ຽມຢາມ | ໃຫຍ່ ຊາຍ | ໃຫຍ່ ຍິງ | ເດັກ ຊາຍ | ເດັກຍິງ | ດ້ານການເງິນ | ດ້ານການແພດ | ຈ/ນ ບ້ານ | ຈ/ນຄັ້ງ ຢ້ຽມຢາມ | ຈ/ນ ບ້ານ | ຈ/ນຄັ້ງ ຢ້ຽມຢາມ |
| ບໍ່ມີ | ບໍ່ມີ | ບໍ່ມີ | ບໍ່ມີ | ບໍ່ມີ | 456,000 ໂດລາສະຫະລັດ | 2,170 ໂດລາສະຫະລັດ | ບໍ່ມີ | ບໍ່ມີ | ບໍ່ມີ | ບໍ່ມີ |

## ພື້ນທີ່ການປະຕິບັດງານ:

| ໜ້າວຽກ | ແຂວງ ແລະ ເມືອງ ທີ່ປະຕິບັດກິດຈະກຳ |
|---|---|
| ການຊ່ວຍເຫຼືອຜູ້ຖືກເຄາະຮ້າຍຈາກ ລບຕ | ນະຄອນຫຼວງວຽງຈັນ |

## ທາງດ້ານການເງິນ:

ລາຍຈ່າຍໃນປີ 2013: (ໂດລາສະຫະລັດ)

| ລາຍການ | ຈຳນວນ |
|---|---:|
| ຄ່າໃຊ້ຈ່າຍສຳລັບບຸກຄະລາກອນ | |
| ຄ່າໃຊ້ຈ່າຍສຳລັບການປະຕິບັດງານ | |
| ຄ່າໃຊ້ຈ່າຍສຳລັບການປະຕິບັດງານພິເສດ | |
| ຄ່າໃຊ້ຈ່າຍສຳລັບຊື້ວັດຖຸ-ຊັບສິນຄົງທີ່ | |
| ຄ່າໃຊ້ຈ່າຍສຳລັບຊື້ວັດຖຸ-ສິນບໍ່ຄົງທີ່ | |
| *ລວມ* | ***465,000*** |

ການສະໜັບສະໜູນຂອງຜູ້ໃຫ້ທຶນໃນປີ 2013 (ໂດລາສະຫະລັດ)

| ຜູ້ໃຫ້ທຶນ | ທຶນທີ່ໄດ້ຮັບໃນປີ 2013 |
|---|---:|
| ທຶນຊ່ວຍເຫຼືອເພື່ອການພັດທະນາຂອງອາເມລິກາ (ຢູເອັດສ໌ເອດ) | 250,000 |
| ທຶນຊ່ວຍເຫຼືອເພື່ອການພັດທະນາຂອງອົດສະຕຼາລີ (ອອດສ໌ເອດ) | 100,000 |
| ຊີບີເອັມ (ທຶນສຳລັບຄົນຕາບອດຂອງຄຣິດສະໂຕເຟີ້) | 106,000 |
| *ລວມ* | ***465,000*** |

# ສະມາຄົມຊ່ວຍເຫຼືອຟື້ນຟູຄຸນນະພາບຊີວິດໃຫ້ແກ່ຄົນພິການ ແລະ ຜູ້ລອດຊີວິດຈາກ ລບຕ (ຄິວແອວເອ)

### (ດຳເນີນກິດຈະກຳການຊ່ວຍເຫຼືອຜູ້ຖືກເຄາະຮ້າຍຈາກ ລບຕ)

## ກິດຈະກຳໃນປີ 2013:

ສະມາຄົມຊ່ວຍເຫຼືອຟື້ນຟູຄຸນນະພາບຊີວິດໃຫ້ແກ່ຄົນພິການ ແລະ ຜູ້ລອດຊີວິດຈາກ ລບຕ (ຄິວແອວເອ) ຫຼື ສະມາຄົມປັບປຸງຄຸນນະພາບຊີວິດ ໄດ້ຮັບການລົງທະບຽນໃຫ້ເປັນສະມາຄົມທີ່ບໍ່ຫວັງຜົນກຳໄລໃນປີ 2011. ໃນປີ 2013 ໂດຍໄດ້ຮັບທຶນຊ່ວຍເຫຼືອຈາກເງິນບໍລິຈາກຂອງພາກເອກະຊົນ ແລະ ເງິນຈາກການຂາຍເຄື່ອງຫັດຖະກຳທີ່ເຮັດໂດຍຜູ້ລອດຊີວິດຈາກ ລບຕ ແລະ ຄົນພິການ ຈຶ່ງເຮັດໃຫ້ສະມາຄົມປັບປຸງຄຸນນະພາບຊີວິດ ຍັງຄົງຮັກສາໄດ້ລູກຄ້າ ຫຼື ຜູ້ຢ້ຽມຊົມທີ່ເຂົ້າມາຢ້ຽມຢາມສູນ, ຮ້ານຂາຍເຄື່ອງຫັດຖະກຳ ແລະ ການສະໜອງການບໍລິການຈາກ ຜູ້ລອດຊີວິດຈາກ ລບຕ ແລະ ຄົນພິການ.

ໃນປີ 2013, ສະມາຄົມປັບປຸງຄຸນນະພາບຊີວິດ ໄດ້ຈັດການຝຶກອົບຮົມກ່ຽວກັບການເຮັດຫັດຖະກຳ ຢູ່ໃນ 8 ບ້ານ ໂດຍມີຜູ້ເຂົ້າຮ່ວມທັງໝົດ 167 ຄົນ, ໃນນັ້ນ ມີຜູ້ລອດຊີວິດຈາກ ລບຕ 51 ຄົນ ແລະ ຄົນພິການ 46 ຄົນ. ນອກຈາກນັ້ນ, ສະມາຄົມປັບປຸງຄຸນນະພາບຊີວິດ ຍັງໄດ້ສະໜອງອຸປະກອນ ແລະ ນຳເອົາເຄື່ອງຫັດຖະກຳຢູ່ຕາມບ້ານຕ່າງໆຢູ່ເມືອງ ແປກ, ຄູນ, ຜາໄຊ ແລະ ຄຳ ນຳມາຂາຍ. ໃນລະຫວ່າງປີ 2011 ຫາ 2013, ສະມາຄົມປັບປຸງຄຸນນະພາບຊີວິດ ໄດ້ຈັດການຝຶກອົບຮົມກ່ຽວກັບການລ້ຽງສັດ ແລະ ປັບປຸງຊີວິດການເປັນຢູ່ຂອງປະຊາຊົນລາວບັນດາເຜົ່າ ຢູ່ໃນ 18 ບ້ານ ລວມມີຜູ້ເຂົ້າຮ່ວມທັງໝົດ 365 ຄົນ, ໃນນັ້ນ 147 ຄົນ ແມ່ນຜູ້ລອດຊີວິດຈາກ ລບຕ ຫຼື ສະມາຊິກໃນຄອບຄົວຂອງເຂົາເຈົ້າ, 94 ຄົນ ແມ່ນຄົນພິການ ແລະ 124 ຄົນແມ່ນປະຊາຊົນທຸກຍາກຢູ່ໃນບ້ານຕ່າງໆ.

ໂຄງຮ່າງການຈັດຕັ້ງຂອງສະມາຄົມປັບປຸງຄຸນນະພາບຊີວິດ ແມ່ນມີຄວາມເຂັ້ມແຂງຂຶ້ນກວ່າເກົ່າ ແລະ ໄດ້ສະໜອງການຝຶກອົບຮົມໃຫ້ແກ່ຄະນະກຳມະການທີ່ຫາກໍ່ຖືກຄັດເລືອກໃໝ່ ຈຳນວນ 8 ຄົນ, ໃນນັ້ນ 5 ຄົນ ແມ່ນຜູ້ລອດຊີວິດຈາກ ລບຕ. ຄະນະກຳມະການ ກໍ່ມີກອງປະຊຸມຮ່ວມກັນໃນທຸກໆໄຕມາດ, ຊຶ່ງຈະມີຜູ້ຄຸ້ມຄອງບໍລິຫານການຝຶກອົບຮົມເຂົ້າຮ່ວມນຳທຸກຄັ້ງ. ຄະນະກຳມະການທີ່ຖືກຄັດເລືອກໃນເດືອນມັງກອນ 2013 ຢູ່ໃນກອງປະຊຸມສະມາຊິກສະພາ ແລະ ມາຮອດເດືອນທັນວາ 2013 ພວກເຂົາ ໄດ້ມີການກະກຽມກອງປະຊຸມສະມາຊິກສະພາ ທີ່ຈະຈັດຂຶ້ນໃນເດືອນມັງກອນ 2014.

## ຜົນສຳເລັດຕົ້ນຕໍໃນປີ 2013:

ຄະນະກຳມະການ ໄດ້ເລີ່ມໃຫ້ທິດຊີ້ນຳແກ່ການດຳເນີນກິດຈະກຳຂອງສະມາຄົມປັບປຸງຄຸນນະພາບຊີວິດ ຈຶ່ງສາມາດເຮັດໃຫ້ການດຳເນີນກິດຈະກຳຂອງສະມາຄົມປັບປຸງຄຸນນະພາບຊີວິດ ສອດຄ່ອງກັບວິໄສທັດ ແລະ ການປະຕິບັດງານ. ນອກຈາກນັ້ນ, ພະນັກງານຂອງສະມາຄົມປັບປຸງຄຸນນະພາບຊີວິດ ຍັງໄດ້ເຂົ້າຮ່ວມການຝຶກອົບຮົມຍົກລະດັບພະນັກງານ ເພື່ອເສີມສ້າງຄວາມເຂັ້ມແຂງໃນການຄຸ້ມຄອງບໍລິຫານກິດຈະກຳ.

ໂດຍໄດ້ຮັບເງິນຈາກການບໍລິຈາກ ແລະ ທຶນຊ່ວຍເຫຼືອລ້າ, ສະມາຄົມປັບປຸງຄຸນນະພາບຊີວິດ ຈຶ່ງໄດ້ປະກອບສ່ວນເງິນຈຳນວນດັ່ງກ່າວເຂົ້າໃສ່ກອງທຶນປິ່ນປົວຜູ້ຖືກເຄາະຮ້າຍຈາກສົງຄາມ ເປັນຕົ້ນແມ່ນ ທຶນສຳລັບການປິ່ນປົວຮັກສາໃຫ້ແກ່ຜູ້ລອດຊີວິດຈາກ ລບຕ 6 ຄົນ ແລະ ອີກ 9 ຄົນ ທີ່ຍັງຕ້ອງການສືບຕໍ່ປິ່ນປົວຢູ່. ນອກຈາກນັ້ນ, ຍັງໄດ້ສະໜອງທຶນການສຶກສາຈຳນວນໜຶ່ງໃຫ້ຜູ້ລອດຊີວິດຈາກ ລບຕ 3 ຄົນ ເພື່ອໃຫ້ເຂົາເຈົ້າສືບຕໍ່ຮຽນໃຫ້ຈົບຊັ້ນມັດທະຍົມ ແລະ ວິທະຍາໄລຝຶກອົບຮົມຄູແກ່ງໄຄ້.

## ຂ່າວດີ:

ຈົງລີ ໄດ້ຮັບບາດເຈັບຈາກ ລບຕ ໃນປີ 2012 ໃນເວລາທີ່ລາວກຳລັງຈູດຂີ້ເຫຍື້ອໃກ້ເຮືອນຂອງລາວຢູ່ເມືອງຄູນ. ລາວໄດ້ຮັບບາດເຈັບທີ່ໃບໜ້າ ແລະ ສູນເສຍຕາຂ້າງໜຶ່ງໄປ. ສະມາຄົມປັບປຸງຄຸນນະພາບຊີວິດ ໄດ້ລົງໄປຢ້ຽມຢາມລາວຫຼາຍຄັ້ງ ເພື່ອເຮັດແຜນການປິ່ນປົວໃຫ້ລາວ ລວມທັງ ການສອນໃຫ້ລາວກ່ຽວກັບການລ້ຽງໝູ ແລະ ໃຫ້ລາວກັບເຂົ້າໄປຮຽນຄືນຢູ່ໂຮງຮຽນມັດທະຍົມໄດ້ອີກເທື່ອໜຶ່ງ ພາຍຫຼັງທີ່ລາວອອກຈາກໂຮງຮຽນໃນຕອນນັ້ນ ຍ້ອນຖືກອຸປະຕິເຫດຈາກ ລບຕ.

ລາວໄດ້ເຂົ້າຮ່ວມການຝຶກອົບຮົມກ່ຽວກັບການລ້ຽງສັດຢູ່ບ້ານອື່ນໆ ແລະ ຮຽນຮູ້ວິທີການລ້ຽງໝູໃຫ້ໄດ້ດີ; ຫຼັງຈາກການຝຶກອົບຮົມ ລາວໄດ້ຮັບທຶນຊ່ວຍເຫຼືອກ້ອນໜຶ່ງເພື່ອນຳໄປຊື້ໝູ 2 ໂຕ ມາລ້ຽງ. ໃນເດືອນມິຖຸນາ 2013, ລາວໄດ້ເປັນອາສາສະໝັກ ນຳເອົາຄວາມຮູ້ທີ່ຮຽນມາສິດສອນໃຫ້ຄົນສູງອາຍຸຜູ້ອື່ນໆທີ່ເປັນຄົນມົ້ງຄືກັນ ໃນລະຫວ່າງການຝຶກອົມຮົມກ່ຽວກັບການລ້ຽງສັດ ທີ່ຈັດຂຶ້ນໂດຍອົງການສຶກສາໂລກ. ໃນເດືອນກັນຍາ 2013, ລາວໄດ້ເຂົ້າຮ່ວມແຜນງານສຶກສາແບບເລັ່ງລັດ ເພື່ອໃຫ້ສາມາດຮຽນຈົບຊັ້ນມັດທະຍົມ ແລ້ວເຂົ້າໄປຕໍ່ວິທະຍາໄລ.

ສະມາຄົມປັບປຸງຄຸນນະພາບຊີວິດ ໄດ້ຊ່ວຍລາວໂດຍການສະໜອງທຶນສະໜັບສະໜູນຈຳນວນໜຶ່ງໃຫ້ລາວ ແລະ ສືບຕໍ່ຊ່ວຍເຫຼືອປິ່ນປົວທາງການແພດໂດຍນຳໃຊ້ທຶນປິ່ນປົວຜູ້ຖືກເຄາະຮ້າຍຈາກສົງຄາມ. ນອກຈາກນັ້ນ, ສະມາຄົມປັບປຸງຄຸນນະພາບຊີວິດ ຍັງໄດ້ຈັດການສົ່ງເສີມການລ້ຽງສັດໂດຍເອົາບ້ານເປັນພື້ນຖານ ແບບທີ່ ຈົງລີ ເຄີຍໄດ້ເຂົ້າມາຮ່ວມໃນແຕ່ກ່ອນ ແລະ ພ້ອມນັ້ນ ກໍ່ໄດ້ສະໜອງເງິນຈຳນວນໜຶ່ງສຳລັບຄ່າຊື້ປື້ມຮຽນ ແລະ ອຸປະກອນການຮຽນ ຈຶ່ງເຮັດໃຫ້ລາວສາມາດເຂົ້າຮ່ວມແຜນງານສຶກສາແບບເລັ່ງລັດ ແລະ ຮຽນຈົບຊັ້ນມັດທະຍົມ.

## ວຽກຈຸດສຸມໃນປີ 2014:

ສະມາຄົມປັບປຸງຄຸນນະພາບຊີວິດ ວາງແຜນຈະສືບຕໍ່ສ້າງຄວາມເຂັ້ມແຂງລະບົບການຄຸ້ມຄອງບໍລິຫານ ແລະ ຂະຫຍາຍສະມາຊິກໃຫ້ເພີ່ມຂຶ້ນຕື່ມຈາກທີ່ມີຢູ່ປະຈຸບັນ 30 ຄົນ. ສະມາຄົມປັບປຸງຄຸນນະພາບຊີວິດ ວາງແຜນຈະຮັບເອົາອາສາສະໝັກ ເພື່ອເຂົ້າມາຊ່ວຍການຝຶກອົບຮົມກ່ຽວກັບການປັບປຸງຊີວິດການເປັນຢູ່ ແລະ ຮັກສາຮ້ານຄ້າຂາຍເຄື່ອງຂອງບ້ານ ໃຫ້ສາມາດດຳເນີນຕໍ່ໄປ. ໃນປີ 2014, ສະມາຄົມປັບປຸງຄຸນນະພາບຊີວິດ ຈະໄດ້ຮັບທຶນເພີ່ມສຳລັບການຝຶກອົບຮົມແບບເອົາບ້ານເປັນພື້ນຖານ ກ່ຽວກັບການເຮັດຫັດຖະກຳ ແລະ ການລ້ຽງສັດ. ທັງໝົດນີ້ ແມ່ນຈະດຳເນີນຢູ່ຂັ້ນບ້ານ ເພື່ອຊ່ວຍເຫຼືອສະມາຊິກໃນກຸ່ມການຜະລິດ ໃຫ້ສາມາດມີລາຍໄດ້.

ສະມາຄົມປັບປຸງຄຸນນະພາບຊີວິດຍັງເປັນພາກສ່ວນໜຶ່ງຂອງ 'ທີມງານສະໜັບສະໜູນໃນການຊ່ວຍເຫຼືອຜູ້ຖືກເຄາະຮ້າຍຈາກ ລບຕ' ຂອງອົງການສຶກສາໂລກ ແລະ ພະແນກປິ່ນປົວສຸຂະພາບແຂວງຊຽງຂວາງ. ທີມງານສະໜັບສະໜູນໃນການຊ່ວຍເຫຼືອຜູ້ຖືກເຄາະຮ້າຍຈາກ ລບຕ ຈະເຮັດໜ້າທີ່ໃນການສຳຫຼວດ, ວາງແຜນການປິ່ນປົວດູແລ ແລະ ສະໜັບສະໜູນການຟື້ນຟູຈິດຕະສັງຄົມໃຫ້ແກ່ຜູ້ຖືກເຄາະຮ້າຍຈາກ ລບຕ.

## ຄູ່ຮ່ວມງານ:

ປະຈຸບັນນີ້ ສະມາຄົມປັບປຸງຄຸນນະພາບຊີວິດ ປະກອບມີສະມາຊິກ

ທັງໝົດ 30 ຄົນ ລວມມີທັງຜູ້ລອດຊີວິດຈາກ ລບຕ ແລະ ຄົນພິການ ຢູ່ແຂວງຊຽງຂວາງ. ສະມາຊິກ 8 ຄົນ ທີ່ຢູ່ໃນຄະນະກຳມະການ ແມ່ນຈະພົບກັນໃນທຸກໆໄຕມາດ ເພື່ອທົບທວນຄືນຜົນຄວາມຄືບໜ້າໃນການດຳເນີນງານຂອງສະມາຄົມປັບປຸງຄຸນນະພາບຊີວິດ ໃຫ້ໄດ້ຕາມເປົ້າໝາຍ.

ສະມາຄົມປັບປຸງຄຸນນະພາບຊີວິດ ຈະເຮັດວຽກຮ່ວມກັບພະແນກປິ່ນປົວສຸຂະພາບແຂວງຊຽງຂວາງ ແລະ ສູນການແພດ ແລະ ຟື້ນຟູໜ້າທີ່ການ ເພື່ອທົບທວນແຜນການຊ່ວຍເຫຼືອຜູ້ລອດຊີວິດຈາກ ລບຕ.

ປະຈຸບັນນີ້ ມີກຸ່ມຜະລິດຢູ່ 21 ກຸ່ມ ຢູ່ໃນ 18 ບ້ານ ຂອງເມືອງຄູນ, ຜາໄຊ, ແປກ ແລະ ຄຳ ລວມມີສະມາຊິກທັງໝົດ 365 ຄົນ (ລວມມີຜູ້ລອດຊີວິດຈາກ ລບຕ, ຄົນພິການ ແລະ ປະຊາຊົນທີ່ທຸກຍາກທີ່ສຸດຢູ່ໃນບ້ານ). ສະມາຄົມປັບປຸງຄຸນນພາບຊີວິດ ເຮັດວຽກຢ່າງໃກ້ຊິດກັບພະແນກປິ່ນປົວສຸຂະພາບ, ໂຮງຮຽນຝຶກວິຊາຊີບຂອງແຂວງຊຽງຂວາງ ແລະ ຫ້ອງການບ້ານຕ່າງໆ ເພື່ອທົບທວນຄືນກິດຈະກຳ, ບົດຮຽນທີ່ຖອດຖອນໄດ້ ແລະ ການວາງແຜນວຽກ.



*ການຝຶກອົບຮົມກ່ຽວກັບການເຮັດຫັດຖະກຳ ຈັດຂຶ້ນໂດຍສະມາຄົມປັບປຸງຄຸນນະພາບຊີວິດ ຢູ່ທີ່ບ້ານໄທທົ່ນ.*

## ບຸກຄະລາກອນໃນປີ 2013:

| ພະນັກງານຫ້ອງການ | | | | ພະນັກງານຝ່າຍປະຕິບັດງານ (ພາກສະໜາມ) | | | |
|---|---|---|---|---|---|---|---|
| ຄົນລາວ | | ຄົນຕ່າງປະເທດ | | ຄົນລາວ | | ຄົນຕ່າງປະເທດ | |
| ຊາຍ | ຍິງ | ຊາຍ | ຍິງ | ຊາຍ | ຍິງ | ຊາຍ | ຍິງ |
| 8 | 2 | 0 | 0 | 0 | 0 | 0 | 1 |

## ຕົວເລກສະຖິຕິໃນປີ 2013:

| ການຊ່ວຍເຫຼືອຜູ້ຖືກເຄາະຮ້າຍຈາກ ລບຕ<br>ຈຳນວນຜູ້ທີ່ໄດ້ຮັບການຊ່ວຍເຫຼືອ | |
|---|---|
| ທາງດ້ານການເງິນ | ການຝຶກອົບຮົມ |
| ຈຳນວນຜູ້ໄດ້ຮັບບາດເຈັບໃໝ່: 06 ຄົນ | ຝຶກອົບຮົມກ່ຽວກັບຫັດຖະກຳໃຫ້ຜູ້ລອດຊີວິດຈາກ ລບຕ ຈຳນວນ 51 ຄົນ ແລະ ຄົນພິການ 46 ຄົນ |
| ຈຳນວນຜູ້ປ່ວຍທີ່ເຂົ້າມາສືບຕໍ່ປິ່ນປົວ: 09 ຄົນ | ລົງຕິດຕາມບ້ານທີ່ເຮັດກິດຈະກຳຝຶກວິຊາຊີບ ເພື່ອສະໜອງອຸປະກອນ ແລະ ທຶນສະໜັບສະໜູນໃຫ້ແກ່ການຝຶກວິຊາຊີບ |

## ພື້ນທີ່ການປະຕິບັດງານ:

| ໜ້າວຽກ | ແຂວງ ແລະ ເມືອງ ທີ່ປະຕິບັດກິດຈະກຳ |
|---|---|
| **ການຊ່ວຍເຫຼືອຜູ້ຖືກເຄາະຮ້າຍຈາກ ລບຕ** | ທັງໝົດ 8 ເມືອງ ຂອງແຂວງຊຽງຂວາງ |

## ທາງດ້ານການເງິນ:

### ຄ່າໃຊ້ຈ່າຍໃນປີ 2013: (ໂດລາສະຫະລັດ)

| ລາຍການ | ຈຳນວນ |
|---|---|
| ຄ່າໃຊ້ຈ່າຍສຳລັບບຸກຄະລາກອນ | ບໍ່ມີ |
| ຄ່າໃຊ້ຈ່າຍສຳລັບວຽກປະຕິບັດງານ | 71,205 |
| ຄ່າໃຊ້ຈ່າຍສຳລັບວຽກປະຕິບັດງານພິເສດ | ບໍ່ມີ |
| ຄ່າໃຊ້ຈ່າຍສຳລັບວັດຖຸ-ຊັບສິນຄົງທີ່ | ບໍ່ມີ |
| ຄ່າໃຊ້ຈ່າຍສຳລັບວັດຖຸ-ຊັບສິນບໍ່ຄົງທີ່ | ບໍ່ມີ |
| *ລວມ* | ***71,205*** |

### ການສະໜັບສະໜູນຂອງຜູ້ໃຫ້ທຶນໃນປີ 2013 (ໂດລາສະຫະລັດ)

| ຜູ້ໃຫ້ທຶນ | ທຶນທີ່ໄດ້ຮັບໃນປີ 2013 (ໂດລາສະຫະລັດ) |
|---|---|
| ສະຖານທູດຝັ່ງ-ກອງທຶນພັດທະນາສັງຄົມ | 26,705 |
| ກອງທຶນແມ້ກນາຍ | 39,975 |
| ເຣວີທັດ | 3,797 |
| ເງິນບໍລິຈາກຂອງເອກະຊົນ | 9,885 |
| ຫ້ອງການຫຼຸດຜ່ອນອາວຸດ ແລະ ການສູ້ຮົບ (ຜ່ານອົງການສຶກສາໂລກ "ສຳລັບໂຄງການສ້າງຄວາມເຂັ້ມແຂງໃນການດູແລປະຖົມພະຍາບານ" | 8,000 |
| *ລວມ* | ***88,362*** |

### ເງິນທີ່ໄດ້ຮັບຈາກອົງການປະຕິບັດງານອື່ນໆ (ໂດລາສະຫະລັດ)

| ມີອົງການໃດແດ່ ທີ່ທ່ານໄດ້ຮັບເງິນນຳ? | ຈຳນວນ |
|---|---|
| ອົງການສຶກສາໂລກ (ກະລຸນາເບິ່ງລາຍງານຂ້າງເທິງ) | 8,000 |
| *ລວມ* | ***8,000*** |

# ອົງການສຶກສາໂລກ (ດັບເບີ້ນຢູອີ)

## (ດຳເນີນກິດຈະກຳໂຄສະນາສຶກສາຄວາມສ່ຽງຈາກ ລບຕ ແລະ ການຊ່ວຍເຫຼືອຜູ້ຖືກເຄາະຮ້າຍຈາກ ລບຕ)

## ກິດຈະກຳໃນປີ 2013:

ແຜນງານກິດຈະກຳໂຄສະນາສຶກາຄວາມສ່ຽງຈາກ ລບຕ ໄດ້ດຳເນີນຮ່ວມກັບກະຊວງສຶກສາທິການ ແລະ ກິລາ ເພື່ອສະໜອງຫຼັກສູດການຮຽນການສອນວິຊາ ລບຕ ເພື່ອສອນເດັກນ້ອຍຢູ່ໃນໂຮງຮຽນຊັ້ນປະຖົມສຶກສາ ເພື່ອໃຫ້ເຂົາເຈົ້າຮຽນຮູ້ກ່ຽວກັບການຫຼີກລ່ຽງອຸປະຕິເຫດຈາກ ລບຕ. ໃນສົກຮຽນ 2013/14, ແຜນງານດັ່ງກ່າວ ໄດ້ດຳເນີນຢູ່ໂຮງຮຽນ 2,366 ແຫ່ງ ຢູ່ໃນ 9 ແຂວງທີ່ມີ ລບຕ ຕົກຄ້າງ. ໃນປີ 2013, ອົງການໄດ້ສະໜອງການຝຶກອົບຮົມຍົກລະດັບຄືນໃຫ້ແກ່ຄູສອນຢູ່ໃນ 4 ເມືອງ ແລະ ໄດ້ຕິດຕາມຄູສອນ ຈຳນວນ 9,030 ຄົນ ທີ່ຢູ່ໃນ 2,366 ໂຮງຮຽນ ກ່ຽວກັບການສິດສອນຫຼັກສູດວິຊາ ລບຕ. ນອກຈາກນັ້ນ, ອົງການ ຍັງໄດ້ເຮັດວຽກຮ່ວມກັບວິທະຍາໄລຝຶກອົບຮົມຄູ ເພື່ອສະໜອງການຝຶກອົບຮົມໃຫ້ແກ່ນັກຮຽນທີ່ກຳລັງຈະເປັນຄູ ເພື່ອສົ່ງເສີມໃຫ້ມີການສິດສອນລົງໄປຊຸມຊົນ ໂດຍຜ່ານການສະແດງລະຄອນຕຸກກະຕາ. ປະຈຸບັນນີ້ ມີຄະນະສະແດງລະຄອນຕຸກກະຕາທັງໝົດ 50 ຄະນະ ລົງສະແດງຢູ່ຕາມໂຮງຮຽນປະຖົມ ປໍ 3, ປໍ 4 ແລະ ປໍ 5 ແລະ ຢູ່ຕາມງານຊຸມຊົນຕ່າງໆ.



ອົງປະກອບແຜນງານການຊ່ວຍເຫຼືອຜູ້ຖືກເຄາະຮ້າຍຈາກ ລບຕ ປະກອບມີ ການຍົກລະດັບການບໍລິການປິ່ນປົວຢູ່ໃນ 5 ເມືອງ ຂອງແຂວງຊຽງຂວາງ ແລະ ພະນັກງານແພດຢູ່ເມືອງ ແລະ ອາສາສະໝັກສຸກສາລາຂັ້ນບ້ານຢູ່ເມືອງທ່າໂທມ ແລະ ໝອກ. ໂຄງການໄດ້ທົບທວນຄືນ ແລະ ຈັດພິມປຶ້ມຄູ່ມື 2 ຢ່າງຢູ່ໃນກອງປະຊຸມຝຶກອົບຮົມວິຊາການ ແລະ ກອງປະຊຸມຝຶກອົບຮົມໃຫ້ແກ່ຄູຝຶກເປົ້າໝາຍ ແນໃສ່ໃຫ້ເປັນຄູຝຶກຕົ້ນຕໍ ເພື່ອສະໜັບສະໜູນໃຫ້ແກ່ການຝຶກອົບຮົມກ່ຽວກັບແພດ ແລະ ການປິ່ນປົວຕໍ່ໄປໃນອະນາຄົດ.

ອົງການສຶກສາໂລກ ແລະ ສະມາຄົມປັບປຸງຄຸນນະພາບຊີວິດ ໄດ້ຊ່ວຍເຫຼືອຜູ້ລອດຊີວິດຈາກ ລບຕ ແລະ ຄົນພິການຢູ່ແຂວງຊຽງຂວາງ ແລະ ກົມປິ່ນປົວສຸຂະພາບ ແມ່ນຕິດຕາມ ແລະ ສຳພາດ ຜູ້ລອດຊີວິດຈາກ ລບຕ 44 ຄົນ ຫຼັງຈາກຟື້ນຕົວອອກຈາກໂຮງໝໍ ແລະ ໄດ້ຈັດການຝຶກອົບຮົມກ່ຽວກັບການສົ່ງເສີມລ້ຽງສັດໃຫ້ເຂົາເຈົ້າຢູ່ແຂວງຊຽງຂວາງ ປະສົມປະສານກັບການຝຶກວິຊາຊີບ ໃຫ້ແກ່ຜູ້ລອດຊີວິດຈາກ ລບຕ ຄົນໃໝ່ທີ່ຫາກໍ່ລອດຊີວິດຈາກ ລບຕ. ຫຼັງຈາກຝຶກອົບຮົມແລ້ວ, ຜູ້ເຂົ້າຮ່ວມ ກໍ່ໄດ້ຮັບທຶນຊ່ວຍເຫຼືອຈຳນວນໜຶ່ງ ເພື່ອນຳໄປຊື້ສັດລ້ຽງມາລ້ຽງ. ໃນທ້າຍປີ 2013 ທີມງານສະໜັບສະໜູນທາງດ້ານຈິດຕະສັງຄົມ ໄດ້ຈັດຄືນການໄປທັດສະນະສຶກສາອີກຄັ້ງໜຶ່ງຢູ່ປະເທດໄທ ໂດຍມີສະມາຊິກຕົ້ນຕໍເຂົ້າຮ່ວມ.

ກອງທຶນປິ່ນປົວຜູ້ຖືກເຄາະຮ້າຍຈາກສົງຄາມ ໄດ້ສະໜອງການຊ່ວຍເຫຼືອປິ່ນປົວທາງການແພດໃຫ້ແກ່ຄົນເຈັບ 13 ຄົນ ແລະ ໄດ້ສືບຕໍ່ຊ່ວຍດູແລປິ່ນປົວໃຫ້ແກ່ຜູ້ລອດຊີວິດຈາກ ລບຕ 9 ຄົນ ຢູ່ແຂວງຊຽງຂວາງ. ສະມາຄົມປັບປຸງຄຸນນະພາບຊີວິດຢູ່ແຂວງຊຽງຂວາງ ໄດ້ສະໜອງທຶນຊ່ວຍເຫຼືອຂອງເຂົາເຈົ້າທີ່ໄດ້ຈາກເງິນບໍລິຈາກ ແລະ ການຂາຍເຄື່ອງຫັດຖະກຳ ໃຫ້ແກ່ກອງທຶນປິ່ນປົວຜູ້ຖືກເຄາະຮ້າຍຈາກສົງຄາມ ເພື່ອນຳໄປຊ່ວຍເຫຼືອປິ່ນປົວຕໍ່ຜູ້ລອດຊີວິດຈາກ ລບຕ. ນອກຈາກນັ້ນ, ຜູ້ລອດຊີວິດຈາກ ລບຕ 5 ຄົນທີ່ມາຈາກແຂວງຫຼວງພະບາງ ແລະ 4 ຄົນ ທີ່ມາຈາກແຂວງວຽງຈັນ ກໍ່ໄດ້ຮັບການດູແລປິ່ນປົວຜ່ານກອງທຶນປິ່ນປົວຜູ້ຖືກເຄາະຮ້າຍຈາກ ລບຕ ເຊັ່ນດຽວກັນ.

## ຜົນສຳເລັດຕົ້ນຕໍໃນປີ 2013:

ແຜນງານໂຄສະນາສຶກສາຄວາມສ່ຽງຈາກ ລບຕ ໄດ້ສືບຕໍ່ສ້າງຄວາມເຂັ້ມແຂງໃຫ້ແກ່ການຝຶກອົບຮົມຢູ່ໃນວິທະຍາໄລຝຶກອົບຮົມຄູສອນ. ບັນດາຄູສອນເຫຼົ່ານີ້ ໃນເວລາທີ່ຮຽນຈົບແລ້ວ ເຂົາເຈົ້າ ຈະໄດ້ຮັບການຝຶກອົບຮົມຍົກລະດັບຄວາມຮູ້ທາງດ້ານການຝຶກອາຊີບ ແລະ ອຸປະກອນການສອນຫຼັກສູດວິຊາ ລບຕ ແນໃສ່ປະກອບສ່ວນໃຫ້ແຜນງານມີຄວາມຍືນຍົງ. ພ້ອມດຽວນັ້ນ, ອົງການ ຈະສະໜອງການຝຶກອົບຮົມຍົກລະດັບໃຫ້ແກ່ຄູສອນຢູ່ໃນ 4 ເມືອງ ໃນປີ 2014 ແລະ ອຳນວຍການໂຮງຮຽນ ຜູ້ທີ່ມີທັກສະດີໃນການສອນ ກໍ່ຈະໃຫ້ຊ່ວຍເຫຼືອຄູສອນທີ່ຫາກໍ່ຮຽນຈົບໃໝ່ ແລະ ຄູສອນອາວຸໂສ ໃນການສິດສອນຫຼັກສູດດັ່ງກ່າວ.

ອົງປະກອບແຜນງານການຊ່ວຍເຫຼືອຜູ້ຖືກເຄາະຮ້າຍຈາກ ລບຕ ແມ່ນແນໃສ່ເຮັດໃຫ້ໂຄງການຊ່ວຍຫຼືອຜູ້ຖືກເຄາະຮ້າຍປະສົບຜົນສຳເລັດຕາມແຜນການທີ່ຕັ້ງໄວ້. ທີມງານສະໜັບສະໜູນເພື່ອຊ່ວຍເຫຼືອຜູ້ຖືກເຄາະຈາກ ລບຕ ໄດ້ປັບປຸງພະນັກງານຂອງຕົນເອງ, ປັບປຸງລະບົບ, ແບບຟອມ ແລະ ວິທີການ ໃນການປະສານງານເພື່ອຕິດຕາມວຽກ ແນໃສ່ຮັບປະກັນໃຫ້ຜູ້ຖືກເຄາະຮ້າຍຈາກ ລບຕ ໄດ້ຮັບການສະໜັບສະໜູນຕາມຄວາມຕ້ອງການຂອງເຂົາເຈົ້າ.

ໃນປີ 2013, ອົງການສຶກສາໂລກ ໄດ້ເລີ່ມປຶກສາຫາລືກັບກຸ່ມຕ່າງໆ ເພື່ອສະໜອງການຝຶກອົບຮົມກ່ຽວກັບການເຮັດປະຖົມພະຍາບານຂັ້ນຕົ້ນ ໃຫ້ແກ່ອາສາສະໝັກສຸກສາລາຂັ້ນບ້ານ. ເຖິງແມ່ນວ່າ ຈະມີຫຼາຍໆອົງການໄດ້ປັບປຸງອຸປະກອນການເຮັດປະຖົມພະຍາບານຂັ້ນຕົ້ນອອກມາກໍ່ຕາມ ແຕ່ວ່າກໍ່ຍັງມີຄວາມແຕກຕ່າງຢູ່ບາງເນື້ອໃນ ຈຶ່ງອາດຈະເຮັດໃຫ້ອາສາສະໝັກສຸກສາລາຂັ້ນບ້ານບາງຄົນ ເກີດຄວາມສັບສົນ. ກອງປະຊຸມວິຊາການກ່ຽວກັບວຽກງານປະຖົມພະຍາບານຂັ້ນຕົ້ນ ແມ່ນໄດ້ສຸມໃສ່ປັບປຸງຫຼັກສູດການເຮັດປະຖົມພະຍາບານຂັ້ນຕົ້ນໃຫ້ແກ່ອາສາສະໝັກສຸກສາລາຂັ້ນບ້ານ ໂດຍກວດຄືນເບິ່ງອຸປະກອນທີ່ນຳໃຊ້ຢູ່ແລ້ວໃນ ສປປ ລາວ ແລະ ສົມທົບໃສ່ຮູບແບບອຸປະກອນຂອງສາກົນ ເພື່ອສະໜອງການເຮັດປ້ຳຫົວໃຈ ແລະ ປະຖົມພະຍາບານ. ຜູ້ທີ່ເຂົ້າຮ່ວມກອງປະຊຸມ ມີຄວາມສົນໃຈຫຼາຍ ແລະ ຫ້າວຫັນເຂົ້າຮ່ວມໃນທຸກໆຂະບວນການ. ອີງໃສ່ບົດຮຽນທີ່ຖອດຖອນໄດ້ຈາກການນຳເອົາຫຼັກສູດໄປສິດສອນໃຫ້ອາສາສະໝັກສຸກສາລາຂັ້ນບ້ານ ເຫັນວ່າຫຼັກສູດ ມີຄວາມງ່າຍດາຍ ແລະ ຮັບຮອງໄດ້ ແລະ ຕອບສະໜອງໄດ້ຕາມຄວາມຕ້ອງການຂອງອາສາສະໝັກສຸກສາລາຂັ້ນບ້ານ ແລະ ຊຸມຊົນຂອງເຂົາເຈົ້າ.

ການຝຶກອົບຮົມທົດລອງໃຫ້ແກ່ຄູຝຶກ ແລະ ກອງປະຊຸມກ່ຽວກັບເຕັກນິກໃນການນຳໃຊ້ປຶ້ມຄູ່ມື ແມ່ນເນັ້ນໜັກໃສ່ພະນັກງານໂຮງໝໍເມືອງ ແລະ ແຂວງ ທີ່ເຮັດວຽກຢູ່ໃນຫ້ອງສຸກເສີນ ແລະ ຜູ້ທີ່ເຮັດການປະຖົມພະຍາບານເບື້ອງຕົ້ນໃຫ້ແກ່ຜູ້ລອດຊີວິດຈາກ ລບຕ. ບົດຮຽນທີ່ຖອດຖອນໄດ້ຈາກການຝຶກອົບຮົມໃນຄັ້ງກ່ອນຂອງອົງການສຶກສາໂລກກ່ຽວກັບການປິ່ນປົວສຸກເສີນ ແລະ ການເຂົ້າມາມີສ່ວນຮ່ວມໃນການເຮັດວຽກກັບຄູຝຶກ ເຮັດໃຫ້ຕ້ອງໄດ້ມີການປັບປຸງອຸປະກອນຕື່ມຫຼາຍຢ່າງ.

## ຂ່າວດີ:

ແຜນງານການໂຄສະນາສຶກສາຄວາມສ່ຽງຈາກ ລບຕ ແມ່ນປະຕິບັດຮ່ວມກັບກະຊວງສຶກສາທິການ ແລະ ກິລາ ເພື່ອຊ່ວຍໃຫ້ເດັກນ້ອຍເຂົ້າໃຈຄວາມອັນຕະລາຍຂອງ ລບຕ ແລະ ເປັນການແຈ້ງເຕືອນໃຫ້ ຄູສອນ, ພໍ່ແມ່ ແລະ ອຳນາດການປົກຄອງຂັ້ນບ້ານ ໃນເວລາທີ່ເດັກນ້ອຍເຫັນ ລບຕ ຕອນທີ່ກຳລັງແລ່ນຫຼິ້ນຢູ່ຕາມເດີນບ້ານ, ຂຸດດິນຊອກຫາຂີ້ກະເດືອນ ຫຼື ກຳລັງຊ່ວຍວຽກພໍ່ແມ່ຢູ່ຕາມໄຮ່ນາ. ມື້ເດັກນ້ອຍຄົນໜຶ່ງ ຊື່ທ້າວ ຄຳໄສ ອາຍຸ 9 ປີ ຢູ່ບ້ານນ້ຳແປງ, ເມືອງທ່າໂທມ, ແຂວງຊຽງຂວາງ ພົບເຫັນ ລະເບີດລູກຫວ່ານ ໃນຂະນະທີ່ລາວ ກຳລັງຕຶກປາ ຢູ່. ແຕ່ຍ້ອນວ່າລາວ ເຄີຍໄດ້ຮຽນກ່ຽວກັບວິຊາ ລບຕ ຢູ່ໂຮງຮຽນຂອງ ລາວ ຈຶ່ງເຮັດໃຫ້ລາວຮູ້ວ່າ ອັນນັ້ນແມ່ນອັນຕະລາຍ, ລາວກໍ່ຮີບຟ້າວໄປບອກນາຍບ້ານ ແລະ ຫຼັງຈາກນັ້ນ, ນາຍບ້ານ ກໍ່ໄດ້ໄປແຈ້ງຕໍ່ໃຫ້ອົງການ ເຂົ້າມາທຳລາຍ.

## ວຽກຈຸດສຸມໃນປີ 2014:

### ແຜນງານໂຄສະນາສຶກສາຄວາມສ່ຽງຈາກ ລບຕ:

- ການຝຶກອົບຮົມຍົກລະດັບຄືນໃຫ້ແກ່ອຳນວຍການໂຮງຮຽນ ແລະ ຄູສອນ ຢູ່ໃນ 15 ເມືອງ ຢູ່ໃນ 9 ແຂວງ.
- ສະໜັບສະໜູນ ແລະ ໃຫ້ຄຳປຶກສາ ໃຫ້ແກ່ວິທະຍາໄລຝຶກອົບຮົມຄູ
- ຝຶກອົບຮົມຄະນະສະແດງລະຄອນຕຸກກະຕາໃໝ່ ເພື່ອສະໜອງການສຶກສາໃຫ້ແກ່ຊຸມຊົນ.

### ເຊື່ອມສານການຊ່ວຍເຫຼືອຜູ້ຖືກເຄາະຮ້າຍຈາກ ລບຕ:

- ສ້າງຄວາມເຂັ້ມແຂງໃນການຄຸ້ມຄອງບໍລິການຂອງທີມງານສະໜັບສະໜູນເພື່ອຊ່ວຍເຫຼືອຜູ້ຖືກເຄາະຈາກ ລບຕ, ຈັດຕັ້ງປະຕິບັດແຜນການດູແລປິ່ນປົວຄົນເຈັບຢ່າງເປັນປະຈຳ ແລະ ຈັດກອງປະຊຸມປະສານງານຮ່ວມກັບຄູ່ຮ່ວມງານຢູ່ແຂວງ.
- ຕິດຕາມ ແລະ ປັບປຸງແຜນການສະໜັບສະໜູນທາງດ້ານຈິດຕະສັງຄົມ ໃຫ້ແກ່ຜູ້ລອດຊີວິດຈາກ ລບຕ 200 ຄົນ ຢູ່ແຂວງຊຽງຂວາງ ແລະ ຈະເຮັດວຽກກັບສະມາຄົມປັບປຸງຄຸນນະພາບຊີວິດເພື່ອຈັດການຝຶກອົບຮົມກ່ຽວກັບການປັບປຸງຊີວິດການເປັນຢູ່.
- ປັບປຸງລະບົບການຊ່ວຍເຫຼືອໃຫ້ແກ່ຜູ້ລອດຊີວິດຈາກ ລບຕ ທີ່ບໍ່ໄດ້ນອນຢູ່ 7 ແຂວງເປົ້າໝາຍທີ່ມີກອງທຶນປິ່ນປົວຜູ້ຖືກເຄາະຮ້າຍຈາກ ລບຕ ຊ່ວຍເຫຼືອຢູ່.

### ຫຼັກສູດແຫ່ງຊາດກ່ຽວກັບການເຮັດປະຖົມພະຍາບານຂັ້ນຕົ້ນ:

- ຈັດກອງປະຊຸມປະຈຳເດືອນກັບກຸ່ມຂະແໜງການທີ່ເຮັດວຽກກ່ຽວກັບການເຮັດປະຖົມພະຍາບານຂັ້ນຕົ້ນ.
- ທົດລອງນຳໃຊ້ຫຼັກສູດການເຮັດປະຖົມພະຍາບານຂັ້ນຕົ້ນ.
- ທົບທວນຄືນ, ແກ້ໄຂ ແລະ ພິມອຸປະກອນຕ່າງໆ.

### ການຝຶກອົບຮົມໃຫ້ຄູຝຶກ ແລະ ການຝຶກອົບຮົມກ່ຽວກັບເຕັກນິກການນຳໃຊ້ຫຼັກສູດ:

- ຈັດການຝຶກອົບຮົມໃຫ້ຄູຝຶກ ຢູ່ແຂວງຫົວພັນ ແລະ ເຊກອງ.
- ນຳສະເໜີອຸປະກອນຮັບໃຊ້ການຝຶກອົບຮົມວິຊາການ,ສະໜັບສະໜູນການຝຶກອົບຮົມໃຫ້ແກ່ພະນັກງານວິຊາການ ແລະ ປະເມີນຜົນ.

## ຄູ່ຮ່ວມງານ:

ແຜນງານໂຄສະນາສຶກສາຄວາມສ່ຽງຈາກ ລບຕ ແມ່ນດຳເນີນຮ່ວມກັບກະຊວງສຶກສາທິການ ແລະ ກິລາ, ກົມປະຖົມ ແລະ ອະນຸບານ ຢູ່ສູນກາງ, ຂັ້ນແຂວງ ແລະ ຂັ້ນເມືອງ.

ສ່ວນອົງປະກອບຫຼັກຂອງການເຊື່ອມສານແຜນງານເພື່ອຊ່ວຍເຫຼືອຜູ້ຖືກເຄາະຮ້າຍຈາກ ລບຕ ແມ່ນຈະເຮັດວຽກຢ່າງໃກ້ຊິດກັບສູນການແພດ ແລະ ຟື້ນຟູໜ້າທີ່ການ. ການເຊື່ອມສານແຜນງານເພື່ອຊ່ວຍເຫຼືອຜູ້ຖືກເຄາະຮ້າຍຈາກ ລບຕ ເຮັດວຽກຮ່ວມກັບພະແນກປິ່ນປົວສຸຂະພາບຂັ້ນແຂວງ, ໂຮງໝໍເມືອງ ແລະ ແຂວງ, ອົງການເອັນຈີໂອ ແລະ ອົງການທີ່ບໍ່ຫວັງຜົນກຳໄລທີ່ເຮັດວຽກຊ່ວຍເຫຼືອຜູ້ຖືກເຄາະຮ້າຍຈາກ ລບຕ. ຄະນະກຳມະການພັດທະນາຫຼັກສູດແຫ່ງຊາດ ກ່ຽວກັບການປະຖົມພະຍາບານຂັ້ນຕົ້ນ ໄດ້ຈັດກອງປະຊຸມປະຈຳເດືອນຂຶ້ນຮ່ວມກັບຜູ້ຕາງໜ້າຈາກກະຊວງສາທາລະນະສຸກ ແລະ ອົງການເອັນຈີໂອຕ່າງໆ ເພື່ອສະໜອງການຝຶກອົບຮົມໃຫ້ແກ່ອາສາສະໝັກສຸກສາລາຂັ້ນບ້ານຜູ້ເກົ່າຜ່ານມາ. ການຝຶກອົບຮົມໃຫ້ແກ່ຄູຝຶກ ແລະ ກອງປະຊຸມວິຊາການແມ່ນດຳເນີນຮ່ວມກັບກົມປິ່ນປົວສຸຂະພາບຂອງແຂວງຫົວພັນ ແລະ ເຊກອງ.



## ບຸກຄະລາກອນໃນປີ 2013:

| ພະນັກງານຫ້ອງການ | | | | ພະນັກງານຝ່າຍປະຕິບັດງານ (ພາກສະໜາມ) | | | |
|---|---|---|---|---|---|---|---|
| ຄົນລາວ | | ຄົນຕ່າງປະເທດ | | ຄົນລາວ | | ຄົນຕ່າງປະເທດ | |
| ຊາຍ | ຍິງ | ຊາຍ | ຍິງ | ຊາຍ | ຍິງ | ຊາຍ | ຍິງ |
| 3 | 5 | 0 | 1 | 3 | 3 | 0 | 1 |

## ຕົວເລກສະຖິຕິໃນປີ 2013:

| ການໂຄສະນາສຶກສາຄວາມສ່ຽງຈາກ ລບຕ ຢູ່ໃນໂຮງຮຽນປະຖົມ | | | | | | ການສະແດງລະຄອນຕຸກກະຕາ | | |
|---|---|---|---|---|---|---|---|---|
| | ຜູ້ໄດ້ຮັບຜົນປະໂຫຍດ | | | | | | | |
| ແຂວງ | | ໃຫ່ຍຊາຍ | ໃຫ່ຍຍິງ | ນ້ອຍຊາຍ | ນ້ອຍຍິງ | | ຊາຍ | ຍິງ |
| | ຈຳນວນໂຮງຮຽນ | ຫຼັກສູດການສິດສອນ | | ນັກຮຽນທີ່ເຂົ້າຮ່ວມຫຼັກສູດ | | ການສະແດງລະຄອນຕຸກກະຕາ | ຈຳນວນຜູ້ເຂົ້າຮ່ວມສະແດງ | |
| ຫົວພັນ | 201 | 476 | 418 | 7,981 | 7,780 | 30 | 1.007 | 1,053 |
| ຊຽງຂວາງ | 453 | 1,307 | 1,164 | 21,347 | 19,483 | 63 | 2.757 | 2,786 |
| ຄຳມ່ວນ | 124 | 223 | 172 | 6,564 | 6,292 | 14 | 770 | 745 |
| ສະຫວັນນະເຂດ | 467 | 334 | 429 | 20,493 | 16,355 | 29 | 1.172 | 1,268 |
| ສາລະວັນ | 392 | 641 | 577 | 21,276 | 18,581 | 14 | 873 | 870 |
| ຈຳປາສັກ | 135 | 284 | 268 | 8,466 | 7,835 | 12 | 581 | 665 |
| ເຊກອງ | 146 | 749 | 409 | 10,237 | 9,762 | 13 | 905 | 896 |
| ຫຼວງພະບາງ | 256 | 526 | 408 | 11,955 | 11,469 | 41 | 963 | 1,773 |
| ອັດຕະປື | 192 | 268 | 377 | 11,544 | 10,762 | 17 | 892 | 1,090 |
| *ລວມ* | ***2,366*** | ***4,808*** | ***4,222*** | ***119,863*** | ***108,319*** | ***233*** | ***9,920*** | ***11,146*** |

## ການຊ່ວຍເຫຼືອຜູ້ຖືກເຄາະຮ້າຍ

| ການຝຶກອົບຮົມກ່ຽວກັບການແພດ ໃຫ້ແກ່ພະຍາບານ ແລະ ອາສາສະໝັກສຸກສາລາຂັ້ນບ້ານ | | | | |
|---|---|---|---|---|
| ຜູ້ໄດ້ຮັບຜົນປະໂຫຍດ | | | | |
| ແຂວງ | ເມືອງ | ປະເພດການຝຶກອົບຮົມ | ລວມ | ແມ່ຍິງ |
| ຊຽງຂວາງ | ທ່າໂທມ ແລະ ໝອກ | ການຝຶກອົບຮົມໃຫ້ແກ່ອາສາສະໝັກສຸກສາລາຂັ້ນບ້ານ | 36 | 18 |
| | ໂຮງໝໍເມືອງທ່າໂທມ, ໝອກ, ຄຳ, ຄູນ ແລະ ໜອງແຮດ | ການປິ່ນປົວສຸກເສີນຢູ່ໃນໂຮງໝໍເມືອງ | 76 | 40 |
| | ໂຮງໝໍແຂວງ | ການຝຶກອົບຮົມໃຫ້ແກ່ຄູຝຶກ | 28 | 19 |
| | ໂຮງໝໍແຂວງ | ທົບທວນຄືນ ແລະ ແກ້ໄຂການຝຶກອົບຮົມໃຫ້ແກ່ຄູຝຶກ ແລະ ການຝຶກອົບຮົມກ່ຽວກັບເຕັກນິກການນຳໃຊ້ອຸປະກອນ | 47 | 27 |
| ຫົວພັນ ແລະ ເຊກອງ | ໄດ້ແຕ່ຢູ່ໃນລະດັບແຂວງເທົ່ານັ້ນ | ການປະເມີນຜົນຄວາມຕ້ອງການທາງດ້ານວິຊາການສຳລັບພະນັກງານແຂວງ ແລະ ເມືອງ ຢູ່ໃນ 2 ແຂວງ | 40 | 20 |
| *ລວມ* | | | ***227*** | ***104*** |

### ການຊ່ວຍເຫຼືອຜູ້ຖືກເຄາະຮ້າຍຈາກ ລບຕ:

| ການຊ່ວຍເຫຼືອຜູ້ຖືກເຄາະຮ້າຍຈາກ ລບຕ<br>ຈຳນວນຜູ້ທີ່ໄດ້ຮັບການຊ່ວຍເຫຼືອ | | |
|---|---|---|
| ແຂວງ | ທາງດ້ານການແພດ | ທາງດ້ານການຝຶກອົບຮົມ |
| ຊຽງຂວາງ | ກອງທຶນປິ່ນປົວຜູ້ຖືກເຄາະຮ້າຍໃນສົງຄາມ: ຈຳນວນຜູ້ທີ່ໄດ້ຮັບບາດເຈັບໃໝ່: 10 | ການຝຶກອົບຮົມກ່ຽວກັບການປັບປຸງຊີວິດການເປັນຢູ່ ໃຫ້ແກ່ຊາວບ້ານ 24 ຄົນ |
| | ກອງທຶນປິ່ນປົວຜູ້ຖືກເຄາະຮ້າຍໃນສົງຄາມ: ຈຳນວນຄົນເຈັບເກົ່າທີ່ເຂົ້າມາສືບຕໍ່ປິ່ນປົວ: 9 | ມອບເງິນຊ່ວຍເຫຼືອລ້າໃຫ້ຊາວບ້ານ 24 ຄົນເພື່ອນຳໄປເຮັດການລ້ຽງສັດ |
| ວຽງຈັນ | ກອງທຶນປິ່ນປົວຜູ້ຖືກເຄາະຮ້າຍໃນສົງຄາມ: ຈຳນວນຜູ້ທີ່ໄດ້ຮັບບາດເຈັບໃໝ່: 4 | |
| ຫຼວງພະບາງ | ກອງທຶນປິ່ນປົວຜູ້ຖືກເຄາະຮ້າຍໃນສົງຄາມ: ຈຳນວນຜູ້ທີ່ໄດ້ຮັບບາດເຈັບໃໝ່: 5 | |

## ພື້ນທີ່ການປະຕິບັດງານ:

| ໜ້າວຽກ | ແຂວງ ແລະ ເມືອງ ທີ່ປະຕິບັດກິດຈະກຳ |
|---|---|
| ການໂຄສະນາສຶກສາຄວາມສ່ຽງຈາກ ລບຕ | ການຝຶກອົບຮົມຍົກລະດັບຄືນຢູ່ແຂວງຊຽງຂວາງ (ເມືອງພອກ ແລະ ທ່າໂທມ), ແຂວງຫຼວງພະບາງ (ເມືອງປາກອູ ແລະ ພູຄູນ). |
| ການຊ່ວຍເຫຼືອຜູ້ຖືກເຄາະຮ້າຍຈາກ ລບຕ | ທີມງານສະໜັບສະໜູນເພື່ອຊ່ວຍເຫຼືອຜູ້ຖືກເຄາະຈາກ ລບຕ: ຢູ່ແຂວງຊຽງຂວາງ. ກອງທຶນຊ່ວຍເຫຼືອຜູ້ຖືກເຄາະຮ້າຍຈາກສົງຄາມ: ຢູ່ແຂວງຫົວພັນ, ຊຽງຂວາງ, ຄຳມ່ວນ, ສະຫວັນນະເຂດ, ສາລະວັນ, ຈຳປາສັກ ແລະ ເຊກອງ. ໂຄງການທົດລອງຝຶກອົບຮົມໃຫ້ແກ່ຄູຝຶກ ແລະ ການຝຶກອົບຮົມກ່ຽວກັບເຕັກນິກໃນການນຳໃຊ້ຄູ່ມື: ຢູ່ແຂວງຫົວພັນ ແລະ ເຊກອງ. |

## ທາງດ້ານການເງິນ:

### ການໃຊ້ຈ່າຍໃນປີ 2013: (ໂດລາສະຫະລັດ)

| ລາຍການ | ຈຳນວນ |
|---|---:|
| ຄ່າໃຊ້ຈ່າຍສຳລັບບຸກຄະລາກອນ | 0 |
| ຄ່າໃຊ້ຈ່າຍສຳລັບວຽກປະຕິບັດງານ | 0 |
| ຄ່າໃຊ້ຈ່າຍສຳລັບວຽກປະຕິບັດງານພິເສດ | 157,917 |
| ຄ່າໃຊ້ຈ່າຍສຳລັບວັດຖຸ-ຊັບສິນຄົງທີ່ | 0 |
| ຄ່າໃຊ້ຈ່າຍສຳລັບວັດຖຸ-ຊັບສິນບໍ່ຄົງທີ່ | 0 |
| *ລວມ* | ***157,917*** |

### ການສະໜັບສະໜູນຂອງຜູ້ໃຫ້ທຶນໃນປີ 2013 (ໂດລາສະຫະລັດ)

| ຜູ້ໃຫ້ທຶນ | ທຶນທີ່ໄດ້ຮັບໃນປີ 2013 |
|---|---:|
| ກະຊວງການຕ່າງປະເທດອາເມລິກາ-ຫ້ອງການຫຼຸດຜ່ອນອາວຸດ ແລະ ການສູ້ຮົບ "ໂຄງການປັບປຸງການປິ່ນປົວບາດແຜ ແລະ ການສຶກສາຄວາມສ່ຽງຈາກ ລບຕ ຢູ່ ສປປ ລາວ" | 136,000 |
| ກອງທຶນສະແຕບໂຮດ ເນຍໂຄດ (ໄດ້ລາຍງານຢູ່ໃນປີ 2012 ແຕ່ນຳໃຊ້ແທ້ໃນປີ 2013) | 21,917 |
| *ລວມ* | ***157,917*** |

ການໂອນເງິນ:

ການໂອນເງິນໃຫ້ແກ່ອົງການປະຕິບັດງານອື່ນໆ (ໂດລາສະຫະລັດ)

| ມີອົງການໃດແດ່ ທີ່ທ່ານໂອນເງິນໃຫ້? | ຈຳນວນ |
|---|---:|
| ສະມາຄົມປັບປຸງຄຸນນະພາບຊີວິດ | 8,000 |
| ລວມ | ***8,000*** |

# ອົງການນ້ຳໃຈນັກກິລາ

## (ດຳເນີນກິດຈະກຳໂຄສະນາສຶກສາຄວາມສ່ຽງຈາກ ລບຕ)

ອົງການນ້ຳໃຈນັກກິລາ ແມ່ນອົງການສາກົນທີ່ບໍ່ຫວັງຜົນກຳໄລ ຂຶ້ນທະບຽນຢູ່ໃນ ສປປ ລາວ ໃນປີ 2011. ໜ້າວຽກຕົ້ນຕໍຂອງອົງການແມ່ນ "ສົ່ງເສີມສິ່ງທີ່ດີ ແລະ ຮັກສາຊີວິດ ໂດຍຜ່ານການຫຼິ້ນເກມ". ຈຸດປະສົງຕົ້ນຕໍຂອງໂຄງການແມ່ນຫຼຸດຜ່ອນຈຳນວນຜູ້ເສຍຊີວິດ ແລະ ບາດເຈັບຂອງເດັກນ້ອຍຈາກອຸປະຕິເຫດ ລບຕ. ເພື່ອເຮັດໄດ້ແນວນັ້ນ, ອົງການໄດ້ມີການດຳເນີນກິດຈະກຳໂຄສະນາສຶກສາຄວາມສ່ຽງຈາກ ລບຕ ໂດຍຜ່ານການຫຼິ້ນກິລາບານເຕະຮ່ວມກັບເດັກນ້ອຍທີ່ດຳລົງຊີວິດຢູ່ໃນເຂດທີ່ມີ ລບຕ ຕົກຄ້າງ ຢູ່ແຂວງຊຽງຂວາງ.

## ກິດຈະກຳໃນປີ 2013:

ຄູຝຶກບານເຕະຂອງອົງການນ້ຳໃຈນັກກິລາ ໄດ້ລົງຢ້ຽມຢາມໂຮງຮຽນປະຖົມ ແລະ ມັດທະຍົມ ຢູ່ແຂວງຊຽງຂວາງ ແລະ ໄດ້ດຳເນີນກິດຈະກຳແຂ່ງຂັນບານເຕະໃຫ້ແກ່ເດັກນ້ອຍຢູ່ໃນໂຮງຮຽນ ໂດຍເນັ້ນໜັກໃສ່ທັກສະພື້ນຖານໃນການເຕະບານ ແລະ ມີການຫຼິ້ນເກມຕ່າງໆ. ໃນຊ່ວງການເຮັດກິດຈະກຳນັ້ນ, ຄູຝຶກ ໄດ້ນຳໃຊ້ຫຼັກສູດການສິດສອນພິເສດທີ່ມີລັກສະນະຈິດຕະສາດກ່ຽວກັບວິທີການຫຼິ້ນກິລາບານເຕະເພື່ອສອນເດັກນ້ອຍ ເປັນຕົ້ນແມ່ນ ຄູຝຶກ ຈະຖາມເດັກນ້ອຍວ່າ ລະເບີດລູກຫວ່ານມີຮູບຮ່າງໜ້າຕາແນວໃດແດ່, ຖ້າເຫັນມັນຕົກຄ້າງຢູ່ໃນຊຸມຊົນຂອງພວກຫຼານ ພວກຫຼານຄວນຈະເຮັດແນວໃດ ເພື່ອຫຼີກລ້ຽງການເກີດອຸປະຕິເຫດ. ອຸປະກອນຕົ້ນຕໍທີ່ນຳໃຊ້ປະກອບມີ ໂພດສະເຕີກ່ຽວກັບ ລບຕ, ໝາກບານ, ເພັ້ງຮ້ອງທີ່ມີເນື້ອໃນຕໍ່ຕ້ານ ລບຕ ແລະ ປຶ້ມຂຽນ, ຊຶ່ງທັງໝົດນີ້ແມ່ນໃຊ້ແຈກຢາຍໃຫ້ແກ່ຜູ້ທີ່ເຂົ້າມາຮ່ວມກິດຈະກຳ. ພ້ອມນັ້ນ, ກໍ່ມີຮູບພາບນັກກິລາເຕະບານຊື່ດັງ ຈັບແຜ່ນປ້າຍຕໍ່ຕ້ານ ລບຕ ພ້ອມດ້ວຍຄຳຂວັນ ເຊັ່ນ "ບໍ່ຫຼິ້ນລະເບີດ, ຫຼິ້ນເຕະບານ". ນອກຈາກນັ້ນ, ອົງການນ້ຳໃຈນັກກິລາ ຍັງໄດ້ສະໜອງການຝຶກອົບຮົມກ່ຽວກັບການເປັນຄູຝຶກສິນສອນບານເຕະ ແລະ ການໂຄສະນາສຶກສາຄວາມສ່ຽງຈາກ ລບຕ ໃຫ້ແກ່ຄູສອນຢູ່ໃນໂຮງຮຽນ ແລະ ສະໜອງອຸປະກອນກ່ຽວກັບກິລາບານເຕະ ແລະ ອຸປະກອນໂຄສະນາໃຫ້ແກ່ໂຮງຮຽນອີກດ້ວຍ ເພື່ອສືບຕໍ່ນຳໄປສິດສອນເດັກນ້ອຍຢູ່ໃນໂຮງຮຽນ.

## ຜົນສຳເລັດຕົ້ນຕໍໃນປີ 2013:

- ຄູ 16 ຄົນ ຈາກ 8 ເມືອງ ໄດ້ເຂົ້າຮ່ວມກອງປະຊຸມສຳມະນາກ່ຽວກັບການເປັນຄູຝຶກບານເຕະ/ວຽກງານໂຄສະນາສຶກສາຄວາມສ່ຽງຈາກ ລບຕ.
- ຄູ 164 ຄົນ ຈາກໂຮງຮຽນປະຖົມ ແລະ ຄູ 236 ຄົນ ຈາກໂຮງຮຽນມັດທະຍົມ ໄດ້ເຂົ້າຮ່ວມຝຶກແອບຮ່ວມກັບຊ່ຽວຊານຄູຝຶກ ຂອງອົງການນ້ຳໃຈນັກກິລາ ແລະ ໄດ້ມີໂອກາດຮຽນຮູ້ກ່ຽວກັບທັກສະໃນການເຕະບານ ພ້ອມທັງລອງເຮັດຕົວຈິງ.
- ໄດ້ສະໜັບສະໜູນທີມເຕະບານ 2 ທີມ ທີ່ເປັນຕົ້ນແບບຂອງທີມເຕະບານໃຫ້ແຕ່ລະໂຮງຮຽນ - 1 ທີມເຕະບານເດັກຊາຍ ແລະ 1 ທີມເຕະບານເດັກຍິງ. (2 ທີມຕົ້ນແບບນີ້ແມ່ນຈະສ້າງຢູ່ໃນແຕ່ລະເມືອງ, 16 ທີມຕົ້ນແບບໃນ 8 ເມືອງ ລວມທັງໝົດ 32 ທີມ).
- ສະໜັບສະໜູນແຜນງານທົດລອງເຮັດທີມເຕັ້ນເຊຍຢູ່ໃນ 4 ໂຮງຮຽນຕົວຢ່າງ (ໂຮງຮຽນປະຖົມ 2 ແຫ່ງ ແລະ ມັດທະຍົມ 2 ແຫ່ງ)
- ໂຮງຮຽນປະຖົມ 82 ແຫ່ງ ແລະ ມັດທະຍົມ 118 ແຫ່ງ ໄດ້ເຂົ້າຮ່ວມກິດຈະກຳຕ່າງໆຂອງໂຄງການ.
- ນັກຮຽນ 1,200 ຄົນ ຈາກໂຮງຮຽນມັດທະຍົມ ແລະ ປະຖົມໄດ້ເຂົ້າຮ່ວມກິດຈະກຳຕ່າງໆຂອງໂຄງການ.




## ຂ່າວດີ:

- ອົງການນ້ຳໃຈນັກກິລາ ຈະເຂົ້າຮ່ວມງານແຂ່ງຂັນກິລາບານເຕະໂລກ ໃນປີ 2014 ຢູ່ທີ່ປະເທດບຼາຊິວ.
- ພວກເຮົາຈະເອົາເດັກນ້ອຍຊາຍ 3 ຄົນ ແລະ ເດັກຍິງ 3 ຄົນ ຈາກໂຄງການຂອງພວກເຮົາ ເຂົ້າຮ່ວມຊົມງານແຂ່ງຂັນກິລາບານເຕະໂລກ ທີ່ຈະຈັດຂຶ້ນທີ່ປະເທດບຼາຊິວ ໃນປີ 2014 ແນໃສ່ເຮັດໃຫ້ເດັກນ້ອຍລາວ ມີໂອກາດໃນການການແລກປ່ຽນວັດທະນະທຳ ແລະ ປະສົບການຊີວິດກັບບັນດາຊາວໜຸ່ມຄົນອື່ນໆ ທີ່ຈະເດີນທາງມາຈາກທຸກມູມໂລກ, ເດັກນ້ອຍເຫຼົ່ານີ້ ຈະມີການເລົ່າເລື່ອງຊີວິດຂອງຕົນເອງທີ່ອາໄສຢູ່ກັບ ລບຕ ຕົກຄ້າງ ວ່າເປັນແນວໃດແດ່ ໃຫ້ແກ່ຄົນອື່ນໆໄດ້ຮັບຟັງ. ສິ່ງດັ່ງກ່າວນີ້ ແມ່ນເປັນໂອກາດທີ່ດີຫຼາຍສຳລັບເຂົາເຈົ້າ ທີ່ຈະໄດ້ນຳສະເໜີປະເທດຂອງຕົນເອງ ກໍ່ຄື ສປປ ລາວ ອອກສູ່ສາຍຕາຂອງສາກົນ.
- ອາດຈະໄດ້ຮັບທຶນສະໜັບສະໜູນເພີ່ມຕື່ມ ເພື່ອຂະຫຍາຍໂຄງການ ອອກໄປທີ່ແຂວງສະຫວັນນະເຂດ ຫຼື ສາລະວັນ.
- ອົງການນ້ຳໃຈນັກກິລາ ໄດ້ຮັບໃບຍ້ອງຍໍຊົມເຊີຍໃນການປະຕິບັດໂຄງການທີ່ດີ ຈາກອຳນາດການປົກຄອງທ້ອງຖິ່ນ ແລະ ຄູ່ຮ່ວມງານ.

## ວຽກຈຸດສຸມໃນປີ 2014:

ພວກເຮົາ ວາງແຜນຈະຂະຫຍາຍແຜນງານອອກໄປຍັງໂຮງຮຽນປະຖົມ ແລະ ໂຮງຮຽນມັດທະຍົມ 250 ແຫ່ງ ໃນທົ່ວແຂວງຊຽງຂວາງ ແລະ ຖ້າເປັນໄປໄດ້ ແມ່ນຢາກຈະຂະຫຍາຍໂຄງການໄປແຂວງສະຫວັນນະເຂດ ຫຼື ແຂວງສາລະວັນ ຕື່ມ.

## ຄູ່ຮ່ວມງານ:

- ກະຊວງສຶກສາທິການ ແລະ ກິລາ ( ກົມພາລະ ແລະ ສິລະປະສຶກສາ)
- ຫ້ອງການ ຄຊກລ
- ກະຊວງການຕ່າງປະເທດ
- ພະແນກສຶກສາ ແລະ ກິລາ ແຂວງ
- ສະມາຄົມກິລາບານເຕະລາວ





## ບຸກຄະລາກອນໃນປີ 2013:

| ພະນັກງານຫ້ອງການ | | | | ພະນັກງານຝ່າຍປະຕິບັດງານ (ພາກສະໜາມ) | | | |
|---|---|---|---|---|---|---|---|
| ຄົນລາວ | | ຄົນຕ່າງປະເທດ | | ຄົນລາວ | | ຄົນຕ່າງປະເທດ | |
| ຊາຍ | ຍິງ | ຊາຍ | ຍິງ | ຊາຍ | ຍິງ | ຊາຍ | ຍິງ |
| 1 | 0 | 0 | 0 | 3 | 0 | 0 | 0 |

## ຕົວເລກສະຖິຕິໃນປີ 2013:

| ການໂຄສະນາສຶກສາຄວາມສ່ຽງຈາກ ລບຕ<br>ການໂຄສະນາຊຸມຊົນ | | | | |
|---|---|---|---|---|
| | ຜູ້ໄດ້ຮັບຜົນປະໂຫຍດ | | | |
| ເວລາຢ້ຽມຢາມ | ໃຫຍ່ຊາຍ | ໃຫຍ່ຍິງ | ເດັກຊາຍ | ເດັກຍິງ |
| 13 ມັງກອນ | | | 416 | 296 |
| 13 ກຸມພາ | | | 453 | 196 |
| 13 ມີນາ | | | 394 | 224 |
| 13 ເມສາ | | | 456 | 122 |
| 13 ພຶດສະພາ | | | 449 | 364 |
| 13 ມິຖຸນາ | | | 296 | 154 |
| 13 ກໍລະກົດ | | | 189 | 78 |
| 13 ກັນຍາ | | | 450 | 213 |
| 13 ຕຸລາ | | | 592 | 394 |
| 13 ພະຈິກ | | | 782 | 449 |
| 13 ທັນວາ | | | 567 | 200 |
| *ລວມ* | | | ***5,044*** | ***2,690*** |

## ພື້ນທີ່ການປະຕິບັດງານ:

| ໜ້າວຽກ | ແຂວງ ແລະ ເມືອງ ທີ່ປະຕິບັດກິດຈະກຳ |
|---|---|
| ການໂຄສະນາສຶກສາຄວາມສ່ຽງຈາກ ລບຕ | ເມືອງແປກ, ຄູນ, ຄຳ, ຜາໄຊ, ພູກູດ, ທ່າໂທມ, ໝອກ ແລະ ໜອງແຮດ-ແຂວງຊຽງຂວາງ |

## ທາງດ້ານການເງິນ:

### ຄ່າໃຊ້ຈ່າຍໃນປີ 2013: (ໂດລາສະຫະລັດ)

| ລາຍການ | ຈຳນວນ |
|---|---:|
| ຄ່າໃຊ້ຈ່າຍສຳລັບບຸກຄະລາກອນ | 24,838.00 |
| ຄ່າໃຊ້ຈ່າຍສຳລັບວຽກປະຕິບັດງານ | 37,520.53 |
| ຄ່າໃຊ້ຈ່າຍສຳລັບວຽກປະຕິບັດງານພິເສດ | 0 |
| ຄ່າໃຊ້ຈ່າຍສຳລັບວັດຖຸ-ຊັບສິນຄົງທີ່ | 0 |
| ຄ່າໃຊ້ຈ່າຍສຳລັບວັດຖຸ-ຊັບສິນບໍ່ຄົງທີ່ | 17,592.72 |
| *ລວມ* | ***79,951.25*** |

## ການສະໜັບສະໜູນຂອງຜູ້ໃຫ້ທຶນໃນປີ 2013: (ໂດລາສະຫະລັດ)

| ຜູ້ໃຫ້ທຶນ | ທຶນທີ່ໄດ້ຮັບໃນປີ 2013 |
|---|---:|
| ກະຊວງການຕ່າງປະເທດອາເມລິກາ-ຫ້ອງການຫຼຸດຜ່ອນອາວຸດ ແລະ ການສູ້ຮົບ | 69,951.25 |
| ຟີຟາ | 5,000 |
| ກອງທຶນສຳລັບການຫຼິ້ນກິລາທີ່ດີຂອງລໍຣຸດ | 5,000 |
| *ລວມ* | ***79,951.25*** |

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**
**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

**ນາຍົກລັດຖະມົນຕີ** ເລກທີ: 406/ນຍ
ນະຄອນຫຼວງວຽງຈັນ, ວັນທີ 8/11/2011

# ດຳລັດ

## ວ່າດ້ວຍການແຕ່ງຕັ້ງຄະນະກຳມະການຄຸ້ມຄອງແຫ່ງຊາດ ເພື່ອແກ້ໄຂບັນຫາລະເບີດບໍ່ທັນແຕກ ທີ່ຕົກຄ້າງຢູ່ ສປປ ລາວ

- ອີງຕາມກົດໝາຍວ່າດ້ວຍລັດຖະບານແຫ່ງ ສປປ ລາວ ສະບັບເລກທີ 02/ສພຊ, ລົງວັນທີ 06 ພຶດສະພາ 2003.
- ອີງຕາມຂໍ້ຕົກລົງວ່າດ້ວຍການແບ່ງໜ້າທີ່ຮັບຜິດຊອບຊີ້ນຳວຽກງານລະຫວ່າງນາຍົກ ແລະ ບັນດາຮອງນາຍົກລັດຖະມົນຕີ ສະບັບເລກທີ 71/ນຍ, ລົງວັນທີ 15 ສິງຫາ 2011.
- ອີງຕາມການສະເໜີຂອງຫົວໜ້າ ຄພທສ, ປະທານຄະນະກຳມະການຄຸ້ມຄອງແຫ່ງຊາດ ເພື່ອແກ້ໄຂບັນຫາລະເບີດບໍ່ທັນແຕກ ທີ່ຕົກຄ້າງຢູ່ ສປປ ລາວ, ສະບັບເລກທີ 730/ຄພທສ, ລົງວັນທີ 2 ກັນຍາ 2011.

### ນາຍົກລັດຖະມົນຕີ ອອກດຳລັດ:

**ມາດຕາ 1**: ແຕ່ງຕັ້ງ ທ່ານ ອາຊາງ ລາວລີ ຮອງນາຍົກລັດຖະມົນຕີ, ຜູ້ຊີ້ນຳວຽກງານວັດທະນະທຳ-ສັງຄົມ ເປັນຜູ້ຊີ້ນຳຄະນະກຳມະການຄຸ້ມຄອງແຫ່ງຊາດ ເພື່ອແກ້ໄຂບັນຫາລະເບີດບໍ່ທັນແຕກ ທີ່ຕົກຄ້າງຢູ່ ສປປ ລາວ.

**ມາດຕາ 2**: ຄະນະກຳມະການຄຸ້ມຄອງແຫ່ງຊາດ ເພື່ອແກ້ໄຂບັນຫາລະເບີດບໍ່ທັນແຕກ ທີ່ຕົກຄ້າງຢູ່ ສປປ ລາວ (ຄຊກລ) ໂດຍປະກອບດ້ວຍບັນດາທ່ານ ທີ່ມີລາຍຊື່ດັ່ງລຸ່ມນີ້:

| | | |
|---|---|---|
| 1. | ທ່ານລັດຖະມົນຕີປະຈຳ ຫລບ, ຫົວໜ້າ ຄພທສ | ເປັນປະທານ |
| 2. | ທ່ານລັດຖະມົນຕີຊ່ວຍວ່າການ ກະຊວງການຕ່າງປະເທດ | ເປັນຮອງປະທານ |
| 3. | ທ່ານລັດຖະມົນຕີຊ່ວຍວ່າການ ກະຊວງແຮງງານ ແລະ ສະຫວັດດີການສັງຄົມ | ເປັນຮອງປະທານ |
| 4. | ທ່ານຫົວໜ້າກົມຊ່າງແສງ ກະຊວງປ້ອງກັນປະເທດ | ເປັນກຳມະການ |
| 5. | ທ່ານຫົວໜ້າກົມຈັດຕັ້ງສາກົນ ກະຊວງການຕ່າງປະເທດ | ເປັນກຳມະການ |
| 6. | ທ່ານຫົວໜ້າກົມສື່ມວນຊົນ ກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ | ເປັນກຳມະການ |
| 7. | ທ່ານຫົວໜ້າກົມປິ່ນປົວ ກະຊວງສາທາລະນະສຸກ | ເປັນກຳມະການ |
| 8. | ທ່ານຫົວໜ້າກົມຮ່ວມມືສາກົນ ກະຊວງແຜນການ ແລະ ການລົງທຶນ | ເປັນກຳມະການ |
| 9. | ທ່ານຫົວໜ້າກົມງົບປະມານ ກະຊວງການເງິນ | ເປັນກຳມະການ |
| 10. | ທ່ານຫົວໜ້າກົມແຜນການ-ຮ່ວມມື ກະຊວງໂຍທາທິການ ແລະ ຂົນສົ່ງ | ເປັນກຳມະການ |
| 11. | ທ່ານຫົວໜ້າກົມປູກຝັງ ກະຊວງກະສິກຳ ແລະ ປ່າໄມ້ | ເປັນກຳມະການ |
| 12. | ກົມ 106 ກົມໃຫຍ່ ປກສ ກະຊວງປ້ອງກັນຄວາມສະຫງົບ | ເປັນກຳມະການ |
| 13. | ທ່ານຮອງຫົວໜ້າຫ້ອງການ ກະຊວງສຶກສາທິການ ແລະ ກິລາ | ເປັນກຳມະການ |
| 14. | ທ່ານຫົວໜ້າກົມອົບຮົມຂະບວນການ ສູນກາງ ຊປປ ລາວ | ເປັນກຳມະການ |

1. ທ່ານຮອງຫົວໜ້າຫອ້ງການສູນກາງສະຫະພັນແມ່ຍິງລາວ — ເປັນກຳມະການ
2. ທ່ານຫົວໜ້າຫ້ອງການຄະນະກຳມະການຄຸ້ມຄອງແຫ່ງຊາດ ເພື່ອແກ້ໄຂບັນຫາລະເບີດບໍ່ທັນແຕກ ທີ່ຕົກຄ້າງຢູ່ ສປປ ລາວ — ເປັນກຳມະການ ແລະ ເປັນຫົວໜ້າກອງເລຂາ

**ມາດຕາ 3**: ຄະນະກຳມະການຄຸ້ມຄອງແຫ່ງຊາດ ເພື່ອແກ້ໄຂບັນຫາລະເບີດບໍ່ທັນແຕກ ທີ່ຕົກຄ້າງ ມີພາລະບົດບາດດັ່ງລຸ່ມນີ້:

1. ຄົ້ນຄ້ວາສ້າງ, ຊີ້ນໍາປະຕິບັດ ແລະ ທົບທວນແຜນຍຸດທະສາດແກ້ໄຂບັນຫາລະເບີດບໍ່ທັນແຕກ,
2. ກຳນົດ ແລະ ສະໜອງທິດທາງນະໂຍບາຍກ່ຽວກັບການແກ້ໄຂບັນຫາລະເບີດບໍ່ທັນແຕກ,
3. ຢັ້ງຢືນ, ອອກໃບອະນຸຍາດ, ກວດກາ ບັນດາອົງການແກ້ໄຂບັນຫາລະເບີດບໍ່ທັນແຕກ,
4. ສ້າງ ແລະ ຄຸ້ມຄອງຖານຂໍ້ມູນ, ຈັດລຽງບູລິມະສິດ ແລະ ອື່ນໆ ກ່ຽວກັບວຽກງານແກ້ໄຂບັນຫາລະເບີດບໍ່ທັນແຕກ,
5. ປະສານງານໃນການຈັດກິດຈະກຳຕ່າງໆກ່ຽວກັບວຽກງານແກ້ໄຂບັນຫາລະເບີດບໍ່ທັນແຕກ,
6. ຢັ້ງຢືນຄຸນນະພາບຂອງບັນດາກິດຈະກຳເກັບກູ້ລະເບີດບໍ່ທັນແຕກ,
7. ປະເມີນຜົນກະທົບພາຍຫລັງສຳເລັດການກວດກູ້ ແລະ ວຽກອື່ນໆ,
8. ສັງລວມລາຍງານການປະຕິບັດກິດຈະການແກ້ໄຂບັນຫາລະເບີດບໍ່ທັນແຕກໃຫ້ລັດຖະບານ.
9. ປະສານສົມທົບກັບຂະແໜງການກ່ຽວຂ້ອງຕ່າງໆ ແຕ່ສູນກາງ-ທ້ອງຖິ່ນ, ປະເທດຜູ້ໃຫ້ທຶນ ແລະ ອົງການຈັດຕັ້ງສາກົນຢູ່ພາຍໃນ ແລະ ຕ່າງປະເທດ.

**ມາດຕາ 4**: ມອບໃຫ້ ຄະນະກຳມະການຄຸ້ມຄອງແຫ່ງຊາດ ເພື່ອແກ້ໄຂບັນຫາລະເບີດບໍ່ທັນແຕກ ທີ່ຕົກຄ້າງຢູ່ ສປປ ລາວ ຄົ້ນຄ້ວາອອກຂໍ້ກຳນົດ, ກົດລະບຽບການເຄື່ອນໄຫວ ແລະ ການຈັດຕັ້ງທີ່ກ່ຽວຂ້ອງກັບວຽກງານເກັບກູ້ລະເບີດແຕ່ຂັ້ນສູນກາງລົງຮອດທ້ອງຖິ່ນ.

**ມາດຕາ 5**: ບັນດາກະຊວງ, ອົງການທຽບເທົ່າ ແລະ ທ້ອງຖິ່ນກ່ຽວຂ້ອງພ້ອມດ້ວຍບັນດາທ່ານທີ່ໄດ້ຮັບການແຕ່ງຕັ້ງຈົ່ງຮັບຮູ້ ແລະ ປະຕິບັດຕາມດຳລັດສະບັບນີ້ ຢ່າງເຂັ້ມງວດ.

**ມາດຕາ 6**: ດຳລັດສະບັບນີ້ ປ່ຽນແທນດຳລັດສະບັບເລກທີ 164/ນຍ, ລົງວັນທີ 9 ມິຖຸນາ 2011 ວ່າດ້ວຍການແຕ່ງຕັ້ງຄະນະກຳມະການຄຸ້ມຄອງແຫ່ງຊາດ ເພື່ອແກ້ໄຂບັນຫາລະເບີດບໍ່ທັນແຕກ ທີ່ຕົກຄ້າງຢູ່ ສປປ ລາວ ແລະ ມີຜົນສັກສິດນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

**ລັດຖະບານແຫ່ງ ສປປ ລາວ**
**ລາຍເຊັນ ແລະ ກາປະທັບ**

**ທອງສິງ ທຳມະວົງ**

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

**ຫ້ອງວ່າການລັດຖະບານ**
**ຄະນະກຳມະການຄຸ້ມຄອງແຫ່ງຊາດ ເພື່ອແກ້ໄຂ**
**ບັນຫາລະເບີດບໍ່ທັນແຕກ ທີ່ຕົກຄ້າງຢູ່ ສປປ ລາວ**

**ເລກທີ 093/ຄຊກລ**
**ນະຄອນຫຼວງວຽງຈັນ, ວັນທີ 19 ພະຈິກ 2012**

# ແຈ້ງການ

**ເຖິງ**: - ທ່ານ ລັດຖະມົນຕີວ່າການກະຊວງ,
- ທ່ານ ປະທານອົງການທຽບເທົ່າ,
- ທ່ານ ເຈົ້າແຂວງ.

**ເລື່ອງ**: ການກວດກູ້ລະເບີດບໍ່ທັນແຕກ ທີ່ຕົກຄ້າງ ສຳລັບໂຄງການພັດທະນາເສດຖະກິດ-ສັງຄົມຕ່າງໆ ຢູ່ ສປປ ລາວ.

- ອີງຕາມດຳລັດ ສະບັບເລກທີ 406/ນຍ, ລົງວັນທີ 8 ພະຈິກ 2011 ວ່າດ້ວຍການແຕ່ງຕັ້ງຄະນະກຳມະການຄຸ້ມຄອງແຫ່ງຊາດ ເພື່ອແກ້ໄຂບັນຫາລະເບີດບໍ່ທັນແຕກ ທີ່ຕົກຄ້າງຢູ່ ສປປ ລາວ.
- ອີງຕາມມາດຕະຖານແຫ່ງຊາດ ເພື່ອແກ້ໄຂບັນຫາລະເບີດບໍ່ທັນແຕກ ທີ່ຕົກຄ້າງ ຢູ່ ສປປ ລາວ.
- ອີງຕາມແຜນຍຸດທະສາດແຫ່ງຊາດ ເພື່ອແກ້ໄຂບັນຫາລະເບີດບໍ່ທັນແຕກ ທີ່ຕົກຄ້າງຢູ່ ສປປ ລາວ 2011-2020.

ຖ້າສະເລ່ຍໃສ່ຫົວຄົນ, ສປປ ລາວ ຖືກຖິ້ມລະເບີດໜັກໜ່ວງກ່ວາໝູ່ໃນໂລກ ອີງຕາມຂໍ້ມູນການຖິ້ມລະເບີດຂອງກະຊວງປ້ອງກັນປະເທດສະຫະລັດອາເມລິກາ ໄດ້ຮູ້ວ່າ ໃນລະຫວ່າງປີ 1964-73 ຂອງສົງຄາມອິນດູຈີນ ມີເຄື່ອງບິນຂອງສະຫະລັດອາເມລິກາ ຈຳນວນ 580,000 ຖ້ຽວ ໄດ້ບັນທຸກລະເບີດ ປະມານ 3 ລ້ານໂຕນ ມາຖິ້ມໃສ່ຜືນແຜ່ນດິນລາວ, ໃນນັ້ນ ມີລະເບີດບົມບີ (ລູກຫວ່ານ) ປະມານ 270 ລ້ານໜ່ວຍ ແລະ ບົມໃຫຍ່ ປະມານ 4 ລ້ານໜ່ວຍ. ນັກວິຊາການທາງທະຫານຄຳນວນວ່າ ລະເບີດດັ່ງກ່າວບໍ່ທັນແຕກປະມານ 30 ສ່ວນຮ້ອຍ, ສະເພາະລູກຫວ່ານທີ່ບໍ່ທັນແຕກ ມີປະມານ 80 ລ້ານໜ່ວຍ. ອີງຕາມການສຳຫຼວດໃນປີ 1997 ໄດ້ຮູ້ວ່າ ລະເບີດບໍ່ທັນແຕກ (ລບຕ) ຕົກຄ້າງຢູ່ 98 ເມືອງຂອງ 14 ແຂວງ ສະເລ່ຍແລ້ວ ກວມ 87,231 ຕາຕະລາງກິໂລແມັດ ຂອງເນື້ອທີ່ທັງໝົດຂອງປະເທດເຮົາ.

ເຖິງວ່າສົງຄາມໄດ້ສິ້ນສຸດລົງເກືອບ 40 ປີ ແລ້ວກໍ່ຕາມ, ແຕ່ ລບຕ ຍັງເຮັດໃຫ້ປະຊາຊົນລາວບັນດາເຜົ່າຖືກບາດເຈັບ ແລະເສຍຊີວິດປີລະ 300 ຄົນ. ນອກນັ້ນ, ຍັງເປັນອຸປະສັກອັນໃຫຍ່ຫຼວງຕໍ່ການພັດທະນາເສດຖະກິດ-ສັງຄົມຂອງຊາດເຮົາ ຍ້ອນວ່າ ພື້ນທີ່ໂຄງການພັດທະນາພື້ນຖານໂຄງລ່າງ, ໂຄງການພັດທະນາອຸດສະຫະກຳ, ໂຄງການພັດທະນາກະສິກຳ-ປ່າໄມ້, ໂຄງການຈັດສັນພູມລຳເນົາໃຫ້ປະຊາຊົນລາວບັນດາເຜົ່າ ແລະ ໂຄງການອື່ນໆ ຢູ່ບັນດາແຂວງທີ່ໄດ້ຮັບຜົນກະທົບ ແມ່ນເຕັມໄປດ້ວຍ ລບຕ.

ສະນັ້ນ, ເພື່ອຮັບປະກັນໃຫ້ການເກັບກູ້ ລບຕ ຖືກຕ້ອງຕາມມາດຕະຖານແຫ່ງຊາດ, ແນໃສ່ເຮັດໃຫ້ພື້ນທີ່ໂຄງການ ກໍ່ຄືຜືນແຜ່ນດິນລາວ ປອດຈາກ ລບຕ ຢ່າງແທ້ຈິງນັ້ນ ຂ້າພະເຈົ້າປະທານຄະນະກຳມະການຄຸ້ມຄອງແຫ່ງຊາດ ເພື່ອແກ້ໄຂບັນຫາລະເບີດບໍ່ທັນແຕກ ທີ່ຕົກຄ້າງ ຢູ່ ສປປ ລາວ (ຄຊກລ) ຂໍແຈ້ງມາຍັງບັນດາທ່ານ ລັດຖະມົນຕີວ່າການກະຊວງ, ທ່ານ ປະທານອົງການທຽບເທົ່າ ແລະ ທ່ານ ເຈົ້າແຂວງ ຈົ່ງແນະນຳໃຫ້ບັນດາໂຄງການພັດທະນາຕ່າງໆ ທີ່ຢູ່ພາຍໃຕ້ການຄຸ້ມຄອງຂອງທ່ານປະຕິບັດດັ່ງນີ້:

1. ບັນດາໂຄງການພັດທະນາຢູ່ເມືອງ ແລະ ແຂວງ ທີ່ໄດ້ຮັບຜົນກະທົບຈາກ ລບຕ ຕ້ອງໄດ້ສຳຫຼວດ, ກວດກູ້ ລບຕ ກ່ອນຈຶ່ງໃຫ້ຈັດຕັ້ງປະຕິບັດໂຄງການ.

2. ບັນດາໂຄງການພັດທະນາ ທີ່ຈະປະຕິບັດຢູ່ເມືອງ ແລະ ແຂວງ ທີ່ໄດ້ຮັບຜົນກະທົບຈາກ ລບຕ ຕ້ອງມີງົບປະມານພຽງພໍ ສຳລັບການສຳຫຼວດ, ກວດກູ້ ແລະ ການຮັບຮອງຄຸນນະພາບການກວດກູ້ ລບຕ.

3. ໃຫ້ບັນດາໂຄງການພັດທະນາ ປະສານກັບ ຄຊກລ ເພື່ອເອົາຂໍ້ມູນ ລບຕ ທີ່ຕົກຄ້າງລະອຽດ ແລະ ປຶກສາກ່ຽວກັບຂັ້ນຕອນກະກຽມການສຳຫຼວດເຕັກນິກ, ການກວດກູ້ ແລະ ການຮັບຮອງຄຸນນະພາບການກວດກູ້ ລບຕ.

4. ການເກັບກູ້ ລບຕ ຕ້ອງວ່າຈ້າງບໍລິສັດ ຫຼື ໜ່ວຍງານທີ່ໄດ້ຮັບອານຸຍາດຢ່າງເປັນທາງການຕາມລະບຽບກົດໝາຍຈາກ ຄຊກລ.

5. ການເກັບກູ້ ລບຕ ຕ້ອງມີການກວດກາ ແລະ ຮັບຮອງຄຸນນະພາບ ຕາມມາດຕະຖານແຫ່ງຊາດ ວ່າດ້ວຍການແກ້ໄຂ ລບຕ ຈາກພາກສ່ວນທີ່ໄດ້ຮັບມອບສິດ ແລະ ໜ້າທີ່ຈາກລັດຖະບານ, ຊຶ່ງແມ່ນ ຄຊກລ. ດັ່ງນັ້ນ, ຈຶ່ງແຈ້ງມາຍັງບັນດາທ່ານ ເພື່ອຊາບ ແລະ ປະຕິບັດ.

**ລັດຖະມົນຕີປະຈຳຫ້ອງວ່າການລັດຖະບານ**
**ຫົວໜ້າ ຄພທສ, ປະທານ ຄຊກລ**

**ບ່ອນສົ່ງ:**

- ທ່ານ ອາຊາງ ລາວລີ ຮອງນາຍົກລັດຖະມົນຕີ "ເພື່ອລາຍງານ"
- ທ່ານ ຫົວໜ້າຫ້ອງວ່າການສູນກາງພັກ "ເພື່ອລາຍງານ"
- ທ່ານ ຫົວໜ້າຫ້ອງວ່າການລັດຖະບານ "ເພື່ອລາຍງານ"
- ທ່ານ ຫົວໜ້າຫ້ອງວ່າການສະພາແຫ່ງຊາດ "ເພື່ອລາຍງານ"
- ທ່ານ ຫົວໜ້າກົມຄຸ້ມຄອງການລົງທຶນ, ກະຊວງແຜນການ ແລະ ການລົງທຶນ "ເພື່ອລາຍງານ"
- ທ່ານ ຫົວໜ້າພະແນກແຜນການ ແລະ ການລົງທຶນ ປະຈຳແຂວງ "ເພື່ອລາຍງານ"



ຕ້ອງການຂໍ້ມູນເພີ່ມເຕີມ ກະລຸນາພົວພັນ:

ຄະນະກໍາມະການຄຸ້ມຄອງແຫ່ງຊາດ ເພື່ອແກ້ໄຂບັນຫາລະເບີດບໍ່ທັນແຕກ ທີ່ຕົກຄ້າງຢູ່ ສປປ ລາວ (ຄຊກລ), ບ້ານສີສັງວອນ, ເມືອງໄຊເສດຖາ, ຕູ້ ປນ 7261, ນະຄອນຫຼວງວຽງຈັນ, ສປປ ລາວ

ເວບໄຊ້: www.nra.gov.la